ພຣະຣາຊອານາຈັກລາວ

ກະຊວງແຜນພັດ ແລະ ການຮ່ວມມື

ກົມແຜນພັດ

ແຜນພັທນາສ່ວນໂຣມແຫ່ງຊາດ ໑໙໖໙-໑໙໗໔

ແຜນປະຕິບັດງານປະຈຳປີ

໑໙໗໐ - ໑໙໗໑

ສ າ ຣ ບ າ ນ

ຄຳນຳໜ້າ .... ໜ້າ ກ.

000. ບົດແນະນຳເບື້ອງຕົ້ນ

010 ແຜນດຳເນີນງານປະຈຳປີທີ ໒
ແລະລັກສນະທາງເສຖກິດ........................ ໜ້າ ໑
- 011 ສະຖານະການທົ່ວໄປດ້ານເສຖກິດ.................. " ໒
- 012 ແຜນພັທນາສ່ວນໂຮມແຫ່ງຊາດ .... " ໔
- 013 ຕາຕະຣາງສະແດງຖານະທາງການເງິນ .... " ໘

020 ວິທີວາງແຜນພັທນາສ່ວນໂຮມແຫ່ງຊາດ
ແລະແຜນດຳເນີນງານປະຈຳປີ
- 021 ລັກສນະທາງດ້ານກົດໝາຍ.......................... " ໑໑
- 022 ລັກສນະທາງດ້ານເສຖກິດ .... " ໑໑
- 023 ວິທີການວາງແຜນ .... " ໑໒

030 ການສເນີແລະວິຈັຍແຜນດຳເນີນງານປະຈຳປີທີ ໒
- 031 ການສເນີ .... " ໑໓
- 032 ຂໍ້ສັງເກດຂັ້ນຕົ້ນ .... " ໑໔
- 033 ສະພາບການເງິນຂອງແຜນດຳເນີນງານປີ ໑໙໗໐-໗໑ ... " ໑໗
- 034 ການວິຈັຍດ້ານການເງິນແຕ່ລະແຫລ່ງ.................... " ໑໘
- 035 ການວິຈັຍດ້ານເສຖກິດແຕ່ລະຣາຍຈ່າຍ .... " ໒໒
- 036 ການວິຈັຍດ້ານເສຖກິດແຕ່ລະພແນກແລະກອງປະຊຸມ ...... " ໒໕

100 ໂຄງການຕ່າງໆຂອງແຜນດຳເນີນງານປະຈຳປີທີ ໒

110 ກອງປະຊຸມວາງແຜນດ້ານກະສິກັມ-ປ່າໄມ້-ລ້ຽງສັດ .... " ໒໗
- 111 ບົດແນະນຳເບື້ອງຕົ້ນ .... " ໒໘
- 112 ໂຄງການຕ່າງ ໆ .... " ໓໓

120 ກອງປະຊຸມດ້ານສິລປະກັມ-ອຸຕສາຫະກັມ-ອຸ້ພຍາກອນທັຣະນີ
ແລະການຄ້າ .... " ໘໙
- 121 ບົດແນະນຳເບື້ອງຕົ້ນ .... " ໘໙
- 122 ໂຄງການຕ່າງໆ ຂອງກອງປະຊຸມດ້ານສິລປະກັມ-ອຸຕສາຫະກັມ-
ອຸ້ພຍາກອນທັຣະນີແລະການຄ້າ .... " ໙໐

໑໓໐ ບັນຊີລາຍໄດ້ແຫ່ງຊາດ .... ໜ້າ ໑໐໖

໑໔໐ ກອງປະຊຸມດ້ານພລັງງານ .... " ໑໐໘

- ໑໔໑ ບົດແນະເບື້ອງຕົ້ນ .... " ໑໐໘

- ໑໔໒ ໂຄງການຕ່າງໆຂອງກອງປະຊຸມດ້ານພລັງງານ .... " ໑໐໙

໑໕໐ ກອງປະຊຸມດ້ານພື້ນຖານພັທນາ .... " ໑໑໙

- ໑໕໑ ບົດແນະນໍາເບື້ອງຕົ້ນ .... " "

- ໑໕໒ ໂຄງການຕ່າງໆຂອງກອງປະຊຸມດ້ານພື້ນຖານພັທນາ ...... " ໑໒໑

໑໖໐ ກອງປະຊຸມດ້ານການສຶກສາ

- ໑໖໑ ບົດແນະນໍາເບື້ອງຕົ້ນ .... " ໑໔໙

- ໑໖໒ ໂຄງການຕ່າງໆຂອງກອງປະຊຸມດ້ານການສຶກສາ .... " ໑໕໒

໑໗໐ ກອງປະຊຸມດ້ານປະຊາກອນ-ສາທາຣະນະສຸກ

- ໑໗໑ ບົດແນະນໍາເບື້ອງຕົ້ນ .... " ໑໗໔

- ໑໗໒ ໂຄງການຕ່າງໆຂອງກອງປະຊຸມດ້ານປະຊາກອນ-ສາທາຣະນະສຸກ .... " ໑໗໖

໑໘໐ ກອງປະຊຸມດ້ານສັງຄົມ

- ໑໘໑ ບົດແນະນໍາເບື້ອງຕົ້ນ .... " ໑໙໓

- ໑໘໒ ໂຄງການຕ່າງໆ ຂອງກອງປະຊຸມດ້ານສັງຄົມ .... " ໑໙໔

໒໐໐ ການປະຕິຮູບພື້ນຖານ

໒໑໐ ບົດແນະນໍາເບື້ອງຕົ້ນ .... " ໒໐໔

໒໒໐ ການປັບປຸງທີ່ດິນໃຫ້ມີຄຸນຄ່າ

໒໓໐ ການວາງແຜນຊັພຍາກອນກໍາລັງຄົນ .... " ໒໐໙

໒໔໐ ການປັບປຸງຂ້າຣາຊການ .... " ໒໑໒

- ໒໔໑ ສະພາບການ

- ໒໔໒ ການບໍຣິຫານຂ້າຣາຊການແລະພະນັກງານຂອງຣັຖ .... " ໒໑໓

- ໒໔໓ ການຈັດຕັ້ງຂອງພແນກການຕ່າງໆ .... " ໒໑໓

- ໒໔໔ ການວາງແນວທາງປະຕິບັດງານໃຫ້ທັນສມັຍ .... " ໒໑໔

- ໒໔໕ ຄວາມຈໍາເປັນໃນການລົງທຶນ .... " ໒໑໕

໒໕໐ ການປະຕິຮູບດ້ານອື່ນໆ

- ໒໕໑ ບັນຫາດ້ານການເງິນ .... ໜ້າ ໒໑໖
- ໒໕໒ ບັນຫາດ້ານການຄ້າພາຍນອກ .... " ໒໑໖
- ໒໕໓ ບັນຫາດ້ານການຈັດຕັ້ງບ້ານໃຫມ່ .... " ໒໑໖

໓໐໐ ວິທີປະຕິບັດແຜນດຳເນີນງານປະຈຳປີ ທີ ໒

໓໑໐ ອຸດົມການຂອງກົມແຜນຜັງ .... " ໒໑໗

໓໒໐ ການກວດກາໃນຣະຍະເວລາປະຕິບັດແຜນ .... " ໒໑໗

໓໓໐ ການປະຕິບັດແຜນດຳເນີນງານປີທີ ໒ .... " ໒໑໘

- ໓໓໑ ໃບແບບຕ່າງໆຂອງໂຄງການ .... " ໒໑໘
- ໓໓໒ ຄນະອະນຸກັມມະການຮ່າງແຜນ .... " ໒໑໙
- ໓໓໓ ການປະສານງານກັບງົບປະມານແຫງຊາດ
  ໃນການທີ່ຈະເອົາເງິນອອກໃຊ້ .... " ໒໑໙
- ໓໓໔ ການຕິດຕໍ່ແລະການແຈ້ງຂ່າວຈາກອົງການຊ່ວຍເຫລືອຕ່າງໆ... " ໒໒໐
- ໓໓໕ ກອງປະຊຸມຜູ້ຊ່ຽວຊານຂອງອົງການຊ່ວຍເຫລືອ .... " ໒໒໑

໓໔໐ ການກວດກາພາຍຫລັງການນຳພາປະຕິບັດແຜນ " ໒໒໑

໔໐໐ ບົດສຣຸບ

໔໑໐ ຄວາມກ້າວໜ້າທຽບໃສ່ກັບການປະຕິບັດແຜນໃນ ປີທີ່ຜ່ານມາ ...... " ໒໒໒

໔໒໐ ຂໍ້ຫຍຸ້ງຍາກສ່ວນສຳຄັນທີ່ຍັງຄ້າງຢູ່ .... "" ໒໒໒

໔໓໐ ຍຶດໝັ້ນໃນແນວທາງຂອງແຜນພັທນາສ່ວນໂຮມ .... " ໒໒໓

ຕື່ ມ ທ້ າ ຍ

໑. ຕາຕະຮາງຊົ່ວຄາວ ການປະຕິບັດງານຕາມແຜນດຳເນີນງານປະຈຳປີ ໑໙໖໙-໑໙໗໐

໒. ຕາຕະຮາງທົບທວນ ໂຄງການຕ່າງໆ ໃນແຜນດຳເນີນງານ ປະຈຳປີ ໑໙໗໐-໑໙໗໑.

-

ຄຳນຳໜ້າ

ຂນະນີ້ ເຮົາກຳລັງຈະລົງມື ປະຕິບັດແຜນດຳເນີນງານ ປີທີສອງ ຂອງແຜນພັທນາເສຖກິດແລະສັງຄົມ ແຫ່ງຊາດ ໑໙໖໙–໗໔ ນັບແຕ່ປີ ໑໙໖໙ ເປັນຕົ້ນມາ, ເຮົາໄດ້ທຳການໂຄສະນາ ເພື່ອວາງແຜນ ມາໄດ້ສາມເທື່ອແລ້ວ ຊຶ່ງໄດ້ຊ່ອຍໃຫ້ເຮົາຮູ້ແນວທາງ ແລະວິທີການວາງແຜນ ທີ່ເຫມາະສົມກັບສພາບການເມືອງລາວ. ແລະເຮົາກໍໄດ້ຮັບຫມາກຜົນອັນມາຈາກເຫື່ອແຮງຂອງພວກເຮົາ ຂອງທຸກໆກຳລັງກາຍ ແລະໃຈຂອງລາວ ແລະປະເທດເພື່ອນບ້ານ ການວາງແຜນເພື່ອພັທນາເສຖກິດນັ້ນ ໄດ້ກາຍມາເປັນຄວາມຈິງ ແລະເປັນທີ່ຮູ້ຈັກດີ ບໍ່ແມ່ນແຕ່ໃນຈຳນວນພນັກງານການປົກຄອງ ຊຶ່ງຕ້ອງເອົາໃຈໃສ່ໃນການຄາດຄະເນ ຄວາມຕອງການ ໃນພາຍພາກຫນ້າເທົ່ານັ້ນ, ແຕ່ໄດ້ສ້າງຄວາມປິ້ມປິຕິຍິນດີ ແລະກຳລັງໃຈແກ່ປະຊາຣາສດອນ ທີ່ໄດ້ເຫັນຜົນງານອັນງອກງາມ ໃນຂັ້ນຕົ້ນນີ້.

ທຸກສິ່ງທຸກຢ່າງນີ້ ເປັນຢາກຳລັງໃຈ ອັນມະຫາສານແກ່ທຸກໆຄົນ ທີ່ຄວນສຳນຶກເຖິງຂອບເຂດຂອງພາຣະຫນ້າທີ່ ແລະພາຫະນະ ໃນການດຳເນີນງານ ຂອງພວກເຮົາ. ໃນທຳນອງທີ່ວ່າ ສະພາບການສົງຄາມ ໄດ້ຈຳກັດງົບປະມານ ທີ່ໃຊ້ໃນການພັທນານີ້ ການທົດສອບຜົນງານຂອງການປະຕິບັດແຜນປີທີໜຶ່ງນັ້ນ ກຳລັງຈະເຫັນຜົນສຳເຣັດຢູ່. ໂດຍອີງໃສ່ຜົນງານ ອັນທຳອິດນີ້, ເຮົາກໍຈະສາມາດ ຢືນຢັນຢ່າງແຈ່ມແຈ້ງໄດ້ ກ່ຽວກັບນະໂຍບາຍ ການເສຖກິດຂອງເຮົາ ກ່າວຄື : ໃຫ້ຄວາມສຳຄັນແກ່ຜແນກຜລິດຜົນ ແລະການດຳເນີນງານ ຈະຕ້ອງຂຍາຍໄປທຸກໆສາຂາ ຂອງຜແນກນີ້. ການເພີ່ມພູນຜລິດຜົນດັ່ງກ່າວນີ້ ຈະນຳພາໃຫ້ຊັພຍາກອນ ແລະການເງິນຂອງຊາດທວີຂຶ້ນ ຈຶ່ງສາມາດເປັນທຶນໃນການພັທນາຜແນກເສຖກິດແລະສັງຄົມ ອັນເປັນພື້ນທາງທີ່ປອດໄພກວ່າຫມູ່.

ເຖິງວ່າ ວັດຖຸປະສົງຂອງເຮົາຈະໃຫຍ່ເກີນຄວນກໍຕາມ, ແຕ່ເຮົາກໍອາດສາມາດເຖິງຈຸດທີ່ຫມາຍໄດ້ ຖ້າຫາກວ່າ ເຮົາຮູ້ຈັກພັທນາຄຸນສົມບັດ ຂອງນັກວາງແຜນ ຄື : ການດຳເນີນຕໍ່ໄປ. ແຕ່ວ່າ ເຮົາຄວນທຸ່ມເທກຳລັງເຂົ້າອີກ ເພື່ອໃຫ້ການປະຕິບັດງານໄວຂຶ້ນ ແລະໃຫ້ໂຄງການຕ່າງໆ ຂອງແຜນປະຈຳປີທີສອງ ສຳເຣັດໄປໃນເວລາອັນຄວນ.

ດ້ວຍເຫດນີ້ ໃນນາມຣັຖບານ ແຫ່ງພຣະຣາຊອານາຈັກລາວ ຂ້າພະເຈົ້າ ຂໍຂອບໃຈມາຍັງທຸກໆທ່ານ ທີ່ໄດ້ມີສ່ວນ ເຮັດໃຫ້ແຜນດຳເນີນງານ ປີທີໜຶ່ງສຳເຣັດໄປດ້ວຍດີ ແລະຂໍຮ້ອງໃຫ້ທຸກໆທ່ານ ຈົ່ງໄດ້ທຸ່ມເທກຳລັງກາຍ ແລະກຳລັງໃຈເຂົ້າອີກ ພ້ອມດຽວກັນໄດ້ຮຽກຮ້ອງ ມາຍັງມິຕປະເທດທີ່ມີຄວາມຫວັງດີ ເພື່ອຮ່ວມແຮງກັນສ້າງຄວາມສຳເຣັດແກ່ງານອັນນີ້ດ້ວຍ.

ຣັຖມົນຕຣີ ກະຊວງແຜນຜັງແລະການຮ່ວມມື

ພະຍາປຣະສິດ
ອິນແປງ ສູຣິຍາໄທ

໐໐໐ - ຄຳນຳເບື້ອງຕົ້ນ

໐໑໐ - ແຜນດຳເນີນງານປີທີສອງ ແລະລັກສນະດ້ານເສຖກິດ

ເຫດການທີ່ມີສ່ວນຜູກພັນ ແລະກ່ຽວຂ້ອງ ໃນການຂຍາຍຕົວ ດ້ານເສຖກິດແລະສັງຄົມ ຂອງເມືອງລາວ ໃນປີ ໑໙໖໘ ນັ້ນມີ :

- ສະຖານະການດ້ານທະຫານທີ່ຮ້ອນແຮງຂຶ້ນ.
- ການສເລີມສລອງແຜນພັທນາສ່ວນໂຮມ ດ້ານເສຖກິດແລະສັງຄົມ ໑໙໖໘-໗໔
- ການຊ່ວຍເຫຼືອ ທີ່ມິດປະເທດໄດ້ໃຫ້ແກ່ລາວ ເພື່ອສົ່ງເສີມເສຖກິດຂອງຊາຕ.

ສົງຄາມເປັນສິ່ງທີ່ພາໃຫ້ ຕ້ອງເກນເອົາຊາຍໜຸ່ມຫລາຍຍິ່ງຂຶ້ນ ເພື່ອມາບັນຈຸເຂົ້າເປັນທະຫານ, ດັ່ງນັ້ນ ຈຶ່ງເປັນເຫດໃຫ້ປະຊາຊົນ ທີ່ຂຍັນຂັນແຂງ ໃນດ້ານກະສິກັມ ດ້ານການຄ້າແລະດ້ານອຸສະຫະກັມຫລຸດນ້ອຍລົງ ພາວະການເຊັ່ນນີ້ ບໍ່ກ່ຽວພັນໄປຮອດການປົກຄອງທົ່ວໄປ ເພາະວ່າຈຳນວນຂ້າຣາຊການ ໄດ້ທະວີຄູນ ແລະຂຍາຍຕົວອອກໄປຢ່າງວ່ອງໄວຢູ່.

ການຂຍາຍຕົວຂອງສົງຄາມ ເປັນເຫດໃຫ້ມີຄວາມຫຍຸ້ງຍາກ ໃນງົບປະມານແຫ່ງຊາດເປັນທັມມະດາ ການໃຊ້ຈ່າຍເພື່ອທຳສົງຄາມ ໃຫ້ຄວາມຊ່ວຍເຫຼືອແກ່ພວກອົພຍົບ ພວກເສັຽອົງຄະ ແລະຊ່ວຍຄອບຄົວທະຫານ ພາໃຫ້ມີຣາຍຈ່າຍສູງຂຶ້ນ. ເຖິງຢ່າງໃດກໍດີ ຄວາມຕ້ອງການ ດ້ານການເງິນສ່ວນນີ້ ກໍຢູ່ໃນຣະດັບສຳຄັນ ຂອງການພັທນາເສຖກິດແລະສັງຄົມ ຈຶ່ງເປັນເຫດໃຫ້ ງົບປະມານພັທນາຫລຸດນ້ອຍລົງ ກວ່າຈຳນວນທີ່ໄດ້ກະໄວ້ ເພື່ອຈະດຳເນີນໄປ ໃຫ້ເຖິງຈຸດມຸ່ງໝາຍ.

ນອກຈາກນີ້, ກໍມີຄວາມກ້າວໜ້າບາງສິ່ງບາງຢ່າງ ທີ່ໄດ້ມາຈາກການດຳເນີນງານປີທີ່ແລ້ວແຕ່ເຖິງຢ່າງໃດ ເຮົາກໍຄວນຖືວ່າເປັນຂັ້ນທົດລອງ ທີ່ຈະຊ່ວຍໃຫ້ເຮົາມີຄວາມຊຳນິຊຳນານ ເພື່ອດຳເນີນແຜນພັທນາສ່ວນໂຮມແຫ່ງຊາດ ຕໍ່ໄປ.

ຄວາມສຳເຣັດຜົນ ທີ່ໄດ້ມາໃນຄັ້ງນີ້ ເນັ່ນມາຈາກ ການເອົາໃຈໃສ່ໃນວຽກການ ຂອງຂ້າຣາຊການທຸກໆຜແນກທີ່ກ່ຽວຂ້ອງ ແລະຂ້າຣາຊການ ກົມແຜນຜັງແລະການຮ່ວມມື ຄວາມຫວັງທີ່ຢາກເພີ່ມງົບປະມານ ສຳຫລັບການພັທນາ ໃຫ້ເພິ່ງພໍໃຈນັ້ນ ກໍຍັງມີຫົນທາງຢູ່ ແຕ່ກໍຂຶ້ນກັບຂີດຂາດ ແລະຄວາມຊຳນິຊຳນານ ຂອງຣັຖບານ ທີ່ຈະມີນະໂຍບາຍ ແນະນຳປະຊາຣາສດອນ ເພື່ອໃຫ້ມາສົນໃຈ ແລະຮ່ວມໄມ້ຮ່ວມມືຊ່ວຍສ້າງສາພັທນາ ເສຖກິດຂອງຊາດ. ແລະກໍຂຶ້ນກັບທ່າທີຂອງປະຊາຣາສດອນເໝືອນກັນ ທີ່ຄວນຈະໃຫ້ຄວາມສຳຄັນ ໃນການທີ່ຕ້ອງເພີ່ມຣາຍໄດ້ຂອງຊາດ.

..../໒..

໐໑໑ - ສະຖານະການທົ່ວໄປຂອງເສດຖກິດ

ສະຖານະການດ້ານການເງິນ

ໃນປີ ໑໙໖໙ ນີ້ຮູ້ສຶກວ່າມີການທະວີກິຈການດ້ານເສດຖກິດແດ່ເລັກນ້ອຍ ໂດຍສະເພາະເໝີນ ຜເນກທຶນນຳຣາຍໄດ້ ດ້ານການເງິນມາສູ່ເສດຖກິດ ຄວາມຕ້ອງການດ້ານເງິນຕຣາຕ່າງປະເທດ ກໍ່ຮູ້ສຶກວ່າພຽງພໍແດ່ແລ້ວ ເນື່ອງມາຈາກວ່າ ເງິນຕຣາຕ່າງປະເທດທີ່ມີຢູ່ນັ້ນ ໄດ້ຕື່ມຂຶ້ນອີກ ໗% ສ່ວນຫລາຍແມ່ນມາຈາກ ຜເນກກອງທຶນແລກເງິນຕຣາຕ່າງປະເທດ. ຈຳນວນເງິນໂດຍທົ່ວໄປແລ້ວ ໄດ້ເພີ່ມຂຶ້ນປະມານ ໑໐%, ອັນນີ້ໝາຍຄວາມວ່າ ຕາມຈິງແລ້ວ ຄ່າເງິນແທ້ໆ ຂອງຈຳນວນທີ່ເພີ່ມຂຶ້ນໄດ້ ໄດ້ເພີ່ມຂຶ້ນພຽງ ໔-໕% ເທົ່ານັ້ນ ທັງນີ້ກໍ່ເພາະວ່າ ຄ່າຄອງຊີບຢູ່ວຽງຈັນ ໄດ້ຖີບຕົວອີກ ໕% ຄຳນວນເບິ່ງການແລກປ່ຽນທີ່ສຳຄັນ ເພື່ອການຄົງຢູ່ຂອງການຜລິດຜົນ ສ່ວນຣວມແຫ່ງຊາດ (
ປະມານ ໙໗ ໂກດ ກີບ, ຈຳນວນເງິນນີ້ປະມານ ໑໙,໗% ຂອງການຜລິດຜົນແຫ່ງຊາດ ຄຸນຄ່າຂອງຣາຍງານຣະຫວ່າງສອງຢ່າງນີ້ ໄດ້ນຳຄວາມພຶງພໍໃຈມາສູ່ປະເທດຊາດບ້ານເມືອງ ທີ່ກຳລັງເຂົ້າຂັ້ນພັທນາ ເຊັ່ນເມືອງລາວເຮົານີ້ ເພາະເປັນຫລັກຖານຢືນຢັນອັນສຳຄັນ ຣະຫວ່າງຣັຖບານ ແຫ່ງພຣະຣາຊອານາຈັກລາວ ແລະຜູ້ອຳນວຍການ ຣະຫວ່າງຊາດ ຂອງກອງທຶນ ແລກປ່ຽນເງິນຕຣາຕ່າງປະເທດ ຣາຍການທີ່ຈະເຮັດໃຫ້ມີຄວາມທຸ່ມທ່ຽງ ໃນທະນາຄານ ໄດ້ເພີ່ມຂຶ້ນອີກ ໒໙%, ສິ່ງນີ້ໄດ້ຊີ້ໃຫ້ເຫັນເປັນລາງສ່ວນວ່າ ກິຈການລາວໃນດ້ານການໃຊ້ຈ່າຍເງິນຂອງທະນາຄານສມັຍໄດ້ຮັບການສົ່ງເສີມຂຶ້ນ.

ກ າ ນ ບໍ ຣິ ໂ ພ ກ :

ການບໍຣິໂພກຜົລຜລິດໃນທ້ອງຖິ່ນ ແລະເຄື່ອງບໍຣິໂພກຕ່າງໆ ອາດຄາດຄະເນໄດ້ຍາກ ເນື່ອງຈາກວ່າຂາດສຖິຕິທີ່ຕ້ອງການ ການໃຊ້ນ້ຳມັນເຊື້ອເພີງໄດ້ເພີ່ມຂຶ້ນ ປະມານ ໑໐% ຄືຖີບຕົວຂຶ້ນເຖີງຈຳນວນ ໑໑໙,໙ ລ້ານລິດ. ພາຍໃນຈຳນວນເຊື້ອເພີງດັ່ງກ່າວນີ້ ມີ : ນ້ຳມັນເຊື້ອໄຟ, ນ້ຳມັນແອດຊັງ ແລະນ້ຳມັນກາຊວນ ທີ່ໄດ້ນຳມາໃຊ້ຫລາຍກວ່າໝູ່ຄື ເພີ່ມຂຶ້ນປະມານ ໑໗% ອັນເປັນຕົວເລກທີ່ຊີ້ບອກເຖີງການໃຊ້ສອຍ ຍວດຍານພາຫານະ ຂນາດໜັກ; ຊຶ່ງອາດມີການກ່ຽວຂ້ອງ ກັບການສ້າງສາ ເຂື່ອນນ້ຳງື່ມໃນປີ ໑໙໖໙.ການໃຊ້ພລັງໄຟຟ້າໄດ້ເພີ່ມຂຶ້ນອີກ ໒໐% ເປັນຈຳນວນທັງໝົດກວ່າ ໒໙ ລ້ານກິໂລວັດຊົ່ວໂມງ ປຽບໃສ່ກັບພລັງທີ່ໃຊ້ໄປໃນປີ ໑໙໖໘ ຊຶ່ງມີແຕ່ ໒໙,໙ ກິໂລວັດຊົ່ວໂມງ.

ຫລັງຈາກທີ່ໄດ້ຄົງຕົວຢູ່ຣະດັບຕ່ຳສຸດ ໃນປີ ໑໙໖໙ ຄືໄວ້ພຽງແຕ່ ໖໖,໗໐໐ ແມດ ໄມ້ເຫຼືອຍ ນີ້ບໍ່ຂາດສຳຄັນຂຶ້ນໃນປີຕໍ່ມາ ໂດຍມີປະຣິມານ ການໃຊ້ທີ່ສູງຂຶ້ນກາຍສະຖິຕິ ປີ ໑໙໖໗ ຊຶ່ງມີ ໑໑໔, ໘໐໐ ແມດກອິບ. ຈຳນວນງົວແລະຄວາຍທີ່ໄດ້ນຳມາຂ້າ ເພື່ອໃຫ້ພໍກັບຄວາມຕ້ອງການໃນທ້ອງຕລາດນີ້ ໄດ້ຄາດຄະເນວ່າ ມີການເພີ້ມຂຶ້ນປະມານ ໔໓% ຣະຫວ່າງປີ ໑໙໖໘ ແລະ ໑໙໖໙. ແຕ່ວ່າການຄາດຄະເນນີ້ ບໍ່ໄດ້ນັບສ່ວນກ່ຽວຂ້ອງກັບຈຳນວນສັດ ທີ່ໄດ້ຂ້ານອກໂຮງຂ້າສັດ ທີ່ຢູ່ພາຍໃຕ້ຄວາມຄວບຄຸມຂອງຣັຖບານ. ຜົນການຄາດຄະເນ ຈຳນວນໝູທີ່ໄດ້ຂ້ານັ້ນ ເຫັນວ່າໄດ້ລົດລົງ ໕% ແຕ່ກໍ່ບໍ່ເປັນສິ່ງທີ່ແນ່ນອນເທື່ອເນື່ອງມາ ຈາກວ່າ ມີຢ່າຍຢູ່ທຸກບ່ອນ ບາງທີອາດບໍ່ສາມາດຄາດຄະເນໄດ້. ຖານໃຊ້ພຽງທີ່ເກົ່າ ຄື ໑໓.໔໐໐ ຕັນ.

<u>ແ ຮ ງ ງ າ ນ</u> :

ການປັບປຸງຄວາມສາມາດ ແລະທະວີປະຣິມານຂອງນັກຮຽນທີ່ຮຽນສຳເຣັດຊັ້ນປະຖົມນັ້ນ ໄດ້ດຳເນີນຕໍ່ໄປ ແຕ່ກໍ່ຊັກຊ້າແດ່ເລັກນ້ອຍ ເມື່ອປຽບໃສ່ປີທີ່ແລ້ວ ຄື ໃນປີ ໑໙໖໙ ມີນັກຮຽນຈຳນວນ ໗.໘໐໐ ຄົນເສັງໄດ້ປະກາສນີຍະບັດປະຖົມສຶກສາ ຖ້າຈະປຽບໃສ່ປີທີ່ແລ້ວນັ້ນ ກໍ່ໄດ້ເພີ້ມຂຶ້ນອີກປະມານ ໑໓,໔% ແຕ່ວ່າເມື່ອປຽບທຽບປີ ໑໙໖໘ ແລະ ໑໙໖໗ ແລ້ວກໍ່ມີການເພີ້ມຂຶ້ນປະມານ ໔໑%.

ການຈົດທະບຽນຊັ້ນນັກຮຽນຢູ່ກົມມັທະຍົມສຶກສາ ກໍ່ຮູ້ສຶກວ່າໄດ້ເພີ້ມຂຶ້ນ ແລະຖ້າຈະຄິດເປັນເປີເຊັນ ຣະຫວ່າງປີ ໑໙໖໙ ແລະ ໑໙໖໘ ກໍ່ມີການຄົງຕົວຢູ່ປະມານ ໑໕% ແລະເທົ່າກັນກັບປີທີ່ແລ້ວ. ຈຳນວນນັກຮຽນທີ່ຈົດທະບຽນທັງໝົດ ມີປະມານ ໖.໓໕໔ ຄົນ.

ປີ ໑໙໖໙ ເປັນປີທີ່ເມືອງລາວເຮົາ ໄດ້ເຣີ່ມຕົ້ນສຶກສາເພື່ອໃຫ້ຮູ້ສະພາບການ ຂອງແຮງງານໂດຍທົ່ວໄປ ວຽກອັນທຳອິດ ແມ່ນການວິຈັຍຄວາມຕ້ອງການດ້ານແຮງງານ ຂອງແຜນພັທນາສ່ວນໂຮມແຫ່ງຊາດ ຊຶ່ງພາຍເຖິງການວິຈັຍ ຄວາມຕ້ອງການດ້ານແຮງງານ ທີ່ມີຄຸນະພາບດີ ໃນອະນາຄົດອັນໃກ້ ການທີ່ມີຄວາມຕ້ອງການດ້ານນີ້ຕື່ມຂຶ້ນ ກໍ່ເນື່ອງມາຈາກ ຄວາມຕ້ອງການຄົນງານ ເພື່ອໄປສ້າງເຂື່ອນນ້ຳງື່ມ (ເບິ່ງການປະຕິຮູບພື້ນຖານ).

<u>ຣ າ ຍ ໄ ດ້</u>::

ການແຈກຢາຍຫຼືຍົກຍ້າຍແຮງງານທົ່ວປະເທດ ຖືກເລັ່ງລັດຍ້ອນມີຄວາມຕ້ອງການຂອງກອງທັບ ແລະການຍົກຍ້າຍຄອບຄົວ ເນື່ອງຈາກສະຖານະການທາງທະຫານ ເປັນທີ່ຄາດຄະເນໄດ້ວ່າປະຊາຊົນໃນວຽງຈັນ ແລະໃນເຂດເທສບານຕ່າງໆ ໄດ້ທະວີຂຶ້ນປີລະ ໕% ແລະຂຶ້ນເປັນ ໖,໓% ໃນເຂດທີ່ມີການເສດຖະກິຈຂຍາຍຕົວ.

ຖ້າເວົ້າໃນຣະດັບປະເທດແລ້ວ ການຂາດການຈັດຕັ້ງ ເຣື່ອງການຄ້າແລະຕລາດ ແລະການມີສິ່ງກີດຂວາງເພາະສົງຄາມ, ສິ່ງເຫຼົ່ານີ້ ນັບມື້ທະວີຄວາມແຕກຕ່າງດ້ານຣາຍໄດ້ ຣະຫວ່າງຊາວຊົນນະບົດ ທີ່ບໍ່ມີການຕິດຕໍ່ຄ້າຂາຍປະມານ ໔໗.໕໐໐ ກີບຕໍ່ຄົນ ແລະປະຊາຊົນໃນເຂດເທສບານ ທີ່ດຳເນີນການຄ້າຂາຍເປັນເນື່ອງນິດ ທີ່ມີຣາຍໄດ້ປະມານ ໓໐.໐໐໐ ກີບຕໍ່ຄົນ ສຳລັບປີໜຶ່ງໆ ການຄາດຄະເນຣາຍໄດ້ຂອງປະຊາຊົນໃນເທສບານນີ້ໄດ້ໂຮມເອົາສິ່ງຂອງ ແລະຜເນກຕ່າງໆ ຂອງພວກຕ່າງດ້າວ ທີ່ຣັຖບານມິດປະເທດໄດ້ຊ່ວຍເຫຼືອ ເພື່ອສ້າງຄວາມທຸ່ນທ່ຽງ ດ້ານເສຖກິດເຂົ້ານຳ.

໐໑໔. <u>ແຜນພັທນາສ່ວນໂຮມແຫ່ງຊາດ</u>

ແຜນພັທນາສ່ວນໂຮມແຫ່ງຊາດ ແຜນຜົນງານແລະເຫື່ອແຮງ ຂອງການຮ່ວມໄມ້ຮ່ວມມື ຂອງທຸກໆກະຊວງກົມກອງ, ໂດຍການແຮກກໍແລະຄວບຄຸມ ຂອງກະຊວງແຜນຜັງແລະການຮ່ວມມື. ຈຸດປະສົງອັນສຳຄັນ ຂອງແຜນພັທນານີ້ ກໍເພື່ອຢາກສ້າງເສີມພື້ນຖານ ການຜລິດຜົນຂອງເສຖກິດ ຈົນເຖິງຂັ້ນທີ່ວ່າມີເສຖກິດພໍ່ມຄົງ ສາມາດຄ້ຳຈູນຄ່າໃຊ້ຈ່າຍຕ່າງໆ ໃນການສ້າງສາພື້ນຖານ, ໃຊ້ຈ່າຍໃນດ້ານການສຶກສາດ້ານສາທາຣະນະສຸກ ແລະດ້ານໂຍທາທິການ ທີ່ຍັງເຫຼືອໄວ້ໃຫ້ການຊ່ວຍເຫຼືອຂອງຕ່າງປະເທດຫລາຍໆປີທີ່ຜ່ານມາ ຄວາມຍາກບໍ່ອັນສຳຄັນ ກໍເພື່ອຢາກສ້າງເສີມການກະສິກັມ ແລະການອຸດສາຫະກັມ ເພາະສອງຜເນກນີ້ ມີສິ່ງກ່ຽວຂ້ອງກັນສເມີ ການຄັດເລືອກເອົາ ກິຈການຫຼືໂຄງການຕ່າງໆວ່າ ຄວນນຳມາປະຕິບັດໃນເວລາໃດນັ້ນ ຂຶ້ນຢູ່ກັບຄວາມສຳຄັນ ທີ່ວ່າຕ້ອງພະຍາຍາມລົດສິນຄ້າເຂົ້າໃຫ້ນ້ອຍລົງ ແລະຂນະດຽວກັນກໍເພີ່ມສິນຄ້າຂາອອກ ໃຫ້ຫລາຍຂຶ້ນທຸກວັນ.

<u>ແຜນດຳເນີນງານປີທີໜຶ່ງ</u>.

ການປະຕິບັດແຜນພັທນາສ່ວນໂຮມແຫ່ງຊາດ ໄດ້ຕັ້ງຕົ້ນຂຶ້ນມາດ້ວຍການວາງແຜນ ແລະປະຕິບັດແຜນປະຈຳປີໄປຕາມລຳດັບ, ກິຈການທັງໝົດນີ້ ໄດ້ມຸ່ງໝາຍເພື່ອຄວາມສຳເຣັດຂອງທຸກໆໂຄງການແຜນດຳເນີນງານປີທີໜຶ່ງ ທີ່ມີຈຸດມຸ່ງໝາຍວ່າ ຈະຕ້ອງນຳຜົນສຳເຣັດມາຢ່າງນ້ອຍ ໑໓%.ຂອງໂຄງການທ້າປີນັ້ນ ໄດ້ສັງເກດເຫັນວ່າ ສິ່ງທີ່ໄດ້ປະຕິບັດມາຈົນຮອດວັນທີ ໓໐–໖–໗໐ ນັ້ນເປັນຄວາມສຳເຣັດອັນໜຶ່ງ ເກືອບເຄິ່ງຂອງງົບປະມານທີ່ກະໄວ້ ເພື່ອແຜນດຳເນີນງານປະຈຳປີ ໄດ້ນຳເອົາອອກມາໃຊ້ຈ່າຍໃນປີທີ່ຜ່ານມາ.

ການປະຕິບັດວຽກການຕ່າງໆ ທີ່ໄດ້ກະໄວ້ ກໍໄດ້ດຳເນີນໄປໂດຍດີ ໂດຍສະເພາະໂຄງການທີ່ມີເງິນຊ່ວຍເຫຼືອຂອງມິດປະເທດ ເງິນຈຳນວນນີ້ກໍໄດ້ນຳໄປໃຊ້ ໃນທາງທີ່ເປັນປະໂຍດ ແລະໄດ້ຜົນດີ. ມີໂຄງການເປັນສ່ວນນ້ອຍ, ທີ່ບໍ່ໄດ້ຮັບເງິນຊ່ວຍເຫຼືອຈາກຕ່າງປະເທດ ຕາມຄຳໝັ້ນສັນຍາ, ດັ່ງນັ້ນ ການ

ທີ່ຈະນຳເອົາເງິນງົບປະມານແຫ່ງຊາດ ມາໃຊ້ຈ່າຍໃນໂຄງການທີ່ຍັງຄ້າງຄາຢູ່ນີ້ ເຫັນວ່າເປັນການຟຸ່ມເຟືອຍ ແລະບໍ່ເໝາະສົມ.

ມີຫລາຍກໍຣະນີ ທີ່ການຊ່ວຍເຫຼືອຕ່າງປະເທດ ໄດ້ກາຍຈຳນວນທີ່ໄດ້ກະໄວ້ ດ້ວຍເຫດນີ້ຣາຍຈ່າຍທັງໝົດ ເພື່ອແຜນພັທນານັ້ນ ໄດ້ກາຍການຄາດຄະເນໄວ້ແຕ່ກ່ອນ ຊຶ່ງມີປະມານ ໔໗໓ ລ້ານກີບ (ຫຼື ໗% ຂອງຈຳນວນທັງໝົດທີ່ໄດ້ກະໄວ້) ໂດຍບໍ່ໄດ້ໄລ່ຣາຍຈ່າຍ ພິເສດເພື່ອການບັນເທົາທຸກແກ່ພວກອົພຍົບ. ຖ້າເຮົາຄິດສະເລັ່ຍ ເອົາຣາຍຈ່າຍຈຳນວນນີ້ເຂົ້ານຳແລ້ວ, ເຮົາກໍສັງເກດເຫັນວ່າ ຣາຍຈ່າຍເຫຼົ່ານັ້ນ ໄດ້ກາຍຣາຍຈ່າຍທີ່ໄດ້ກະໄວ້ປະມານ ໓.໐໔໙ ລ້ານກີບ (ຫຼື ໗໙% ຂອງງົບປະມານທີ່ກະໄວ້) ພ້ອມນີ້ກໍໄດ້ຄັດຕາຕະຣາງຊົ່ວຄາວ ທີ່ໂຮມຈຳນວນທີ່ໄດ້ກະໄວ້ ຢ່າງຫຍໍ້ໆເພື່ອປຽບທຽບໃສ່ຣາຍຈ່າຍເຫຼົ່າຂອງແຕ່ລະຜແນກ ແລະແຕ່ລະກອງປະຊຸມ. ຕາຕະຣາງອີກແຜ່ນໜຶ່ງ ທີ່ມີຄຳອະທິບາຍແບບດຽວກັນ, ແຕ່ແຈ່ມແຈ້ງກວ່າ ເພາະອະທິບາຍທຸກໂຄງການ ຂອງແຜນດຳເນີນງານປີທີໜຶ່ງ ແຕ່ລະຕາຕະຣາງກໍໄດ້ຊີ້ບອກວ່າມີສ່ວນຊ່ວຍເຫຼືອເທົ່າໃດ ແຕ່ວ່າຄຳອະທິບາຍເຫຼົ່ານີ້ ຈະໄດ້ນຳມາກ່າວ ແລະວິຈັຍອີກເທື່ອໜຶ່ງໃນຣາຍງານຜົນປະຕິບັດແຜນດຳເນີນງານປີທີໜຶ່ງ.

<u>ແຜນດຳເນີນງານປີທີສອງ</u>

ຈຸດປະສົງຂອງແຜນດຳເນີນງານປີທີສອງ ຍັງຄົງເໝືອນເດີມກ່າວຄື :

- ໃຫ້ກຳລັງໃຈແລະຊ່ວຍຊຸກຍູ້ສົ່ງເສີມ ການຜລິດຜົນໃນທຸກໆແບບ ພາຍໃນທົ່ວຣາຊອານາຈັກ ແລະ ແລະກໍໄດ້ເນັ້ນເຖິງ ສພາບການທີ່ວ່າ ເຂດດັ່ງກ່າວນີ້ ຕ້ອງສາມາດລ້ຽງຕົວເອງໄດ້ ໃນດ້ານບໍຣິໂພກ, ທັງນີ້ກໍຍ້ອນວ່າ ມີການເພີ່ມພູນຜລິດຜົນດ້ານເຂົ້າ: ຊີ້ນໝູ, ເປັດໄກ່, ປາ ແລະຜັກຕ່າງໆ.

ເຂດນະຄອນວຽງຈັນ ເປັນເຂດທີ່ມີການຂາດແຄນ ດ້ານເຂົ້ານີ້ຫລາຍທີ່ສຸດ ແລະຈຳຕ້ອງໄດ້ສັ່ງເອົາເຂົ້າຕ່າງປະເທດ ມາກິນມີປະມານ ໓໕.໐໐໐ ໂຕນ ໃນປີ ໑໙໖໙ ຍິ່ງກວ່ານີ້, ພົນອົງຊາວອົພຍົບ ຈາກຊຳເໜືອ-ຊຽງຂວາງ ກໍໄດ້ພາກັນມາຕັ້ງບ້ານເຮືອນ ຢູ່ໃນເຂດວຽງຈັນນີ້ຕັ້ງແຕ່ປີ ໑໙໗໐ ແລະເປັນເຫດໃຫ້ມີຄວາມຕ້ອງການ ດ້ານເຂົ້ານີ້ຫລາຍຂຶ້ນອີກປະມານ ໕.໓໐໐ ໂຕນ ສຳລັບປີນີ້. ແຕ່ເຮົາກໍຫວັງສເນີວ່າ ເຂົາເຈົ້າຈະສາມາດ ລ້ຽງຕົວ ເຂົາເຈົ້າເອງໄດ້ ບໍ່ຫລາຍກໍນ້ອຍ ພາຍໃນປີໜ້ານີ້. ໃນເວລາດຽວກັນ ເຂດທີ່ມີເຂົ້າເຫຼືອກິນເຫຼືອຢູ່ ໃນພາກໃຕ້ຂອງລາວນັ້ນ ຊໍ້າພັດສົ່ງເຂົ້າອອກຂາຍສູ່ປະເທດໄທຢູ່ເນື່ອງນິດ.

ເພື່ອຢາກເພີ່ມພູນການຜລິດເຂົ້ານີ້, ເຮົາຄວນປະຕິບັດໄປສອງຣະຍະ : ຣະຍະສັ້ນ ແລະຣະຍະຍາວ ແຜນການຣະຍະສັ້ນ ທີ່ເຮົາກຳລັງປະຕິບັດຢູ່ທຸກວັນນີ້ ຈະຕ້ອງສາມາດແກ້ໄຂ ສພາບການ

.../ ຜົ..

ຊາດແຄມເຮືອງເຂົ້າ ໃນເຂດວຽງຈັນນີ້ ພາຍໃນຣະຍະຕໍ່ໜ້າປີ ດ້ວຍວິທີການຕ່າງໆເຊັ່ນ : ເຂົ້າປຸ໋ຍພັນດີ, ຝຸ່ນວິທຍາສາດ, ຢາຂ້າແມງໄມ້ແລະສິ່ງອື່ນໆ ທີ່ເຫັນວ່າຈຳເປັນ ແລະເໝາະສົມໃນການຜລິດ ພ້ອມໆກັນ ກັບແຜນຣະຍະສັ້ນນີ້, ກໍຍັງມີແຜນຣະຍະຍາວອີກທີ່ກຳລັງລົງມືປະຕິບັດຢູ່. ໂດຍມີຈຸດປະສົງຈະເພີ້ມພູນ ຜົນຜລິດ ແລະຄຸນນະພາບຂອງນາທີ່ມີຢູ່ແລ້ວ ແລະເພີ້ມດິນຕອນໃໝ່ ດ້ວຍການຊົລປະທານທີ່ໃຊ້ຈັກສູບນ້ຳ. ການຊົລປະທານແບບນີ້ ຈະເປັນໄປໄດ້ແລະເປັນຜົນດີຕໍ່ເສຖກິດ ກໍຕໍ່ເມື່ອການສ້າງສາສູນກາງໄຟຟ້ານ້ຳ ຕົກເຂື່ອນນ້ຳງື່ມ ໄດ້ສຳເຣັດລົງແລ້ວ ຫລັງຈາກປີ ໑໙໗໘. ບາດກ້າວອັນສຳຄັນໃນທຳນອງດຽວກັນນີ້ ຈະໄດ້ນຳມາປະຕິບັດອີກໃນປີນີ້, ໂດຍການລົງມືດຳເນີນໂຄງການຊົລປະທານທົ່ງທ່າງ່ອນ ທີ່ໄດ້ຢືມເງິນ ຈາກທະນາຄານພັທນາເອເຊັຽ ມາໃຊ້ຈ່າຍພ້ອມທັງການຊ່ວຍເຫຼືອ ດ້ານວິຊາການຈາກຍີ່ປຸ່ນ

ແຜນການຣະຍະຍາວນີ້ ເປັນວິທີການນຶ່ງທີ່ຈະໃຫ້ການຜລິດຜົນ ດ້ານບໍຣິໂພກນີ້ໄດ້ຄູ່ຄຽງໄປ ກັບການທະວີຄູນຂຶ້ນຂອງປະຊາກອນ ທີ່ຈະມີໂອກາດໄດ້ໃຊ້ພລັງໄຟຟ້າ ໃນຣາຄາຖືກ ເພື່ອສົ່ງເສີມກິຈ- ການຂອງໂຮງງານ. ການຜລິດໝູເທົ່າທຸກວັນນີ້ມີປະມານ ໓.໐໐໐ ໂຕຕໍ່ປີ, ຢູ່ຕາມທົ່ງທີ່ຣາບພຽງ ແຕ່ ຈະຕ້ອງເພີ້ມຂຶ້ນຈົນເຖິງຈຳນວນ ໔໔.໐໐໐ ໂຕ ໃນປີ ໑໙໗໕ ດ້ວຍການຈັດຕັ້ງສຫະກອນການລ້ຽງໝູ, ປັບປຸງການສຸຂວິທຍາຂອງສັດໃຫ້ດີຂຶ້ນກວ່າເກົ່າ, ໃຊ້ສູນກາງລ້ຽງໝູທີ່ໃຫຍ່ ແລະບັນຈຸໄດ້ຫລາຍ ແລະ ເພີ້ມພູນການຜລິດອາຫານຂອງສັດ ໃຫ້ຫລາຍຂຶ້ນກວ່າເກົ່າ. ນອກຈາກນີ້ແລ້ວ ຍັງໄດ້ມີໂຄງການຈະສ້າງ ໂຮງງານ ເພື່ອເກັບເຄື່ອງເສດເຫຼືອ ຂອງໂຮງຂ້າສັດ ແລະໂຮງງານທີ່ໃຊ້ເຄື່ອງເສດເຫຼືອເຫຼົ່ານັ້ນ ເພື່ອ ຜລິດອາຫານອັນມີຄຸນນະພາບ.

ທົ່ງຣາບວຽງຈັນ ໄດ້ຮັບປໂຍດຈາກແຜນພັທນາແຫ່ງຊາດນີ້ ປະມານ ໔໖% ຂອງໂຄງການ ລ້ຽງປາທັງໝົດ. ການບໍຣິໂພກ "ປາ" ແຕ່ລະປີ ໃນເຂດທີ່ຢູ່ໃນຄວາມເບິ່ງແຍງຂອງຣັຖບານນັ້ນ ໄດ້ຄາດ ຄະເນວ່າ ປະມານ ໑.໗໓໐.໐໐໐ ກິໂລ, ໃນຈຳນວນນີ້ມີ ໘໕໐.໐໐໐ ກິໂລ ທີ່ໄດ້ສົ່ງມາຈາກຕ່າງປະ ເທດ. ເມື່ອເປັນດັ່ງນີ້ ເຮົາຈຶ່ງວາງໂຄງການ (ເບິ່ງໂຄງການ ໘໐) ວ່າໃນປີ ໑໙໗໘ ນີ້ ຈະຕ້ອງ ຜລິດປະມານ ໓໔໐.໐໐໐ ກິໂລ ດ້ວຍການນຳເອົາປາ "ອາລເລແອັງ" ຈຳນວນ ໘.໓໐໐.໐໐໐ ໂຕ (ກະວ່າ ໑໐% ຂອງປາທັງໝົດຈະຍັງມີຊີວິດຢູ່ ແລະນ້ຳໜັກປາທີ່ໃຫຍ່ແລ້ວກະຕົວລະນຶ່ງກິໂລ) ແລະປາທີ່ ຈະນຳໄປຂາຍຕລາດ ຫຼື ນຳໄປລ້ຽງຢູ່ສຖານທີ່ວາງໄຂ່ປາອີກປະມານ ໖໕.໐໐໐ ກິໂລ. ຄ່າໃຊ້ຈ່າຍທັງໝົດ ໃນການຜລິດປານີ້ ກະວ່າຈະມີປະມານ ໑໖໐.໐໐໐.໐໐໐ ກີບ.

ການສຶກສາຄົ້ນຄວ້າຊອກຫາ ວິທີການທີ່ພໍເປັນໄປໄດ້ ເພື່ອສົ່ງເສີມການຜລິດນ້ຳຕານ, ເຂົ້າ ແປ້ງ, ນ້ຳມັນພືດຜົນ, ອາຫານສັດ, ເກືອ ແລະການຜລິດຢາ, ກຳລັງລົງມືປະຕິບັດຢູ່. ພ້ອມດຽວກັນນີ້ ການສຶກສາເພື່ອຈະຕັ້ງເຂດທົ່ງຣາບວຽງຈັນ ໃຫ້ເປັນເຂດອຸດສາຫະກັມ ກໍກຳລັງດຳເນີນຕໍ່ໄປ ຜົນທີ່ໄດ້-

..../ ໗ ..

ຮັບຄັ້ງທຳອິດ ໄດ້ສະແດງໃຫ້ເຮົາເຫັນວ່າ ການຜລິດ (ນ້ຳຕານແລະເຂົ້າແປ້ງ) ບໍ່ທັນເພາະສົມ ກັບສະພາບການປັດຈຸບັນເທື່ອ, ແຕ່ການຜລິດສິ່ງອື່ນນັ້ນ ໂດຍສະເພາະ ອາຫານສັດ, ເກີບ, ຫວ້ານ ຢາ ເຫັນວ່າພໍມີທາງເປັນໄປໄດ້ດີ. ຍັງມີການ ສຶກສາຂັ້ນຕົ້ນເບິ່ງ ການຈະຕິດຕັ້ງໂຮງງານ ເຮັດຊີເມັນ, ໂຮງ-ງານເຮັດໄມ້ອັດ ແລະການສ້າງຂົວຂ້າມນ້ຳຂອງອີກ.

ການສຶກສາຄົ້ນຄວ້າດ້ານ ວິຊາການນີ້ ເຫັນວ່າມີຄວາມຈຳເປັນໃນການຕິດຕັ້ງໂຮງຂ້າສັດທີ່ທັນ-ສມັຍໃນວຽງຈັນ, ປາກເຊ, ສວັນນະເຂດ ແລະອຸປະກອນວິທະຍຸ ໄຟຟ້າຢູ່ສນາມບິນວັດໄຕ ວຽງຈັນ ທີ່ໄດ້ຂຍາຍທາງແລ່ນ ຈົນເສັດສ້ຽງແລ້ວ ແຕ່ປີ ໑໙໖໙-໗໐.

,... / ຊ..

໐໑໙. ຕາຕລາງ ໑.

ເຄື່ອງຊີ້ບອກທີ່ຄັດເລືອກແລ້ວ.

	ຈຳນວນ	໑໙໖໗	໑໙໖໘	໑໙໖໙
ກ. ຕົວເລກຊີ້ບອກຣາຄາບໍຣິໂພກ (ວຽງຈັນ)	໑໙໖໔ = ໑໐໐	໑໓໖,໑	໑໔໓,໓	໑໔໘,໙
ຂ. **ຈຳນວນເງິນ**	ຄິດເປັນໂກດກີບ			
- ຈຳນວນເງິນທັງໝົດ (ທ້າຍປີ)		໑໐,໙	໑໒,໑	໑໓,໓
- ຕົວເລກຊີ້ບອກການເພີ່ມຈຳນວນ	໑໙໖໔= ໑໐໐	໑໖໔,໓	໑໘໑,໓	໑໙໙,໘
- ຕົວເລກຊີ້ບອກການປຽບທຽບຈຳນວນເງິນໃສ່ຣາຄາສິນຄ້າ	໑໙໖໔ = ໑໐໐	໑໒໐,໗	໑໒໘,໖	໑໓໔,໔
ຄ. **ປະຣິມານເງິນເພື່ອເຮັດໃຫ້ກິຈການ** ທະນາຄານໝູນທຽວ (ວຽງຈັນ)	ຄິດເປັນໂກດກີບ	໓໘,໔	໔໕,໒	໕໔,໘
ງ. **ການແລກປ່ຽນເງິນ**				
- ການຂາຍເງິນຕຣາຕ່າງປະເທດທັງໝົດ	ຄິດເປັນລ້ານໂດລາ	໔໓,໙	໔໘,໙	໕໒,໗
- ເງິນຕຣາຕ່າງປະເທດ ທີ່ໄດ້ມາຈາກຕລາດເສຣີ	- " -	໓໔,໔	໔໒,໗	໔໗,໙
- ເງິນຕຣາຕ່າງປະເທດ ທີ່ໄດ້ມາຈາກທະນາຄານແຫ່ງຊາດ	- " -	໓,໓	໓,໒	໒,໙
- ໄດ້ຢາງບຣູເທັນ (ຢູເສດ)	- " -	(໑,໐)	(໑,໐)	(໑,໑)
- ໄດ້ຈາກສິນຄ້າຂາອອກ	- " -	(໐,໖)	(໐,໖)	(໐,໖)
- ໄດ້ຈາກສຖານທູດແລະອົງການຕ່າງປະເທດ	- " -	(໑,໔)	(໑,໕)	(໑,໑)
- ໄດ້ຈາກໄປສະນີແລະຄົມມະນາຄົມ	- " -	(໐,໓)	(໐,໑)	(໐,໑)
- ໄດ້ຈາກສິນຄ້າຂາເຂົ້າໃນໂຄງການຊ່ວຍເຫຼືອຂອງຕ່າງປະເທດ	- " -	(໖,໒)	(໔,໐)	(໑,໙)
ຈ. **ສິນຄ້າຂາເຂົ້າ**				
ຈຳນວນສິນຄ້າຂາເຂົ້າທັງໝົດ :ສະຖິຕິແຫ່ງຊາດ ຂອງສິນຄ້າຂາອອກຂອງປະເທດ ທີ່ມີການຄ້າຂາຍ ກັບພຣະຣາຊອານາຈັກລາວ	ຄິດເປັນໂກດໂດລາ	໒໑,໐	໒໐,໕	

* ເງິນຕຣາຕ່າງປະເທດທີ່ໄດ້ມາຈາກ ສິນຄ້າຂາອອກທີ່ໄດ້ຜ່ານທາງທະນາຄານແຫ່ງຊາດ.

.../ ໙..

ຈຳນວນສິນຄ້າທັງໝົດ ຕາມບັນທຶກ ຂອງກົມພາສີ ແຫ່ງຊາດ	ຈຳນວນ ຄິດເປັນໂກດກີບ	໑໙໖໗ ໑໑,໘	໑໙໖໘ ໑໔,໘	໑໙໖໙ ໑໘,໓
- ເຄື່ອງບໍລິໂພກ	-"-	(໔,໕)	-	-
- ນ້ຳມັນເຊື້ອເພີງ	-"-	(໒,໔)	-	
- ວັດຖຸສິ່ງຂອງໃນການຂົນສົ່ງ....	-"-	(໑,໕)	-	
- ເຄື່ອງຈັກເຄື່ອງກົນ	-"-	(໐,໘)		
- ໂລຫະທາດ	-"-	(໐,໕)		
- ຜ້າແພບຕ່າງໆ	-"-	(໐,໕)		
- ຜົນຜລິດດ້ານເຄມີ	-"-	(໐,໔)		
- ຜົນຜລິດ "ປລາສຕິກ"	-"-	(໐,໔)		
- ເຈ້ຍກະດາດ	-"-	(໐,໓)		
- ອື່ນໆ	-"-	(໐,໕)		
ຂ. <u>ສິນຄ້າຂາອອກ</u>	ຄິດເປັນໂກດກີບ	໑,໐໖	໑,໖໔	໑,໔
ຄ. <u>ການບໍລິໂພກ</u>				
- ນ້ຳມັນເຊື້ອເພີງ	ຄິດເປັນໂກດກີບ	໑໐໓,໗	໑໐໒,໓	໑໑໓,໓
- ນ້ຳມັນແອສຊັງ	-"-	໔໙,໓	໔໖,໙	໕໐,໗
- ນ້ຳມັນກາດ	-"-	໑໐,໗	໑໐,໔	໑໐,໔
- ນ້ຳມັນກາຊວນ	-"-	໓໙,໓	໔໑,໕	໔໘,໖
- ນ້ຳມັນເຄື່ອງຈັກ	-"-	໔,໔	໓,໕	໓,໗
- ຖ່ານດັງໄຟ	ຄິດເປັນພັນໂຕນ ເມຕຣິກ	໑໐,໙ ໑໙,໕	໑໓,໔ ໒໐,໙	໑໓,໔ ໒໕,໒
- ໄຟຟ້າ (໑)	ຄິດເປັນລ້ານກີບ ໂລວັດ	໑໘,໗	໒໒,໔	໑໔,໕
- ຈຳນວນງົວຄວາຍທີ່ນຳເຂົ້າມາຂ້າ.	ຄິດເປັນພັນໂຕ	໙,໐	໗,໓	໘,໙
- ຈຳນວນໝູທີ່ນຳມາຂ້າ	-"-	໖໔,໙	໕໘,໖	໕໕,໔
- ຈຳນວນໄມ້	ຄິດເປັນພັນແມດ ກວິບ	໑໑໔,໘	໖໖,໗	໑໑໗,໙

..../ ໑໐..

ຈຳນວນສິນຄ້າທັງໝົດ ຕາມບັນທຶກ ຂອງກົມພາສີ ແຫ່ງຊາດ	ຈຳນວນ ຄິດເປັນໂກດກີບ	໑໙໖໗	໑໙໖໘	໑໙໖໙
		໑໑,໘	໑໔,໘	໑໘,໓
ຍ. ກຳລັງແຮງງານ				
- ຈຳນວນນັກຮຽນທີ່ໄດ້ປະກາດສະນີຍະບັດປະຖົມສຶກສາ	ຄິດເປັນພັນຄົນ	໕,໕	໖,໗	໗,໖
- ຈຳນວນນັກຮຽນທີ່ຮຽນຢູ່ໃນມັທະຍົມສຶກສາ	- " -	໔,໘	໕,໕	໖,໔

໑). ຍົກເວັ້ນຈຳນວນໄຟຟ້າທີ່ພວກໃຊ້ຜລິດໃຊ້ເອງ.

໔). ສຳລັບແຕ່ທຶກເດືອນທຳອິດເທົ່ານັ້ນ.

໐໒໐ - <u>ວິທີການວາງແຜນ - ແຜນພັທນາສ່ວນໂຮມແລະແຜນປະຈຳປີ.</u>

໐໒໑ - <u>ລັກສນະທາງກົດໝາຍ.</u>

ແຜນດຳເນີນງານປະຈຳປີ ໑໙໗໐-໗໑ ເປັນແຜນທີສອງໃນ ໕ ແຜນ ຂອງແຜນພັທນາສ່ວນໂຮມແຫ່ງຊາດ ໑໙໖໙-໗໔. "ໂດຍໃຫ້ຄວາມສຳຄັນແກ່ແຜນຜລິດຜົນ" ແຜນນີ້ຈະໄດ້ນຳໄປປະຕິບັດນັບແຕ່ວັນທີ ໑ ກໍຣະກະດາ ໑໙໗໐ ຫາ ວັນທີ ໓໐ ສິງຫາ ໑໙໗໑ ແລະຈະໄດ້ທຳປະກາດເປັນພຣະຣາຊອົງການ.

໐໒໒ - <u>ລັກສນະທາງເສດຖກິດ.</u>

ລັກສນະພື້ນຂອງແຜນພັທນາສ່ວນໂຮມແຫ່ງຊາດນີ້ ເຜີນເປັນແຜນອ່ອນພັບກວ່າຄື: ສາມາດປ່ຽນແປງໄປຕາມຄວາມສຳຄັນແລະຄວາມຕ້ອງການທີ່ເກີດຈາກສະພາບການ ແລະເງື່ອນໄຂດ້ານການເມືອງ, ດ້ານສັງຄົມ ແລະດ້ານເສດຖກິດ, ແຜນດຳເນີນງານປີທີສອງນີ້ຈະຕ້ອງຈັດທຳຂຶ້ນບໍ່ເພີ່ມພຽງຈະຮັກສາຈຸດໝາຍປາຍທາງຂອງແຜນສ່ວນໃຫຍ່ເທົ່ານັ້ນ, ແຕ່ຕ້ອງຄຳນຶງເຖິງຄວາມຕ້ອງການອັນຮີບດ່ວນໃນປັດຈຸບັນ. ໂດຍສະເພາະ ຈະຕ້ອງສາມາດໃຫ້ຄວາມສຳຄັນຢ່າງກະທັນຫັນ ແກ່ແຜນໃດແຜນໜຶ່ງ ເພື່ອຈະຮັກສາຄວາມສມ່ຳສເມີຂອງງົບປະມານແຫ່ງຊາດ ພາຍໃນປີຕໍ່ໄປ.

ດ້ວຍເຫດນີ້, ເພື່ອຈະໃຫ້ເໝາະສົມກັບສພາບການບ້ານເມືອງ ທີ່ມີສົງຄາມຢູ່ໂຄງການໃຫຍ່ຄື "ການຈັດຕັ້ງບ້ານໃໝ່ໃຫ້ຊາວອົບພະຍົບ ເສັຽອົງຄະແລະນັກຮົບເກົ່າ", ຈຶ່ງເປັນຈຸດປະສົງອັນສຳຄັນຂອງແຜນປະຈຳປີ ໑໙໗໐-໗໑ ແຕ່ງກົມກຽວກັບກອງປະຊຸມ ສິລປະກັມ ອຸດສາຫະກັມ ແລະຊັພຍາກອນທ້ອຍນີ້. ເພາະວ່າກອງປະຊຸມນີ້ ມີໂຄງການແລະທຶນພຽງເລັກນ້ອຍໃນແຜນດຳເນີນງານປີທີສອງ. ແຕ່ວ່າພາຍໃນສາມປີຕໍ່ໜ້ານີ້ ເຮົາຄວນລົງມືປະຕິບັດ ໂຄງການທີ່ເຫັນວ່າມີຄວາມສຳຄັນ ແລະເຮົາຄວນສຶກສາຄົ້ນຄວ້າໄວ້ແຕ່ບັດນີ້ເປັນຕົ້ນໄປ.

ໃນບາງກໍຣະນີ, ກໍເຫັນວ່າ ມີຄວາມຈຳເປັນທີ່ຈະຕ້ອງມີການດັດແປງບາງໂຄງການ ຕົວຢ່າງ: ໂຄງການເລກທີ ໔໗ ກ່ຽວກັບກົມບໍ່ແຮ່ ທີ່ຈະຕ້ອງກວດສອບເບິ່ງເຄື່ອງຊັບອົກແຮ່ທາຣາຄາຕ່າງໆ ຕໍ່ພຣະຣາຊອານາຈັກ. ດ້ວຍເຫດຜົນທີ່ວ່າປະເທດຊາດ ບໍ່ມີຄວາມປອດໄພ, ຈຶ່ງເຫັນຈຳເປັນຕ້ອງປ່ຽນການສຶກສາຄົ້ນຄວ້າເບິ່ງໂລຫະທາດຕ່າງໆ ໃນເຂດທົ່ງຣາບວຽງຈັນ.

24/VII
ຫ້າມຈຳໜ່າຍ

ນອກນີ້ ທ່ານຈະສັງເກດເຫັນວ່າເຮົາໄດ້ຈັດໂຄງການເລກທີ ໗໙ ຫາ ໘໑ ເຂົ້າເປັນໂຄງການດຽວທີ່ມີຊື່ວ່າ : ການສ້າງສາແລະສ້ອມແປງຖນົນຫົນທາງແຫ່ງຣາຊອານາຈັກລາວ ແລະໂຄງການເລກທີ ໕໘-໕໔-໕໕- ກໍໄດ້ຈັດເຂົ້າເປັນໂຄງການດຽວເໝືອນກັນແລະມີຊື່ວ່າ : ການສ້າງສາໂຮງຮຽນປະຖົມສຶກສາ.

໑໙. - <u>ວິທີການວາງແຜນ</u>.

ແຜນດຳເນີນງານ ປີທີສອງນີ້ ໄດ້ຈັດທຳຂຶ້ນ ແບບດຽວກັບ ແຜນພັທນາສ່ວນໂຮມແຫ່ງຊາດ ຜແນກກົມກອງຕ່າງໆ ທີ່ໄດ້ບັນຈຸໂຄງການ ເຂົ້າໃນແຜນພັທນາສ່ວນໂຮມນີ້, ໄດ້ຖືກແນະນຳໃຫ້ສເນີຄວາມຄິດເຫັນ ແລະໂຄງການຕ່າງໆ ຕໍ່ຄນະກັມມະການກຽມແຜນ ເພື່ອຈະໄດ້ລົງຄວາມເຫັນທີ່ເໝາະສົມ ຕາມກົດເກນດັ່ງຕໍ່ໄປນີ້ :

- ໂຄງການນັ້ນ ຈະຕ້ອງມີລັກສນະວ່າ ຈະສາມາດປະຕິບັດໃນໄວໆ
- ຄວາມສຳຄັນ ໃນການປະຕິບັດໂຄງການ ໂດຍໃຫ້ຄຳນຶງເຖິງ ຄວາມຕ້ອງການ, ຄວາມຈຳເປັນ ແລະໂອກາດອັນເໝາະສົມ.
- ສຸດທ້າຍຕ້ອງຮູ້ແນ່ນອນວ່າ ຈະມີທຶນເພື່ອມາດຳເນີນໂຄງການ.

ການຕັດສິນຮັບເອົາໂຄງການຕ່າງໆ ຂອງແຕ່ລະກອງປະຊຸມກຽມແຜນ ໄດ້ກະທຳໄປໃນກອງປະຊຸມວິເຄາະແຜນ (ກອງປະຊຸມເສຖກິດແລະສັງຄົມ, ກອງປະຊຸມກຽວກັບການຊ່ວຍເຫຼືອ, ກອງປະຊຸມການເງິນ). ກອງປະຊຸມວິເຄາະແຜນນີ້ ມີຈຸດປະສົງສ່ວນໃຫຍ່ ຮັບເອົາໂຄງການຕ່າງໆເພື່ອປະຕິບັດ ໂດຍຄຳນຶງເຖິງ ເງິນງົບປະມານແຫ່ງຊາດ ທີ່ມີຢູ່. ດັ່ງນັ້ນ, ໃນການຈັດທຳແຜນດຳເນີນງານ ປີທີສອງນີ້ ຈຶ່ງໄດ້ມີທຸກກົມກອງ ແລະອົງການຊ່ວຍເຫຼືອຕ່າງປະເທດ ທີ່ກ່ຽວຂ້ອງໄດ້ຮ່ວມໄມ້ຮ່ວມມືກັນຢ່າງໃກ້ຊິດ ຈັດທຳຂຶ້ນ. ແລະເຮົາເຊື່ອແນ່ວ່າ ເຮົາຈະມີແຜນດຳເນີນງານ ທີ່ນັບວ່າໄດ້ຈັດທຳຂຶ້ນຢ່າງດີ ທີ່ເວັ້ນຈາກການລົງທຶນ ແລະການທຸ້ມເທເຫື່ອແຮງຢ່າງໄຮ້ຜົນ ແລະໄຮ້ການແຕ່ງແປງ.

ກິຈການຣາຍນີ້ ຈະຕ້ອງດຳເນີນຕໍ່ໄປ ຫລັງຈາກການຈັດທຳແຜນ ດຳເນີນງານປີທີສອງເ ເສັດສິ້ນແລ້ວກໍຕາມ, ເຫັນວ່າມີຄວາມຈຳເປັນ ທີ່ຈະຕ້ອງດຳເນີນຕໍ່ໄປ ໃນຣະຍະການປະຕິບັດແຜນອີກ. ອີກປະການນຶ່ງ ການປຶກສາຫາລືກັນ ຣະຫວ່າງກົມກອງຕ່າງໆກໍເຫັນວ່າ ມີຄວາມສຳຄັນຢູ່ບໍ່ນ້ອຍ ເພື່ອຈະໄດ້ຊ່ວຍກັນ ແກ້ໄຂບັນຫາຕ່າງໆທີ່ອາດຈະເກີດຂຶ້ນໄດ້ ພ້ອມດຽວກັນ ກໍພະຍາຍາມຕິດຕໍ່ ສົ່ງຂ່າວໃຫ້ທຸກໆຝ່າຍທີ່ກ່ຽວຂ້ອງ ໄດ້ຮູ້ເຖິງການເຄື່ອນໄຫວ ຂອງທຸກໆໂຄງການ ຢ່າງແຈ່ມແຈ້ງ.

(ເບິ່ງການປະຕິບັດແຜນດຳເນີນງານປະຈຳປີ).

.../໑໙..

໐໓໐. ສເນີແລະວິຈັຍແຜນດຳເນີນງານປີທີສອງ.

໐໓໑. ກ າ ນ ສ ເ ນີ ແ ນ ະ

ເໝືອນດັ່ງຫລາຍປີທີ່ຜ່ານມາ ແຜນດຳເນີນງານປີທີສອງນີ້ ໄດ້ແບ່ງອອກເປັນສອງພາກ:

- ພາກທີໜຶ່ງ : ແມ່ນຄຳຊີ້ແຈງ ໂຄງການຕ່າງໆ ທີ່ປະກອບແຜນ ແລະໄດ້ຈັດໂຮມໄວ້ ໃນຕາຕະຣາງທີ່ໂຮມໂຄງການຕ່າງໆ ທີ່ຕິດຢູ່ທ້າຍສຸດ.
- ພາກທີສອງ : ການປະຕິຮູບ ພົນຖານ.

ໃນພາກທີໜຶ່ງນັ້ນ ໂຄງການຕ່າງໆ ໄດ້ຖືກແບ່ງອອກ ເປັນສອງໝວດ : ໂຄງການໃຫຍ່ ແລະໂຄງການອື່ນໆ. ສຳລັບໂຄງການອື່ນໆນີ້ ໄດ້ຈັດໄວ້ເປັນໂຄງການ ຂອງແຕ່ລະກອງປະຊຸມ-ເໝືອນດັ່ງປີທີ່ຜ່ານມາ, ກ່າວຄື ມີຄຳນຳເບື້ອງຕົ້ນ ທີ່ອະທິບາຍຈຸດປະສົງ ແລະແນວທາງອັນໃຫຍ່ ຂອງແຜນດຳເນີນງານປະຈຳປີ. ທຸກໆໂຄງການ ຂອງແຕ່ລະກອງປະຊຸມ ໄດ້ຈັດທຳຂຶ້ນຕາມແບບ-ດັ່ງຕໍ່ໄປນີ້ :

໑. ຂໍ້ມູນທົ່ວໄປ

໒. ຕາຕະຣາງປະຕິບັດງານ

໓. ການຈຳແນກ ຣາຄາ ແລະ ການເງິນ.

ຕາຕະຣາງທີ່ໂຮມໂຄງການຕ່າງໆ ທີ່ຕິດຢູ່ທ້າຍສຸດ ໄດ້ມີການປ່ຽນແປງແຕ່ລັກນ້ອຍ ເພື່ອໃຫ້ເບິ່ງງ່າຍ ແລະເຂົ້າໃຈດີກ່ອນເກົ່າ. ມີແຕ່ແຫຼ່ງຂອງການເງິນເທົ່ານັ້ນ ຍັງຄົງເຫຼືອຢູ່ ກ່າວຄືໄດ້ເງິນມາຈາກ :

- ການຊ່ວຍເຫຼືອງົບປະມານແຫ່ງຊາດ ທີ່ໄດ້ແບ່ງອອກເປັນສອງຢ່າງ

໑. ງົບປະມານທີ່ຍົກຍ້າຍມາຈາກປີທີ່ແລ້ວ

໒. ງົບປະມານໃໝ່ຂອງແຜນປີນີ້ ແລະອື່ນໆ

ໃນຫ້ອງສຸດທ້າຍຂອງຕາຕະຣາງນັ້ນ ມີເຄື່ອງໝາຍຢູ່ກອງຕົວເລກບາງຕົວ ເພື່ອສະ-ແດງເຖິງລັກສນະ ຂອງແຫລ່ງການເງິນ. ສຳລັບປີນີ້ ເຮົາຈະບໍ່ນຳເອົາເຣື່ອງການສຶກສາຕົ້ນ-ຄວ້າ ການລົງທຶນແລະການດຳເນີນງານ ມາລົງໃນຕາຕະຣາງນີ້. ອັນນີ້ກໍບໍ່ໄດ້ໝາຍຄວາມວ່າຄວາມຄິດ

.../໑໔..

ແລະແນວທາງນີ້ ໄດ້ຖືກຍົກເວັ້ນຫຼືລະເລີຍໄປ ແຕ່ກົງກັນຂ້າມ ເຮົາໄດ້ພະຍາຍາມສະແດງໃຫ້ເຫັນ ລັກສນະດ້ານນັ້ນ ໃນຕາຕະຣາງທີ່ຈຳແນກຣາຄາ ແລະການເງິນຂອງແຕ່ລະໂຄງການ ຕາມກົດ-ເກນດັ່ງນີ້ : ການສຶກສາຄົ້ນຄວ້າ, ການສ້າງສາ, ພັສະດຸສິ່ງຂອງ, ທຶນສຶກສາແລະທຶນສັງເກດການ ເພື່ອການລົງທຶນ ແລະການບັນຈຸເອົາພນັກງານໃໝ່, ຫຼືຖາວອນ, ອື່ນໆແລະເພື່ອການດຳ-ເນີນງານ ເພື່ອເວັ້ນຈາກການຣີບໂຣມ ທີ່ຫລາຍເກີນສ່ວນ ຂອງຕາຕະຣາງ ທີ່ສະແດງລັກສນະຂອງສຖິຕິ, ທ່ານຈະໄດ້ພົບແຕ່ການວິຈັຍ ເຣື່ອງສຳລັບແຕ່ລະກອງປະຊຸມ ໃນວັກຂອງການວິຈັຍແຜນປະຈຳປີ. ໃນຫ້ອງຂອງການລົງທຶນນີ້ ໄດ້ຈັດເອົາການສ້າງສາ ແລະອຸປະກອນຕ່າງໆ ໄວ້ສ່ວນນຶ່ງ ທຶນການສຶກສາ ແລະການສັງເກດການ ໄວ້ອີກສ່ວນນຶ່ງ.

ພາກທີສອງນີ້ ໄດ້ກ່າວເຖິງແຕ່ການປະຕິຮູບພື້ນຖານ ທີ່ໄດ້ບັນທຶກໄວ້ແຕ່ກ່ອນ. ບັນຫາຕ່າງໆຫລາຍບັນຫາ ກໍໄດ້ພົບເຫັນ ໃນການດຳເນີນ ແຜນພັທນາສ່ວນໂຣມແຫ່ງຊາດ ແລະໃນຂນະດຽວກັນ ກອງປະຊຸມຕ່າງໆ ກໍໄດ້ຖືກຈັດຕັ້ງຂຶ້ນ ເພື່ອຈະໄດ້ສຶກສາ ຫາວິທີແກ້ໄຂບັນຫາຕ່າງໆນັ້ນ. ການແກ້ໄຂບັນຫານີ້ ເຫັນວ່າມີຄວາມຈຳເປັນ ຢ່າງກະທັນຫັນ ເພາະວ່າສິ່ງເຫຼົ່ານັ້ນ ເປັນເງື່ອນໄຂ ໃນການດຳເນີນແຜນ. ເຮົາຕ້ອງພະຍາຍາມ ແກ້ໄຂຈົນໝັ້ນໃຈວ່າ ສິ່ງກີດຂວາງ ຕໍ່ການດຳເນີນແຜນເຫຼົ່ານັ້ນ ໄດ້ຖືກແກ້ໄຂ ແລະສູນຫາຍໄປ ພາຍໃນຣະຍະຫ້າປີ. ດ້ວຍເຫດນີ້ ຈຶ່ງເຫັນວ່າສົມຄວນທີ່ເຮົາ ຈະຕ້ອງຕັ້ງຄຳຖາມ ທີ່ສາມາດຄາດຄະເນ ຫຼືວັດແທກເສັ້ນທາງ ທີ່ເຮົາໄດ້ຜ່ານມາແລ້ວ ແລະເສັ້ນທາງ ທີ່ເຮົາຈະຕ້ອງເດີນຕໍ່ ໄວ້ຕັ້ງແຕ່ຕົ້ນປີ ຂອງແຜນດຳເນີນງານປີທີສອງ.

໐໓໔. <u>ຂໍ້ສັງເກດຂັ້ນຕົ້ນ</u>.

ກ່ອນຈະເຂົ້າໄປຫາ ການວິຈັຍ ແຜນດຳເນີນງານປະຈຳປີນັ້ນ ເຫັນວ່າສົມຄວນ ຕ້ອງໃຫ້ຂໍ້ສັງເກດ ຂັ້ນຕົ້ນກ່ອນ :

ກ. ເຮົາຄວນຈົດຈຳໄວ້ວ່າ ໄດ້ມີການປ່ຽນແປງ ໃນການປະເມີນຣາຄາ ຂອງໂຄງການຕ່າງໆ ໃນ-ປີນີ້ ແລະມີການຕື່ມຈຳນວນເງິນ ຂອງການຊ່ວຍເຫຼືອ, ແລະກໍມີການຊ່ວຍເຫຼືອ ດ້ານວິຊາການ-ໂດຍສະເພາະ ເຊັ່ນ (ຜູ້ຊ່ຽວຊານ ທີ່ເຮັດການຢູ່ ນຳອົງການຊ່ວຍເຫຼືອຕ່າງປະເທດ ຫຼືຢູ່ໃນ-

ພແນກການຕ່າງໆຂອງລາວ, ແຕ່ວ່າບໍ່ໄດ້ກ່ຽວຂ້ອງກັບໂຄງການໃດໆ). ວິທີນີ້ຈະຊ່ວຍໃຫ້ເຮົາຮູ້ແຈ້ງເຫັນຈິງ ໃນສພາບຈິງຂອງຣາຄາ ຂອງໂຄງການໂດຍສະເພາະ ແລະຈະຊ່ວຍໃຫ້ເຮົາມີພື້ນຖານ ໃນການປຽບທຽບ ສພາບການ ຣະຫວ່າງກອງປະຊຸມ ແລະພແນກຕ່າງໆ (ພແນກ-ຜລິດຜົນ-ສັງຄົມ).

ຂ: ເຮົາຈະຕ້ອງສັງເກດເຫັນວ່າ ຈຳນວນເງິນທັງໝົດ ທີ່ຢູ່ໃນຕາຕະຣາງທີ່ນຶ່ງ ຂອງງົບປະມານພັທນານັ້ນ ບໍ່ໄດ້ກົງກັນກັບຕົວເລກ ທີ່ຢູ່ໃນເອກະສານ ຂອງງົບປະມານແຫ່ງຊາດ ຊຶ່ງໄດ້ຈັດທຳ-ຂຶ້ນ ໂດຍກະຊວງການຄັງ. ໄດ້ມີການດັດແປງ ໃຫ້ຖືກຕ້ອງ ຫລັງຈາກໄດ້ສເນີງົບປະມານພັທນາຕໍ່ສະພາແຫ່ງຊາດ. ພ້ອມນີ້ກໍໄດ້ມີຄຳອະທິບາຍ ເຣື່ອງນີ້ໂດຍສະເພາະ ຢູ່ໃນໃບຊີ້ແຈງໂຄງການທີ່ກ່ຽວຂ້ອງ.

ຄວາມແຕກຕ່າງ ຂອງຈຳນວນເງິນງົບປະມານແຫ່ງຊາດ ທີ່ນຳມາດຳເນີນແຜນປະ-ຈຳປີ ແລະຈຳນວນເງິນ ທີ່ຢູ່ໃນເອກະສານ ຂອງງົບປະມານແຫ່ງຊາດນັ້ນ ມີ ໔໗.໐໘໗.໐໐໐ ກີບ ເປັນຕົວເລກທີ່ກາຍອອກມາຜິດ. ແຕ່ວ່າທາງກົມງົບປະມານແຫ່ງຊາດ ໄດ້ໃຫ້ຄຳໝັ້ນສັນ-ຍາວ່າ ຈະຊອກເງິນຈຳນວນນີ້ມາໃຫ້ໄດ້.

ນອກນັ້ນ ກໍຍັງມີຄວາມແຕກຕ່າງກັບປີທີ່ແລ້ວ ເພາະວ່າທາງກະຊວງການຄັງ ໄດ້-ນັບເອົາສ່ວນຂອງຣັຖບານ ທີ່ເປັນທຶນປະສົມ ໃນການສ້າງຖນົນຫົນທາງ ໃນຣາຊອານາຈັກລາວເຂົ້າໃນງົບປະມານທີ່ກະໄວ້ ສຳລັບແຜນພັທນາປະຈຳປີ. ໃນຕາຕະຣາງໂຮມໂຄງການຕ່າງໆ-ນັ້ນ ເຮົາບໍ່ໄດ້ໄລ່ເອົາງົບປະມານທັງໝົດ ຂອງໂຄງການ ໒໖ ຫາ ໔໖ ຊຶ່ງແມ່ນການສ້າງ-ສາຖນົນຫົນທາງ ໃນຣາຊອານາຈັກລາວ ເຂົ້ານຳ. ທັງນີ້ກໍເພື່ອໃຫ້ຖືກຕ້ອງກັບກົດເກນ ທີ່ໄດ້-ແຕ່ງຕັ້ງໄວ້ໃນແຜນພັທນາ ນນ ເຮົາຈຶ່ງໄດ້ໄລ່ເອົາແຕ່ງົບປະມານໃໝ່ ຈຳນວນ ໕໕.໔໗໕.໐໐໐ ກີບ ແທນທີ່ຈະແມ່ນ ໑໑໐.໐໐໐.໐໐໐ ກີບ ຕາມທີ່ໄດ້ບົ່ງໄວ້ ໃນງົບປະມານແຫ່ງຊາດ. ແລະເໝືອນກັນກັບການຊ່ວຍເຫຼືອ ຂອງອະເມຣິກາ ຈຳນວນ ໔໓໙.໒໕໒.໐໐໐ ກີບ ແທນທີ່ຈະ-ແມ່ນ ໙໕໑.໒໕໓.໐໐໐ ກີບ. ເມື່ອສົມກັນແລ້ວ ກໍຈະເປັນເງິນທັງໝົດ ໕໒໔.໖໒໗.໐໐໐ - ກີບ ເພື່ອດຳເນີນໂຄງການນີ້ ແທນທີ່ຈະແມ່ນ ໑.໐໖໑.໒໕໓.໐໐໐ ກີບ. ການດັດແປງນີ້ເຫັນວ່າມີຄວາມຈຳເປັນ ໃນການທີ່ຈະປຽບທຽບ ແຜນດຳເນີນງານໃໝ່ ກັບແຜນດຳເນີນງານປີທີ່ແລ້ວ ແລະກັບແຜນພັທນາສ່ວນໂຮມແຫ່ງຊາດ.

ເມື່ອຍຶດຖືເອົາກົດເກນ ຂອງກະຊວງການຄັງແລ້ວ ເຮົາຈະຕ້ອງໄລ່ເອົາເງິນຈຳ-ນວນ ໕໔.໓໑໕.໐໐໐ ກີບ ພ້ອມທັງການກູ້ຢືມຕື່ມໃສ່ງົບປະມານແຫ່ງຊາດ ທີ່ໄດ້ກະໄວ້ ໃນຕາ-ຕະຣາງ ໂຮມໂຄງການຕ່າງໆນັ້ນ, ທັງນີ້ກໍເພື່ອໃຫ້ສດວກ ໃນການປຽບທຽບຕົວເລກທັງໝົດ-ນີ້ ກັບຕົວເລກຂອງງົບປະມານພັທນາ.

.. / ໑໖..

ຄຳອະທິບາຍ :

໑. ສວນສົມທົບຂອງງົບປະມານ

໑. ການແຕກຕ່າງຣະຫວ່າງຈຳນວນເງິນ ຂອງແຜນປະຈຳປີ ຂອງກົມແຜນຜັງ ແລະງົບປະມານ ພັທນາ ຂອງກະຊວງການຄັງ.

ໂຄງການຫມາຍເລກທີ	໒໐	ເອົາອອກ	໒,໖໐໖	ລ້ານກີບ
" "	໒໒	ຕື່ມເຂົ້າ	໒໘,໗໓໖	"
" "	໒໓	ເອົາອອກ	໑໓,໗໕໒	"
" "	໕໘	ຕື່ມເຂົ້າ	໒,໐໐໐	"
" "	໘໓	- " -	໒,໐໐໐	"
" "	໘໘	- " -	໐,໐໑໐	"

ດຳເນີນງານ

໒. ຈຳນວນເງິນ ຂອງແຜນປະຈຳປີ ໂດຍຍຶດຖືເອົາຄຳອະທິບາຍເບື້ອງຕົ້ນ ຂອງການດຳເນີນ ໂຄງການ ສ້າງສາຖົນຫົນທາງ ແລະຜແນກກູ້ຢືມ.

- ແຜນດຳເນີນງານປະຈຳປີ (ກົມແຜນຜັງ) ໓໖໕,໓໒໗ ລ້ານກີບ
- ໂຄງການສ້າງສາຖົນຫົນທາງ : ຄາດຳ-
  ເນີນງານ ໕໔,໘໑໕ "
- ຜແນກກູ້ຢືມ ໘,໔໕໘ "

໓. ເງິນຈຳນວນ ໔໐໐ ລ້ານກີບ ທີ່ຂຽນໄວ້ໃນງົບປະມານພັທນານັ້ນ ແມ່ນມາຈາກການເຮັດ ຜິດ ຫຼືກາຍອອກພິດຣະຫວ່າງແຜນພັທນາ ແລະງົບປະມານພັທນາ.

໔. ເຮົາຄວນສັງເກດອີກວ່າ ຄວາມແຕກຕ່າງຣະຫວ່າງຈຳນວນເງິນ ທີ່ນຳມາໃຊ້ໃນການລົງ- ທຶນ, ການດຳເນີນງານ ແລະການສຶກສາຄົ້ນຄວ້າ ຍັງບໍ່ສາມາດຈະສມອງກັບສພາບການ ຢ່າງຄັ້ງຄັດ ທັງໆທີ່ວ່າ ມີການກ້າວຫນ້າຢູ່ ເມື່ອປຽບໃສ່ປີທີ່ຜ່ານມາ. ຕົວຢ່າງລາງ- ຜແນກກໍຍັງຖືເອົາຄ່າແຮງງານ ຂອງພນັກງານລອຍ ທີ່ສັງກັດຢູ່ ໃນການສ້າງສາອາຄານ ຕ່າງໆນັ້ນ ເປັນຄ່າໃຊ້ຈ່າຍ ໃນການດຳເນີນງານ ຫຼືກໍຖືເອົາຄ່າໃຊ້ຈ່າຍ ໃນການສຶກສາ- ຄົ້ນຄວ້າແລະແຜນສ້າງສານັ້ນ ເປັນເຫມືອນຄ່າດຳເນີນງານດັ່ງດຽວກັນ : ທັງໆທີ່ຄວນຈັດ ເອົາຄ່າໃຊ້ຈ່າຍ ສອງແບບນີ້ ເຂົ້າໃນການລົງທຶນ.

໕. ສຸດທ້າຍ ຢູ່ໃນຕາຕະຣາງແສດງສະຖິຕິ ທີ່ໄດ້ຈັດສເນີນັ້ນ ທ່ານຈະສັງເກດເຫັນວ່າ ແຜນ- ດຳເນີນງານປະຈຳປີ ໑໙໘໐-໘໑ ໄດ້ມີຢູ່ໃນສອງຫອງ :

- ຫ້ອງທີ່ນຶ່ງ ໄດ້ໄລ່ເອົາເງິນທີ່ຍົກຍ້າຍ ມາຈາກປີກ່ອນເຂົ້ານຳ.
- ຫ້ອງທີສອງ ບໍ່ໄດ້ໄລ່ເຂົ້ານຳ

.../ ໑໘..

ຖ້າຈະກ່າວເຖິງການວິຈັຍ ແຜນປະຈຳປີ ໑໙໗໐-໗໑ ເພື່ອຈະໄປປຽບທຽບໃສ່

ກ. ແຜນປະຈຳປີ ໑໙໖໙-໗໐ ແລະແຜນປະຈຳປີດ້ານທິສດີ ຂອງແຜນພັທນາ ສ່ວນໂຮມແຫ່ງ-ຊາດແລ້ວ ເຮົາຄວນຖືເອົາຕ້ອງທີສອງ ທັງນີ້ກໍເພາະວ່າ ເງິນທີ່ຍົກຍ້າຍມານັ້ນ ແມ່ນສ່ວນນຶ່ງຂອງເງິນທີ່ໄດ້ອະນຸຍາດໄປ ໃນປີທີ່ແລ້ວ. ອີກປະການນຶ່ງ ຖ້າວ່າເຮົາຢາກຮູ້ວ່າມີຫຍັງແດ່ທີ່ເຮົາຈະຕ້ອງປະຕິບັດໄປໃນປີນັ້ນ ເຮົາຄວນຖືເອົາຕ້ອງທີ່ນຶ່ງ ເພາະວ່າ ເງິນທີ່ໄດ້ອະນຸຍາດໄປ ໃນປີທີ່ແລ້ວ ແລະໄດ້ຍົກຍ້າຍມານັ້ນ ຈະຕ້ອງໄດ້ໃຊ້ຈ່າຍ ໃນປີ ໑໙໗໐-໗໑.

໐໓໓. <u>ສະພາບການເງິນ ຂອງແຜນດຳເນີນງານ ປະຈຳປີ ໑໙໗໐-໗໑.</u>

ຕາຕະຣາງໂຮມຄວາມຕ້ອງການ ດ້ານການເງິນ ຂອງແຜນປະຈຳປີ

ຄິດເປັນໂກດກີບ

ຈຳພວກ	ແຜນປະຈຳປີດ້ານທິສດີ ຄິດເປັນ ໑/໔ ຂອງແຜນພັທນາສ່ວນໂຮມ	ແຜນປະຈຳປີ ໑໙໖໙-໗໐	ແຜນປະຈຳປີ ໑໙໗໐-໗໑ (ໄລ່ເງິນຍົກຍ້າຍມາຈາກປີກ່ອນເຂົ້ານຳ)	ແຜນປະຈຳປີ ໑໙໗໐-໗໑ (ບໍ່ໄລ່ເງິນຍົກຍ້າຍເຂົ້ານຳ)
ໂຄງການໃຫຍ່	໙,໖໖໓	໕,໒໗໗	໙,໒໔໙	໙,໒໒໗
ໂຄງການອື່ນໆ	໒,໑໕໐	໒,໑໕໙	໓,໙໑໐	໓,໖໙໑
ໂຮມ	໑໑,໘໑໓	໗,໔໓໖	໑໓,໑໕໙	໑໒,໙໑໘

ເພື່ອໃຫ້ແຈ່ມແຈ້ງດີ ເຫັນວ່າຄວນມີການວິພາກວິຈານ ແດ່ລັກນ້ອຍກ່ຽວກັບຕາຕະ-ຣາງນີ້.

- ທັງໆທີ່ສັງເກດເຫັນວ່າ ຄວາມຕ້ອງການດ້ານການເງິນ ຂອງແຜນປະຈຳປີ ໑໙໖໙-໗໐ ຂອງແຜນປະຈຳປີ ດ້ານທິສດີກໍຕາມ ແຕ່ແຜນປະຈຳປີ ໑໙໗໐-໗໑ (ບໍ່ໄລ່ເງິນທີ່ຍົກຍ້າຍເຂົ້າ) ກໍໄດ້ກາຍຕົວເລກທີ່ຄາດຄະເນໄວ້ ໃນແຜນປະຈຳປີ ດ້ານທິສດີຢ່າງເຫັນແຈ້ງ. ຖ້າຈະປຽບໃສ່ປີທີ່ແລ້ວນີ້, ເຮົາສັງເກດເຫັນວ່າ ຄວາມຕ້ອງການດ້ານການເງິນ ຂອງຈຳພວກໂຄງການໃຫຍ່ນັ້ນ-ໄດ້ເພີ່ມຂຶ້ນ ໗໕% ແຕ່ວ່າກໍຍັງບໍ່ເຖິງຕົວເລກ ທີ່ກະໄວ້ໃນແຜນປະຈຳປີ ດ້ານທິສດີ. ສຳລັບຈຳ-ພວກໂຄງການອື່ນໆນັ້ນ ໄດ້ຕື່ມຂຶ້ນ ໖໖% ແລະກໍໄດ້ກາຍຂອບເຂດດ້ານທິສດີໄປ.

ການເພີ່ມຂຶ້ນອັນສຳຄັນນີ້ ກໍເນື່ອງມາຈາກ :

- ປະການທີນຶ່ງ ກໍຄືວ່າລາງໂຄງການ ໂດຍສະເພາະກໍແມ່ນ ໂຄງການໃຫຍ່ ທີ່ກຳລັງສຶກສາຢູ່ ໃນປີ ໑໙໖໙-໗໐, ຈະສາມາດລົງມືປະຕິບັດໄດ້ ໃນປີ ໑໙໗໐-໗໑.
- ແລະປະການທີສອງ ກໍຄືການໄລເອົາການຊ່ວຍເຫຼືອ ດ້ານວິຊາການ ເຂົ້າໃນ-

..../ ໑໘..

ການປະເມີນ ຄ່າແລະຣາຄາ ຂອງໂຄງການ.

ເຖິງວ່າຈະໄດ້ຕົວເລກ ທີ່ໜ້າພາກພູມໃຈກໍຕາມ ແຕ່ເຮົາກໍບໍ່ຄວນຈະເຫັນໄປ ໃນທາງທີ່ດີຫລາຍເກີນໄປ ທັງນີ້ກໍເພາະວ່າ :

- ທຸກໆໂຄງການ ທີ່ໄດ້ຈົດລົງ ໃນແຜນດຳເນີນງານປະຈຳປີນັ້ນ ອາດຈະບໍ່ໄດ້ປະຕິບັດ ໄປຕາມການຄາດຄະເນ ຄືວ່າ ພາຍໃນວັນທີ ໓໐ ມິຖຸນາ ໑໙໗໑. ແລະເຮົາຄວນຈົດຈຳໄວ້ວ່າ ເກືອບ ໕໐% ຂອງງົບປະມານ ຂອງແຜນດຳເນີນງານປະຈຳປີທີ່ນຶ່ງ ໄດ້ຖືກໃຊ້ຈ່າຍໄປແລ້ວ ພາຍໃນວັນທີ ໓໐ ມິຖຸນາ ໑໙໗໐ ແຕ່ວ່າວຽກການທີ່ຖືກປະຕິບັດໄປນັ້ນ ໄດ້ກາຍ ໕໐% ໄປຢ່າງລົ້ນເຫຼືອເຖິງວ່າຈະມີການຊຸ້ກຊາ ໃນການອະນຸຍາດຈ່າຍເງິນກໍຕາມ ດ້ວຍຄວາມລົ້ງເຄີຍ ແລະຣະຍະຕັ້ງຕົ້ນ ກໍໄດ້ຜ່ານໄປແລ້ວ ເຮົາຈຶ່ງຫວັງວ່າ ຈະດຳເນີນງານໃຫ້ໄດ້ຜົນຢ່າງນ້ອຍ ໘໕% ສຳລັບປີນີ້.
- ຫລາຍໆໂຄງການ ທີ່ໄດ້ຄາດຄະເນຄ່າແລະຣາຄາໄວ້ ໃນແຜນພັທນາສ່ວນໂຮມແຫ່ງຊາດໄປແລ້ວນັ້ນ ໄດ້ຖືກນຳມາສຶກສາ ແລະເພີ້ມຣາຄາຂຶ້ນໃຫມ່ອີກ ແລະເປັນເຫດໃຫ້ເງິນທີ່ກະໄວ້ນັ້ນ ບໍ່ສາມາດຈະນຳມາດຳເນີນ ວຽກທີ່ກະໄວ້ພອມກັນ.

໐໓໔. <u>ການວິຈັຍດ້ານການເງິນ ສຳຣັບແຕ່ລະແຫລ່ງການເງິນ</u>

ຕາຕະຣາງຊີ້ບອກແຫລ່ງການເງິນ.

ທີ່ມາຂອງເງິນ	ແຜນປະຈຳປີ ໑໙໖໙-໗໐		ແຜນປະຈຳປີ ໑໙໗໐-໗໑ ໄລ່ເອົາເງິນຍົກຍ້າຍເຂົ້ານຳ		ແຜນປະຈຳປີ ໑໙໗໐-໗໑ ບໍ່ໄລ່ເອົາເງິນຍົກຍ້າຍເຂົ້ານຳ	
	ໂຄງການໃຫຍ່	ໂຄງການອື່ນໆ	ໂຄງການໃຫຍ່	ໂຄງການອື່ນໆ	ໂຄງການໃຫຍ່	ໂຄງການອື່ນໆ
-ການຊ່ວຍເຫຼືອ	໘໓,໖໙	໖໘,໔໕	໖໖,໙໐	໗໗,໔໘	໖໗,໐໔	໘໔,໓໔
-ງົບປະມານແຫ່ງຊາດ	໐,໖໘	໑໗,໖໔	໐,໖໐	໑໕,໗໑	໐,໓໗	໙,໔໑
-ການກູ້ຢືມແລະອື່ນໆ *	໑໕,໖໓	໑໓,໙໑	໓໒,໕໐	໕,໗໙	໓໒,໕໙	໖,໑໕
ໂຮມ.	໑໐໐	໑໐໐	໑໐໐	໑໐໐	໑໐໐	໑໐໐

.../ ໑໙..

* ສຳລັບທົວອັນນີ້ ເງິນທີ່ໄດ້ມານັ້ນ ແມ່ນໄດ້ມາຈາກການກູ້ຢືມ ເກືອບທັງໝົດ ເຖິງຈະໄດ້ມາ ຈາກການຊ່ວຍເຫຼືອຕົນເອງ ກໍມີພຽງເລັກນ້ອຍ.

ຕາຕະຣາງນີ້ ຊີ້ໃຫ້ເຮົາເຫັນ ຂອບເຂດຂອງການມອງໄປ ໃນທາງທີ່ດີຂອງເຮົາ ເຖິງວ່າ ສ່ວນສົມທົບຂອງງົບປະມານແຫ່ງຊາດ ໃນການດຳເນີນໂຄງການໃຫຍ່ ຈະເປັນພຽງສັນຍາລັກກໍຕາມ (ຕາມຄວາມໝາຍແລ້ວກໍຄືວ່າ ຢູ່ເໜືອຄວາມສາມາດ ຂອງງົບປະມານແຫ່ງຊາດລາວ) ແຕ່ມັນຫຼຸດ ຈຳນວນລົງໄປເລື້ອຍໆ ສຳລັບໂຄງການອື່ນໆ ຫລຸດຈາກ ໑໗,໖໔% ໃນປີທີ່ແລ້ວ ມາເປັນ ໙,໕໑% ໃນປີນີ້ ມີການຫລຸດລົງເກືອບເຄິ່ງນຶ່ງ.

ງົບປະມານຂອງຣັຖທີ່ໄດ້ກະໄວ້ ໃນແຜນປະຈຳປີນັ້ນ ມີປະມານ ໓໘໕,໙໒໖ ລ້ານກີບ. ແຕ່ວ່າຖ້າຫາກໄລ່ເອົາຄ່າໃຊ້ຈ່າຍໃນການດຳເນີນໂຄງການ ສ້າງສາຖນົນຫົນທາງ ແລະແຜນກູ້ຢືມ ເຂົ້າມານຳແລ້ວ ສ່ວນສົມທົບຂອງຣັຖບານກໍມີ ປະມານ ໔໔໘,໐໙໘ ລ້ານກີບ.

ເຖິງດັ່ງນັ້ນກໍດີ ຖ້າຫາກວ່າເຮົາຢາກປຽບທຽບ ສ່ວນສົມທົບຂອງຣັຖບານ ໃນແຜນປະຈຳປີ ນີ້ ໃສ່ກັບແຜນປີກາຍ ເຮົາຄວນຖືເອົາວ່າສ່ວນສົມທົບຂອງຣັຖ ທີ່ໄດ້ຂຽນໃສ່ຕາຕະຣາງໂຣມນັ້ນ ມີພຽງ ໓໘໕,໙໒໖ ລ້ານກີບ. ເພື່ອໃຫ້ຖືກແທ້ນັ້ນ ເຮົາຄວນເອົາເງິນທີ່ໄດ້ກະໄວ້ສຳລັບໂຄງການຕ່າງໆນັ້ນ-ເຂົ້າອີກ, ເຊັ່ນເງິນຈຳນວນ ໔໐,໙໔໗ ລ້ານກີບ ທີ່ໄດ້ກະໄວ້ໃນງົບປະມານ ເພື່ອການດຳເນີນງານ (ໃນພາກທີ່ບໍ່ໄດ້ກະໄວ້ລ່ວງໜ້າ) ສຳລັບອົງການພັທນາທົ່ງຮາບວຽງຈັນ, ເງິນ ໑໗,໕໘໐ ລ້ານກີບ, ສຳລັບໂຄງການຕ່າງໆ ແລະ ໒໓,໓໖໗ ເພື່ອການດຳເນີນງານ ຂອງອົງການ. ຖ້າຈະເວົ້າຕາມຫລັກ ການ ຂອງແຜນພັທນາສ່ວນໂຣມແຫ່ງຊາດແລ້ວ ສ່ວນສົມທົບຂອງງົບປະມານແຫ່ງຊາດ ສຳລັບປີນີ້ກໍມີພຽງ ໔໐໓,໕໐໖ ລ້ານກີບ. ແຕ່ກົງກັນຂ້າມ ສຳລັບແຜນດຳເນີນງານປະຈຳປີ ໑໙໖໙-໗໐ ນັ້ນ ເຮົາຄວນ ເອົາເງິນ ໕໐ ລ້ານກີບ ຂອງການລົງທຶນເພື່ອສ້າງຖນົນຫົນທາງຕື່ມໃສ່ ໔໑໗ ລ້ານ ເປັນເງິນທັງໝົດ ໔໖໗ ລ້ານກີບ. ອັນສຸດທ້າຍເຮົາຈິ່ງເອົາ ໔໖໗ ລ້ານກີບນີ້ ມາປຽບທຽບໃສ່ກັບ ໔໐໓,໕໐໖ ລ້ານກີບ ຂອງແຜນດຳເນີນງານປະຈຳປີ ໑໙໗໐-໗໑.

ຖ້າວ່າເຮົາບໍ່ຖືເອົາ ຄຳທີ່ວ່າເຮົາຄວນແບ່ງຄ່າ ແລະການໃຊ້ຈ່າຍ ໃນການສ້າງຖນົນຫົນ ທາງ ເປັນການລົງທຶນແລະການສ້ອມແປງແລ້ວ ການປຽບທຽບກໍຈະຕ້ອງເປັນໄປ ໃນທຳນອງນີ້ : ສ່ວນສົມທົບຂອງງົບປະມານແຫ່ງຊາດ ໃນແຜນປະຈຳປີ ໑໙໖໙-໗໐ ມີ ໔໑໗ ລ້ານກີບ ສົມທົບ ໑໐໐ ລ້ານກີບ ຂອງໂຄງການສ້າງຖນົນຫົນທາງ ໂຣມທັງໝົດມີ ໕໑໗ ລ້ານກີບ. ສຳລັບແຜນປະຈຳປີ ໑໙໗໐-໗໑ ນັ້ນ ສ່ວນສົມທົບຂອງງົບປະມານ ມີ ໔໐໓,໕໐໖ ລ້ານກີບ ສົມທົບ ໔໔,໗໑໕ ລ້ານ, ໂຣມ ທັງໝົດມີ ໔໔໘,໒໒໑ ລ້ານກີບ.

ເຖິງວ່າ ສ່ວນສົມທົບຂອງຣັຖບານ ຈະນ້ອຍລົງກໍຕາມ ແຕ່ເຮົາກໍສັງເກດເຫັນຢ່າງຈະແຈ້ງ-ວ່າ ເງິນງົບປະມານຂອງແຜນປີທີສອງນີ້ ໄດ້ຕື່ມຂຶ້ນເກືອບເຄິ່ງນຶ່ງ ກ່າວຄື ໄດ້ຕື່ມຈາກຈຳນວນ ໗,໔໓໖ ລ້ານກີບ ມາເປັນ ໑໒,໙໒໐ ລ້ານກີບ.

.../໒໐..

ສພາບການເອນອຽງໃນທຳນອງນີ້ ຈະນຳມາຊຶ່ງຄວາມບໍ່ແນ່ນອນ ໃນອະນາຄົດ ທັງນີ້ ກໍເພາະວ່າ ຖ້າການຊ່ວຍເຫຼືອຂອງມິດປະເທດ ຫາກຫລຸດນ້ອຍລົງແລ້ວ ກໍຈະເປັນເຫດໃຫ້ ງົບປະມານ ພັທນາທັງຫມົດຫລຸດລົງໄປຕາມກັນ ຈົນຫລຸດຂອບເຂດທີ່ຄາດຄະເນໄວ້. ເປັນທີ່ຊາບກັນດີແລ້ວວ່າ ການລົງທຶນທີ່ເຫມາະສົມ ຂອງຣັຖບານ ຕໍ່ແຜນດຳເນີນງານປະຈຳທຸກໆປີ ຈະຕ້ອງແມ່ນ ໖໐໐ ລ້ານກີບ. ເຮົາບໍ່ຄວນລືມອີກວ່າ ຖ້າຫາກການກູ້ຢືມ ໄດ້ຖີບຕົວຂຶ້ນເປັນສອງເທົ່າ ຈາກປີກາຍນີ້ "ສຳລັບໂຄງການໃຫຍ່" ເວລາດຽວກັນ ການຊ່ວຍເຫຼືອຂອງມິດປະເທດ ຕໍ່ໂຄງການອື່ນໆກໍໄດ້ເພີ່ມຂຶ້ນດີກັນ ຄື ຈາກ ໖໘% ມາເປັ ໘໔%

ສຳລັບສພາບການກ່ຽວກັບເຣື່ອງນີ້ ຂອງແຕ່ລະກອງປະຊຸມນັ້ນ ຈະໄດ້ອະທິບາຍໃນຕາຕະຣາງຕໍ່ໄປນີ້.

ໂຄງການ	ການຊ່ວຍເຫລືອ		ງົບປະມານພັທນາ						ອື່ນໆ		ໂຮມທັງໝົດ	
			ຍົກຍ້າຍ		ເງິນເຊື່ອທີ່ໄດ້ໃໝ່		ໂຮມ					
	ກີບ	%	ກີບ	%	ກີບ	%	ກີບ	%	ກີບ	%	ກີບ	%
ໂຮມໂຄງການໃຫຍ່ (໑)	໖.໑໘໗.໓໕໐	໖໖.໙໐	໒໒.໔໑໖	໐,໒໔	໓໓,໙໒໐	໐,໓໖	໕໖,໓໓໖	໐,໖໐	໓.໐໐໔,໙໑໐	໓໒,໕໐	໙.໒໔໘,໕໙໖	໑໐໐,໐
ກະສິກັມ-ປ່າໄມ້-ລ້ຽງສັດ	໑.໔໕໕,໑໘໕	໗໗,໔໕	໘໙,໓໑໗	໔,໗໕	໑໒໐,໔໙໙	໖,໔໑	໒໐໙,໘໑໖	໑໑,໑໗	໒໑໗,໗໙໐	໑໑,໓໔	໑.໘໘໒,໗໙໑	໑໐໐.໐
ສິລປະກັມ-ອຸດສາຫະກັມ-ຊັພຍາກອນທໍຣະນີ	໑໖໔,໔໑໘	໙໐,໐໙	໑໘,໐໖໙	໙,໙໐			໑໘,໐໖໙	໙,໙໐			໑໘໒,໔໘໗	໑໐໐.໐
ອຸປກອນການຄ້າ	໓໔,໐໒໕	໙໖,໒໕	໐,໒໒໔	໐,໖໓	໑,໑໐໐	໓,໑໑	໑,໓໒໔	໓,໗໔			໓໕,໓໔໙	໑໐໐,໐
ກົມແຜນຕັງ	໗,໐໐໐	໑໐໐.໐໐									໗,໐໐໐	໑໐໐.໐
ພື້ນຖານການພັທນາ	໕໒໗,໒໐໓	໗໗,໔໙	໔໓,໑໒໗	໖,໐໓	໑໑໖,໘໘໗	໑໖,໔໗	໑໖໐,໐໑໓	໒໒,໕໑			໖໘໐,໔໖໓	໑໐໐.໐
ການສຶກສາ	໖໒໕,໓໐໐	໘໒,໖໙	໔໔,໘໓໙	໕,໙໒	໘໒,໐໐໐	໑໐,໘໔	໑໒໖,໘໓໙	໑໖,໗໗	໔,໐໐໐	໐,໕໒	໗໕໖,໑໓໙	໑໐໐.໐
ປະຊາກອນ-ສາທາຣະນສຸກ	໒໕໒,໒໒໗	໘໖,໑໔	໒໒,໖໕໐	໗,໗໓	໑໗,໙໑໐	໖,໑໑	໔໐,໕໖໐	໑໓,໘໕			໒໙໒,໗໘໗	໑໐໐.໐
ອຸປະກອນສັງຄົມ	໕໒,໐໐໐	໗໘,໗໔	໐,໔໒໙	໐,໖໔	໑໓,໖໑໐	໒໐,໖໐	໑໔,໐໓໙	໒໑,໒໕			໖໖,໐໓໙	໑໐໐.໐
ໂຮມໂຄງການອື່ນໆ(໒)	໓.໑໑໗,໓໕໘	໗໙,໙໒	໒໑໘,໖໕໕	໕,໕໒	໓໕໒,໐໐໖	໘,໙໐	໕໗໐,໖໖໑	໑໔,໔໒	໒໒໑,໗໙໐	໕,໖໕	໓.໙໐໙,໘໑໑	໑໐໐.໐
ໂຮມທັງໝົດ (໑) + (໒)	໙.໓໐໔,໗໐໘	໗໐,໗໕	໒໔໑,໐໗໑	໑,໘໓	໓໘໕,໙໒໖	໒,໙໓	໖໒໖,໙໙໗	໔,໗໖	໓.໒໒໖,໗໐໐	໒໔,໔໘	໑໓.໑໕໘,໔໐໖	໑໐໐.໐

ສ່ວນຂອງການຊ່ວຍເຫຼືອຂອງມິດປະເທດ ເພື່ອມາດຳເນີນແຜນປະຈຳປີ (ຍົກເວັ້ນເງິນທຶນທີ່ນຳມາສ້າງເຂື່ອນນ້ຳງື່ມ) ຄິດເປັນລ້ານກີບ.

ການຊ່ວຍເຫຼືອ	ຄິດເປັນລ້ານກີບ	%
- ຢູເສດ	໔.໕໗໔,໐	໘໐,໕
- ຍີ່ປຸ່ນ	໓໒໐,໕	໕,໘
- ເຢັ່ຽຣະມັນ	໑໔໒,໐	໒,໒
- ຝຣັ່ງເສດ	໒໓໖,໐	໔,໓
- ສະຫະປະຊາຊາດ	໑໙໓,໕	໓,໕
- ໂອສຕຣາລີ	໔໘,໐	໐,໙
- ອີສຣາແອນ	໔໒,໐	໐,໗
- ອັງກິດ	໔໑,໐	໐,໗
- ການາດາ	໔໑,໐	໐,໗
- ປະເທດອື່ນໆ (໑)	໔໓,໐	໐,໗
ໂ ຣ ມ	໕.໖໘໒,໐	໑໐໐,

(໑) ມີປະເທດ ນູແວລ-ເຊລັງ , ອົງການຝຣັ່ງເສດຕໍ່ຕ້ານຄວາມຫິວ, ຟົງຄາຊົງອາຊີ. ຕາຕະລາງນີ້ ໄດ້ສແດງໃຫ້ເຮົາເຫັນວ່າ ປະເທດສຫະຣັຖອະເມຣິກາ ມີບົດບາດແລະມີສ່ວນອັນໃຫຍ່ຫລວງ ໃນການສົມທົບທຶນເພື່ອດຳເນີນແຜນປະຈຳປີ ມີປະມານ ໓/໔ ຂອງການຊ່ວຍເຫຼືອທັງຫມົດ (ຍົກເວັ້ນແຕ່ທຶນສ້າງເຂື່ອນນ້ຳງື່ມ). ລຽນລົງມາກໍມີຍີ່ປຸ່ນ ແລະຝຣັ່ງທີ່ໃຫ້ການຊ່ວຍເຫຼືອປະມານ ໔% ຫາ ໖%, ສ່ວນປະເທດອື່ນໆນັ້ນ, ເວັ້ນເສັຽແຕ່ເຢັ່ຽຣະມັນ, ໃຫ້ການຊ່ວຍເຫຼືອນ້ອຍກວ່າ ໑%

໐໓໕. ການວິຈັຍດ້ານເສຖກິດ ກ່ຽວກັບແຕ່ລະຣາຍຈ່າຍ.

ຕາຕະຮາງທົບທວນຈາກກອງປະຊຸມ : ດ້ານຮາຍຈ່າຍ

(໑໙໗໐-໑໙໗໑'),

໐໓໕ ວິຈັຍເສດກິດ ຈາກມູນຖານດ້ານຮາຍຈ່າຍ

ໜ່ວຍລະລ້ານກີບ

ໂຄງການ	ຄົ້ນຄວ້າ		ການລົງທຶນ: ການກໍ່ສ້າງ ແລະ ພັສດຸ		ການລົງທຶນ: ທຶນ ແລະ ຝຶກງານ		ການລົງທຶນ: ໂຮມ		ການດຳເນີນງານ (ພະນັກງານ + ອື່ນໆ)		ໂຮມ	
	ກີບ	%	ກີບ	%	ກີບ	%	ກີບ	%	ກີບ	%	ກີບ	%
ໂຮມໂຄງການໃຫຍ່ (໑)	໔໕໕.໐໐໐	໔,໕໙	໗.໐໐໓,໐໓໘	໗໕,໗໔	ບໍ່ມີ	໐	໗.໐໐໓,໐໓໘	໗໕,໗໔	໑.໘໒໐,໕໖໖	໑໙,໖໖	໙.໒໔໘,໕໙໖	໑໐໐.໐
ກະສິກັມ-ປ່າໄມ້-ລ້ຽງສັດ	໑໒໔,໑໓໐	໖,໖໐	໑.໒໓໑,໘໖໐	໖໕,໓໔	໖໕,໒໖໕	໓,໔໗	໑.໒໙໗,໑໒໕	໖໘,໘໑	໔໖໑,໕໓໖	໒໔,໕໗	໑.໘໘໒,໗໙໑	໑໐໐,໐
ສິລປະກັມ-ອຸດສາຫະກັມ, ຊັພຍາກອນທໍຣະນີ- ອຸປະກອນການຄ້າ	໑໗໔,໘໙໑	໘໐,໒໘	໕,໙໗໐	໒,	໓,໓໔໒	໑,໕໓	໙,໓໑໒	໔,໒໗	໓໓,໖໓໓	໑໕,໔໓	໒໑໗,໘໓໖	໑໐໐.໐
ກົນແຜນຜັງ	໗,໐໐໐	໑໐໐.໐໐	ບໍ່ມີ	໐	ບໍ່ມີ	໐	ບໍ່ມີ	໐	ບໍ່ມີ	໐	໗,໐໐໐	໑໐໐.໐
ພື້ນຖານການພັທນາ	໑໕,໒໐໐	໒,໒໓	໖໑໕,໘໑໐	໙໐,໕໐	໗,໑໐໐	໐,໙໔	໖໒໒,໙໑໐	໙໑,໔໔	໔໙,໑໐໗	໖,໓໑	໖໘໗,໒໑໗	໑໐໐,໐
ການສຶກສາ	໘໗,໑໐໐	໑໑,໕໑	໖໒໕,໙໙໔	໘໒,໗໘	໑໑,໕໐໐	໑,໕໒	໖໓໗,໔໙໔	໘໔,໓໐	໓໑,໕໔໕	໔,໑໗	໗໕໖,໑໓໙	໑໐໐.໐
ປະຊາກອນ-ສາທາຣະນະ-ສຸກ	໑໒,໙໘໒	໔,໔໓	໑໗໘,໒໕໒	໖໐,໘໘	໓,໐໐໐	໑,໐໒	໑໘໑,໒໕໒	໖໑,໙໐	໙໘,໕໕໓	໓໓,໖໖	໒໙໒,໗໘໗	໑໐໐.໐
ອຸປະກອນສັງຄົມ	ບໍ່ມີ	໐	໑໗,໒໖໓	໒໖,໑໔	ບໍ່ມີ	໐	໑໗,໒໖໓	໒໖,໑໔	໔໘,໗໗໖	໗໓,໘໕	໖໖,໐໓໙	໑໐໐.໐
ໂຄງການອື່ນໆ (໒)	໔໒໔,໘໐໔	໑໐,໘໘	໒.໖໖໓,໖໖໙	໖໘,໒໖	໙໐,໒໐໗	໒,໓໑	໒.໗໕໓,໘໗໖	໗໐,໕໗	໗໒໓,໑໕໐	໑໘,໕໓	໓.໙໐໑,໘໓໐	໑໐໐,໐
ໂຮມທັງໝົດ (໑)+(໒)	໘໔),໓໐໔	໖,໔໕	໙.໖໗໘,໑໑໙	໗໓,໕໘	໙໐,໒໐໗	໐,໖໘	໙.໗໖໘,໓໘໖	໗໔,໒໑	໒.໕໕໓,໗໑໖	໑໙,໓໒	໑໓.໑໙໙,໑໕໖	໑໐໐,໐

ເຫັນວ່າຄວນ**ມີການວິພາກວິຈານ ກ່ຽວກັບຕາຕະລາງນີ້ :**

- ສຳລັບໂຄງການໃຫຍ່ນັ້ນ ເຮົາສັງເກດເຫັນວ່າ ໓/໔ ຂອງຣາຍຈ່າຍທັງໝົດ ໄດ້ນຳເອົາໄປຈ່າຍໃນການລົງທຶນ ແລະກໍເປັນທັມະດາຢູ່ເພາະວ່າ ວຽກຕ່າງໆນັ້ນລ້ວນແລ້ວແຕ່ເປັນວຽກໃຫຍ່ ແລະເປັນພື້ນຖານເສຖກິດ ປະມານ ໘໐% ຂອງຄ່າໃຊ້ຈ່າຍ ໃນການດຳເນີນງານ ນັບວ່າຫລາຍສົມຄວນ ໄດ້ໃຊ້ຈ່າຍໃນການຈັດຕັ້ງບ້ານໃໝ່ ໃຫ້ຊາວອົພຍົບ ທະຫານແລະພວກເສັຽອົງຄະ. ທັງນີ້ກໍເນື່ອງມາຈາກສຖານະການດ້ານທະຫານ. ໂຄງການນີ້ຈະໄດ້ດຳເນີນໄປ ໃນຣະຍະຫລາຍໆປີ ສ່ວນອື່ນໆຕົ້ນນັ້ນໄດ້ສຳເຣັດໄປແລ້ວ ແລະເງິນທີ່ໄດ້ກະໄວ້ ສຳລັບການສຶກສາຄົ້ນຄວ້ານັ້ນ ມີພຽງ ໔,໗ % ເທົ່ານັ້ນ.

- ສຳລັບໂຄງການອື່ນໆນັ້ນ ເງິນທີ່ສງວນໄວ້ເພື່ອການສຶກສາຄົ້ນຄວ້າ ມີປະມານ ໑໑% ເຫັນວ່າເໝາະສົມທີ່ສຸດ ແລະເປັນແນວທາງດີ ທີ່ຈະນຳໄປສູ່ການກຽມໂຄງການຕ່າງໆ ເພື່ອຈະໄດ້ປະຕິບັດໃນປີຕໍ່ໆໄປ ມີພຽງ ໑/໕ ຂອງຣາຍຈ່າຍທັງໝົດເທົ່ານັ້ນ ທີ່ໄດ້ສງວນໄວ້ເພື່ອການດຳເນີນໂຄງການໃໝ່ ແລະປະມານ ໘/໙ ໄດ້ໃຊ້ໃນການລົງທຶນ. ເຖິງຢ່າງນັ້ນກໍດີ, ເງິນສຳຣັບທຶນສຶກສາ ແລະສັງເກດການນັ້ນ ຍັງໜ້ອຍແລະຍັງຂາດເຂີນຢູ່ ເພື່ອວ່າຈະໃຫ້ຜູ້ຮັບຜິດຊອບຝ່າຍລາວ ມາຮັບພາຣະແທນພນັກງານຕ່າງດ້າວ ໃຫ້ທູ່ງທັນກັບເວລາ ຍົກເວັ້ນແຕ່ພແນກ ກະສິກັມ-ປ່າໄມ້-ລ້ຽງສັດເທົ່ານັ້ນ. ແຕ່ກໍສັງເກດເຫັນວ່າ ການໃຊ້ຈ່າຍເງິນຄ່ຳຂອງກອງປະຊຸມຕ່າງນັ້ນ ແຕກຕ່າງກັນຫລາຍ : ຕົວຢ່າງໃນກອງປະຊຸມ "ອຸປະກອນການສັງຄົມ" ເງິນທີ່ໃຊ້ຈ່າຍໃນການດຳເນີນງານ ປະມານ ໗໕% ໄດ້ກາຍເງິນທີ່ຈ່າຍ ໃນການລົງທຶນຢ່າງລົ້ນເຫຼືອ. ແຕ່ໃນກອງປະຊຸມດ້ານການສຶກສາ ຊຶ່ງຈັດເຂົ້າຢູ່ໃນພແນກສັງຄົມ ເງິນທີ່ໃຊ້ຈ່າຍໃນການລົງທຶນ ມີເຖິງ ໙໔% ແລະໃຊ້ຈ່າຍໃນການດຳເນີນງານມີພຽງ ໔% ສິ່ງນີ້ອາດເຮັດໃຫ້ງົບປະມານດຳເນີນງານແຫ່ງຊາດ ຕ້ອງຮັບພາຣະໜັກໃນພາຍຫລັງໜ້າ ເພາະວ່າໃຜໆກໍຄົງຮູ້ດີຢູ່ແລ້ວວ່າ ໃນຣະຍະນີ້ເຮົາບໍ່ສາມາດ ຕື່ມງົບປະມານນີ້ອີກໄດ້ ດ້ວຍເຫດຫລາຍປະການ. ສະພາບການເຊັ່ນນີ້ກໍມີຢູ່ໃນກອງປະຊຸມ ພື້ນຖານເສຖກິດ ຄືກັນກ່າວຄື ໖໐,໕% ໃຊ້ໃນການລົງທຶນ ຕໍ່ ໗,໙% ໃຊ້ໃນການດຳເນີນງານຕ່າງແຕ່ວ່າຄ່າໃຊ້ຈ່າຍໃນການດຳເນີນງານ ຊຶ່ງແມ່ນສ່ວນສົມທົບຂອງຣັຖບານເພື່ອສ້າງສາຖນົນຫົນທາງນີ້ ເຮົາໄດ້ບັນທຶກລົງໃນງົບປະມານພັທນາ. ສິ່ງທີ່ເຮົາຄວນຈົດຈຳໄວ້ໃນອັນສຸດທ້າຍນີ້ ກໍຄືການລົງທຶນນ້ອຍໆໃນພແນກຜລິດຜົນ ເວັ້ນຈາກກອງປະຊຸມ ກະສິກັມ-ປ່າໄມ້-ລ້ຽງສັດ, ຊຶ່ງສືບເນື່ອງມາຈາກປີທີ່ແລ້ວ ແລະຈະເປັນເຫດຕົ້ນະໂຍບາຍ ຂອງແຜນພັທນາສ່ວນໂຮມແຫ່ງຊາດ ຊຶ່ງມີຈຸດປະສົງຈະເພີ່ມທະວີຣາຍໄດ້ຂອງງົບປະມານ ທີ່ຈະໄດ້ມາຈາກການຍົກຣະດັບການຜລິດຜົນອັນ ໃຫ້ຫລາຍໃນສາຂາຕ່າງໆ.

.../ ໘໕ ..

໐໓. ການວິຈັຍດ້ານເສຖກິດຂອງແຕ່ລະຜແນກແລະກອງປະຊຸມ.

ການວິຈັຍຂອງແຕ່ລະກອງປະຊຸມ

ກອງປະຊຸມ	% ຂອງແຜນຫ້າປີ	% ຂອງແຜນປະຈຳປີ ໑໙໗໙-໘໐	% ຂອງແຜນປະຈຳປີ ໘໐-໘໑ ພ້ອມທັງເງິນຍືກຍ້າຍ	% ຂອງແຜນປະຈຳປີ ໘໐-໘໑ ບໍ່ມີເງິນຍືກຍ້າຍ
- ກະສິກັມ-ປ່າໄມ້-ລ້ຽງສັດ	໓໖,໖໓	໔໙,໙໔	໔໔,໖	໔໕,໐໙
- ສິລປະກັມ-ອຸດສາຫະກັມ-ຊັພະຍາ	໔,໗໑	໕,໐໐	໑,໑໐	໐,໗໘
ກອນທໍຣະນີ ແລະການຄາ				
- ພັນຖານເສຖກິດ	໒໑,໕໖	໑໕,໒໕	໑໘,໒໕	໑໘,໐໙
- ສຶກສາທິການ	໑໕,໕໓	໑໗,໘໐	໑໘,໑໔	໑໗,໙໔
- ປະຊາກອນ-ສາທາຣະນະສຸກ	໕,໒໔	໔,໐໕	໘,໑໘	໗,໙໖
- ສັງຄົມ	໒,໘໒	໐,໗໕	໑,໗໙	໑,໘໖
- ສຶກສາຄົ້ນຄວ້າ	໑໑,໔໙	໙,໒໑	໑໐,໖໐	໑໑,໔໕
ໂ ຣ ມ	໑໐໐,໐	໑໐໐,໐	໑໐໐,໐	໑໐໐,໐

ການວິຈັຍຂອງແຕ່ລະຜແນກ

ຜ ແ ນ ກ	% ຂອງແຜນຫ້າປີ	% ຂອງແຜນປະຈຳປີ ໑໙໗໙-໘໐	% ຂອງແຜນປະຈຳປີ ໘໐-໘໑ ພ້ອມທັງເງິນຍືກຍ້າຍ	% ຂອງແຜນປະຈຳປີ ໘໐-໘໑ ບໍ່ມີເງິນຍືກຍ້າຍ
- ຜແນກ ຜລິດຜົນ	໔໓,໔໔	໕໔,໑໔	໔໕,໙໕	໔໕,໘໗
- ຜແນກພັນຖານເສຖກິດ	໒໑,໕໖	໑໕,໒໔	໑໘,໒໕	໑໘,໐໙
- ຜແນກສັງຄົມ	໒໓,໔໙	໒໑,໔໐	໒໗,໐໐	໒໕,໘໖
- ຜແນກ ສຶກສາຄົ້ນຄວ້າ	໑໑,໔໙	໙,໒໑	໑໐,໖໐	໑໑,໔໕
ໂ ຣ ມ	໑໐໐,໐	໑໐໐,໐	໑໐໐,໐	໑໐໐,໐

ຕາຕະຣາງນີ້ ຊີ້ໃຫ້ເຫັນສພາບການ ແລະຄວາມຄິດຄວາມເຫັນດັ່ງເກົ່າ ແຕ່ວ່າເປັນແນວຄວາມຄິດໃນພາຍຫຼັງຫາ.

- ການໃຊ້ຈ່າຍໃນພແນກພລິດຜົນນີ້ ໄດ້ກັບເຂົ້າສູ່ຣະດັບເດີມແລ້ວ, ຫຼັງຈາກທີ່ໄດ້ເກີນການຄາດຄະເນໄປເລັກນ້ອຍ ໃນປີທີ່ແລ້ວນີ້ ແຕ່ປານນັ້ນກໍດີ ກໍຍັງມີສິ່ງສັບສົນຊັບຊ້ອນຢູ່ ໂດຍສະເພາະແມ່ນກອງ-ປະຊຸມ ກະສິກັມ-ປ່າໄມ້-ລ້ຽງສັດ ໄດ້ເອົາເງິນທັງປະມານໄວ້-ໄປໃຊ້ເກືອບໝົດແຕ່ຜູ້ດຽວ ເພາະວ່າການຜລິດຜົນ ພແນກອື່ນນັ້ນບໍ່ມີ. ດັ່ງນັ້ນເຮົາຄວນວາງມາຕການທີ່ເໝາະສົມໄວ້ແຕ່ບັດນີ້ ເພື່ອວ່າຈະໄດ້ມີໂອກາດ ປະຕິບັດໂຄງການໃໝ່ ໃນແຜນດຳເນີນງານຕໍ່ໄປນີ້. ຖ້າບໍ່ຢ່າງນັ້ນ ການປະຕິບັດແຜນພັທນາສ່ວນໂຮມແຫ່ງຊາດນີ້ ອາດຈະບໍ່ເຖິງຈຸດທີ່ໝາຍກໍໄດ້.

- ພແນກພົນຖານເສຖກິດນີ້ ກໍຍັງບໍ່ເຖິງຣະດັບທີ່ຄາດຄະເນໄວ້ ທັງໆທີ່ມີການຕື່ມຈຳນວນຂຶ້ນ ຈາກປີທີ່ແລ້ວ. ທັງນີ້ກໍເນື່ອງມາຈາກວ່າ ອົງການຊ່ວຍເຫຼືອຕ່າງປະເທດ ບໍ່ສົນໃຈໃນໂຄງການເລັກໆນ້ອຍໆ (ເຊັ່ນໂຄງການ ໔໖ ກ່ຽວການທຳຄວາມສະອາດໃນຕົວເມືອງວຽງຈັນ ກໍບໍ່ມີງົບປະມານເລີຍ). ຖ້າວ່າສພາບການນີ້ຫາກມີຕໍ່ໄປແລ້ວ ກໍເຊື່ອແນ່ວ່າ ຄວາມບໍ່ສມໍ່າສເມີ ແລະຄວາມແຕກຕ່າງກັນຣະຫວ່າງເມືອງ ແລະບ້ານນອກ ກໍນັບມື້ຈະທະວີຂຶ້ນ ໃນຂະນະທີ່ຣາຍຈ່າຍວຽງຈັນ.

- ກົງກັນຂ້າມກັບພແນກສັງຄົມ ດ້ວຍຄວາມກົດດັນ ຂອງສພາບການປັດຈຸບັນ ຈຶ່ງພາໃຫ້ພແນກນີ້ ໃຊ້ຈ່າຍເງິນຫຼາຍຈົນເກີນຂອບເຂດ. ການເພີ່ມຣາຍຈ່າຍນີ້ ບໍ່ພຽງແຕ່ມາຈາກພົນສະທ້ອນ ຂອງສົງຄາມເທົ່ານັ້ນ ຫາກມາຈາກການໃຊ້ຈ່າຍ ໃນອຸປະກອນການຄ້າ ທີ່ເພີ່ມຂຶ້ນເລື້ອຍໆ ແຕ່ກໍຍັງບໍ່ເຖິງຈຳນວນທີ່ເຮົາໄດ້ກະໄວ້ ຄື : ມີພຽງ ໑,໘% ຕໍ່ ໔,໗%. ແຕ່ສິ່ງເຫຼົ່ານີ້ ແມ່ນມາຈາກການໃຊ້ຈ່າຍເກີນຈຳນວນ ຂອງພແນກປະຊາກອນ-ສາທາຣະນະສຸກ ແລະການສຶກສາ. ສຳຣັບການສຶກສານີ້ ຮູ້ສຶກວ່າ ສະຖານະການຈະດີຂຶ້ນແດ່ ເນື່ອງຈາກວ່າການໃຊ້ຈ່າຍ ໃນການລົງທຶນຫຼາຍໂພດ ແລະໃນການດຳເນີນງານໜ້ອຍໂພດ. ສິ່ງນີ້ອາດຈະເປັນເຫດໃຫ້ງົບປະມານມີຄວາມຫຍຸ້ງຍາກຕື່ມຂຶ້ນ. ແລະບໍ່ສາມາດສູ້ໜ້າກັບພາຣະອັນໃຫຍ່ຫຼວງ ໃນອະນາຄົດອັນໃກ້ນີ້. ເປັນຄວາມຈິງທີ່ວ່າ ເຮົາຄວນອົບຮົມພນັກງານ ຫຼືຂ້າຣາຊການເພື່ອໃຫ້ພຽງພໍກັບຄວາມຕ້ອງການ ຂອງເສຖກິດຂອງຊາດ, ແຕ່ວ່າ ເຮົາກໍຄວນພະຍາຍາມຫຼີກເວັ້ນ ການກຳເນີດແຫ່ງຊົນວັນນະ ຂອງຜູ້ມີປະກາສນີຍະບັດ. ອີກຢ່າງນຶ່ງ ເຮົາກໍຄວນຢ່າລືມວ່າ ການເພີ່ມພູນຣາຍຈ່າຍ ໃນພແນກບໍ່ຜລິດຜົນ ຄວນຈະຄູ່ຄຽງໄປກັບຄວາມແຂງຂັນ ແລະສະມັຖພາບຂອງເສຖກິດ ຖ້າບໍ່ດັ່ງນັ້ນແລ້ວ ປະເທດຊາດກໍຈະຢູ່ຢ່າງຂາດໆເຂີນໆ.

ເມື່ອສຣຸບຄວາມແລ້ວ ເຮົາກໍສັງເກດເຫັນວ່າ ກອງປະຊຸມກະສິກັມ-ປ່າໄມ້-ລ້ຽງສັດ ໄດ້ຕັ້ງຕົ້ນຢ່າງເໝາະສົມທີ່ສຸດ ແລະຫວັງວ່າການຜລິດຜົນ ກໍຄົງຈະທະວີຂຶ້ນຕາມຄາດໝາຍ ໃນອານາຄົດອັນໃກ້. ອີກຢ່າງນຶ່ງ ເຮົາກໍຄວນຈະປ່ຽນແປງແນວທາງປັດຈຸບັນ ໃນພແນກຜລິດຜົນອື່ນໆ ເພື່ອວ່າຈະໃຫ້ການເພີ່ມພູນຜລິດຜົນ ຄູ່ຄຽງໄປກັບການເພີ່ມພູນຊັພຍາກອນຂອງຊາດ ທີ່ຈະເປັນທຶນສົ່ງເສີມພແນກອື່ນໆ. ທຸກສິ່ງທຸກຢ່າງນີ້ ຕ້ອງຢູ່ໃນຂອບເຂດດ້ານການເງິນຂອງຊາດ.

໑໐໐. <u>ໂຄງການຕ່າງໆຂອງແຜນດຳເນີນງານປະຈຳປີທີສອງ</u>.

ໃນແບບໂຄງການຕ່າງໆ ຂອງແຕ່ລະກອງປະຊຸມ ໄດ້ຖືກຈັດທຳຂຶ້ນ ຄືກັນກັບປີທີ່ແລ້ວ ໂດຍ. ກອງປະຊຸມທີ່ກ່ຽວຂ້ອງ. ແຕ່ວ່າສຳຣັບໂຄງການ ທີ່ອາໃສເງິນທີ່ຍົກຍ້າຍມາເພື່ອເປັນພາຫະນະດຳເນີນງານນັ້ນ ແມ່ນບໍ່ໄດ້ຈັດທຳໃນແບບໂຄງການໃຫມ່ ໂດຍອາໃສເອົາໃນແບບເກົ່າໃນແຜນດຳເນີນງານປະຈຳປີ ໑໙໕໙-໖໐ (ໂຄງການເລກທີ ໔໗-໔໘-໕໐-໕໖ ແລະ ໕໘).

໑໑໐. ກອງປະຊຸມວາງແຜນ ດ້ານກະສິກັມ-ປ່າໄມ້ ແລະລ້ຽງສັດ

໑໑໑. ຄຳແນະນຳເບື້ອງຕົ້ນ.

ຄຳແນະນຳແນວທາງທົ່ວໄປ.

ແຜນພັທນາເສຖກິດແລະສັງຄົມ ໑໙໘໑-໘໕ ໄດ້ໃຫ້ອັນດັບຄວາມສຳຄັນ ແກ່ພແນກທີ່ຜລິດພົນໂດຍສະເພາະກໍແມ່ນການກະສິກັມ-ປ່າໄມ້ ແລະລ້ຽງສັດ. ຕາມປົກຕິປະເທດລາວ ກໍມີການກະເສດທີ່ອຸດົມຢູ່ແລ້ວ ຖ້າຈະປຽບທຽບໃສ່ປະເທດອື່ນ ໃນທ້ອງຖິ່ນນີ້ ປະເທດລາວ ກໍໄດ້ຮັບຜົນປໂຍດຫລາຍທາງ ໃນພແນກນີ້ ເຊັ່ນ :

- ພື້ນທີ່ກວ້າງຂວາງແລະມີປະຊາຊົນນ້ອຍ
- ນ້ຳອຸດົມ ສົມບູນ
- ມີທາງທ່ຽວອັນຖາວອນ ຈາກພູເຂົາຫາທົ່ງຮາບ
- ສາຍທາງການຕິດຕໍ່ໂດຍອີງໃສ່ແມ່ນ້ຳຂອງ

ເຖິງແມ່ນວ່າປັດຈຸບັນ ເຮົາຈະມີສ່ວນປະກອບເຫລົ່ານັ້ນກໍຕາມ ສິນຄ້າຂາອອກຂອງພືລປູກ ໃນດ້ານກະເສດກໍຍັງຕົກອັນດັບຢູ່ ຍົກເວັ້ນແຕ່ໄມ້ເທົ່ານັ້ນ. ຕົວຢ່າງເຂົ້າສານ ກໍຍັງໄດ້ເອົາມາຈາກປະເທດໄທ. ແຕ່ວ່າ ການຄຳນວນເບິ່ງການຂາດເຂີນ ໃນດ້ານເຂົ້າ ຂອງເມືອງລາວກໍຍັງມີຄວາມລຳບາກ ຍ້ອນວ່າບາງສ່ວນ ຂອງພືລປູກເຂົ້າເປືອກ ໃນທ້ອງຖິ່ນທີ່ຜລິດເຫລືອກິນ ຢູ່ພາກໃຕ້ຂອງລາວ ໄດ້ສົ່ງເຂົ້າໄປຍັງໄທຢ່າງບໍ່ເປັນທາງການ.

ໃນສ່ວນໃຫຍ່ແລ້ວ ເຮົາສາມາດບອກໄດ້ວ່າ ໂຄງການຂອງກອງປະຊຸມກະສິກັມ-ປ່າໄມ້ ແລະລ້ຽງສັດ ຈຶ່ງໄດ້ກໍ່ຕັ້ງມາແລ້ວ ແຕ່ປີກາຍນີ້ນັ້ນ ຈະຕ້ອງດຳເນີນຕໍ່ໄປ ຕາມແນວທາງຂອງແຜນພັທນາສ່ວນໂຮມ ໃນຣະຍະສີກປີທີສອງ.

ໃນຣະຫວ່າງນີ້ ກໍຕ້ອງໄດ້ຢ້ຳເຖິງຄວາມໜັກແໜ້ນ ທີ່ທຸກໆພແນກໄດ້ແນ່ໃສ່ລັກສນະຂອງການຝຶກອົບຣົມ ເຊັ່ນ : ນັກວິຊາການ ຫລື ພນັກງານວິຊາການ (E R.A. S. P) ສູນກາງຝຶກອົບຣົມພນັກງານປ່າໄມ້ ສູນກາງພັທນາທ້ອງຖິ່ນທີ່ບ້ານອາມອນ ຝຶກອົບຣົມພນັກງານຊົລປະທານ ທີ່ທາດດອກແກ້ວ ການຝຶກອົບຣົມທີ່ສ່ວນລ້ຽງສັດດົງໂດກ.

ທ້າຍສຸດ ອົງການພັທນາທົ່ງຮາບວຽງຈັນ ກໍໄດ້ຖືກຈັດຕັ້ງຂຶ້ນໃຫ້ເປັນຜູ້ນຳພາວຽກງານແກ່ໂຄງການສຶກສາຄົ້ນຄ້ວ ແລະໂຄງການຈັດຕັ້ງພູມຖານຊົລປະທານ.

ອົງການເພື່ອການປັບປຸງທີ່ດິນໃຫ້ມີຄູນຄ່າ

ການຈັດຕັ້ງອົງການນີ້ຂຶ້ນ ໄດ້ນຳພາໃຫ້ມີການປ່ຽນແປງ ຫົວຂໍ້ສເນີແຕ່ເລັກນ້ອຍ ກ່ຽວກັບໂຄງການຂອງກອງປະຊຸມກະສິກັມ-ປ່າໄມ້ ແລະລ້ຽງສັດ ໃນແຜນພັທນາສ່ວນໂຮມ ໑໙໖໙-໗໔ ກອງປະຊຸມນີ້ໄດ້ຖືກດັດແປງ ຫົວຂໍ້ໃໝ່ແລະເອີ້ນວ່າ " ອົງການເພື່ອປັບປຸງທີ່ດິນ ໃຫ້ມີຄູນຄ່າ " ປັດຈຸບັນ ຫົວຂໍ້ນີ້ປະກອບດ້ວຍການປັບປຸງທົ່ວວຽງຈັນ ແຕ່ວ່າຕໍ່ໄປລາງໂຄງການ ໃນທ້ອງຖິ່ນແຂວງອື່ນ ອາດຖືກບັນຈຸເຂົ້າມາໃນຫົວຂໍ້ນີ້ກໍເປັນໄດ.

ຢູ່ໃນຫົວຂໍ້ນີ້ ເຮົາໄດ້ບັນຈຸໄວ້ແຕ່ໂຄງການ ທີ່ຢູ່ພາຍໃຕ້ການເບິ່ງແຍງໂດຍກົງ ຂອງອົງການເທົ່ານັ້ນ. ເພື່ອຫລີກເວັ້ນການເຂົ້າໃຈຜິດ ເຮົາຈຶ່ງໄດ້ຕັ້ງເລກທະບຽນໃໝ່ ກ່ຽວກັບໂຄງການເຫລົ່ານັ້ນ. ໂຄງການທີ່ ໑ ໄດ້ແກ່ໂຄງການຂອງອົງການພັທນາທົ່ງຣາບວຽງຈັນ ຕິດຕາມດ້ວຍອັກສອນ ກ.ຂ.ຄ.ງ.. ເພື່ອເປັນແຍກອະນຸໂຄງການ. ອົງການເປັນຜູ້ນຳພາວຽກງານຂອງໂຄງການເຫລົ່ານັ້ນ. ສ່ວນໂຄງການອື່ນ ທີ່ມີສ່ວນປະກອບກັບທົ່ງວຽງຈັນນັ້ນ ຈະຕ້ອງຢູ່ພາຍໃຕ້ການເບິ່ງແຍງຂອງພແນກຕ່າງໆແຫ່ງຊາດ ອົງການຄົງເປັນພຽງແຕ່ຜູ້ປະສານງານ ເພື່ອໃຫ້ໄດ້ຜົນດີເທົ່ານັ້ນ.

ແຕ່ກໍ່ຕ້ອງໄດ້ນຶກເຖິງ ການແຍກສ່ວນອອກໂຄງການເກົ່າ ໝາຍເລກ ໑ ໜ່ວຍພັສດຸເຄື່ອງ-ຈັກ ຄວາມຈິງແລ້ວໄດ້ຕັ້ງໜ່ວຍພັສດຸຂຶ້ນ ທີ່ກະຊວງປະຊາສົງເຄາະ ພາຍໃຕ້ຄວາມຊ່ວຍເຫລືອດ້ານພັສດຸຂອງອົງການຝຣັ່ງເສດ ເພື່ອຕໍ່ຕ້ານຄວາມອຶດຢາກ. ໜ່ວຍພັສດຸນີ້ ຈະຕ້ອງນຳໄປໃຊ້ໃນການປັບປຸງທີ່ດິນໃໝ່ ເພື່ອຈະຕັ້ງບ້ານໃຫ້ຊາວອົພຍົບ. ໜ່ວຍພັສດຸຈະຕ້ອງດຳເນີນການຕໍ່ໄປ ໃນຂອບເຂດຂອງໂຄງການຕັ້ງບ້ານໃໝ່ໃຫ້ຊາວອົພຍົບ ເຫລົ່າທະຫານຜ່ານເສິກແລະເສັຽອົງຄະ ທີ່ໄດ້ບັນຈຸເຂົ້າໃນໝວດ " ໂຄງການໃຫຍ່ " ໝາຍເລກ ໒. ອີກຢ່າງນຶ່ງ ຍັງມີໜ່ວຍພັສດຸເຄື່ອງຈັກ ທີ່ກຳລັງຈັດຕັ້ງຂຶ້ນມາ ພາຍໃຕ້ການຕັ້ງຕົ້ນທຶນຂອງທະນາຄານພັທນາເອເຊັຍ ແລະຣັຖບານຍີ່ປຸ່ນ. ໜ່ວຍພັສດຸນີ້ ຈະຕ້ອງຊ່ວຍໃຫ້ການສ້າງສາພື້ນທີ່ກວ້າງ ໓໔໐ ເຮັກຕາ ທີ່ທາງທ່າງອນ ທີ່ໄດ້ຮັບໜ້າທີ່ມອບໝາຍແລ້ວ ແລະຈະຕ້ອງດຳເນີນງານຕໍ່ໄປ ໂດຍອີງໃສ່ງົບປະມານທີ່ໄດ້ກະໄວ້ແລ້ວ. ສຳຣັບໂຄງການເກົ່າໝາຍເລກ ໑ ຄື : ໜ່ວຍພັສດຸເຄື່ອງຈັກ ຊຶ່ງຈັດເປັນສ່ວນປະກອບ ຂອງໂຄງການທ່າງອນນັ້ນເອງ. ສູນກາງທົດລອງລ້ຽງສັດ ແລະກະເສດທ່າງອນ ກໍເຂົ້າຣວມຢູ່ນຳຄືກັນ. ການກໍ່ຕັ້ງອົງການພັທນາທົ່ງຣາບວຽງຈັນນີ້ ໄດ້ມີມາພາຍຫລັງການກຽມໂຄງການປະຈຳປີ ແລະການກຽມງົບປະມານ ເງິນທີ່ນຳມາປະຕິບັດໂຄງການ ນອກຈາກການຊ່ວຍເຫລືອແລ້ວ ແມ່ນມາຈາກສາມແຫລ່ງທີ່ແຕກຕ່າງກັນຄື :

໑. ເງິນທີ່ເຫລືອຈາກແຜນປະຈຳປີ ໑໙໖໙-໗໐ ງົບປະມານຂອງແຜນພັທນາ.

໒. ທຶນທີ່ໂອນມາຈາກ ພແນກນຶ່ງເພື່ອມອບໃຫ້ໂຄງການ ໂດຍສະເພາະ ແມ່ນກ່ຽວກັບພັນງານ : ງົບປະມານທັມມະດາຂອງການດຳເນີນງານ.

໓. ທຶນກ້ອນໃໝ່ ທີ່ໄດ້ບັນຈຸເຂົ້າກັບງົບປະມານ ເພື່ອດຳເນີນງານ.

- ແຕ່ວ່າມີແຕ່ຣາຍຈ່າຍຫມາຍເລກ ໑ ອ້າງເຖິງນີ້ເທົ່ານັ້ນ ຊຶ່ງຈະໄດ້ອະນຸໄວ້ ~~ໃນຕາຕະລາງ~~ ທວນຄືນຂອງແຜນປະຈຳປີ. ໃນປີຕໍ່ໆໄປ ກໍຄົງຈະໄດ້ປະຕິບັດເຊັ່ນດຽວກັນ ແລະຈະຕ້ອງຈັດຕັ້ງວຽກການໃຫມ່ ທີ່ມີສ່ວນກ່ຽວຂ້ອງ ຢູ່ໃນງົບປະມານການດຳເນີນງານ ແລະການພັທນາ.

ຈຸ້ມຕຣີ ໖ ຄົນ

໓. <u>ຣາຄາແລະການຈັດສັນທຶນ</u> :

ຣາຄາທັງໝົດສຳຣັບ ປີ ໑໙໗໐-໗໑ : ໖໕.໑໙໕.໔໙໙ ກີບ

ຊຶ່ງໃນຈຳນວນນັ້ນມີ : ການຊ່ວຍເຫຼືອອົສຕຣາລີ : ໔໔.໔໐໐.໐໐໐ ກີບ

ງົບປະມານແຫ່ງຊາດ : ໒໐.໗໙໕.໔໙໙ ກີບ

ເງິນກ້ອນໃໝ່ມີ : ໑໔.໖໔໔.໐໐໐ ກີບ

ເງິນເຫຼືອຈາກປີກາຍ : ໖. ໑໕໑.໔໙໙ ກີບ.

	ການດຳເນີນງານ	໑໙໗໑		໑໙໗໑ - ໑໙໗໑			໑໙໗໐
		ຕ. ໒	ຕ. ໓	ຕ. ໔	ຕ. ໑	ຕ. ໒	ຕ. ໓
໑	ຄັດເລືອກເອົາພະນັກງານ		+-----				
	ປູກເບ້ຍໄມ້	--+--				--+----	
໒	ປູກຕົ້ນໄມ້ແລະແນ່ງໄມ້ສັກ						
	ໂດຍອາສັຍແສງແດດສ່ອງ	--+--				---+---	
໓	ກິຈການຮັກສາ ແລະຍົກຍ້າຍ						
	ໜ້າດິນທີ່ມີຜົລປູກແລ້ວ			+---		+------	

໓. <u>ແຍກສ່ວນປະກອບຣາຄາແລະການຈັດສັນທຶນ</u>

ສ່ວນປະກອບຣາຄາ	ຣາຄາ	ຣາຄາ	ຣາຄາ	ແຫລ່ງຂອງທຶນ
ກ) <u>ສຶກສາ</u>			ບໍ່ມີ	
ຂ) <u>ລົງທຶນສ້າງ</u> :			໒໔.໘໔໐.໑໗໕	ງ.ແຫ່ງຊາດ
໑. ກໍ່ສ້າງ :		໙.໘໐໑.໐໐໐		- " -
- ສ້າງໄຮ :	໗.໖໑໑.໐໐໐			- " -
- ກິຈການຮັກສາບົວຣະບັດໄມ້	໑.໒໘໐.໐໐໐			- " -
໒. ອຸປກອນ		໑໒.໕໓໘.໑໗໕		- " -
- ເງິນເຫຼືອຈາກປີກາຍ	໕.໕໓໘.໑໗໕			- " -
- ຊ່ວຍເຫຼືອຈາກ ໂອສຕຣາລີ	໗.໐໐໐.໐໐໐			ໂອສຕຣາລີ
໓. <u>ທຶນຊຸດໜູນແລະຝຶກອົບຮົມ</u>	໓.໕໐໐.໐໐໐			ໂອສຕຣາລີ
ຄ) <u>ດຳເນີນງານ</u> :			໔໐.໒໕໕.໓໒໔	ງ. ແຫ່ງຊາດ + ໂອສຕຣາລ
໑. ຄັດເລືອກພະນັກງານໃໝ່		໑.໙໘໖.໓໒໔		ງ.ແຫ່ງຊາດ
- ເງິນກອນໃໝ່ :	໑.໒໙໔.໐໐໐			- " -
- ເງິນເຫຼືອຈາກປີກາຍ	໖໑໒.໓໒໔			- " -

ສ່ວນປະກອບຣາຄາ	ຣາຄາ	ຣາຄາ	ຣາຄາ	ແຫລ່ງຂອງທຶນ
໒. <u>ພະນັກງານປະຈຳ</u>		໓໕.໕໕໑.໐໐໐		ງ.ແຫ່ງຊາດ + ໂອສຕຣາລີ
- ເງິນກ້ອນໃຫມ່	໑.໖໕໑.໐໐໐			ງ; ແຫ່ງຊາດ
- ໂອສຕຣາລີ	໓໓.໙໐໐.໐໐໐			ໂອສຕຣາລີ
໓) ອື່ນໆ :		໒.໘໐໘		ງ. ແຫ່ງຊາດ
- ພະນັກງານລອຍ :	໒.໐໘໘.໐໐໐			- " -
- ຊ່ໍໃຊ້ປ່ານແລະແກ່ນໄມ້ສັກ	໗໒໐.໐໐໐			- " -
ໂຣມ	໖໕.໑໘໕.໒໘໘	໖໕.໑໘໕.໒໘໘	໖໕.໑໘໕.໒໘໘	ງ. ແຫ່ງຊາດ + ໂອສຕຣາລີ

<u>ຫມາຍເຫດ</u> : ງົບປະມານຂອງແຜນສົກປີ ໑໙໗໐–໑໙໗໑ ບໍ່ໄດ້ປັນທຶນເງິນຈຳນວນ ໒.໘໐໘.໐໐໐ ຂອງຫມວດ ໒໐–໖ ຊຶ່ງໄດ້ກະໄວ້ແລ້ວນັ້ນເຂົ້ານຳ . ເງິນຈຳນວນ ໒.໘໐໘.໐໐໐ ນັ້ນກໍຄວນຈະຕ້ອງໄດ້ຈ່າຍຕື່ມໃສ່ງົບປະມານີ້ຢູ່.

ໂຄງການ ເລກທີ ໔໑	ກອງປະຊຸມ : ກະສິກຳປ່າໄມ້-ລ້ຽງສັດ ພະແນກ : ກົມປ່າໄມ້ແລະນ້ຳ
ການລ້ຽງປາ ຕາມຫ້ວຍຮ່ອງ ຫຼືໜອງ	

໑. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດປະສົງຂອງໂຄງການ</u> :

- ຈັດຕັ້ງສູນກາງລ້ຽງປານ້ຳຊຸ່ນ ອື່ນໃນປະເທດ
- ຮື້ຟື້ນສະຖານີລ້ຽງປາເກົ່າໂດຍການປຸກສ້າງໃໝ່ ແລະຂະຫຍາຍ ທີ່ຕັ້ງອອກອີກ (ສະຖານີວຽງຈັນ ຫຼວງພຣະບາງ, ແລະປາກເຊ)
- ຜລິດປານ້ອຍໃຫ້ໄດ້ຈຳນວນພຽງພໍ ເພື່ອເອົາໄປຂາຍໃຫ້ແກ່ນັກລ້ຽງປາຕາມຊົນບົດ.
- ລ້ຽງປາສຳລັບບໍລິໂພກ.
- ສຶກສາ, ເຜີຍແຜ່ແລະແຈກຢາຍ.
- ຈັດຕັ້ງຕລາດປາຂຶ້ນຈັດປະກອບສະຖິຕິກ່ຽວກັບການຫາປາ.

໒/ <u>ບົດຊີ້ແຈງ</u> : ແຜນປະຕິບັດງານຂອງໂຄງການໄດ້ລົງມືແລ້ວ ແຕ່ປີ ໑໙໗໗ ສຳລັບກິຈການໃຫຍ່ຂອງສາມສະຖານີນັ້ນ (ວຽງຈັນ ຫຼວງພຣະບາງ ແລະປາກເຊ) ໄດ້ຈັດສັນທຶນໃຫ້ໂດຍອົງການຢູເສດ ນອກນັ້ນ ງົບປະມານແຫ່ງຊາດຍັງໄດ້ຄ້ຳປະກັນ ການດຳເນີນງານແລະກິຈການຮື້ຟື້ນ ສະຖານີບາງບ່ອນ.

໓. <u>ຂໍ້ມູນອື່ນໆ</u> : ສ່ວນສະຖານີໜອງແຕ່ງນັ້ນ, ກໍຄວນທີ່ຈະມີກິຈການຮື້ຟື້ນໃໝ່ ສຳລັບໜອງທີ່ <u>໔</u> ແລະທີ່ ໖.

- ທັງນີ້ຍັງໄດ້ກະໄວ້ວ່າ ນັບແຕ່ງົບປະມານສົກປີ ໑໙໘໑ -໘໔ ນີ້ໄປເຮົາຈະໄດ້ຕັ້ງຕົ້ນຜລິດປາ ສຳລັບບໍລິໂພກ ສຳລັບສາມສະຖານີນັ້ນ, ການຜລິດປາທີ່ໄດ້ກະໄວ້ ມີດັ່ງນີ້ :
  - ປາທີ່ບໍລິໂພກໄດ້ ໗໕ ຫາ ໘໐ ຕັນ
  - ປານ້ອຍ. ໔.໕໐໐.໐໐໐ ໂຕ

໔. <u>ລາຄາແລະ ການຈັດສັນທຶນ</u> :

ລາຄາ :	໘໔.໐໗໗.໔໐໙ ກີບ	
ການຊ່ວຍເຫຼືອຈາກຢູເສດ	໗໔.໐໐໐.໐໐໐ ກີບ	
ງົບປະມານແຫ່ງຊາດ	໑໐.໐໗໗.໔໐໙ ກີບ	ຊຶ່ງໃນຈຳນວນນັ້ນມີ
ເງິນກ້ອນໃໝ່	໗.໕໑໗.໐໐໐ ກີບ	
ແລະເຫຼືອຈາກປີກາຍ	໙.໗໕໐.໔໐໙ ກີບ.	

໒. ຕະຕາລາງການດຳເນີນງານ

ການດຳເນີນງານ	໑໙໗໐	໑໙໗໐ - ໑໙໗໑				໑໙໗໑
	ຕ.໒	ຕ.໓	ຕ.໔	ຕ.໑	ຕ.໒	ຕ.໓
໑ ທຳແຜນທີ່ປະກອບສ່ວນບໍລິເວນກໍ່ສ້າງ		========				
໒ ເຂົ້າການປະມູນ			=====			
໓ ກິຈການຮື້ຟື້ນໃໝ່			=====	=======		
໔ ຄັດເລືອກເອົາພະນັກງານ		=====	=====			
໕ ຊື້ເຄື່ອງໃຊ້ຕ່າງໆ		=====	======			

໓. ແຍກສ່ວນປະກອບຣາຄາ ແລະການຈັດສັນທຶນ :

ສ່ວນປະກອບຣາຄາ	ຣາຄາ	ຣາຄາ	ຣາຄາ ບໍມີ	ແຫລ່ງຂອງທຶນ
ກ/ ສຶກສາ :				
ຂ/ ລົງທຶນສ້າງ :			໒໖.໕໕໐.໐໐໐	
໑. ກໍ່ສ້າງ :		໑໑.໘໐໐.໐໐໐		ງ ແຫ່ງຊາດ + ຢູເສດ
- ຮື້ຟື້ນໃໝ່	໒.໔໐໐.໐໐໐			ງ ແຫ່ງຊາດ
- ການຊ່ວຍເຫຼືອ	໙.໔໐໐.໐໐໐			ຢູເສດ
໒. ອຸປກອນ :		໑໐.໗໕໐.໐໐໐		
- ຊື້ເຄື່ອງເຮືອນ	໕໐໐.໐໐໐			ງ ແຫ່ງຊາດ
- ການຊ່ວຍເຫຼືອ	໑໐.໒໕໐.໐໐໐			ຢູເສດ
໓. ທຶນຊຸດໝູນແລະຝຶກອົບຮົມ		໔.໐໐໐.໐໐		ຢູເສດ
- ການຊ່ວຍເຫຼືອ	໔.໐໐໐.໐໐໐			- " -

ສ່ວນປະກອບຣາຄາ	ຣາຄາ	ຣາຄາ	ຣາຄາ	ແຫລ່ງຂອງທຶນ
ຄ/ ດຳເນີນງານ :			໔໕.໔໑໖.໒໐໓	
໑. ເອົາພະນັກງານໃໝ່		໑.໗໐໖.໒໗໕		ງ ແຫ່ງຊາດ
- ເງິນກ້ອນໃໝ່	໘໖໕.໐໐໐			
- ເງິນເຫຼືອຈາກປີກາຍ	໘໔໑.໒໗໕			
໒. <u>ພະນັກງານປະຈຳ</u> :		໓໘.໓໒໗.໐໐໐		
- ເງິນງົບປະມານໃໝ່	໗໒໗.໐໐໐			ງ ແຫ່ງຊາດ
- ການຊ່ວຍເຫຼືອ	໓໗.໖໐໐.໐໐໐			ຢູເສດ
໓. <u>ອື່ນ ໆ</u>		໕.໓໘໒.໙໒໘		= ແຫ່ງຊາດ
- ພະນັກງານລອຍ	໑.໕໘໔.໐໐໐			- " -
- ເຄື່ອງໃຊ້ໃນຫ້ອງການ	໒໔໐.໐໐໐			- " -
- ເງິນເຫຼືອຈາກປີກາຍ	໒,໘໐໙.໙໒໘			ງ ແຫ່ງຊາດ
- ການຊ່ວຍເຫຼືອ	໗໔໐.໐໐໐			- " -
ໂຮມ	໗໒.໐໖໖.໒໐໓	໗໒.໐໖໖.໒໐໓	໗໒.໐໖໖.໒໐໓	ງ ແຫ່ງຊາດ + ຢູເສດ

ໂຄງການ ເລກທີ ໔໔ ກອງປະຊຸມ : ກະສິກັມປ່າໄມ້- ລ້ຽງສັດ

ພແນກ : ກົມປັບປຸງຫມູ່ບ້ານ

ຂອດພັທນາການ

໑. ຂໍ້ມູນທົ່ວໄປ :

ກ. ຈຸດປະສົງຂອງໂຄງການ : ຊັກຊວນໃຫ້ເກີດຄວາມຕ້ອງການ ຢາກໃຫ້ປ່ຽນແປງໃນຫມູ່ບ້ານ ແລະ ຊັກຊວນເຂົາເຈົ້າ ເພື່ອໃຫ້ປະຕິບັດໄດ້ສຳເຣັດ.

- ຄ້ຳປະກັນ ການພັທນາໃນດ້ານວັດຖຸ ແລະໃນດ້ານຄວາມນຶກຄິດ ໃຫ້ກັບຫມູ່ບ້ານຕ່າງໆທົ່ວພຣະຣາຊອານາຈັກ ໃນຣະບົບວຽກການທີ່ມີຄວາມສຳຄັນ ກັບຊີວິດຂອງຊາວຊົນບົດ ເຊັ່ນ : ການກະເສດ ແລະລ້ຽງສັດ ສຸຂາພິບານ ແລະອະນາມັຍ ການສຶກສາ ໃຊ້ເຄື່ອງອຸປກອນຕ່າງໆ ໂດຍການຊ່ວຍເຫຼືອໃຫ້ເຂົາເຈົ້າໄດ້ມີການຂຍາຍຕົວໂດຍອາສັຍເຫື່ອແຮງຂອງເຂົາເຈົ້າເອງ ພ້ອມກັບການຊ່ວຍເຫຼືອຂອງຣັຖບານແຕ່ເລັກນ້ອຍ.

ຂ. ບົດຊີ້ແຈງ :

໑) ຝຶກອົບຮົມພະນັກງານຊົນບົດ ແລະສັມມາພວກຫົວຫນ້າຖິ່ນ ເຊັ່ນ : ພໍ່ບ້ານ, ຕາແສງແລະຄຣູບາ.

໒) ສ້າງໂຮງຮຽນ, ໂຮງແຈກຢາ, ຕລາດສາລານ້ຳສ້າງ, ຂົວ ແລະຖົນົນຫົນທາງເປັນຕົ້ນ.

ຄ. ຂໍ້ມູນອື່ນໆ : ອີກດ້ານນຶ່ງ ໂຄງການໄດ້ເນັ້ນໃສ່ ການຂຍາຍເຂດເກົ່າໃຫ້ກວ້າງອອກອີກ.

- ເມືອງຂາຍ (ຫລວງພຣະບາງ)
- ນາຊາຍທອງ (ວຽງຈັນ)
- ຫີນບູນ (ຄຳມ່ວນ)
- ສຸວັນຄີລີ (ປາກເຊ)
- ນາຄະບູຣີ (ສີທັນດອນ) ແລະນອກນັ້ນ ໄດ້ເນັ້ນໃສ່ການຈັດຕັ້ງ ເຂດພັທນາການໃຫມ່ອີກ.

໑) ເມືອງໂພນທອງ (ຈຳປາສັກ)

໒) ເມືອງຄັນທະບູຣີ (ສວັນນະເຂດ)

໓) ເມືອງຊະນະຄາມ (ວຽງຈັນ)

໔) ເມືອງປາກລາຍ (ຫລວງພຣະບາງ) ແກ່ນທ້າວ ບໍ່ແຕນ (ໄຊຍະບູຣີ)

໕) ເມືອງຫ້ວຍຊາຍ (ຫລວງພຣະບາງ)

ງ/ ຣາຄາແລະການຈັດສັນທຶນ : ໂຄງການນີ້ ແມ່ນໂຄງການແຫ່ງຊາດໂດຍສະເພາະ ແລະຈະໄດ້ຮັບພາຣະຈາກງົບປະມານແຫ່ງຊາດທັງຫມົດ.

ຣາຄາທັງຫມົດສຳຣັບປີ ໑໙໗໐-໗໑	໓໕.໒໕໙.໑໖໕ ກີບ
ຊຶ່ງໃນຈຳນວນນັ້ນມີງົບປະມານໃຫມ່ :	໓໐.໗໐໙.໐໐໐ "
ແລະເງິນເຫຼືອຈາກປີກາຍ	໔.໕໕໐.໑໖໕ "

໓ ແຍກສ່ວນປະກອບຣາຄາແລະການຈັດສັນທຶນ :

ສ່ວນປະກອບຣາຄາ	ຣາຄາ	ຣາຄາ	ຣາຄາ	ແຫລ່ງຂອງທຶນ
ກ/ ສຶກສາ :			ບໍ່ມີ	
ຂ/ ລົງທຶນສ້າງ			໓໓.໐໓໕.໐໐໐	ງ. ແຫ່ງຊາດ
໑. ກໍ່ສ້າງ		ບໍ່ມີ		
໒. ອຸປະກອນ		໓໑.໓໓໕.໐໐໐		ງ. ແຫ່ງຊາດ
ກ) ສຳຣັບເຂດພັທນາການໃໝ່ ໕ ບ່ອນ	໒໐.໐໐໐.໐໐໐			ງ. ແຫ່ງຊາດ
ຂ) ສຳຣັບເຂດພັທນາເກົ່າ ໕ ບ່ອນ	໗.໕໐໐.໐໐໐			- " -
ຄ) ຣົຖຈັກ ໕ ຄັນ, ຕະກຽງແລະເຄື່ອງໃຊ້	໗໖໐.໐໐໐			- " -
ງ) ເງິນເຫຼືອຈາກປີກາຍ	໓.໐໐໐.໐໐໐			- " -
໓/ ທຶນອຸດໜູນແລະຝຶກອົບຮົມ		໑.໗໐໐.໐໐໐		- " -
ກ) ຝຶກອົບຮົມກັມການທ້ອງຖິ່ນ ໃນເຂດພັທນາ ໑໐ ແຫ່ງ		໑.໗໐໐.໐໐໐		- " -
ຄ/ ດຳເນີນງານ :			໒.໒໒໔.໑໖໕	- " -
໑. ຄັດເລືອກພະນັກງານໃໝ່		໑.໕໕໐.໑໖໕		
- ເງິນເຫຼືອຈາກປີກາຍ	໑.໕໕໐.໑໖໕			- " -
໒. ພະນັກງານປະຈຳ		ບໍ່ມີ		
໓/ ອື່ນໆ		໖໗໔.໐໐໐		- " -
- ເຄື່ອງໃຊ້ໃນຫ້ອງການ	໓໐໐.໐໐໐			- " -
- ຄ່າອົບສິ່ງ ແລະຮັກສາ ອຸປກອນ	໓໗໔.໐໐໐			
ໂຣມ	໓໕.໒໕໙.໑໖໕	໓໕.໒໕໙.໑໖໕	໓໕.໒໕໙.໑໖໕	ງົບປະມານ ແຫ່ງຊາດ

<u>ໝາຍເຫດ</u> : ພາຍຫລັງຈາກ ຂໍ້ຜິດພາດຊຶ່ງເຮົາບໍ່ສາມາດ ທີ່ຈະຫລີກເວັ້ນໄດ້, ງົບປະມານສົກປີ໑໙໗໐-໗໑ ຈຶ່ງໄດ້ກະໄວ້ ພຽງແຕ່ ໓.໐໗໐.໙໐໐ ເທົ່ານັ້ນ ສຳຣັບງົບປະມານໃໝ່. ດັ່ງນັ້ນເຮົາຈຶ່ງຈະໄດ້ຕັ້ງຕົ້ນ ຈ່າຍແຕ່ ງົບປະມານຊຶ່ງໄດ້ກະໄວ້ແລ້ວນັ້ນກ່ອນ, ອີກຕໍ່ໄປເຮົາຈຶ່ງຈະໄດ້ຈ່າຍເງິນ ຊຶ່ງບໍ່ໄດ້ກະໄວ້ນັ້ນພາຍ ໄປຈາກງົບປະມານຊຶ່ງມີຢູ່ ໂດຍອີງໃສ່ງົບປະມານ ທີ່ຈະບໍ່ໄດ້ ຈ່າຍໝົດ ສຳຣັບໂຄງການອື່ນ.

ໂຄງການເລກທີ ໔໓	ກອງປະຊຸມ : ກະສິກັມປ່າໄມ້ - ລ້ຽງສັດ ພແນກ : ກົມປັບປຸງໝູ່ບ້ານ
ສູນກາງພັທນາທ້ອງຖິ່ນ ບ້ານອາມອນ	

໑. ຂໍ້ມູນທົ່ວໄປ :

ກ/ ຈຸດປະສົງຂອງໂຄງການ : ສູນກາງພັທນາທ້ອງຖິ່ນບ້ານອາມອນ ເປັນສ່ວນປະກອບອັນສຳຄັນຍິ່ງ ໃນດ້ານກິຈການ ເພື່ອສັງຄົມ ຂອງກົມປັບປຸງໝູ່ບ້ານ ຕາມທ້ອງຖິ່ນຊົນບົດ ໂດຍມີແນວຄິດແນໃສ່ການ ໃຫ້ເກີດມີການປ່ຽນແປງ ໃນແນວຄິດແລະການປະພຶດຕົນຂອງຊາວບ້ານ.

ກິຈການດ້ານສັງຄົມທາງຈິຕວິທຍາອັນນີ້ ຕ້ອງການໃຫ້ມີການຝຶກອົບຮົມ ເພື່ອກຽມການຕ້ອນ ຮັບກັບຣິດຄອງຂອງທ້ອງຖິ່ນ; ທັງນີ້ບໍ່ວ່າຈະແມ່ນພະນັກງານຂອງກົມປັບປຸງໝູ່ບ້ານ ຫຼື ພະນັກງານທີ່ ມາຮັບໃຊ້ ໃນການປະຕິບັດວິຊາການຕາມທ້ອງຖິ່ນ ກໍຕາມແຕ່, ພ້ອມທັງພະນັກງານທີ່ມາຈາກກະ ຊວງອື່ນໆ ເພື່ອມາຝຶກງານໃນວັນອາທິດອີກດ້ວຍ.

ຂ/ ບົດຊີ້ແຈງ : ຫລັງຈາກພາຍຝົນໃນຄືນວັນທີ ໓໑ ມີນາ ໑໙໗໐ ນີ້ ອາຄານຫລາຍຫລັງ ທີ່ເພພັງກໍ ຖືກປຸກສ້າງໃຫມ່ແລ້ວ ສ່ວນອີກສອງຫລັງກໍກຳລັງສ້າງຢູ່ເພື່ອຈະໃຊ້ເປັນຫ້ອງຮຽນ, ຫ້ອງກູດ້ງນອນ ເດື່ອງ, ຫ້ອງຮັບປະທານອາຫານ ແລະ ຫ້ອງນອນ. ສູນກາງຝຶກງານ ຈຶ່ງໄດ້ກະໄວ້ໃນແຜນສ້ອມ ໂຮມກໍຄວນຈະລົງມືສ້າງພາຍໃນໄຕມາດ ທີ່ ໑ ຂອງແຜນປະຈຳປີ.

ຄ/ ຣາຄາແລະການຈັດສັນທຶນ :

ຣາຄາທັງໝົດສຳຣັບປີ ໑໙໗໐-໗໑	໓໔.໔໙໔.໙໔໕	ກີບ
ຊຶ່ງໃນນັ້ນ ມີການຊ່ວຍເຫຼືອຈາກຢູເສດ :	໙.໖໐໕.໐໐໐	ກີບ
ງົບປະມານແຫ່ງຊາດ	໔໔.໙໙໘.໙໔໕	ກີບ
	໑໓.໖໔໔.໐໐໐	ກີບ ເງິນກ້ອນໃຫມ່
	໙.໔.໔໗.໙໔໕	ກີບ ເງິນເຫຼືອຈາກປີກາຍ

ຫມາຍເຫດ : ງົບປະມານແຜນພັທນາການ ບໍ່ໄດ້ບັນທຶກເງິນ ໑໓.໖໔໔.໐໐໐ ນີ້ໄວ້ ເງິນຈຳນວນນີ້, ກໍຈະໄດ້ຈ່າຍນອກເຫນືອໄປຈາກງົບປະມານ ຈຶ່ງໄດ້ກະໄວ້ ຄືກັນຫາກເມື່ອໃດ ເງິນທີ່ ເຫຼືອຈາກປີກາຍນັ້ນ ໝົດໄປແລ້ວ.

໔. <u>ຕາຕະລາງການດຳເນີນງານ</u> :

	ການດຳເນີນງານ	ກ່ອນວັນທີ ໑ ກໍຣະກະດາ ໑໙໗໐	໑໙໗໐ - ໑໙໗໑ ຕ. ໓	ຕ. ໔	ຕ. ໑	ຕ. ໔	ຫຼັງຈາກວັນທີ ໑໐ ມິຖຸນາ ໑໙໗໑
໑.	ປູກສ້າງສູນກາງຝຶກງານ					ການສົ່ງມາໃຫ້ຜູ້ສະໝັກໄດ້ຄຳໝັ້ນ ໃນ ໑ ລ ກ ໑ ແຕກາລະຣາດປະຕິບັດງານຢູ່ໜ້າໄດ້ດວງໄວທີ່.	
໑.ກ	ເຮັດຜັງ + ຄຳນວນຣາຄາຈາກກົມໂຍທາສະຖານແລະຜັງເມືອງ	------					
໑.ຂ	ໄຂການປະມູນ	-------					
໑.ຄ	ປູກສ້າງອາຄານ	----	---				
໔.	ຝຶກອົບຮົມແລະສຳມນາ						
໔.ກ	ຊາວນາ (ນາຕົວຢ່າງ)		---	----			
໔.ຂ	ພູ່ະສົງ ທີ່ເມືອງໂຂງ	----					
໔.ຄ	ພະນັກງານທ້ອງຖິ່ນຂອດໜຶ່ງ		----				
໔.ງ	ພະນັກງານທ້ອງຖິ່ນຂອດສອງ		----				
໔.ຈ	ພະນັກງານທ້ອງຖິ່ນຂອດສາມ		-----	------			
໔.ສ	ສະມາຊິກສ່ວນນັ້ນ (ສອບເສັງ ວັນທີ ໑໙ ມິຖຸນາ)		-----	-----			
໔.ຊ	ນັກຮຽນຈາກຫລວງພຣະບາງ	---	---				
໔.ດ	ຫົວໜ້າຂອດ (ພັກຢູ່ໃນເມືອງ ໃຊ້ຣົດຍົນເປັນພາຫະນະເພື່ອໄປ ສອນນັກຮຽນ)			--------			
໔. ຕ	ຫົວໜ້າ ຄວບຄຸມງານ		-------				

໑໔໐. - <u>ກອງປະຊຸມດ້ານສິລປຫັຖກັມ, ຊັພຍາກອນທໍຣະນີແລະການຄ້າ</u>

໑໔໑.- <u>ຄຳແນະນຳເບື້ອງຕົ້ນ</u>

໑) <u>ກອງປະຊຸມດ້ານສິລປະກັມແລະອຸດສາຫະກັມ</u>

ກ. <u>ສິລປະກັມ</u>

ໃນສມັຍໂບຮານລາວເຮົາກໍນັບວ່າມີຊື່ສຽງ ທາງດ້ານສິລປະຫັຖກັມມາແລ້ວ ປະເທດນຶ່ງ ບໍ່ວ່າໃນດ້ານຕີເງິນຕີຄຳ, ແກະຮູບລວດລາຍ, ປັ້ນໝໍ້ ຕຳຜ້າໄໝຫຼືດ້ານອື່ນໆ.

ໃນສມັຍປັດຈຸບັນ ກິຈການດັ່ງກ່າວປາກົດວ່າ ລົດນ້ອຍຖອຍລົງເປັນລຳດັບ. ທັງນີ້ກໍເນື່ອງມາຈາກ ຂາດການອູ້ມຊູສນັບສນູນປະການນຶ່ງ ແລະປະການສອງ ເນື່ອງຈາກວ່ານັກສິລປະກອນເອງ ຊຶ່ງເປັນທັງກະເສດກອນນຳດ້ວຍ ບໍ່ໄດ້ໃຫ້ຄວາມສຳຄັນໃນດ້ານນີ້.

ເຖິງຢ່າງໃດກໍດີ, ຣາຍໄດ້ຈາກກິຈການດ້ານສິລປະຫັຖກັມ ຕາມຣາຍງານບັນຊີຣາຍໄດ້ການເງິນແຫ່ງຊາດ ພົມໃນປີ ໑໙໖໗ ມີເຖິງສາມໝື່ນໂກດຫ້າຮ້ອຍລ້ານກີບ ຊຶ່ງມີຣະດັບສູງອັນທີສອງໃນເສຖກິດຂອງປະເທດ ຮອງຈາກຣາຍໄດ້ດ້ານກະເສດກັມ.

ຣັຖບານເຫັນຄວາມສຳຄັນໃນດ້ານນີ້ເປັນຢ່າງດີ ຈຶ່ງໄດ້ຕັ້ງສູນກາງສົ່ງເສີມສິລປະກັມຂຶ້ນ ສູນກາງດັ່ງກ່າວນີ້ ປະກອບດ້ວຍ : ໒ ສູນກາງທົດລອງມີວັດຖຸປະສົງດັ່ງນີ້ :

- ຟື້ນຟູຊັພຍາກອນດ້ານວັດຖຸດິບ ຊຶ່ງຈະນຳມາໃຊ້ໃນການຜລິດຜົນ (ຕົວຢ່າງ : ການລ້ຽງມອນ)
- ຕັ້ງຕົ້ນເຜີຍແຜ່ຜລິດກັມ ແລະຄ້ຳປະກັນຜລິດຜົນໃນດ້ານການຄ້າ ດ້ວຍການອອກຮ້ານແລະສຖານທີ່ຂາຍ.

ນັບແຕ່ກໍ່ການຈັດຕັ້ງເປັນຕົ້ນມາ ທາງກົມຂອງສູນກາງສົ່ງເສີມສິລປກັມ ໄດ້ໂຮມເຫື່ອແຮງໃສ່ລາງໂຄງການ ໂດຍສະເພາະ ແມ່ນດ້ານຕຳຜ້າ-ການລ້ຽງມອນ ສ່ວນໂຄງການອື່ນໆນັ້ນ ຈະຕ້ອງມີການປັບປຸງໃຂຶ້ນຕໍ່ໄປ ເພື່ອເປັນການສົ່ງເສີມບາງຢ່າງໃນດ້ານສິລປະກັມທີ່ຍັງບໍ່ທັນໄດ້ພັທນາ.

໒) <u>ດ້ານອຸດສາຫະກັມ</u>

ເນື່ອງຈາກວ່າກົດໝາຍສົ່ງເສີມການລົງທຶນ ໄດ້ນຳອອກປະຕິບັດຕາມໂຮງງານແລະອຸດສາຫະກັມອັນສຳຄັນໆ ຈຶ່ງໄດ້ຖືກອະນຸຍາດໃຫ້ຈັດຕັ້ງຂຶ້ນໃນເມືອງລາວ, ດ້ານການສ່ວຍສາອາກອນ ແລະພາສີຣາຍໄດ້ ໄດ້ຖືກໂຍະຍານໃຫ້ຢ່າງເພິ່ງພໍໃຈ. ທັງນີ້ກໍເພື່ອຊັກຊວນໃຫ້ເອກ-ກະຊົນຫັນມາລົງທຶນ ໃນເມືອງລາວໃຫ້ຫຼາຍຂຶ້ນ. ການວາງການຈັດຕັ້ງເຂດໂຮງງານອຸດສາຫະກັມຂ້າງໜ້າ ແລະການສຶກສາຄວາມຫຼູມຫຼຽວຂອງໂຮງງານອຸດສາຫະກັມນີ້ ຈະເຮັດໃຫ້ມີຄວາມສະດວກສບາຍ ໃນດ້ານພັທນາຂັ້ນພື້ນຖານໂຮງງານອຸດສາຫະກັມຂອງປະເທດ

ສຳຣັບການລົງທຶນສ່ວນໃຫຍ່ ຕົວຢ່າງການລົງທຶນຂອງໂຮງງານຊີມັງ ຫລືການລົງທຶນຂອງໂຮງງານ ໄມ້ອັດນີ້, ຖ້າວ່າການສຶກສາຄົ້ນຄວ້າ ຄວາມຫູມທຽງຂອງໂຮງງານນີ້ສຳເຣັດລົງແລ້ວ ກໍຄົງເຫຼືອແຕ່ຂັ້ນຊອກຫາເງິນເທົ່ານັ້ນ.

໓) <u>ກອງປະຊຸມດ້ານການຄ້າ</u>

ເພື່ອຕື່ມຄວາມເຂັ້ມແຂງຂອງຣັຖບານ ໃນດ້ານອຸດສາຫະກັມ ຈຶ່ງໄດ້ຈັດຕັ້ງກອງປະຊຸມແຫ່ງຊາດຂຶ້ນ ເພື່ອສຶກສາໃນດ້ານສິນຄ້າຂາເຂົ້າ ແລະສົ່ງສິນຄ້າຂາອອກ. ກອງປະຊຸມຈະຕ້ອງສຶກສາດ້ານການຕລາດຢ່າງຖີ່ຖ້ວນ ໂດຍສະເພາະດ້ານການຕລາດພາຍໃນແລະຕລາດພາຍນອກ ເພື່ອໃຫ້ຄວາມສະດວກສະບາຍແກ່ພວກຜລິດຜົນໃນເມືອງລາວ ທັງນີ້ກໍເພື່ອເປັນການສົ່ງເສີມໂຮງງານອຸດສາຫະກັມ ຂນາດເບົາ ທີ່ພໍຈະເຮັດຂຶ້ນໄດ້ ທັງນີ້ກໍເພື່ອແກ້ໄຂຄວາມຫູມທຽງດ້ານການຄ້າຂອງເມືອງລາວ.

ອີກອັນໜຶ່ງໃນຂອບເຂດການຈັດຕັ້ງ ຂອງກົມການຄ້າເພິ່ນໄດ້ກະໄວ້ວ່າ ຈະຈັດຕັ້ງສະຫະກອນການເຂົ້າຂຶ້ນໜຶ່ງແຫ່ງໆ

ຊຶ່ງມີໜ້າທີ່ຮັບຜິດຊອບໃນດ້ານການຈຳໜ່າຍຜລິດຜົນອັນດັບໜຶ່ງນີ້ ໃຫ້ທົ່ວເມືອງລາວ ແລະເຮັດໃຫ້ເປັນໄປຢ່າງສະມ່ຳສເມີ. ການຈັດຕັ້ງອົງການນີ້ໄດ້ຈັດຂຶ້ນ ພາຍຫລັງຈາກການສຶກສາຕລາດຊີ້ນສຳເຣັດລົງແລ້ວ. ການຈັດຕັ້ງສູນກາງຊື້ສົດ ເພື່ອໃຫ້ຣາຄາຊີ້ນໃນນະຄອນວຽງຈັນຄົງຕົວຢູ່ສະມ່ຳສເມີນັ້ນ ໄດ້ຖືກຍົກຍ້າຍໄປຊົ່ວຣະຍະໜຶ່ງເສັຽກ່ອນ ເນື່ອງຈາກສັງເກດເຫັນຄວາມຫູມທຽງຂອງຣາຄາຊີ້ນໃນປັດຈຸບັນນີ້ຢູ່.

໔) <u>ກອງປະຊຸມຊັພຍາກອນທໍຣະນີ.</u>

ເນື່ອງຈາກເຫດການອັນບໍ່ແນ່ນອນໃນປັດຈຸບັນນີ້ ຈຶ່ງໄດ້ກະໂຄງການສຳຣວດບໍ່ແຮ່ໃນທົ່ວວຽງຈັນໄວ້ ຊຶ່ງຈະຕັ້ງຕົ້ນໃນແຜນພັທນາປະຈຳສົກປີ ໑໙໗໐-໗໑ ນີ້.

ຜົນຂອງການອອກສຳຣວດທັງສອງເທື່ອຂອງບໍຣິສັດສຳຣວດຊັພຍາກອນທໍຣະນີກ່ຽວກັບການຂຸດຄົ້ນບໍ່ແຮ່ໃນຮ່ອມນ້ຳປາແຫນ ແລະຊອກຫາບໍ່ໃໝ່ ໄດ້ສະແດງໃຫ້ເຫັນວ່າມີຊັພຍາກອນທໍຣະນີຢ່າງພຽງພໍທີ່ຈະໃຫ້ການລົງທຶນໄດ້ຫລາຍຍິ່ງຂຶ້ນ ໂຄງການຮື້ຟື້ນອຸປກອນເຄື່ອງໃຊ້ໃນການຂຸດຄົ້ນອັນເກົ່າແກ່, ແລະໂຄງການລົງທຶນໃໝ່ກໍໄດ້ກະໄວ້ໃນປີຂ້າງໜ້ານີ້.

໑໔໔. <u>ໂຄງການຂອງກອງປະຊຸມດ້ານສິລປະກັມ - ອຸດສາຫະກັມ- ຊັພຍາກອນທໍຣະນີແລະການຄ້າ</u>

ໂຄງການເລກທີ ໒໔	ກອງປະຊຸມ	: ດ້ານສິລປະກັມແລະການອຸດສາຫະກັມ
(ໂຄງການຍົກຍ້າຍ)	ພແນກ	: ກົມສິລປະກັມ ແລະອຸດສາຫະກັມ
	ກົມສິລປະກັມ	

໑. <u>ຂໍ້ມູນທົ່ວໄປ</u>

ກ) <u>ຈຸດມຸ່ງໝາຍຂອງໂຄງການ</u> :

ພາຣະກິດອັນໃຫຍ່ຫລວງ ທີ່ໄດ້ມອບໝາຍໃຫ້ແກ່ກົມຫັດຖສິລປະກັມ ແລະອຸດສາຫະກັມ ໂດຍສະເພາະແມ່ນສູນກາງ ສົ່ງເສີມອົບຮົມສິລປະກັມ ແລະກົດໝາຍສົ່ງເສີມການລົງທຶນນັ້ນ ເປັນສິ່ງສຳຄັນຍິ່ງໃນການຂຍາຍໂຕຂອງກົມ.

ຂ) <u>ບົດຊີ້ແຈງ</u> :

ຕ້ອງບັນຈຸເຂົ້າໃໝ່ແລະຕື່ມຣາຍຈ່າຍ ແກ່ຂ້າຣາຊການພາຍໃນກົມ ທັງນີ້ກໍເພື່ອໃຫ້ມີຫລັກຄ້ຳປະກັນໃນການດຳເນີນພາຣະກິດໃໝ່,

ຄ) <u>ຂໍ້ມູນອື່ນໆ</u> :

ໂຄງການນີ້ຈະໄດ້ປະຕິບັດໃຫ້ແລ້ວໄປໃນສົກປີ ໑໙໗໐-໗໑ ການບັນຈຸຄົນເຂົ້າໃໝ່ ແລະຊອກຫາເຄື່ອງມືແລະອຸປກອນ ທາງການຈະໄດ້ປະຕິບັດ ແຕ່ເດືອນ ກໍຣະກະດາ ໄປ ເຖິງເດືອນ ທັນວາ ໑໙໗໐.

ງ) <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ຄ່າໃຊ້ຈ່າຍຂອງໂຄງການນີ້ ໄດ້ກະໄວ້ປະມານ ໒,໐໓໔ ລ້ານກີບ ສຳລັບສົກປີ ໑໙໗໐-໗໑ ເງິນທັງໝົດນີ້ແມ່ນໄດ້ມາຈາກງົບປະມານແຫ່ງຊາດ (ໂຄງການຍົກຍ້າຍ).

໒. <u>ປະຕິທິນການດຳເນີນງານ</u>.

	໑໙໗໐ -	໑໙໗໐ -		໑໙໗໑		
ການດຳເນີນງານ	ໄຕຣມາດ ທີ ໒	ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ໄຕຣມາດ ທີ ໓
໑. ບັນຈຸເຂົ້າໃໝ່		+---------	---------+			
໒. ເຄື່ອງມືແລະອຸປະກອນທາງການ		+---------	---------+			
໓. ຄ່າດຳເນີນງານໃໝ່				+---------	---------+	
໔.						

ຝ. ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ

ສ່ວນຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ແຫລ່ງຂອງທຶນ
ກ). ດ້ານການລົງທຶນ		
໑. ເຄື່ອງມື		
- ເຄື່ອງມືແລະອຸປກອນຫ້ອງການ	໑.ຝ໔ຝ.໒ກ໐,໔໐	ງົບພັທນາ (ຍົກຍາຍຈາກກ້ອນທຶນເດີມທັງຫມົດ)
ຂ) ດຳເນີນງານ		
໑. ຄົນ		
- ບັນຈຸເຂົ້າໃຫມ່	ຝ໙໐,ກ໒໙,ຝ໐	
ໂ ຣ ມ	໒.໐ຝ໔.໐໐໐.໐໐	

ໂຄງການເລກທີ ໘໕.	! ກອງປະຊຸມ : ສິລປະກັມແລະອຸດສາຫະກັມ
	! ພແນກ : ກົມສິລປະກັມແລະອຸດສາຫະກັມ

ສູນກາງສົ່ງເສີມສິລປະກັມ

໑. <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>.

ການຈັດຕັ້ງສູນກາງສົ່ງເສີມສິລປະກັມນີ້ ມີຈຸດປະສົງທີ່ຈະສົ່ງເສີມ ແລະອູ້ມຊູການຄ້າຂອງເອກຊົນດ້ານສິລປະກັມລາວ.

ການຈັດຕັ້ງສູນກາງສົ່ງເສີມນີ້ ເກີດຂຶ້ນກໍຍ້ອນເຫັນວ່າຜລິດພົນຂແນງນີ້ຈະເຣີນດີ.

໒. <u>ບົດຊີ້ແຈງ</u>.

ສູນກາງສົ່ງເສີມສິລປະກັມນີ້ ກໍາກັບນໍາກິຈການຂອງຫລາຍໆ ສູນກາງທົດລອງທີ່ໄດ້ບົ່ງໄວ້ໃນຕະຣາງຂ້າງລຸ່ມ ຊຶ່ງຊີ້ບອກການຈັດຕັ້ງ, ການບູຣະນະ, ການຈໍາໜ່າຍຜລິດພົນ, ການຄວບຄຸມການຕິດຕໍ່ ແລະການສົ່ງເຄື່ອງຂອງຕ່າງໆ. ໄດ້ຈັດຫ້ອງສະແດງສິນຄ້າ ແລະຂາຍຜລິດກັມຂຶ້ນແຫ່ງນຶ່ງ ເພື່ອດໍາເນີນການຄ້າຜລິດກັມ.

໓. <u>ຂໍ້ມູນອື່ນໆ</u> : ການກໍ່ສ້າງສູນກາງນີ້ ສໍາເຣັດລົງແລ້ວແຕ່ປີ ໑໙໖໘, ແລະໃຫ້ໄຂເປັນທາງການແຕ່ເດືອນ ມິຖຸນາ ໑໙໖໙ ຕາມກ້ອນທຶນທີ່ໄດ້ໃຫ້ແກ່ໂຄງການນີ້ສໍາລັບສົກປີ ໑໙໖໙-໗໐ ມີເຖິງ ໑໖.໗໕໕.໐໐໐ ກີບ ໄດ້ຈ່າຍອອກເຖິງວັນທີ ໓໐ ມິຖຸນາ ໑໙໗໐ ມີຈໍານວນເງິນຢູ່ ໙.໑໔໙.໙໓໐ ກີບ ເງິນເຫຼືອຈ່າຍມີ ໗.໔໙໕.໐໗໐ ກີບ ຊຶ່ງຈະໄດ້ຍົກຍາຍໄປ.

໔. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>.

- ສໍາຣັບປີ ໑໙໗໐ - ໑໙໗໑
- ຍົກຍ້າຍຈາກງົບປະມານພັທນາ ໗.໓໙໕.໐໐໐ ກີບ
- ຍົກຍ້າຍຈາກມູນນິທິອາຊີ ໘໐໐.໐໐໐ ກີບ
- ເງິນຊ່ວຍເຫລືອຈາກອົງການສະຫະປະຊາຊາດ (ຜູ້ຊ່ຽວຊານ, ອຸປກອນ, ທຶນສຶກສາ ທີ່ປະເທດໄທ) ໑໘.໙໖໗.໔໐໐ ກີບ
- ຊ່ວຍເຫລືອຈາກຍີ່ປຸ່ນ (ຜູ້ຊ່ຽວຊານ ໒ ຄົນ) ໑໖.໐໐໐.໐໐໐ ກີບ
- ຫາທາງກໍ່ສ້າງ ທີ່ພັກຂອງຜູ້ຊ່ຽວຊານ, ທີ່ພັກຂອງພວກມາອົບຣົມ, ອາຄານ ໂຮງງານສໍາຣັບສາວຫລອກ ແລະຕາກເສັ້ນໄໝ ໑໓.໐໐໐.໐໐໐ ກີບ

ໂ ຣ ມ : .... ໔໙.໔໖໘.໔໗໐ ກີບ

ສູນກາງສົ່ງເສີມສິລປະກັມ

(ປ່ຽນຕາມຫົວຂໍ້)

ຈຳນວນ : ໝວຍລະລ້ານກີບ

ບັນຊີສຳນວນ	ຜູ້ອຳນວຍການ	໑ ການລ້ຽງມ້ອນ	໒ - ໓ ການຕຳຜ້າຍ ແລະໃໝ	໔ ການຍ້ອມສີ	໕ ປັ້ນດິນ	໖ ສລັກຄວັດລາຍໄມ້	໗ ຕຳ່ສາດ	໘ ເຄື່ອງເງິນ	໙ ເຄື່ອງເຮືອນເຮັດດ້ວຍຫວາຍ	ໂຮມແຕ່ລະຈຸດ	ຜົນການດຳເນີນງານ ໑໙໖໙-໑໙໗໐	ຍົກຍ້າຍ ໑໙໗໐-໑໙໗໑
໒໐-໑	໐,໓໐໐	໑,໑໔໐	໐,໓໐໐	໐,໓໐໐	໐,໓໐໐	໐,໓໐໐	໐,໒໔໐			໒,໘໘໐	໐,໘໐໕.໒໒໑	໒,໐໗໔.໗໗໙
໒໐-໒		໔,໖໐໐								໔,໖໐໐	໒,໖໒໙.໘໑໘	໑,໙໗໐.໑໘໒
໒໐-໓	໐,໑໖໕	໐,໘໕໐								໑,໐໑໕	໐,໐໙໕.໗໖໕	໐,໙໑໙.໒໓໕
໒໐-໔					໐,໓໐໐				໐,໒໐໐	໐,໕໐໐	໐,໑໕໐.໐໐໐	໐,໓໕໐.໐໐໐
໒໐-໖	໐,໙໐໐	໒,໗໖໐	໑,໐໐໐	໐,໓໐໐	໐,໕໐໐	໐,໓໐໐	໑,໐໐໐	໑,໐໐໐		໗,໗໖໐	໕,໔໗໙.໑໒໖	໒,໒໘໐.໘໗໔
ໂຮມແຕ່ລະໂຄງການນ້ອຍ	໑,໓໖໕	໙,໓໕໐	໑,໓໐໐	໐,໖໐໐	໑,໑໐໐	໐,໖໐໐	໑,໒໔໐	໑,໐໐໐		໐,໒໐໐		
ໂຮມທັງໝົດ										໑໖,໗໕໕	໙,໑໕໙.໙໓໐	ໃນຈຳນວນ ໗,໕໙໕.໐໗໐
												ມີ ໐,໒໐໐.໐໐໐ ມາຈາກການຊ່ວຍເຫຼືອ

<u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>.

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u>		
- ຄ່າກໍ່ສ້າງ	໑.໓໗໐.໑໔໒	- ງົບພັທນາ
- ອຸປກອນ	໓໑໓.໒໙໕	- ງົບພັທນາ
	໕໐໐.໐໐໐	- ອົງການສະຫະປະຊາຊາດ
	໑໕໐.໐໐໐	- ງົບພັທນາ
	໒໐໐.໐໐໐	- ມູນນິທິອາຊີ
	໕໘໗.໕໐໐	- ອົງການສະຫະປະຊາຊາດ
ຂ. ການປຶກສອງ		
- ພນັກງານ	໒.໐໗໕.໗໗໓	- ງົບພັທນາ
	໑໒.໐໐໐.໐໐໐	- ອົງການສະຫະປະຊາຊາດ
	໑໘.໐໐໐.໐໐໐	- ຍີ່ປຸ່ນ
- ອື່ນໆ	໒.໒໔໐.໔໗໕	- ງົບພັທນາ
ໂ ຣ ມ	໙໘.໕໘໒.໕໗໐	

ໂຄງການເລກທີ ໘໖ (ຍົກຍ້າຍ)	!	ກອງປະຊຸມ	:	ສິລປະກັມ-ອຸດສາຫະກັມ
	!	ພແນກ	:	ກົມສິລປະກັມ ແລະອຸດສາຫະກັມ
ສຶກສາເຂດໂຮງງານອຸດສາຫະກັມ				

໑. <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ການວາງແຜນໃນເມືອງລາວ ເຣັດກັນແບບເສຣີ ໂດຍທີ່ຣັຖບໍ່ປາຖນາຈະເຂົ້າໜຸ້ງວກ່ຽວໂດຍກົງ ໃນດ້ານໂຮງງານອຸດສາຫະກັມ.

ແຕ່ວ່າຣັຖຢາກທົດສອບເບິ່ງຄວາມສາມາດຂອງທຸກໆຄົນທີ່ມາລົງທຶນ ພ້ອມທັງອໍານວຍຄວາມສະດວກແກ່ເຂົາເຈົ້າ ໃນເມື່ອປະສົງຢາກມາດໍາເນີນການອຸດສາຫະກັມ ທີ່ຢູ່ໃນຄວາມຕ້ອງການ ອັນດັ່ງນີ້ ອຸດສາຫະກັມ ຍ່ອມຈະອໍານວຍຜົລປໂຍດໃຫ້ແກ່ຣັຖ ໃນການສົ່ງເສີມການອະນຸຍາດຈັດຕັ້ງໂຮງງານໃສ່ເຂດພັທນາດ້ານອຸດສາຫະກັມນີ້.

ຂ. <u>ບົດຊີ້ແຈງ</u> :

ເຂດພັທນາດ້ານອຸດສາຫະກັມໄດ້ກະໄວ້ສອງແຫ່ງໃນແຂວງວຽງຈັນ.

ກ. <u>ເຂດນຶ່ງ</u> :ຕັ້ງຢູ່ເໜືອວຽງຈັນ (ເກົ້າລ້ຽວ) ກະໄວ້ສໍາຣັບ ອຸດສາຫະກັມຂະນາດເບົາ ຫລືໂຮງງານສິລປະກັມ.

ຂ. <u>ເຂດສອງ</u> :ເປັນເຂດທີ່ສໍາຄັນທີ່ສຸດ ສໍາຣັບໂຮງງານອຸດສາຫະກັມ ຂະນາດໜັກໄດ້ກະໄວ້ໃນຕອນໃຕ້ຂອງຕົວເມືອງວຽງຈັນ.

ຄ. <u>ຂໍ້ມູນອື່ນໆ</u> :

ອົງການສໍາຣວດຊື່ງຮ້ອງຂໍຈາກຍູເສດໄດ້ມາເຖິງນະຄອນວຽງຈັນ ແຕ່ຕົ້ນເດືອນເມສາ ໑໙໗໐ ແລະໄດ້ປະຕິບັດວຽກການມາແລ້ວ. ນອກຈາກສຶກສາຕາມເຂດໂຮງງານອຸດສາຫະກັມແລ້ວ ຍັງໄດ້ສຶກສາເບິ່ງໂຮງງານອຸດສາຫະກັມຕ່າງໆອີກເຊັ່ນ : ການຜລິດຢາປົວພະຍາດ, ເກີບ, ອາຫານສັດ, ໂຮງເກັບຊີ້ນ ແລະໂຮງຂ້າສັດ.

ການສໍາຣວດໄດ້ສິ້ນສຸດລົງໃນປາຍເດືອນ ເມສາ ໑໙໗໐ ຣາຍຈ່າຍໃນການສໍາຣວດຊຶ່ງອົງການຍູເສດໄດ້ກະໄວ້ມີຈໍານວນເງິນ ໘໘.໕໐໐ ດອນລາ. ການສໍາຣວດຢ່າງສົມບູນແບບໄດ້ກະໄວ້ສໍາຣັບສົກປີ ໑໙໗໐-໗໑ ຊຶ່ງຣາຍຈ່າຍທັງໝົດແມ່ນອົງການຍູເສດເປັນຜູ້ໃຫ້ຄວາມຊ່ວຍເຫຼືອ.

ຈຳນວນເງີນ ໒ ລ້ານກີບ ແມ່ນສ່ວນນຶ່ງຂອງງົບປະມານແຫ່ງຊາດ ຊຶ່ງກະໄວ້ສຳຣັບຈ່າຍພາຍໃນຂອບເຂດຂອງໂຄງການແຜນປະຈຳປີ ໑໙໖໙-໗໐ ແຕ່ຍັງບໍ່ໄດ້ເອົາເຂົ້າໃນງົບປະມານແຫ່ງຊາດສົກປີ ໑໙໖໙-໗໐ ແລະກໍບໍ່ໄດ້ເອົາເຂົ້າຢູ່ໃນງົບພັທນາ, ສົກປີ ໑໙໗໐-໗໑ ເທື່ອ ເນື່ອງຈາກມີການໄລ່ຜິດ. ດັ່ງນີ້ ເງີນຈຳນວນ ໒ ລານກີບນີ້ ຈຳເປັນຕ້ອງຊອກຫາເພື່ອຈະເອົາໄປໃຊ້ຈ່າຍໃນການສຶກສາດ້ານການຈັດຮັດແຜນທີ່.

໓. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ຄ່າໃຊ້ຈ່າຍສຳຣັບໂຄງການນີ້ ໄດ້ກະໄວ້ແຕ່ກ່ອນ ໑໕ ລ້ານກີບ ແຕ່ໃນປັດຈຸບັນນີ້ ມີເຖີງ ໒໕.໘໗໕.໐໐໐ ກີບ ໃນຈຳນວນນີ້ :

- ໔໑.໔໕໐.໐໐໐ ກີບ ໄດ້ຈາກການຊ່ວຍເຫຼືອຈາກອົງການຢູເສດ ຈ່າຍສົກປີ ໑໙໖໙-໗໐.
- ໒.໐໐໐.໐໐໐ ກີບທີ່ຈະຕ້ອງຊອກຫາ. (ອາດແມ່ນກອງການລົງທຶນແຫ່ງຊາດ)
- ໑໐.໖໔໕ ລ້ານ ໄດ້ຮັບການຊ່ວຍເຫຼືອຈາກອົງການຢູເສດ ໄດ້ຈັດເຂົ້າໃນແຜນປະຈຳປີ ໑໙໗໐-໗໑ ແລ້ວ.

໔. <u>ປະຕິທິນການດຳເນີນງານ:</u>

ການດຳເນີນງານ		໑໙໗໐	໑໙໗໐ - ໑໙໗໑				໑໙໗໒
		ໄຕຣມາດ ທີ ໔	ໄຕຣມາດ ທີ ໒	ໄຕຣມາດ ທີ ໓	ໄຕຣມາດ ທີ ໑	ໄຕຣມາດ ທີ ໔	ໄຕຣມາດ ທີ ໒
໑	ສຶກສາເຂດອຸສາຫະກັມ		--------	--------	--------	--------	--------

ໂຄງການເລກທີ ໔ກ ! ກອງປະຊຸມ : ສິລປະກັມແລະອຸດສາຫະກັມ ! ຜແນກ : ກົມສິລປະກັມ ແລະ ອຸດສາຫະກັມ	
ການສຶກສາແຕ່ລະຂອດທີ່ພວມປະຕິບັດຢູ່	

໑. ຂໍ້ມູນທົ່ວໄປ.

ກ. ຈຸດມຸ່ງໝາຍຂອງໂຄງການ.

ການພັທນາດ້ານອຸດສາຫະກັມ ຍ່ອມເປັນອັນດັບສຳຄັນຂອງແຜນພັທນາແຫ່ງຊາດ, ດັ່ງນັ້ນ ເພື່ອຈະສາມາດຄວບຄຸມແລະແນະນຳພາກປະຕິບັດ ຣັຖຈະຕ້ອງໄດ້ຮູ້ຂໍ້ມູນດ້ານວິຊາການຫລາຍຢ່າງ ເພື່ອສຶກສາໃຫ້ຮູ້ຄວາມສຳຄັນຂອງແຕ່ລະຂແນງ ແລະເພື່ອຈະຊີ້ຊ່ອງທາງໃຫ້ແກ່ໝວດການອຸດສາຫະກັມຕ່າງໆໄດ້.

ນອກຈາກນີ້ ຖ້າວ່າຣັຖທາກຊ່ວຍສຶກສາຫາຕລາດໂດຍການຊີ້ແຈງເຖິງປະຣິມານຜົນຜລິດຂອງສິນຄ້າລາງແນວ ໃຫ້ແກ່ຜູ້ປະສົງພັນພູ ອຸດສາຫະກັມນີ້, ຣັຖຍັງຈະໄດ້ຊື່ວ່າເປັນຜູ້ສົ່ງເສີມການິຕິດຕັ້ງອຸດສາຫະກັມຂແນງໃຫຍ່ໃນພຣະຣາຊອານາຈັກລາວອີກ.

ຂ. ບົດຊີ້ແຈງ.

ຫລັງຈາກທີ່ໄດ້ທຳການສຶກສາ ກ່ອນການລົງທຶນ ໃນຣະຍະຜະຕິບັດໂຄງການປີທີໜຶ່ງແລ້ວ ຂັ້ນຕໍ່ໄປກໍຈະໄດ້ທຳການສຶກສາຢ່າງຄົບຖ້ວນກ່ຽວກັບການຜລິດຜົນໃນລາງຂແນງ ການຈະໃຫ້ຄວາມສຳຄັນແກ່ຂແນງໃດກ່ອນນັ້ນ ຍ່ອມອີງໃສ່ ກົມການສຶກສາຂັ້ນຕົ້ນນັ້ນເອງ.

ຄ. ຂໍ້ມູນອື່ນໆ

ການສຶກສາກ່ອນການລົງທຶນໄດ້ອີງໃສ່:

- ໃນການຂຍາຍໂຮງງານເຮັດເກີບ
- ໂຮງງານເຮັດຢາປົວພະຍາດ
- ໂຮງງານກະເສດ. (ໂຮງງານນ້ຳຕານ, ໂຮງງານອາຫານສັດ, ໂຮງງານປຸງຊຸນແລະເຮັດນ້ຳມັນຈາກເຄື່ອງປູກ, ໂຮງງານເຂົ້າແປ້ງ)

ການສຶກສາຈຳພວກນີ້ ໄດ້ຮັບການຊ່ວຍເຫຼືອຈາກອົງການຢູເສດຕົກເປັນເງິນທັງໝົດ ໕໓.໕໐໐ ຫລຽນອະເມຣິກາ.

ງ. ຄ່າໃຊ້ຈ່າຍ ແລະການຈັດສັນທຶນ.

ຄ່າໃຊ້ຈ່າຍ ສຳຣັບໂຄງການທີ່ໄດ້ກະໄວ້ ສຳຣັບສົກປີ ໑໙໗໐-໗໑ ມີຢູ່ ໑໔. ໘໗໓.໐໐໐ ກີບ ໃນນີ້ມີ ໑.໗໐໑.໐໐໐ ກີບ ເປັນເງິນງົບປະມານແຫ່ງຊາດ, ນອກນັ້ນ ຈະຕ້ອງແນນອົງການຢູເສດເປັນຜູ້ໃຫ້ຄວາມຊ່ວຍເຫຼືອທັງໝົດ.

ສອງ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u> .

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ດ້ານການສຶກສາ</u>	໗.໕໐໐.໐໐໐	ງົບແຫ່ງຊາດ
ຂ. <u>ດ້ານການລົງທຶນ</u>	. . .	"
- ອຸປກອນ	໑໒.໕໔໕.໐໐໐	"
- ອົບຮົມແລະທຶນສຶກສາ	໕໙.໖໕໐.໐໐໐	"
ຄ. <u>ດ້ານການປົກຄອງ</u>		
- ພນັກງານ	໔໖.໖໐໑.໐໐໐	"
- ອື່ນໆ	໔.໖໐໐.໐໐໐	"
ໂ ຮ ມ	໑໔໔.໒໗໖.໐໐໐	

ໂຄງການເລກທີ ໔໙	!	ກອງປະຊຸມ	: ຊັບພະຍາກອນທຳມະຊາດ
(ຍົກຍ້າຍ)	!	ພະແນກ	: ກົມກາງບໍ່ແຮ່

ການສຳຫລວດບໍ່ແຮ່ ໃນທົ່ງຮາບວຽງຈັນ.

໑. ຂໍ້ມູນທົ່ວໄປ

ກ. ຈຸດມຸ່ງຫມາຍຂອງໂຄງການ

ທຳອິດ ກອງທຶນງົບປະມານແຫ່ງຊາດ ຈຳນວນ ໘.໖໔໐.໐໐໐ ກີບ ນີ້ ໄດ້ຈັດໄວ້ສຳລັບໃຊ້ໃນການສຳຫລວດ ທີ່ຢູ່ຂອງບໍ່ແຮ່ ເປັນໂຄງການທີ່ໄດ້ຈັດເຂົ້າໃນແຜນປະຈຳປີ ສົກປີ ໑໙໗໐-໗໑ ເພື່ອທຳການສຳຫລວດບໍ່ແຮ່ໃນທົ່ງຮາບວຽງຈັນໃນເຂດທີ່ມີຄວາມສງົບດີ.

ການປ່ຽນແປງໂຄງການນີ້, ແມ່ນຄວາມຈຳເປັນໂດຍແທ້ ຄືສະຖານະການບໍ່ມີຄວາມປອດໄພ ໃນເຂດຊຶ່ງກະໄວ້ ເພື່ອທຳການສຳຫລວດເບິ່ງທີ່ຢູ່ຂອງບໍ່ແຮ່.

ໂຄງການສຳຫລວດບໍ່ແຮ່ໃນທົ່ງຮາບວຽງຈັນ ມີຈຸດມຸ່ງຫມາຍໂດຍສະເພາະໃນດ້ານສຶກສາເບິ່ງ ແຫລ່ງກຳເນີດຂອງບໍ່ແຮ່ຕ່າງໆ ເພື່ອຈະໄດ້ວາງແນວທາງດ້ານເສດຖະກິດ ແລະຈັດເຮັດລາຍງານແລະແຜນທີ່ຊັບພະຍາກອນທຳມະຊາດຂອງທົ່ງຮາບວຽງຈັນຢ່າງລະອຽດ.

໒. ບົດຊີ້ແຈງ.

ໂຄງການນີ້ຈະໄດ້ເຮັດເປັນ ໓ ຫມວດ, ໃນຈຳນວນນີ້ ສອງຫມວດແມ່ນຫມວດທີ່ດິນ ແລະຫມວດທີ ໓ ນັ້ນປະກອບດ້ວຍນັກເຄມີວິທະຍາ ຊຶ່ງຈະເປັນຜູ້ວິໄຈວັດຖຸເຄມີໃນຫ້ອງຄົ້ນຄວ້າຂອງກົມກາງບໍ່ແຮ່.

ພື້ນທີ່ດິນທີ່ໄດ້ກະໄວ້ໃນໂຄງການສຳຫລວດບໍ່ແຮ່ນີ້ ມີຫນ້າກວ້າງປະມານ ໓.໔໐໐ ກິໂລແມດມົນທົນ ຫລື ໓໔໐.໐໐໐ ເຮັກຕາ. ພື້ນທີ່ນີ້ເປັນຮູບສາມລ່ຽມ ຊຶ່ງມີຈຸດສຳຄັນດັ່ງຕໍ່ໄປນີ້ :

ເຂດພານອງ ເຂດບ້ານປາກງື່ມ ແລະເຂດບ້ານທ່າລາດ.

໓. ຂໍ້ມູນອື່ນໆ

ໂຄງການທີ່ຈະໄດ້ປະຕິບັດໃຫ້ແລ້ວໃນສົກປີ ໑໙໗໐-໗໑ ນີ້ ໃນລະຍະ ສາມເດືອນຂັ້ນຕົ້ນນີ້ໄດ້ກະໄວ້ ສຳລັບເຮັດເອກະສານແລະກຽມການ ໖ ເດືອນ ຕໍ່ໄປ ໄດ້ກະໄວ້ສຳລັບສຶກສາດ້ານພື້ນທີ່ຕ່າງໆ ແລະຫ້ອງທົດລອງ ແລະອີກສາມ ເດືອນສຸດທ້າຍ ເປັນເວລາເປົ່າວ່າງ ເພື່ອເຮັດລາຍງານ ແລະ ແຜນທີ່ຊັບພະຍາກອນທຳມະຊາດ ຂອງທົ່ງຮາບວຽງຈັນ ໂດຍລະອຽດ.

໑. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>.

ຄ່າໃຊ້ຈ່າຍຂອງໂຄງການນີ້ ໄດ້ກະໄວ້ ໘.໕໔໐.໐໐໐ ກີບ ເງິນຈຳນວນນີ້ໄດ້ມາ ຈາກປີ ງົບປະມານແຫ່ງຊາດ. ທັງໝົດ (ອົງເງິນທັງໝົດ ຍົກຍ້າຍຈາກປີ ງົບປະມານ ໑໙໕໙-໖໐)

໒. <u>ປະຕິທິນການດຳເນີນງານ</u>

	ການດຳເນີນງານ	ກ່ອນວັນທີ ໑/໖/໖໐	໑໙໖໐ - ໑໙໖໑ ໄຕຣມາດ ທີ ໓	໑໙໖໐ - ໑໙໖໑ ໄຕຣມາດ ທີ ໔	໑໙໖໐ - ໑໙໖໑ ໄຕຣມາດ ທີ ໑	໑໙໖໐ - ໑໙໖໑ ໄຕຣມາດ ທີ ໒	ຫຼັງວັນທີ ໓໐/໕ ໑໙໖໑
໑	ຮັດເອກສານແລະກຽມການ		-------				
໒	ສຳຣວດຕາມພື້ນທີ່ຕ່າງໆ			-------	-------		
໓	ຣາຍງານ ແລະແຜນທີ່					-------	

໓. <u>ແຍກສ່ວນປະກອບຄ່າໃຊ້ຈ່າຍ</u> <u>ແລະການຈັດສັນທຶນ</u>.

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. <u>ການລົງທຶນ</u>		
໑. ອຸປກອນ	໒.໔໐໐.໐໐໐	ງົບພັທນາ
- ຣົດ		
- ອຸປກອນເຄື່ອງແຕ້ມຮູບແລະເຄື່ອງໃຊ້	໑.໒໐໘.໕໕໐	"
໒. <u>ດ້ານການປົກຄອງ</u>		
- ພນັກງານ	໓.໓໕໙.໐໐໐	"
- ເຄື່ອງໃຊ້ຕ່າງໆແລະທີ່ບໍ່ໄດ້ກະໄວ້	໑.໔໕໒.໓໔໐	"
ໂຮມ	໘;໕໔໐.໐໐໐	

ໂຄງການເລກທີ ໓໐	! ກອງປະຊຸມ	: ອຸປກອນການຄ້າ
	!	ກົມການຄ້າ
ສຶກສາດ້ານຕລາດ		

໑. <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ປັດຈຸບັນນີ້ ເມືອງລາວເຮົາ ຍັງບໍ່ທັນມີ ແນວທາງໃດໆ ພໍຈະອຳນວຍຄວາມສະດວກແກ່ຊາວຕ່າງດ້າວທີ່ສົນໃຈຈະມາລົງທຶນໃນປະເທດເຮົາ.

ຈຶ່ງຢູ່ວ່າການ ເຜີຍແຜ່ປະມວນກົດໝາຍສົ່ງເສີມການລົງທຶນນັ້ນ ມີຄວາມສຳຄັນຢູ່ບໍ່ໜ້ອຍ, ແຕ່ວ່າເຮົາຈະຕ້ອງໃຫ້ພວກຈະມາລົງທຶນນັ້ນໄດ້ຮູ້ເຖິງສະພາບການເສຖກິດຂອງລາວ ຢ່າງຖືກແນ່ ເພາະວ່າທຸກໆເທື່ອທີ່ມີການຈັດຕັ້ງໂຮງງານ, ກໍຈະຕ້ອງມີການຊອກຫາຕລາດການຄ້າເສັຽກ່ອນ.

ແຕ່ໃນປັດຈຸບັນນີ້, ທາງຫ້ອງການສຶກສາຄົ້ນຄວ້າຈຳເພາະໄດ້ພົບເຫັນຄວາມຂາດຕົກບົກພ່ອງກ່ຽວກັບຄວາມຮູ້ທົ່ວໄປ ດ້ານຕລາດການຄ້າ ຈຶ່ງເປັນບັນຫາໜັກໃຈຢູ່ ຈຶ່ງສເນີໃຫ້ມີການສຶກສາຄົ້ນຄວ້າອັນຕົ້ນຊຶ່ງຈະຕົ້ນຄ່າໃຊ້ຈ່າຍທີ່ມີຢູ່ແລ້ວ ຂອງການສຶກສາຄົ້ນຄວ້າ ສະເພາະຂະແນງທີ່ໄດ້ວາງໄວ້ແລ້ວນັ້ນ.

ຖ້າວ່າເຮົາຫາກສຶກສາຄົ້ນຄວ້າທົ່ວໄປໂລດ ໂດຍມີຜູ້ຊ່ຽວຊານຮ່ວມມືສຶກສານຳ, ກໍອາດເປັນຜົນດີບໍ່ນ້ອຍ. ເຮົາຄວນເຂົ້າໃຈວ່າ ບໍ່ແມ່ນແຕ່ສຶກສາດ້ານບັນຫາ ຕລາດການຄ້າເທົ່ານັ້ນ ແຕ່ວ່າມັນເປັນການສຶກສາທຸກໆດ້ານ ເສຖກິດຂອງປະເທດ ມັນເປັນການສຶກສາທຸກໆສາຂາ ຊຶ່ງບໍ່ໄດ້ຈັດເຂົ້າໃນໂຄງການ ທີ່ ໔ກ ການສຶກສາແຕ່ລະດ້ານທີ່ກຳລັງປະຕິບັດຢູ່.

ຂ. <u>ຄ່າໃຊ້ຈ່າຍທັງໝົດຂອງການສຶກສາໄດ້ກະໄວ້ ໑໘ ລ້ານກີບ</u>.

໔. <u>ຂໍ້ມູນດ້ານວິຊາການ</u>

ກ. <u>ບົດຊີ້ແຈງ</u> : ພາຣະກິດຂອງນັກຊ່ຽວຊານຂອງ PNUD ສຳຣັບແຜນປະຈຳປີນີ້ ຈະໄດ້ກຳໜົດຣະຍະການປະຕິບັດງານ ໃນຂອບເຂດຂອງໂຄງການນີ້.

ຂ. <u>ປະຕິທິນການດຳເນີນງານ</u>: ການສຶກສາໄດ້ຖືກປະຕິບັດໃນແຜນປີຈຳປີ ທີ່ ໔ ແລະສະແດງໃຫ້ເຫັນເຖິງຜົນຂອງການລົງທຶນອັນໜັ້ນຄົງ ສຳຣັບປະເທດ. ເມື່ອຫາກວ່າ ການສຶກສານີ້ສຳເຣັດແລ້ວ ກໍຈະສາມາດສຶກສາໄດ້ຫລາຍຂະແນງ ໂດຍສະເພາະບັນຫາດ້ານຕລາດ ຂອງຜລິດຜົນລາວແນວ ຊຶ່ງເປັນຈຸດໃຫຍ່ຂອງເສຖກິດ ເພື່ອການພັທນາປະເທດຊາດ.

໓. <u>ແຫລ່ງຂອງທຶນ</u> : ວົງເງິນປັດຈຸບັນໃນຂັ້ນຕົ້ນສຳຣັບໂຄງການນີ້ ໄດ້ຮັບການຊ່ວຍເຫຼືອຈາກອົງການສະຫະປະຊາຊາດ ໃຊ້ໃນການພັທນາ ດ້ານອຸດສາຫະກັມ.

ໂຄງການເລກທີ ມີມີ	!	ກອງປະຊຸມ	:	ອຸປກອນດ້ານການຄ້າ
	!	ພແນກ	:	ກົມການຄ້າ

ສຶກສາຕລາດການຜລິດພົນ ດ້ານກະເສດ ໂດຍສະເພາະແມ່ນເຂົ້າ

ຂ-໑ ຂໍ້ມູນທົ່ວໄປ

ກ) ຈຸດມຸ່ງໝາຍຂອງໂຄງການ

ການຈັດຕັ້ງ ຕລາດການກະເສດ ໂດຍສະເພາະແມ່ນຕລາດເຂົ້າ ຊຶ່ງເປັນບັນຫາທີ່ສຳຄັນທີ່ສຸດ ຕໍ່ຊີວິດຂອງຄົນລາວ ບໍ່ວ່າໃນດ້ານການພັທນາ ດ້ານການຜລິດ ຫລືໃນດ້ານການແຈກຢາຍ ກໍເຊັ່ນດຽວກັນ.

ໂຄງການນີ້ ໄດ້ກະໃສ່ສະເພາະການສຶກສາດ້ານການຈຳໜ່າຍ ແລະເສັ້ນທາງການຄ້າເຂົ້າເທົ່ານັ້ນ ເພື່ອໃຫ້ມີການຈັດຕັ້ງສະຫະກອນນຶ່ງອັນ ຊຶ່ງເອີ້ນວ່າ ສະຫະກອນການເຂົ້າ ຊຶ່ງມີຈຸດປະສົງເຮັດໃຫ້ມີເຂົ້າສມ່ຳສເມີແລະມີຣາຄາຄົງເດີມ. ອົງການນີ້ ຈະຕ້ອງມີການດຳເນີນງານຮ່ວມກັນກັບອົງການກະເສດ (ອາໂດ)

ຂ) ບົດຊີ້ແຈງ:

ດ້ານການສຶກສາຈະຕ້ອງອີງຕາມຫລັກການດັ່ງຕໍ່ໄປນີ້ :

- ສຶກສາຣາຄາເຂົ້າເປືອກ ແລະເຂົ້າສານຊຶ່ງບໍ່ສມ່ຳສເມີກັນ ຂອງສອງຝັ່ງແມ່ນ້ຳຂອງ.
- ສຶກສາສິນຄ້າທີ່ຍັງເຫຼືອ ຕາມແຂວງຕ່າງໆ ທາງພາກໃຕ້
- ສຶກສາສິນຄ້າ ໃນຕົວນະຄອນວຽງຈັນ.
- ສຶກສາແນວທາງຂອງການຈັດຕັ້ງ ຣະບຽບການຄ້າ
- ຣະບຽບການສຳຣັບຜູ້ຜລິດເພື່ອການບໍຣິໂພກ
- ຣະບຽບສຳຣັບຜູ້ຂາຍເພື່ອການແຈກຢາຍ
- ຣະບຽບການຕິດຕໍ່ຣະຫວ່າງສອງຝ່າຍດັ່ງກ່າວ.
- ສຶກສາດ້ານການເງິນໃຫ້ໄດ້ ເພື່ອນຳມາປະຕິບັດໂຄງການນີ້ ໃຫ້ສຳເຣັດ.
- ສຶກສາດ້ານການແກ້ບັນຫາອື່ນໆ ຊຶ່ງຮັບເປັນເອກສັນ ຈາກປະເທດ ອາຊີຕະວັນອອກສ່ຽງໃຕ້

ຄ) ຂໍ້ມູນອື່ນໆ

ທີ່ປຶກສາຂອງອົງການ ອີກາເຟ ຜູ້ນຶ່ງໄດ້ມາເຖິງ ນະຄອນວຽງຈັນ ໃນເດືອນ ມີນາ ໑໙໗໙ ໄດ້ໃຫ້ຄວາມເຫັນໃນຂັ້ນຕົ້ນວ່າ :

໑) ການທັດສະນະສຶກສາ ແລະເຜີຍແຜ່ ໃນລາວປະເທດອື່ນ : ໄຕ້ຫວັນ, ຮົງກົງ ຍີ່ປຸ່ນ ຈະຕ້ອງເປັນຂ້າຣາຊການ ຜູ້ຊຶ່ງມີໜ້າທີ່ຮັບຜິດຊອບ ດ້ານການຄ້າພາຍ ໃນ.

໒) ນັກຊ່ຽວຊານ ດ້ານສຶກສາການຄ້າ ຜູ້ນຶ່ງຈະຕ້ອງມາສຶກສາດ້ານຕລາດການຄ້າ ດັ່ງໄດ້ກ່າວໃນຄຳຊີ້ແຈງຂັ້ນຕົ້ນ ກ່ອນການຈັດຕັ້ງ ສຫະກອນການເຂົ້າ.

ສຳລັບສົກປີ ໑໙໗໐-໗໑ ຄຳຮ້ອງຂໍ ໄດ້ຖືກສົ່ງໄປຈາກຜູ້ຕາງໜ້າ ຂອງ PNUD ແລ້ວ.

ງ) ຄ່າໃຊ້ຈ່າຍແລະການຈັດສັນທຶນ.

ຄ່າໃຊ້ຈ່າຍທັງໝົດຂອງໂຄງການນີ້ ໄດ້ກະໄວ້ປະມານ ໑໕.໐໒໕.໐໐໐ ກີບ ເປັນເງິນຂອງ PNUD ທັງໝົດ.

ຣັຖບານຈະຕ້ອງຮັບພາຣະໃນການໃຊ້ຈ່າຍຄ່າເດີນທາງ ພາຍໃນປະເທດ ສຳຣັບ ຜູ້ຊ່ຽວຊານ. ທັງຈັດພນັກງານທີ່ຊຳນານຜູ້ນຶ່ງແລະ ຫ້ອງການພ້ອມເລຂານຸການຈາກກົມ ການຄ້າໃຫ້.

໒. ປະຕິທິນການດຳເນີນງານ

ການສຶກສາຈະໄດ້ນຳໄປປະຕິບັດພາຍຫລັງຈາກຜູ້ຊ່ຽວຊານ ໄດ້ມາເຖິງແລ້ວ, ສ່ວນຄຳຮ້ອງຂໍໄດ້ຖືກສົ່ງໄປ PNUD ຢູ່ນິວຢອກ ໂດຍຜູ້ຕາງໜ້າປະຈຳ ແຜນການ ບັນຈຸເອົາຂ້າຣາຊການກຳລັງປະຕິບັດຢູ່ ແລະກະວ່າພາຍໃນເດືອນ ກັນຍາ ຫລື ພຶສຈິກາ ຜູ້ ຊ່ຽວຊານກໍຈະມາເຖິງ. ຣະຍະການສຶກສາ ໄດ້ກະໄວ້ ນຶ່ງປີ.

໓. ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ

ສ່ວນປະກອບຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
- ສຶກສາ		
- ຜູ້ຊ່ຽວຊານໜຶ່ງຄົນຣະຍະ ໑ ປີ.	- ໑໒;໐໐໐;໐໐໐	
- ທຶນສຶກສານຶ່ງທຶນຣະຍະ ໙ ເດືອນ	- ໒.໕໒໕.໐໐໐	
- ອຸປກອນ	- ໕໐໐.໐໐໐	
ໂ ຣ ມ	໑໕.໐໒໕.໐໐໐	

ໂຄງການເລກທີ ໓໕	!	ກອງປະຊຸມ	:	ດ້ານການຄ້າ
(ໂຄງການໃໝ່)	!	ພະແນກ	:	ກົມການຄ້າ
ກົມການຄ້າ				

໑. <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ກົມການຄ້າຈະຕ້ອງຈັດຕັ້ງໂຄງຮ່າງຂຶ້ນໃໝ່ ເພື່ອໃຫ້ວຽກງານດີນດີ ແລະເພື່ອໃຫ້ເປັນໄປຕາມເປົ້າໝາຍທີ່ໄດ້ວາງໄວ້ໃນກອງປະຊຸມຊຶ່ງມີຢູ່ ໓ ຂໍ້ຄື : ປັບປຸງໂຄງຮ່າງການບໍລິຫານ, ຈັດຕັ້ງລະບຽບດ້ານຕະຫລາດພາຍໃນ ແລະ ພັດທະນາດ້ານການຄ້າພາຍນອກ ຢ່າງສະໝໍ່າສະເໝີ.

ຂ. <u>ບົດຊີ້ແຈງ</u> :

ດ້ານການຄ້າ ຍັງຂາດຜູ້ນຳຂັ້ນກາງ ຊຶ່ງມີໜ້າທີ່ຮັບຜິດຊອບ ໃນຂັ້ນຫົວໜ້າຫ້ອງການ.

ພາຍໃນລະຍະຫ້າປີ ຂອງແຜນພັດທະນາສ່ວນໂຮມແຫ່ງຊາດນັ້ນ ການບັນຈຸເອົາຂ້າຣາຊການ ຢ່າງນ້ອຍກໍໃຫ້ໄດ້ ໓ ທ່ານຕໍ່ປີ ທັງນີ້ກໍເພື່ອເປັນການຕອບສນອງຈຸດມຸ່ງໝາຍທີ່ໄດ້ວາງໄວ້ແລ້ວນັ້ນ. ເປັນຂອງທັມມະດາການບັນຈຸເອົາຂ້າຣາຊການ ທຸກໆເມື່ອຣາຍຈ່າຍຄ່າເງິນເດືອນ ແລະອຸປກອນຫ້ອງການກໍຕ້ອງເພີ່ມຂຶ້ນ.

ຄ. <u>ຂໍ້ມູນອື່ນໆ</u>

ຄ່າໃຊ້ຈ່າຍທັງໝົດ ສຳຣັບໂຄງການໃນລະຍະ ໕ ປີ ມີເຖິງ ໘.໔໐໐.໐໐໐.ກີບ ຊຶ່ງໂຮມທັງຄ່າເງິນເດືອນ ແລະອຸປກອນຫ້ອງການ ໃນຈຳນວນນີ້ໄດ້ຈ່າຍໄປແລ້ວ, ໘໘໗.໑໗໕ ກີບ ໃນສົກ ໑໙໗໖-໘໐.

ງ) <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>.

ຄ່າໃຊ້ຈ່າຍສຳຣັບສົກປີ ໑໙໘໐-໘໑ ມີຢູ່ ໑.໑໐໐.໐໐໐ ກີບ ການຈັດສັນທຶນທັງໝົດ ໄດ້ມາຈາກງົບປະມານແຫ່ງຊາດ. ເງິນຍົກຍາຍມີຢູ່ ໔໔໓.໙໓໕ ກີບ

໒. ປະຕິທິນການດຳເນີນງານ

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງວັນທີ ໓໐/໖/໗໑
໑- ບັນຈຸຄົນ	======	=======	=======	=======	=======	
໒- ການຕົກແຕ່ງແລະ ອຸປກອນ	======	=======	=======	=======	=======	

໓. ແຍກສ່ວນປະກອບຂອງຄ່າໃຊ້ຈ່າຍ ແລະການຈັດສັນທຶນ

ສ່ວນປະກອບຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. ດ້ານການລົງທຶນ .		
໑. ອຸປະກອນ		
- ອຸປກອນ ຫ້ອງການ	໙໗.໓໗໗	ງົບປະມານພັທນາແຫ່ງຊາດ (ທຶນຍົກຍ້າຍ)
- ອຸປຮອບ ເຄື່ອງບິນຈູໃນຫ້ອງການ	໖໔໐.໐໐໐	ງົບປະມານພັທນາແຫ່ງຊາດ (ທຶນໃຫມ່)
ຂ.໒ ດ້ານການປົກຄອງ		
- ພນັກງານ	໔໖໐.໐໐໐	
- ພນັກງານ	໑໒໖.໕໕໘	
ໂ ຣ ມ	໑.໓໒໓.໙໓໕	

໑໓໐. <u>ບັນຊີຣາຍໄດ້ແຫ່ງຊາດ</u>.

ໂຄງການເລກທີ ໓໕	!	ກົມແຜນພັງ
ຫົວຂໍ້	:	ບັນຊີຣາຍໄດ້ແຫ່ງຊາດ

ຂ. ໑- <u>ຂໍ້ມູນທົ່ວໄປ</u>

ກ) <u>ຈຸດມຸ່ງຫມາຍຂອງໂຄງການ</u>

ການເຮັດບັນຊີຣາຍໄດ້ແຫ່ງຊາດ ຈະຕ້ອງເຂົ້າເຖີງຈຸດມຸ່ງຫມາຍ ທັງສອງຢ່າງນີ້ເສັຽກ່ອນ ຄື :

- ຂຽນແລະອະທິບາຍ ໂດຍອາໄສສະຖິຕິແລະ ເຫດການຂອງສັງຄົມດ້ານເສຖກິດເມືອງລາວຈາກການຂີດຄຳນວນຂອງສິ່ງແວດລ້ອມທັງມວນ.

- ເຮັດເຄື່ອງມືແນວໃດແນວນຶ່ງຂື້ນ ເພື່ອຕິດຕາມການປະຕິບັດແຜນພັທນາສ່ວນໂຮມຣະຍະ ຫາ ປີແລະປະມວນຜົນການຂຍາຍຕົວທາງດ້ານເສຖກິດຂອງປະເທດ.

ປື້ມປະມວນບັນຊີຣາຍໄດ້ແຫ່ງຊາດ ສົກປີ ໑໙໖໘, ພີມເຜີຍແຜ່ໂດຍກົມແຜນພັງໃນປີ ໑໙໖໗, ເປັນສິ່ງນຶ່ງຊຶ່ງເຮັດໃຫ້ວຽກງານອັນຫນັກໃຫ້ເປັນເບົາ ຊຶ່ງກໍໄດ້ແກ້ບັນຫາຄວາມຫຍຸ້ງຍາກໃນດ້ານຫລັກການສ່ວນໂຮມແລ້ວທັງຫມົດ.

ຂ) <u>ບົດຊີ້ແຈງ</u> : ກ່ອນອື່ນບັນຊີເສຖກິດຕ່າງໆ, ຈະຕ້ອງເຮັດໃນແຜນປະຈຳປີ ຕັ້ງແຕ່ສົກ ໑໙໖໙-໗໐ ເປັນຄວາມຈິງຢູ່ວ່າ ການຂາດເອກສານສະຖິຕິອັນແນ່ນອນ ເຮັດໃຫ້ເປັນບັນຫາຫນັກຫນ່ວງໃນການປະຕິບັດ ເຖິງຢ່າງໃດກໍດີ ວຽກການທັງຫມົດກໍຈະຕ້ອງມີການຊອກຫາແຫລ່ງຂ່າວ ຈາກອົງການເສຖກິດ. ຈະຕ້ອງມີການຮິບໂຮມ ຂໍ້ມູນຕ່າງໆ ໂດຍອາໄສຂໍ້ມູນຈຳພວກນີ້ ມາເປັນສ່ວນປະກອບໃນການດຳເນີນງານການຊ່ວຍເຫຼືອດ້ານຜູ້ຊ່ຽວຊານ ມີຄວາມຈຳເປັນຍິ່ງ ແລະຄວນໃຫ້ມີການປະສານງານ ຕື່ມຂື້ນຣະຫວ່າງພແນກຣາຊການຂອງຣັຖ.

ຄ) <u>ຂໍ້ມູນອື່ນໆ</u>ໂຄງການນີ້ ການປະຕິບັດ ພາຍໃນທ້າຍປີ ໑໙໗໐ ຊຶ່ງມີຣະຍະ ສາມ ເດືອນ.

ງ) <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ການຈັດສັນທຶນສຳຣັບໂຄງການນີ້ຍັງຈະໄດ້ຊອກຫາເອົາງົບປະມານ ພັທນາອາດປ່ຽນໂຄງການໃຫມ່ໄດ້, ນອກຈາກການຊ່ວຍເຫຼືອຂອງຜູ້ຊ່ຽວຊານ ຊຶ່ງຈະໄດ້ຮັບຊ່ວຍເຫຼືອຈາກປະເທດຝຣັ່ງເສດ. ສຳຣັບປີ ໑໙໗໐-໗໑ ຄ່າໃຊ້ຈ່າຍສຳຣັບໂຄງການນີ້ ໄດ້ກະໄວ້ປະມານ ໓.໕໐໐.໐໐໐ ກີບ (ຊອກເອົາໃຫມ່) ໗.໐໐໐.໐໐໐ ກີບ ໄດ້ມາຈາກການຊ່ວຍເຫຼືອຂອງຝຣັ່ງເສດ (ຄ່າຜູ້ຊ່ຽວຊານ)

ຂ. ໒- <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑				ຫລັງຈາກວັນທີ ໓໐/໖/໗໑
		ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	
໑. ຈັດຣະບຽບປະຕິບັດງານ			------+			
໒. ຮິບໂຮມເອົາຣາຍຣະອຽດຕ່າງໆ				--------	--------	
໓. ການຈັດທຳຣາຍຣະອຽດໃຫ້ເກີດຜົນ				------	-----	
໔. ການແຕ່ງປຶດປະມວນອັນສຸດທ້າຍ					-----+	

ຂ. ໓. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ສ່ວນປະກອບຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ຂ.໑. <u>ດ້ານການລົງທຶນ</u>		
- ໑ ເຄື່ອງຄິດເລກ (໒໐-໓)	- ໑໗໐.໐໐໐	
໒. <u>ດ້ານການປົກຄອງ</u>		
໑. ພນັກງານ		
- ຜູ້ຊ່ຽວຊານຜູ້ນຶ່ງ (໒໐-໑) ປະມານ ໑ ປີ	໕໐໐.໐໐໐	ຊອກຫາ
- ນັກວິຈັຍ ໒ ຄົນ-໑ ປີ	໑.໔໕໐.໐໐໐	
- ຜູ້ຊ່ຽວຊານຜູ້ນຶ່ງ (໒໐-໖)	໗.໐໐໐.໐໐໐	ຝຣັ່ງເສດ
໒. ຄ່າກິນສົ່ງ (໒໐-໖)		
- ກິນສົ່ງ	໔໐໐.໐໐໐	
- ເງິນຄ່າເດີນທາງ	໕໐.໐໐໐	ຊອກຫາ
໓. ອຸປກອນຫ້ອງການ (໒໐-໖)		
- ເຈັຽແລະເຄື່ອງພິມ ໑໐	໗໐໐.໐໐໐	
໗% ກະເພື່ອໄວ້ໃນງົບປະມານພັທນາ	໒໔໐.໐໐໐	
ໂຮມ	໑໐.໕໐໐.໐໐໐	

໑໔໐. ກອງປະຊຸມພລັງງານ :

໑໔໑. ຄຳແນະນຳຂອງຕົນ :

ເມື່ອກ່າວເຖິງກອງປະຊຸມພລັງງານແລ້ວ ແມ່ນໝາຍເຖິງພລັງງານໝົດທຸກແບບທີ່ໃຊ້ຢູ່ປັດຈຸບັນ : ນ້ຳມັນຣົດ (ນ້ຳມັນແອັດຊັງ) ນ້ຳມັນເຊື້ອໄຟແລະສິ່ງອື່ນໆ ທີ່ໄດ້ມາຈາກນ້ຳມັນກາດ ຫຼືກະແສໄຟຟ້າແລະຕລອດຈົນຮອດຖ່ານທີ່ເຮັດດ້ວຍໄມ້.

ເນື່ອງດ້ວຍວ່າ ເວລານີ້ນ້ຳມັນເຊື້ອໄຟຕ່າງໆ ແມ່ນໄດ້ນຳເຂົ້າມາຈາກຕ່າງປະເທດ ໂດຍຮູບແບບສົມບູນແລະບໍ່ຕ້ອງການດັດແປງຮູບໃໝ່ໃນດິນລາວ ຈຶ່ງເຫັນວ່າບໍ່ຈຳເປັນຈະວາງແຜນຜລິດກ່ຽວເຣື່ອງນີ້.

<u>ສິ່ງສຳຄັນສຳຣັບກອງປະຊຸມນີ້ແມ່ນການຜລິດໄຟຟ້າ</u>

<u>ສະພາບປັດຈຸບັນຂອງການຜລິດໄຟຟ້າ</u>

ປັດຈຸບັນ ກະແສໄຟຟ້າທີ່ໃຊ້ຢູ່ໃນລາວມາຈາກສາມແຫ່ງ :

- ສ່ວນຫລາຍແມ່ນກົມໄຟຟ້າລາວ ຊຶ່ງເປັນຣັຖວິສາຫະກິດເປັນຜູ້ຜລິດ
- ສ່ວນນຶ່ງອີກແມ່ນຜລິດໂດຍເຄື່ອງຈັກເອກຊົນ ຫຼືອົງການຕ່າງໆ ເຊັ່ນສຖານທູດ, ໂຮງງານອຸດສາຫະກັມ, ຜູ້ຕ່າງໜ້າປະເທດອື່ນໆ.
- ສ່ວນສຸດທ້າຍຂອງກະແສໄຟຟ້າທີ່ໃຊ້ຢູ່ໃນລາວ ແມ່ນນຳມາຈາກປະເທດໄທໂດຍສາຍສົ່ງແຮງສູງ ທີ່ຜ່ານແມ່ນ້ຳຂອງທາງຕອນໃຕ້ຂອງນະຄອນວຽງຈັນ (ຕາມທັມດາແລ້ວໄດ້ກະໄວ້ວ່າໄທຈະຕ້ອງເອົາໄຟຟ້າໃຫ້ລາວຢືມ ໗ ເມກາວັດ ແຕ່ຕາມຢູ່ໃນສະພາບຕົວຈິງແລ້ວ ໄທໃຫ້ຢືມແຕ່ພຽງ ໕ ເມກາວັດ)

ປັດຈຸບັນນີ້ກະແສໄຟຟ້າທັງໝົດ ກໍຍັງບໍ່ພໍກັບຄວາມຕ້ອງການ ທັງໆທີ່ກົມໄຟຟ້າລາວພຍາຍາມຍົກຣະດັບການຜລິດຂຶ້ນຢູ່ກໍດີ ສະພາບດັ່ງກ່າວນີ້ ຈະຕ້ອງດຳເນີນໄປຈົນວ່າການສ້າງເຂື່ອນສົມສຸດລົງ ຈຶ່ງຈະມີການປ່ຽນແປງ ໂດຍສະເພາະຢູ່ວຽງຈັນ.

ນອກນັ້ນໄຟຟ້າບາງແຫ່ງ ອາທິເຊັ່ນຢູ່ໃນວຽງຈັນ ແລະຫລວງພຣະບາງນັ້ນເກົ່າແກ່ຫລາຍແລະຊຳຣຸດບໍ່ມີສມັຖພາບພຽງພໍອີກດ້ວຍ ແຕ່ວ່າໄດ້ກະການສ້ອມແປງແລ້ວ ໃນບາງບ່ອນກໍລົງມືດຳເນີນງານແລ້ວ.

<u>ໂຄງການສຳຣັບປີ ໑໙໗໐-໗໑</u>

ໂຄງການໃຫຍ່ທີ່ ໔ ຂອງແຜນພັທນາສ່ວນໂຮມແຫ່ງຊາດ ໄດ້ກະສ້າງໂຮງໄຟຟ້າທີ່ຈະສາມາດ :

- ໃຫ້ພລັງໄຟຟ້າສຳຣັບການສ້າງເຂື່ອນນ້ຳງື່ມ
- ໃຫ້ກະແສໄຟຟ້າແກ່ນະຄອນວຽງຈັນ.
- ຮັບປະກັນຖ້າຫາກວ່າມີການເດີນບໍ່ສະດວກຢູ່ເຂື່ອນນ້ຳງື່ມ (ຈັກຜລິດໄຟມີການຕິດຂັດ) ແຕ່ວ່າຈົນເຖິງປັດຈຸບັນນີ້ ຍັງບໍ່ທັນມີເງິນມາດຳເນີນງານສຳຣັບໂຄງການນີ້.

ຍັງບໍ່ທັນມີເງິນມາດຳເນີນງານສຳຣັບໂຄງການນີ້ ແລະຄົງຈະໄດ້ຄອງຖ້າອີກດົນ, ຂນະທີ່ຄອງຖ້ານີ້ແມ່ນໄດ້ໃຊ້ພລັງໄຟຟ້າຈາກປະເທດໄທ.

<u>ການດັດແປງແລະຂຍາຍໂຮງໄຟຟ້າຕ່າງໆ</u>.

ໃນໄລຍະປະຕິບັດແຜນ ໑໙໖໙–໗໐ ນີ້ ຢູ່ປາກເຊ, ປາກຊ່ອງ ສວັນນະເຂດແລະທ່າແຂກ ກໍໄດ້ມີການປັບປຸງໂຮງໄຟຟ້າແລ້ວ ພ້ອມດຽວກັນເຂື່ອນເຊລະບຳແລະໂຮງຜລິດກະແສໄຟຟ້າສຳຣັບລ້ຽງເມືອງປາກເຊກໍໄດ້ຮັດແລ້ວ ພ້ອມນັ້ນກໍໄດ້ລົງມືສ້າງເຂື່ອນໄຟຟ້ານ້ຳຕົກຢູ່ນ້ຳດົງ ເພື່ອສົ່ງກະແສໄຟຟ້າໃຫ້ນະຄອນຫລວງພຣະບາງ, ການສ້າງເຂື່ອນໄຟຟ້ານ້ຳຕົກຢູ່ນ້ຳງື່ມ ເພື່ອສົ່ງໄຟຟ້າໃຫ້ນະຄອນວຽງຈັນ ແລະປະເທດໄທກໍດຳເນີນໄປຢ່າງດີ.

ໃນປີ ໑໙໗໐–໗໑ ກໍຈະດຳເນີນກິຈການທີ່ຍັງຄ້າງຄາຢູ່ນັ້ນຕໍ່ໄປ ຕລອດທັງການດັດແປງ ແລະຂຍາຍໂຮງໄຟຟ້າໃນເຂດເທສບານອື່ນໆ.

<u>ເຂື່ອນໄຟຟ້ານ້ຳຕົກຢູ່ນ້ຳດົງ (ຫລວງພຣະບາງ)</u> ຈະຕ້ອງໃຊ້ວຽກໄດ້ໃນເດືອນ ມີນາ ໗໑.

<u>ເຂື່ອນນ້ຳງື່ມ</u> : ຈະຕ້ອງແລ້ວໃນທ້າຍປີ ໑໙໗໑ ແລະແຫ່ງຜລິດໄຟຟ້າ ໜ່ວຍທີ່ ໜຶ່ງ (໓໐ ເມກາວັດ) ຈະຕ້ອງຕັ້ງຕົ້ນປະຕິບັດງານໃນປີ ໑໙໗໔, ແຕ່ວ່າ ຣັຖບານລາວມີຈຸດປະສົງຢາກເພີ່ມປຣິມານຄວາມແຮງຂອງໄຟຟ້າຂຶ້ນອີກ ໃຫ້ຫລາຍກວ່າທີ່ໄດ້ກະໄວ້ ໝາຍຄວາມວ່າໃນທ້າຍປີ ໑໙໗໔ ຈະໄດ້ເຂື່ອນໄຟຟ້ານ້ຳຕົກຢູ່ນ້ຳງື່ມ ມີສມັຖພາບຜລິດໄຟຟ້າໄດ້ເຖິງ ໑໓໔ ເມກາວັດ.

<u>ການຂຍາຍແລະດັດແປງໂຮງໄຟຟ້າຢູ່ຫລວງພຣະບາງ</u> : ຈະໄດ້ລົງມືໃນປີ ໑໙໗໐ ເວລາດຽວກັນ ກໍຈະມີການ <u>ຂຍາຍແລະດັດແປງໂຮງໄຟຟ້າຢູ່ວຽງຈັນ</u>. ໂດຍການຢືມທຶນ ເທື່ອທີ່ສອງ ຈາກເຢີຣະມັນເນື່ອງຈາກການເຫຼົ້ານສົ້ນສູດສົງ ເມືອງໃຫຍ່ໃນລາວກໍຈະມີ ໂຮງໄຟຟ້າໃໝ່ດ້ວຍ ປຣິມານອັນພຽງພໍແລະສນອງຄວາມຕ້ອງການໄດ້ຢ່າງ ໑໐ ປີ ເຄື່ອງຈັກເກົ່າທີ່ເອົາອອກຈາກໂຮງໄຟຟ້າວຽງຈັນ, ຫລວງພຣະບາງ ແລະປາກເຊນັ້ນ ບາງທີກໍຈະໄວ້ໃຊ້ເວລາຈັກໃໝ່ຕິດຂັດ ຫຼືວ່າຈະສົ່ງໄປເມືອງອື່ນ ທີ່ບໍ່ມີໄຟຟ້າພຽງພໍ ຄືສວັນນະເຂດ, ທ່າແຂກ, ຈຳປາສັກ, ຄົງເຊໂດນ ແລະໄຊຍະບູຣີ ແລ້ວແຕ່ຄວາມສາມາດຂອງກົມໄຟຟ້າລາວ.

ເງິນທີ່ເອົາມາລົງທຶນໃນກິຈການນີ້ ບໍ່ໄດ້ກ່ຽວຂ້ອງກັບງົບປະມານແຫ່ງຊາດ. ແມ່ນເງິນທຶນໝູນວຽນພາຍໃນຂອງ ຟ.ຟ.ລ. ເງິນຊ່ວຍເຫຼືອ ຫຼືວ່າເງິນກູ້ຢືມຈາກຕ່າງປະເທດ ຟ.ຟ.ລ. ສາມາດອວດອ້າງໄດ້ວ່າ ຣັຖບໍ່ໄດ້ເສັຽຫຍັງ ທາງດ້ານເງິນຄຳໃນກິຈການ ຂນະນີ້, ແຕ່ກົງກັນຂ້າມ ກະຊວງກົມຕ່າງໆຂອງຣັຖ, ຊ້ຳພັດຕິດໜີ້ ຟ.ຟ.ລ.ຮອດ ໔໐໐ ລ້ານກີບ ຈະເປັນການເໝາະສົມທີ່ສຸດ ຖ້າຣັຖຈະສະແດງຕົນເປັນລູກຄ້າ ທີ່ດີກວ່ານີ້ ໂດຍການຊຳຣະໜີ້ສິນທັງໝົດ ເພື່ອຈະໃຫ້ ຟ.ຟ.ລ. ໄດ້ມີທຶນໝູນວຽນຫລາຍຂຶ້ນ.

໑໔໔. <u>ໂຄງການຕ່າງໆ ຂອງກອງປະຊຸມພລັງງານ</u>.

ໂຄງການໃຫຍ່ ເລກທີ ໑ :	ກອງປະຊຸມ : ພລັງງານ ພແນກການ : ອົງການລາວພັທນາແມ່ນ້ຳຂອງ
ຊື່ໂຄງການ	ໂຄງການນ້ຳງື່ມ

ນຶ່ງ : ຂໍ້ມູນທົ່ວໄປ

ກ. ຈຸດມຸ່ງຫມາຍ : ເພື່ອຜລິດພລັງໄຟຟ້າ ທີ່ມີຄວາມແຮງເຖິງ ໑໓໕.໐໐໐ ກິໂລວັດ.

ຜລິດພລັງໄຟຟ້າປຣິມານປະຈຳປີ ໖໐໐ ລ້ານ ກິໂລວັດຊົ່ວໂມງ.

- ເພື່ອຄວາມສະດວກໃນການຊົລປະທານ (ຖ້າສູບນ້ຳກໍໃຊ້ພລັງໄຟຟ້ານີ້ ເພື່ອຄວາມສະດວກ) ທົ່ງວຽງຈັນ ທີ່ມີຫນາພຽງເຖິງ ໑໖໐.໐໐໐ ເຮັກຕາ.
- ເພື່ອຈັດຣະດັບກະແສນ້ຳໃນລຳນ້ຳງື່ມ.

ກວດອັນຣະດັບຂອງນ້ຳ

ສົ່ງເສີມຄວາມສະດວກ ໃນການເດີນເຮືອທາງຕອນໃຕ້ເຂື່ອນ.

- ເພື່ອສ້າງອ້າງເກັບນ້ຳ ທີ່ມີຫນ້າພຽງ ໓໗໐ ຕາຣາງກິໂລແມດ
- ເພື່ອການລ້ຽງປາແລະທ່ອງທ່ຽວ.

ຂ. ບົດຊີ້ແຈງ

ສຳຣັບປີ ໑໙໗໐-໗໑

- ດຳເນີນການກໍ່ສ້າງເຂື່ອນ
- ລົງມືທຳການຕິດຕັ້ງເຄື່ອງຈັກຜລິດໄຟຟ້າສອງຫນ່ວຍທຳອິດ ຫນ່ວຍລະ ໑໕ ເມກາວັດ. ແລະສ້າງສຖານີປ່ຽນແປງພລັງໄຟຟ້າ ກອນຈະແຈກຢາຍກະແສໄຟຟ້າ.
- ການຕິດຕັ້ງເຄື່ອງຈັກກົນຕ່າງໆ.

ຄ. ຂໍ້ມູນອື່ນໆ : ວຽກການກ່ຽວກັບການຕິດຕັ້ງເພີ່ມຕື່ມ ໂດຍເອົາເຄື່ອງອຸປະກອນຕ່າງໆ ເຂົ້າໃສ່ຈະໄດ້ເຣີ່ມຕົ້ນແຕ່ປີ ໑໙໗໑ ແລະຈະແລ້ວເຣັດສຳຣັບຣະດັບທີ່ນຶ່ງ ໃນຕົ້ນປີ ໑໙໗໔ ແລະສຸດທ້າຍນັ້ນກະວ່າໃນທ້າຍປີ ໑໙໗໔.

ງ. ຄ່າໃຊ້ຈ່າຍແລະແຫຼ່ງການເງິນ :

ຄ່າໃຊ້ຈ່າຍສຳຣັບ ໑໙໗໐-໗໑ ໄດ້ກະໄວ້ໃນຣະຫວ່າງ ໔໖໖.໐໐໐.໐໐໐ ກີບ

ແລະ ໖.໑໑໕.໐໐໐ ໂດລາ

ແຫລ່ງຂອງທຶນ :

໑. ສຳຣັບການຕິດຕັ້ງເຄື່ອງຜລິດພລັງໄຟຟ້າ ໓໐ ເມກາວັດນີ້ ແມ່ນກອນທຶນນ້ຳງື່ມຊຶ່ງແມ່ນການຊ່ວຍເຫຼືອຈາກ ໙ ປະເທດຄື: ອົສຕຣາລີ ການາດາ ດານມາກ ສຫະຣັດອະເມຣິກາ ປະເທດຝຣັ່ງເສດ, ປະເທດຍີ່ປຸ່ນ ນູແວນເຊລັງ ໂຮລັງ ແບນຊິກ ແລະໄທ ມີເງິນຢູ່ ໑໔ ໂກດ ໙໙໘ ລ້ານກີບ.

໒. ເງິນທີ່ຈະຊອກຫາ ສຳຣັບການຕິດຕັ້ງເຄື່ອງຜລິດພລັງໄຟຟ້າອີກ ໓ ໜ່ວຍ ສາມາດຜລິດໄດ້ໜ່ວຍລະ ໓໕ ເມກາວັດນີ້ ອາດຈະແມ່ນຢູ່ໃນແບບກູ້ຢືມ ເພາະແມ່ນໂຄງການທີ່ໝັ້ນຄົງແລະທຶນທ່ຽວກະໃນຣະຫວ່າງ ໗ ໂກດ ໗໐໐ ລ້ານກີບ.

ສອງ : <u>ປະຕິທິນດຳເນີນງານ</u>

ດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກວັນທີ ໓໐/໖/໗໑
໑. ຊອກຫາເຄື່ອງປະກອບຕ່າງໆຄື ດິນ, ຫີນ, ຊາຍ, ແລະອື່ນໆ.	---		----	--------	---	
໒. ຊ່າງ, ຂີ້, ແລະຄອນອັດເຂື່ອນ					----	----
໓. ສ້າງຄູກັ້ນນ້ຳ	----					
໔. ເອົາເປີ້ງໃສ່ເຂື່ອນ	------	------	------	------	------	------
໕. ເປົ່ງນ້ຳອອກ	------	------	------	------	---	
໖. ຝັງທໍ່ຮັບນ້ຳແລະທໍ່ບັງຄັບນ້ຳ ໑໕ ແລະ ໓໕ ກິໂລວັດ				----	------	------
໗. ໃສ່ເປີ້ງແລະດຳເນີນງານສະຖາປານິກ	--	------	------	------	------	------
໘. ຕິດຕັ້ງເຄື່ອງຜລິດໄຟຟ້າແລະເຄື່ອງປ່ຽນແປງພລັງໄຟຟ້າ			----	------	------	------
໙. ຂຸດຂຸມສຳຣັບວາງພື້ນຖານຂອງຮ່ອງສຳຣັບໃຫ້ນ້ຳເຫຼືອຈາກເຂື່ອນໄຫຼ			----	----	---	
໑໐. ຖອກຊີມັງບ່ອນຣະບາຍນ້ຳ	---	------	------	------	------	
໑໒. ຖອກເຄື່ອງໃຊ້ແລະທຳຄວາມສະອາດ						------

ສາມ : ແຍກສ່ວນປະກອບຣາຄາ ແລະການຈັດສັນທຶນ

	ຄ່າໃຊ້ຈ່າຍ	ແຫຼ່ງຂອງທຶນ
໑. ສຳຣັບຜແນກຄວບຄຸມແລະປົກຄອງ		
- ຄ່າພະນັກງານ	໒໒໐.໐໐໐.໐໐໐	
- ຄ່າອື່ນໆ	໕໕.໐໐໐.໐໐໐	
໒. ສຳຣັບການກໍ່ສ້າງ-ການຕິດຕັ້ງ		
ກ. - ຄ່າເຄື່ອງອຸປກຣນ	໓໐໐.໐໐໐.໐໐໐	ທຶນນ້ຳງື່ມ
- ຄ່າແຮງງານ	໕໐໐.໐໐໐.໐໐໐	
- ຄ່າຂົນສົ່ງ	໑໐໕.໐໐໐.໐໐໐	
- ຄ່າອື່ນໆ	໗໐.໐໐໐.໐໐໐	
ຂ. ສຳຣັບຊີມັງ		
-ຄ່າອຸປກອນ	໗໕໐.໐໐໐.໐໐໐	
-ຄ່າຂົນສົ່ງ	໑໓໐.໐໐໐.໐໐໐	
ຄ. ສຳຣັບເຄື່ອງອຸປກອນ		
- ຄ່າເຄື່ອງອຸປກອນ	໒໕໕.໐໐໐.໐໐໐	
- ຄ່າຂົນສົ່ງ	໓໕.໐໐໐.໐໐໐	
- ຄ່າແຮງງານ	໙໐,໐໐໐.໐໐໐	
- ຄ່າອື່ນໆ	໑.໐໐໐.໐໐໐	
ງ. ສຳຣັບທີ່ບັງຄັບນ້ຳແລະປະຕູນ້ຳ		
- ຄ່າເຄື່ອງອຸປກອນ	໒໐໐.໐໐໐.໐໐໐	
- ຄ່າຂົນສົ່ງ	໙໗.໕໐໐.໐໐໐	
- ຄ່າແຮງງານ	໙໐.໐໐໐.໐໐໐	
- ຄ່າອື່ນໆ	໕.໐໐໐.໐໐໐	
ໂຮມ	໙.໕໒໙.໕໐໐.໐໐໐.	

ໂຄງການ ໃຫຍ່ເລກທີ ໓	ກອງປະຊຸມ : ພລັງໄຟຟ້າ ພແນກການ : ກົມໄຟຟ້າ
ຊື່ໂຄງການ : ໂຄງການສ້າງໄຟຟ້າທົ່ວພຣະຣາຊອານາຈັກລາວ	

ສຳຣັບປີ ໑໙໗໐-໗໑ ນີ້ ແຜນການສ້າງໄຟຟ້າໄດ້ແບ່ງເປັນສາມໂຄງການຄື :

໑. ຈັດໂຮງໄຟຟ້າແລະເຄື່ອງຈັກໃໝ່ທີ່ຫລວງພຣະບາງ.

໒. ຕັ້ງຕົ້ນລົງມືຕິດຕັ້ງເຄື່ອງຈັກໃໝ່ທີ່ວຽງຈັນ.

໓. ດຳເນີນງານຂັ້ນສຸດທ້າຍ ການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຢູ່ນ້ຳດົງ.

໔. ຕິດຕັ້ງໂຮງໄຟຟ້າໃໝ່ຢູ່ສວັນນະເຂດ.

໑. <u>ການດັດແປງແລະຂຍາຍໂຮງໄຟຟ້າຫລວງພຣະບາງ.</u>

ນຶ່ງ : <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍ</u> : ປະສົມກັບພລັງໄຟຈາກເຂື່ອນໄຟຟ້ານ້ຳດົງ ການຈັດເຄື່ອງຈັກໃໝ່ຄົງຈະນຳຄວາມພໍໃຈໃຫ້ນະຄອນຫລວງພຣະບາງ ກ່ຽວກັບຄວາມຕ້ອງການ ພລັງໄຟຟ້າໃນຂອບເຂດກຳແພງນະຄອນພາຍໃນ ໑໐ ປີ.

ຂ. <u>ບົດຊີ້ແຈງ</u> : ເອົາເຄື່ອງຈັກໃໝ່ມາໃສ່ແທນໜ່ວຍເກົ່າພ້ອມທັງສາຍໄຟ ທີ່ມີຄວາມແຮງຂນາດກາງ ໓.໓໐໐ ໂວນ ແລະສາຍໄຟທີ່ມີພລັງຂນາດຕ່ຳ ໒໒໐/໒໘໐ ໂວນ ສາມຣະດັບ.

ຄ. <u>ຂໍ້ມູນອື່ນໆ</u> : ວຽກການຕ່າງໆຈະລົງມືດຳເນີນງານໃນຕົ້ນເດືອນ ກໍຣະກະດາ ໑໙໗໐ ແລະຈະແລ້ວທ້າຍເດືອນ ທັນວາ ໑໙໗໐.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

- ຄ່າໃຊ້ຈ່າຍທັງໝົດ ມີຢູ່ ໒໐໓ ລ້ານກີບ ແມ່ນເງິນກູ້ຢືມຈາກປະເທດເຢັຣະມັນຕາເວັນຕົກ (ຢືມຄັ້ງທີ່ນຶ່ງ ໑໓.໕໐໐.໐໐໐ ມາກ) ໃຊ້ສຳຣັບການຂຍາຍໂຮງໄຟຟ້າໃນແຂວງແລະໂຮງໄຟຟ້າໃໝ່ ຢູ່ໂສກປ່າຫລວງ.

ສອງ: ປະຕິທິນການດຳເນີນງານ

ການດຳເນີນງານ	ກອນວັນ ທີ ໑/໗/໗໑	໑ ໙ ໗ ໐ - ໑ ໙ ໗ ໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒
໑. ຂົນຍ້າຍເຄື່ອງອຸປກອນທີ່ ວ.ຈ.	----				
໒. ຂົນສົ່ງໄປຫລວງພຣະບາງ	-----				
໓. ເອົາເຄື່ອງອຸປກອນສຳຣັບປ່ຽນແປງພລັງໄຟຟ້າເຂົ້າໃສ່ຕາມຮູບໂຄງການ		-----	-----		
໔. ຝັງເສົາໄຟຟ້າ		-------	-------		
໕. ເບັ້ງສາຍໄຟ		-----	-------		
໖. ມ້າງໂຮງຈັກໄຟຟ້າເກົ່າ			-----	-----	
໗. ເສົາໄຟຟ້າໃຫມ່ໃສ່ແລະຈ່າຍສາຍໄປແຈກຈ່າຍໄຟຕາມຄວາມຕ້ອງການຂອງພົລເມືອງ			-----	-----	

ສາມ : ແຍກສ່ວນປະກອບຣາຄາ ແລະການຈັດສັນທຶນ

	ຄ່າໃຊ້ຈ່າຍ	ແຫລ່ງການເງິນ
໑. ເງິນລົງທຶນ		
- ເຄື່ອງອຸປກອນ ການຕິດຕັ້ງ	໒໐໖.໐໐໐.໐໐໐	ຢືມຈາກເຢັຣະມັນ
໒. ການສຶກສາຄົ້ນຄວ້າ (ໄດ້ຮັດມາແລວ)	໑໕.໐໐໐.໐໐໐	ຢືມຈາກເຢັຣະມັນ
໓. ຄ່າດຳເນີນງານ		
- ການດຳເນີນກິຈການດ້ານນີ້ຈະແມ່ນພວກພະນັກງານ ຂອງກົມໄຟຟ້າເອງ ເປັນຜູ້ຮັບພາຣະ		ຟ.ຟ.ລ.
ໂ ຣ ມ	໒໒໑.໐໐໐.໐໐໐	

ໂຄງການ ທີ ໒ : ຕິດຕັ້ງໂຮງຈັກໄຟຟ້າໃໝ່ຢູ່ວຽງຈັນ.

ນຶ່ງ: <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍ</u> : ເພື່ອອຳນວຍຄວາມສະດວກ ໃນການຈຳໜ່າຍພລັງໄຟຟ້າ ທີ່ມາຈາກເຂື່ອນນ້ຳງື່ມ ແລະເພື່ອຕອບສນອງຄວາມຮຽກຮ້ອງຕ້ອງການ ຂອງພົລເມືອງໃນເຂດເທສບານ ແລະເຂດອ້ອມແທສບານວຽງຈັນ.

ຂ. <u>ບົດຊີ້ແຈງ</u> : ຕິດຕັ້ງເຄື່ອງໃໝ່ໝົດ ດ້ວຍສາຍໄຟທີ່ມີຄວາມແຮງຂນາດກາງ ໑໕.໐໐໐ໂວນ ແລະ ໒໒.໐໐໐ໂວນ ແລະຂນາດຕ່ຳ ໒໒໐/໒໘໐ ໂວນສາມຣະດັບ(ດ້ວຍອຸປກອນເຢີຣະມັນ)

ຄ. <u>ຂໍ້ມູນອື່ນໆ</u> : ວຽກການນີ້ ກະວ່າຈະດຳເນີນຕໍ່ໄປຈົນເຖິງ ໑໙໗໑-໗໒ ກິຈການພາກທີ່ນຶ່ງນີ້ ໄດ້ກະໃສ່ແຕ່ໃນເຂດເທສບານວຽງຈັນ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> ,

- ຄ່າໃຊ້ຈ່າຍ ສຳຣັບພາກທີ່ນຶ່ງ ໑.໘໕໐ ກີບ
- ໘໑໐ ລ້ານກີບ ຢືມຈາກເຢີຣະມັນ
- ໘໐໐ ລ້ານກີບ ກຳລັງຂໍຢືມຈາກເຢີຣະມັນ
- ໑໕໐ ລ້ານກີບ ຢືມຈາກປະເທດຝຣັ່ງ

໘໐. ລ້ານກີບ ເງິນທຶນໝູນວຽນຂອງກົມໄຟຟ້າລາວ.

ສອງ : <u>ປະຕິທິນການດຳເນີນງານ</u>.

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງຈາກວັນທີ ໓໐/໖/໗໑
໑. ການສຶກສາຄົ້ນຄວ້າ	------					
໒. ປະກາດການປະມູນ		--------				
໓. ສັ່ງເຄື່ອງອຸປກອນ			------			
໔. ດຳເນີນວຽກການ				--------	--------	--------
໕. ວຽກການຂຍາຍກິຈການໃໝ່						------

ສາມ : ແຍກສ່ວນປະກອບຣາຄາ ແລະການຈັດສັນທຶນ .

	ຄ່າໃຊ້ຈ່າຍ	ແຫຼ່ງຂອງທຶນ
ກ. ເງິນລົງທຶນ	໑.໘໕໐.໐໐໐.໐໐໐	
- ອຸປກອນແລະການຕິດຕັ້ງ	໘໑໐.໐໐໐.໐໐໐	(ຢືມເທື່ອທີ່ສອງຈາກເຢັຣະມັນ)
	໘໑໐.໐໐໐.໐໐໐	ກຳລັງຕິດຕໍ່ຢືມຈາກເຢັຣະມັນ
	໑໕໐.໐໐໐.໐໐໐	ຢືມຈາກປະເທດຝຣັ່ງ
	໘໐.໐໐໐.໐໐໐	ເງິນທຶນໝູນວຽນຂອງກົມໄຟຟ້າ
ຂ. ການສຶກສາຄົ້ນຄວ້າ	໑໓໐.໐໐໐.໐໐໐	ການຊ່ວຍເຫຼືອຈາກເຢັຣະມັນ
ຄ. ການດຳເນີນງານ: ການດຳເນີນກິຈການນີ້ແມ່ນພະນັກງານກົມໄຟຟ້າເອງ ເປັນຜູ້ຮັບພາຣະ		
ໂ ຣ ມ	໑.໙໘໐.໐໐໐.໐໐໐	

ໝາຍເຫດ : ຕາຕຣາລົ້ມ ບັນຈຸພາກທີ່ນຶ່ງທັງໝົດຂອງໂຄງການ ສ່ວນການສຶກສາຄົ້ນຄວ້ານັ້ນໄດ້ເຮັດມາແລ້ວແຕ່ສົກ ປີ ໑໙໖໙- ໗໐ ການຕິດຕັ້ງນັ້ນຈະດຳເນີນຕໍ່ໄປອີກໃນສົກ ໑໙໗໑-໗໔.

24/VII
ຫ້າມຈຳໜ່າຍ

ໂຄງການ ທີ ໖ : ດຳເນີນການກໍ່ສ້າງຂັ້ນສຸດທ້າຍຂອງໂຄງການນ້ຳດົງ

ນຶ່ງ; <u>ຂໍ້ມູນທົ່ວໄປ</u> .

ກ. <u>ຈຸດມຸ່ງໝາຍນີ້</u> : ແມ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ນະຄອນຫລວງພຣະບາງ ກ່ຽວກັບຄວາມຕ້ອງການດ້ານພລັງໄຟຟ້າ ແລະຕລອດເຖິງການຊົລປະທານ.

ຂ. <u>ບົດຊີ້ແຈງ</u> : ສູນກາງໄຟຟ້ານ້ຳຕົກນີ້ ປະກອບດ້ວຍຈັກຜລິດໄຟຟ້າ ໖ ໜ່ວຍສາມາດຜລິດໄຟຟ້າໄດ້ໜ່ວຍລະ ໔໐໐ ກິໂລວັດ ເຂື່ອນນີ້ມີລວງສູງ ໗ ແມດ ລວງຍາວ ໓໐ ແມດ ແລະມີສາຍໄຟຕິດຕໍ່ຣະວ່າງສູນກາງແລະນະຄອນຫລວງພຣະບາງ ໂດຍຄວາມແຮງຂນາດກາງ ໖.໖໐໐ ໂວນ.

ຄ. <u>ຂໍ້ມູນອື່ນໆ:</u> ໂຄງການນີ້ ໄດ້ດຳເນີນມາຫລາຍປີແລ້ວ ຕັ້ງຕົ້ນລົງມືດຳເນີນງານແຕ່ປີ ໑໙໖໖ ແລະກະວ່າຈະແລ້ວໃນຕົ້ນປີ ໑໙໗໑.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

- ຄ່າໃຊ້ຈ່າຍທັງໝົດ : ໗໖໔.໐໐໐.໐໐໐ ກີບ

  ຄ່າໃຊ້ຈ່າຍ ໑໙໗໐-໗໑ (ນຶ່ງສ່ວນສີ່ຂອງຄ່າໃຊ້ຈ່າຍທັງໝົດ)

  ຢືມຈາກປະເທດຝຣັ່ງ : ໔໕໗.໐໐໐.໐໐໐ ກີບ.

  ເງິນຊ່ວຍເຫຼືອຈາກປະເທດຝຣັ່ງ ໑໔໐.໐໐໐.໐໐໐ ກີບ

  ເງິນທຶນໝູນວຽນຂອງກົມໄຟຟ້າລາວ : ໖໘໗.໐໐໐.໐໐໐ ກີບ.

ສອງ : ປະຕິທິນການດຳເນີນງານ.

ການດຳເນີນງານ	ກ່ອນວັນທີ ໑/໗/໗໑	໑ ໙ ໗ ໐ - ໑ ໙ ໗ ໑				ຫຼັງຈາກວັນທີ ໓໐/໖/໗໑
		ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	
໑. ການກໍ່ສ້າງເຂື່ອນ	---+---	---+---				
໒. ການກໍ່ສ້າງບ່ອນຕິດຕັ້ງເຄື່ອງຈັກ	--+---	--+---				
໓. ການວາງທໍ່ບັງຄັບນ້ຳ		---+---	---+---			
໔. ຂົນເຄື່ອງອຸປະກອນໄປຍັງເຂື່ອນ	---+-----	-----+-----	------			
໕. ຕິດຕັ້ງເຄື່ອງຈັກຜລິດໄຟຟ້າ			-----+	---------+		
໖. ເຄື່ອງອຸປະກອນສຳລັບໄຟຟ້າ			-----+	---------+		
໗. ສ້າງສາຍສົ່ງຂະໜາດ ໖,໖ກິໂລໂວນ			---+---	---		
໘. ທົດລອງ				+--------+		
໙. ໃຊ້ການໄດ້					-------->	

ສາມ : ແຍກສ່ວນປະກອບ ຣາຄາແລະການຈັດສັນທຶນ

	ຄ່າໃຊ້ຈ່າຍ	ແຫລ່ງຂອງທຶນ
໑. ສຶກສາຄົ້ນຄວ້າ ຕິດຕັ້ງພ້ອມດ້ວຍວຽກການອື່ນໆ	໑໒໐.໐໐໐.໐໐໐	ເງິນຊ່ວຍເຫຼືອຈາກປະເທດຝຣັ່ງ
໒. ເຄື່ອງອຸປະກອນແລະຄ່າຂົນສົ່ງ	໒໓໐.໐໐໐.໐໐໐	ຢືມຈາກປະເທດຝຣັ່ງ
໓. ສາຍໄຟ ເຄື່ອງແຍກໄຟແລະອຸປະກອນກ່ຽວເຣື່ອງນີ້	໒໗.໐໐໐.໐໐໐	- " -
໔. ວຽກການກໍ່ສ້າງ	໓໔໐.໐໐໐.໐໐໐	ທຶນໝູນວຽນຂອງກົມໄຟຟ້າ
໕. ຊື້ເສົາແລະການຕິດຕັ້ງ	໔໗.໐໐໐.໐໐໐	- " -
໖. ຄ່າດຳເນີນງານໃນຂັ້ນຕໍ່ໄປໂດຍພະນັກງານໄຟຟ້າລາວ		ກົມໄຟຟ້າລາວ
ໂ ຣ ມ	໗໖໔.໐໐໐.໐໐໐	

໑໕໐. <u>ກອງປະຊຸມພື້ນຖານເສດຖກິດ</u>

໑໕໑. <u>ຄຳແນະນຳເບື້ອງຕົ້ນ</u>

໑. <u>ຂໍ້ມູນທົ່ວໄປ</u> ກອງປະຊຸມພື້ນຖານເສດຖກິດນີ້ ປະກອບດ້ວຍການຂົນສົ່ງ. ການໂທຣະຄົມມາ-ຄົມການອຸຕຸນິຍົມວິທຍາ, ການແທກຣະດັບຕາດິນເພື່ອເຮັດແຜນທີ່ ແລະການເທສບານ.

ພຣະຣາຊອານາຈັກລາວ ມີຄວາມຕ້ອງການອັນຮີບດ່ວນ ໃນການພັທນາພື້ນຖານເສດຖກິດ ເພື່ອເປັນພື້ນຖານທີ່ຈະໃຫ້ຄວາມສະດວກແລະວ່ອງໄວ ໃນການຂຍາຍການອຸດສາຫະກັມ, ການຄ້າແລະການແລກປ່ຽນຕ່າງໆ. ໂຄງການຂອງກອງປະຊຸມພື້ນຖານເສດຖກິດນີ້ ບໍ່ມີຄວາມທ່ຽງຕົງ ບໍ່ມີຄວາມໃນຕົວຂອງມັນ ແຕ່ຫາກວ່າເປັນສິ່ງຈຳເປັນສຳຣັບການປະຕິບັດງານຂອງໂຄງການອື່ນໆ ທີ່ຈະມີຄວາມຫຸ້ມທ່ຽງ. ການໃຊ້ຈ່າຍໃນຂແນງນີ້ຈະໄດ້ຜົນແຕ່ສຳຣັບເສດຖກິດທົ່ວໄປ ແລະໃນໄລຍະອັນຍາວນານ.

ເນື່ອງດ້ວຍວ່າບໍ່ມີຄວາມແນ່ນອນທາງດ້ານເສດຖກິດ ແລະຄວາມປອດໄພບາງທ້ອງຖິ່ນ ໃນພຣະ-ຣາຊອານາຈັກ, ການພັທນາດ້ານພື້ນຖານເສດຖກິດ ຈຶ່ງດຳເນີນໄປບໍ່ສມ່ຳສເມີ ແລະປະສົມປະສານໄດ້ດີ. ບາງທ້ອງຖິ່ນໃນປະເທດ ຈຳເປັນຕ້ອງໄດ້ປະລະໄວ້ເສັຽກ່ອນ ແລະຈຳເປັນຕ້ອງໄດ້ພະຍາຍາມເປັນພິ-ເສດ ປະຕິບັດງານແຕ່ໃນລາງແຫ່ງ ຊຶ່ງເຫັນວ່າຈະເປັນປໂຍດ ແລະຈະບໍ່ຖືກທຳລາຍ.

໒. <u>ຂໍ້ມູນສຳຣັບຂແນງຕ່າງໆຂອງກອງປະຊຸມ</u> :

ກ. <u>ຂົນສົ່ງແລະຄົມມາຄົມ</u>

ກົມທາງຫລວງແຫ່ງຊາດ ໄດ້ພະຍາຍາມດຳເນີນງານຕາມຣະດັບຄວາມສຳຄັນ.

- ສ້ອມແຊມສິ່ງຕ່າງໆທີ່ມີແລ້ວ (ຖນົນຫົນທາງຂົວແລະອື່ນໆ)
- ດັດແປງຖນົນຫົນທາງທີ່ມີຄວາມສຳຄັນໃຫ້ດີຂຶ້ນ
- ຂຍາຍແລະເຮັດທາງໃໝ່

ສຳຣັບປີ ໑໙໗໐-໗໑ ນີ້ ທຶນປະສົມຢູເສດແລະຣັຖບານລາວ ໄດ້ເພີ່ມຂຶ້ນອີກ ໑໐%. ສ່ວນຂອງຣັຖບານລາວໄດ້ກາຍຈາກ ໑໐໐ ລ້ານເປັນ ໑໑໐ ລ້ານ. ແຕ່ວ່າເງິນເຫລົ່ານີ້ກໍຍັງບໍ່ພຽງພໍ ສຳຣັບວຽກການທີ່ຈຳເປັນ. ກົມທາງຫລວງແຫ່ງຊາດພະຍາຍາມດັດແປງເສັ້ນທາງຕິດຕໍ່ ແຕ່ເໜືອເຖິງໃຕ້ (ຖນົນເລກທີ ໑໓) ຄືປູຢາງ ໑໕ ຫລັກກິໂລແມດໃນເສັ້ນທາງແຕ່ວຽງຈັນທາໂພນໂຮງ ແລະຈະສ້າງທາງຣະຫວ່າງທາລາດປາກກະຍຸງໃຫ້ແລ້ວ.

ນອກນັ້ນ ຣັຖບານຣາຊອານາຈັກ ຍັງໄດ້ພະຍາຍາມຊອກຫາຊ່ອງທາງເພື່ອສ້າງຂົວຂ້າມນ້ຳຂອງຣະຫວ່າງທານາແລ້ງ ໜອງຄາຍ ແລະຂົວຂ້າມນ້ຳງື່ມແລະນ້ຳກະດິງ ຄ່າໃຊ້ຈ່າຍຕ່າງໆສຳຣັບໂຄງການນີ້ຈະໄດ້ຊອກຫາອີກດ້ານນຶ່ງ ຣັຖບານຍັງພະຍາຍາມໃຫ້ມີເສັ້ນທາງຕິດຕໍ່ ຣະຫວ່າງສວັນນະເຂດກັບທ່າເຮືອດານັງ ໂດຍຜ່ານຊ່ອງລາວບາວ. ເສັ້ນທາງສາຍນີ້ຈະເປັນເສັ້ນທາງທີສອງຂອງລາວ ສຳຣັບການອອກສູ່ທະເລແລະຊ່ວຍໃຫ້ບັນຫາສິນຄ້າຜ່ານແດນເບົາບາງລົງ.

ຂ. <u>ການໂທຣະຄົມມາຄົມ</u>

ໃນຂແນງນີ້ ຈຸດປະສົງສ່ວນໃຫຍ່ແມ່ນເພື່ອຊ່ວຍເຫລືອການພັທນາ ເຂດທີ່ມີຄວາມສຳຄັນ ໂດຍການປະກັນໃຫ້ທາງດ້ານໄປສະນີ ແລະໂທຣະຄົມມາຄົມມີປະສິດທິພາບ.

ກົມໄປສະນີແລະໂທຣະຄົມມາຄົມ ກຳລັງຂຍາຍການໂທຣະສັບໃນນະຄອນວຽງຈັນ ໃຫ້ມີຈຳນວນຈາກ ໙໐໐ ສາຍໃຫ້ເປັນ ໔໐໐໐ ສາຍ ແລະໃຫ້ມີການຕິດຕໍ່ເຫນືອ-ໃຕ້ ຫລວງພຣະບາງ-ວຽງຈັນ ທ່າແຂກ-ສວັນນະເຂດແລະປາກເຊ ພ້ອມທັງໃຫ້ການແບ່ງສາຍຕ່າງໆໄປໃສ່ປະເທດເພື່ອນບ້ານອີກດ້ວຍ.

ໂຄງການນີ້ ປະກອບດ້ວຍ ໑໔ ສາຍຈະຊ່ວຍໃຫ້ຮັບໂຮມສາຍທີ່ຕຳຣວດ, ທະຫານ, ກົມການບິນພົລເຮືອນ, ກົມອຸຕຸນິຍົມວິທຍາ ຕລອດຮອດຢູເສດແລະເຈົ້າຫນ້າທີ່ທະຫານຝຣັ່ງເສດປະຈຳລາວໃຊ້ຢູ່ທຸກວັນນີ້. ໃນຂອບເຂດຂອງການພັທນາທົ່ວວຽງຈັນນີ້ ຍັງໄດ້ພະຍາຍາມດຳເນີນສ້າງໂຮງໄປສນີອິນບົດໃນຫມູ່ບ້ານສຳຄັນຕ່າງໆອີກ (ກະວ່າຈະສ້າງນຶ່ງຫລັງຕໍ່ປີ).

ຄ. <u>ກົມການບິນພົລເຮືອນ</u> ສຳຣັບຜແນກນີ້ເປັນສິ່ງຈຳເປັນທີ່ຈະຕ້ອງພະຍາຍາມພັທນາ ໃນເວລາອັນຮີບດ່ວນ ເພື່ອຊ່ວຍໃນການຈຣາຈອນທາງອາກາດ ເພື່ອໃຫ້ມີການຕິດຕໍ່ ກັນໄດ້ສະດວກທຸກເວລາ ຖ້າຫາກມີການຮັບປະກັນທາງດ້ານຄວາມປອດໄພ. ໂຄງການສ້າງໂທຣະພິມຣະຫວ່າງສູນກາງຕ່າງໆ ພາຍໃນປະເທດ ໄດ້ກະໄວ້ໃນສົກປີ ໑໙໖໙-໗໐ ແລະເວລານີ້ກຳລັງຢູ່ໃນຂັ້ນດຳເນີນງານ.

ກົມການບິນພົລເຮືອນໄດ້ກະວ່າ ຈະໃຫ້ມີການຕິດຕໍ່ຣະຫວ່າງວຽງຈັນ-ບາງກອກໃນສົກ ໑໙໗໐-໗໑ ສຳຣັບວຽງຈັນ-ໄຊ່ງ່ອນນັ້ນ ກະວ່າຈະໃຫ້ໄດ້ລົງມືໃນສົກ ໑໙໗໑-໗໔. ສາຍຕິດຕໍ່ທັງສອງສາຍນີ້ຈະຊ່ວຍໃຫ້ເດີ່ນບິນວຽງຈັນ ໄດ້ຍົກຣະດັບຂອງຕົນຂຶ້ນສູ່ຄວາມສຳຄັນ ໃນເຣື່ອງການຈຣາຈອນທາງອາກາດຣະຫວ່າງປະເທດໃນພາກພື້ນນີ້. ແນໃສ່ຈຸດປະສົງດັ່ງກ່າວນີ້ຣັຖບານຣາຊອານາຈັກ ໄດ້ດຳເນີນຊ່ອງທາງທີ່ຈະຂຍາຍທ່າອາກາສຍານວັດໄຕເພື່ອຈະໃຫ້ໄດ້ເຂົ້າສູ່ຣະດັບສນາມບິນສາກົນໃນປີ ໑໙໗໔ ແລະສາມາດຕ້ອນຮັບເຄື່ອງບິນໄອພົ່ນໄດ້.

ທາງບິນແລ່ນໄດ້ຕໍ່ອອກຈາກ ໔໐໐໐ ເປັນ ໖໐໐໐ ແມດ ໂດຍການຊ່ວຍເຫລືອຈາກຍີ່ປຸ່ນ. ສຳຣັບສົກ ໑໙໗໐-໗໑ ກະວ່າຈະມີຜູ້ຊ່ຽວຊານມາສຳຣວດ ແລະປະມານເບື້ອງຄ່າໃຊ້ຈ່າຍພວກສອງຂອງໂຄງການ. ໃນໂອກາດດຽວກັນກໍ່ຈະໄດ້ຕັ້ງຕົ້ນໃຊ້ເຄື່ອງອຸປກອນການວິທຍາສື່ສານແບບທັນສມັຍ ແລະສ້ອມແປງບ່ອນຮັບສົ່ງຄົນໂດຍສານ ທັງຈະໄດ້ສ້າງສາງໃສ່ເຄື່ອງສິນຄ້າອີກ.

ງ. <u>ກົມການນ້ຳແລະການເດີນເຮືອ</u> ປັດຈຸບັນນີ້ຍັງບໍ່ມີໂຄງການໃດໆ ທັ້ງໆທີ່ວ່າການເດີນທາງນ້ຳກໍ່ເປັນສິ່ງສຳຄັນຢູ່ ສິ່ງທີ່ເຮັດໃຫ້ຄາງຄາດຳເນີນໄປບໍ່ໄດ້ກໍ່ແມ່ນເງິນກອນທຶນບໍ່ພຽງພໍ ປັດຈຸບັນນີ້ກະວ່າຈະພະຍາຍາມສ້າງເຄື່ອງສັນຍານຕາມລຳນ້ຳຂອງ.

ຈ. <u>ເທສບານ</u> ໃນສົກ ໑໙໖໙-໗໐ ໄດ້ສັງເກດເຫັນວ່າ ກົມເຄຫາສະຖານແລະເທສບານ ໄດ້ຮັບພາຣະຫນັກຫລາຍ ໃນຂອບເຂດຂອງເຄື່ອງອຸປກອນອັນຈຳກັດ ຍ້ອນວ່າມີວຽກການອັນຮີບດ່ວນສຳຣັບເວລາສັ້ນ ຜແນກການດັ່ງກ່າວບໍ່ສາມາດກະໂຄງການອັນຍາວນານໄດ້ ສຳຣັບການຈັດຕັ້ງພາຍໃນເຂດເທສ-ບານ.

ຕ້ອງຊອກຫາພາຫະນະໄດ້ພຽງພໍ ແກ່ພະແນກຄະຫະສະຖານແລະເທສບານ ແລະຕ້ອງຫາວິທີການລຶດຜ່ອນກິຈການຂອງພະແນກນີ້ລົງອີກ. ກ່ຽວກັບກຳແພງນະຄອນວຽງຈັນ ພະແນກຣົດນອດໄຟກຳລັງກ້າວຂຶ້ນສູ່ຣະດັບ ແຕ່ວ່າເຣື່ອງການທຳຄວາມສະອາດພາຍໃນກຳແພງນະຄອນນັ້ນ ຍັງບໍ່ທັນມີຊ່ອງທາງໃດວ່າ ຈະໄດ້ເງິນທຶນມາໃຊ້ຈ່າຍຄ່າໂຄງການທີ່ຄວນຈະໄດ້ຜົນດີ.

ສ. <u>ນ້ຳປະປາ</u> : ເທົ່າເຖິງທຸກວັນນີ້ມີແຕ່ນະຄອນວຽງຈັນ ແລະນະຄອນຫລວງພຣະບາງ ທີ່ມີນ້ຳປະປາໃຊ້ ຈະໄດ້ຈັດໃສ່ໃນເມືອງໃຫຍ່ໆທີ່ສຳຄັນອີກຄື : ປາກເຊ, ສວັນນະເຂດ ແລະທ່າແຂກ. ນອກນັ້ນຕໍ່ໜ້າການຂຍາຍຕົວອັນໄວຂອງນະຄອນວຽງຈັນ ຈະຕ້ອງໄດ້ຂຍາຍຣະບົບນ້ຳປະປາ ທີ່ມີຢູ່ປັດຈຸບັນນີ້ອອກອີກຫລາຍປີທາງໜ້າ.

ສຳຣັບສົກ ໑໙໗໐-໗໑ ນີ້ ກະວ່າຈະລົງມືສ້າງນ້ຳປະປາໃສ່ເມືອງປາກເຊ.

ສູນກາງນ້ຳປະປາລາວ ພະຍາຍາມທຳຄວາມເຂົ້າໃຈ ກັບພວກທີ່ໃຊ້ນ້ຳ ເພື່ອໃຫ້ມີຣາຍໄດ້ອັນໝັ້ນຄົງແລະແນ່ນອນ ປັດຈຸບັນນີ້ກະຊວງກົມກອງຕ່າງໆນັ້ນຕິດໜີ້ບໍຣິສັດຫລາຍ.

ຊ. <u>ການອຸຕຸນິຍົມວິທຍາ</u> ຈຸດໝາຍປາຍທາງສ່ວນໃຫຍ່ຂອງກົມອຸຕຸນິຍົມ ໃນປັດຈຸບັນນີ້ແມ່ນ ເພື່ອຊ່ວຍການກະສິກັມ ໂດຍສະເພາະແມ່ນການສຶກສາເບິ່ງອາກາດ ໃນທ້ອງຖິ່ນທີ່ມີການພັທນາດ້ານການກະເສດ ເພື່ອໃຫ້ພຶດຜົນທີ່ຈະໄປປູກນັ້ນຖືກກັນກັບອາກາດ ໂດຍຈຸດປະສົງດັ່ງກ່າວນີ້ ຈຶ່ງໄດ້ດຳເນີນການຕິດຕັ້ງສະຖານີອຸຕຸນິຍົມການກະເສດແຕ່ສົກ ໑໙໖໙-໗໐ ຕໍ່ມາ.

ຍ. <u>ກົມແຜນທີ່ແລະກົມຕາດິນ</u> : ກົມແຜນທີ່ແຫ່ງຊາດ ຕ້ອງດຳເນີນການຂົນຂວາຍເຄື່ອງອຸປກອນເພື່ອໃຫ້ເໝາະສົມແລະພຽງພໍໃນການເຮັດແຜນທີ່. ຫ້ອງອັດຮູບແຜນທີ່ທາງອາກາດ ທີ່ໄດ້ລົງມືມາແລ້ວໃນສົກ ໑໙໖໙-໗໐ ນັ້ນ ຈະດຳເນີນຕໍ່ໄປໃນສົກ ໑໙໗໐-໗໑.

ປັດຈຸບັນນີ້ ທີ່ດິນໃນເຂດເທສບານແລະດິນທີ່ເໝາະສົມແກ່ການກະເສດ ຍັງມີຄວາມຈຳເປັນທີ່ຈະຕ້ອງມີການແບ່ງເຂດແດນກັນແຈ່ມແຈ້ງ ຕາມແຕ່ລະໜ້າດິນຂອງແຕ່ລະເຈົ້າຂອງ. ກົມແຜນທີ່ຕາດິນກຳລັງພະຍາຍາມຝຶກອົບຮົມພນັກງານຢູ່ ເພື່ອໃຫ້ທັນກັບຄວາມຕ້ອງການໃນກິຈການນີ້.

ດ. <u>ອົງການລາວພັທນາແມ່ນ້ຳຂອງ</u> ໃນຈຳນວນໂຄງການຕ່າງໆທີ່ກ່ຽວຂ້ອງກັບອົງການນີ້ ກ່ອນອື່ນໝົດແມ່ນໂຄງການສ້າງຂົວຂ້າມນ້ຳຂອງ ອົງການນີ້ໄດ້ພະຍາຍາມຕິດຕໍ່ກັບທະນາຄານພັທນາອາຊີ ເພື່ອຫາເງິນມາດຳເນີນງານ ໃນການສ້າງຂົວໜອງຄາຍທ່ານາແລ້ງ.

໑໕໘. <u>ໂຄງການຕ່າງໆຂອງກອງປະຊຸມພື້ນຖານເສຖກິດ</u>

ໂຄງການໃຫຍ່ ເລກທີ ໔	ກອງປະຊຸມ : ພື້ນຖານເສຖກິດ ພະແນກການ : ກົມການບິນພົລເຮືອນ
ໂຄງການ :	ການສ້າງເດີ່ນຍົນສາກົນທີ່ວຽງຈັນ.

ນຶ່ງ. ຂໍ້ມູນທົ່ວໄປ.

ກ) ຈຸດມຸ້ງໝາຍຂອງໂຄງການ : ພຣະຣາຊອານາຈັກລາວບໍ່ມີທາງອອກສູ່ທະເລ ສະນັ້ນການຂົນສົ່ງທາງອາກາດ ກັບປະເທດອື່ນໆ ຈຶ່ງເປັນສິ່ງສຳຄັນທີ່ສຸດສຳຣັບລາວ ເພື່ອໃຫ້ເຄື່ອງບິນອາຍພົ້ນຂອງຕ່າງປະເທດ ລົງຈອດໄດ້ໃນວຽງຈັນ ຈຳເປັນທີ່ສຸດທີ່ເດີ່ນຍົນວັດໄຕ ຈະຕ້ອງໄດ້ຮັບການດັດແປງຍົກຣະດັບຂຶ້ນ ເທົ່າທຽມກັບເດີ່ນຍົນສາກົນອື່ນໆໃນໂລກ. ສາຍການບິນລາງສາຍ (ອິນເດັຽ-ຍີ່ປຸ່ນ) ຈະຣັດເວລາສັ້ນເຂົ້າອີກ ເມື່ອມາຈອດຊົ່ວຄາວເດີ່ນຍົນວັດໄຕແລະນອກນັ້ນການຕິດຕໍ່ຂອງລາວເຮົາກັບຕ່າງປະເທດກໍໄດ້ຄວາມສະດວກຂຶ້ນອີກຫລາຍຢ່າງ.

ຂ) ບົດຊີ້ແຈງ : ໂຄງການນີ້ຖືກແບ່ງອອກເປັນສີ່ ຣະດັບຄື :

໑. ຕໍ່ເດີ່ນສຳຣັບເຮືອບິນແລ່ນແຕ່ ໒.໐໐໐ ແມດ ອອກເປັນ ໓.໐໐໐ ແມດ.

໒. ແປງແລະຂຍາຍສາຍຄຽງຄູ່ ບ່ອນຈອດຍົນແລະອູ່ຍົນ.

໓. ຕິດຕັ້ງເຄື່ອງຊີ້ທາງແລະເຄື່ອງສັງເກດໝາຍຂອບເຂດໃຫ້ແກ່ຍົນເຫາະ.

໔. ດັດແປງຂຍາຍບ່ອນພັກເຊົາ ຂອງພວກໂດຍສານທາງເຄື່ອງບິນ.

ຣະດັບທີ່ນຶ່ງຂອງໂຄງການ (ຕໍ່ບ່ອນຍົນແລ່ນແຕ່ ໒.໐໐໐ ແມດ ຫາ ໓.໐໐໐ ແມດ) ນັ້ນກະວ່າຈະສົ້ນສຸດລົງໃນທ້າຍເດືອນ ມິຖຸນາ ໑໙໗໐ ແລະແມ່ນສ່ວນນຶ່ງຂອງແຜນການດຳເນີນງານ ໑໙໖໙-໗໐.

ສຳຣັບ ໑໙໗໐-໗໑ ກະໄວ້ວ່າ ຈະລົງມືດຳເນີນງານຂັ້ນຕົ້ນຂອງສາມຣະດັບ. ຄນະຜູ້ຊ່ຽວຊານຍີ່ປຸ່ນຈະເດີນທາງ ມາວຽງຈັນໃນມໍ່ໆນີ້ ເພື່ອສຶກສາຄຳນວນ ເບິ່ງຄ່າໃຊ້ຈ່າຍ ສຳຣັບວຽກການທີ່ດ່ວນຫລາຍອາທິເຊັ່ນ ຣະດັບທີ່ສອງຂອງໂຄງການ ໂດຍກະເບິ່ງແລ້ວວ່າ ເພື່ອປະຕິບັດວຽກການດັ່ງນີ້ ຈະຕ້ອງແມ່ນຍອມການຊ່ວຍເຫຼືອຈາກຍີ່ປຸ່ນຕັ້ງແຕ່ ເດືອນເມສາ ໑໙໗໑ ເພາະວ່າປີງົບປະມານຂອງຍີ່ປຸ່ນແມ່ນຕັ້ງຕົ້ນແຕ່ວັນທີ ນຶ່ງ ເມສາ ຫາ ໓໑ ມີນາ.

ສອງ : ປະຕິທິນ ການດຳເນີນງານ.

	ກ່ອນວັນທີ ໑/໗/໗໐	໑ ໙ ໗ ໐ - ໑ ໙ ໗ ໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງຈາກວັນທີ ໓໐/໖/໗໔
ການສ້າງສາຍສົ່ງຕໍ່ມັນ.						
ໃນຣັສໝີຂອງການ ຄວບຄຸມ		-----	-----	-----		
ຣະບຽບແລະຈຸດປະສົງຂອງ						
ວຽກງານ ໓./ແລະ ໔./ຂອງ						
ໂຄງການ		-----	-----			
ຕັ້ງຕົ້ນຣັດງານ ໓./ແລະ໔./						
ຂອງການປັບປຸງຣາກຖານທີ່ດິນ			-----	-----	-----	
ງານ ເລກ ໓./ ແລະ ໔./						
ຂອງໂຄງການ					-----	-----

<u>ໝາຍເຫດ</u> : ການຄິດແປງທັງມວນ ໄດ້ກະໄວ້ ໓໐.໐໐໐.໐໐໐ ກີບ ສຳຣັບ ໂຄງການຣະດັບສອງ (ຊ່ວຍເຫຼືອຈາກ ຍີ່ປຸ່ນ) ; ໔໐.໐໐໐.໐໐໐ ກີບສຳຣັບ ໂຄງການຣະດັບ ໓- ໔ (ຊ່ວຍເຫຼືອຈາກຝຣັ່ງເສດ) ແລະ ໔໐.໐໐໐.໐໐໐ ກີບ ສຳຣັບ ງານເລກທີ ໓- ໔ ຂອງໂຄງການ (ກະປະມານ).

ໂຄງການໃຫຍ່ເລກທີ ຝ	ກອງປະຊຸມ : ພື້ນຖານເສຖກິດ ພແນກການ : ບໍຣິສັດນ້ຳປະປາລາວ
ຊື່ໂຄງການ : ການເອົານ້ຳປະປາເຂົ້າເມືອງປາກເຊ	

ນຶ່ງ : <u>ຂໍ້ມູນທົ່ວໄປ</u>.

ກ) <u>ຈຸດມຸ່ງໝາຍຂອງໂຄງການ</u>: ເມືອງປາກເຊມີພົລເມືອງຢູ່ ໓໕.໐໐໐ ຄົນ ແລະພົລເມືອງດັ່ງກ່າວນີ້ ຕື່ມຂຶ້ນຈຳນວນປີລະ ໕% ນ້ຳທີ່ປະຊາຊົນໃຊ້ທຸກວັນນີ້ ແມ່ນໄດ້ຈາກພວກຂົນນ້ຳຂາຍ ຫຼືວ່າຈາກອ່າງເກັບນ້ຳນ້ອຍໆ ແລະຈຳໜ່າຍໂດຍຣົດນ້ຳ ຫຼືຈັກສູບນ້ຳ. ນ້ຳທີ່ແຈກຈ່າຍກັນຢູ່ທຸກວັນນີ້ ບໍ່ໄດ້ຮັບການກວດສອບຢ່າງຖືກຕ້ອງຕາມຫຼັກສຸຂາພິບານ. ເມືອງປາກເຊນີ້ມີບ່ວາໃຫຍ່ພໍຄວນ ແລະເໝາະສົມທີ່ຈະໃຫ້ມີການແຈກຈ່າຍນ້ຳປະປາ ດັ່ງກ່ຽວກັນກັບເມືອງໃຫຍ່ອື່ນໆ ເພື່ອສົ່ງເສີມແລະຍົກອັນດັບຊີວິດການເປັນຢູ່ຂອງປະຊາຣາສດອນໃຫ້ທັນສມັຍຂຶ້ນອີກ.

ຂ) <u>ບົດຊີ້ແຈງ</u> : ວຽກການຈັດທຳຕ່າງໆໄດ້ມອບໃຫ້ແກ່ບໍຣິສັດນ້ຳປະປາຢູໂຣບ "ປຸກ-ຊາບານ" ທີ່ຈະໄດ້ທຳການຈູບນ້ຳເຊຂຶ້ນມາຕອງ ແລ້ວແຈກຈ່າຍໄປທົ່ວເມືອງ ໂດຍເຄື່ອງຈັກທີ່ສາມາດຈູບແລະຕອງນ້ຳໄດ້ ໗.໕໐໐ ແມດກູບຕໍ່ວັນ ແລະສາມາດສົ່ງນ້ຳໃຫ້ແກ່ພົລເມືອງໄດ້ວັນລະ ໑໒.໐໐໐ ແມດກູບ.

ຂັ້ນທຳອິດນີ້ ຈະແບ່ງທີ່ສົ່ງນ້ຳອອກເປັນ ໑.໐໐໐ ຂແນງ.

ຄ) <u>ຂໍ້ມູນອື່ນໆ</u> : ຜູ້ຮັບຜິດຊອບ ຂໍ້ຕົກລົງຕ່າງໆ ຕລອດຮອດວິທີການໃຊ້ຈ່າຍຕ່າງໆແມ່ນໄດ້ມອບໃຫ້ກົມແຜນຜັງ ວຽກການດຳເນີນງານ ຈະຕ້ອງຕັ້ງຕົ້ນໃນສົກປີ ໑໙໗໐-໗໑ ແລະຈະຕ້ອງດຳເນີນຕໍ່ໄປອີກໃນສົກປີ ໑໙໗໑-໗໔.ນອກຈາກນີ້ ຄວນຈະເປັນທີ່ຊາບໄວ້ອີກວ່າ ບໍຣິສັດນ້ຳປະປາມີເງິນທຶນກ້ອນນຶ່ງ ເປັນຈຳນວນ ໗໐໐.໐໐໐ ມາກສ໌(DM) ສຳຣັບໃຊ້ຈ່າຍ ພາຍໃນປີ ໑໙໗໔ ແມ່ນເງິນຈຳນວນນີ້ຂອງທີ່ຈະຈ່າຍຄ່າດຳເນີນໂຄງການແຈກຢາຍນ້ຳທີ່ຫລວງພຣະບາງ. ເງິນ ໗໒໐.໐໐໐ ມາກສ໌ (DM) ບໍ່ໄດ້ບົ່ງໄວ້ໃນງົບ ໑໙໗໐-໗໑ ແຕ່ບົ່ງໃນງົບ ໑໙໗໑-໗໔.

ຍັງມີຄຳຮ້ອງຂໍງົບປະມານອີກສອງຄຳຮ້ອງທີ່ຍື່ນໄປແກ້ ຄືງົບໂຄງການສວັນນະເຂດ ຊຶ່ງບໍຣິສັດ ປວກ-ຊາບານ ໄດ້ທຳການສຶກສາເບິ່ງແລ້ວ ແລະເຣື່ອງນີ້ອາດຈະໄດ້ຮັບການຊ່ອຍເຫຼືອຈາກຝຣັ່ງເສດ. ອີກຄຳຮ້ອງນຶ່ງ ຂໍໄປທະນາຄານພັທນາເອເຊັຽ ເພື່ອມາທຳການສຶກສາຫາທາງຂຍາຍ ການແຈກຢາຍນ້ຳຢູ່ວຽງຈັນ ແລະບໍຣິການນ້ຳສອາດໃນໃຈກາງເມືອງນ້ອຍໆອື່ນໆອີກ.

ງ) ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍ ທັງໝົດຂອງໂຄງການ ໄດ້ແບ່ງອອກດັ່ງນີ້ :

- ວຽກການ ກໍ່ສ້າງແລະຕ່າງໆ .... ៤៤៥.១០០.០០០ ກີບ
- ເຄື່ອງຂອງອຸປກອນຕ່າງໆທີ່ນຳເຂົ້າມາ .... ៥០៥.៣១០.០០០ ກີບ

ໂຮມຄ່າໃຊ້ຈ່າຍ .... ៦៤៣.៧១០.០០០ ກີບ

ເງິນ ៥០៥.៣១០.០០០ ກີບ (៥.៦០៧.០០០ ຟຣັ່ງ) ແມ່ນເງິນກູ້ຢືມ ຈາກປະເທດຝຣັ່ງເສດ ສ່ວນ ៤៤៥.១០០.០០០ ກີບນັ້ນແມ່ນເງິນຢືມພິເສດຈາກຄັງສູນກາງປະສານງານດ້ານເສດຖະກິດ (ໂດຍຜ່ານທະນາຄານ ພັທນາແຫ່ງພຣະຣາຊອານາຈັກລາວ.

ປະຕິທິນດຳເນີນງານ .

ໃນເດືອນ ກໍຣະກະດາ ១៧៦០ ນີ້ ບໍລິສັດ "ປູກ -ຊາບານ " ຕ້ອງສົ່ງວິສວະກອນຝ່າຍວິຊາການ ຜູ້ນຶ່ງໄປປາກເຊ ເພື່ອຕິດຕໍ່ກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບການກຳນົດເວລາເຣີ່ມຕົ້ນດຳເນີນງານ ແລະກຳນົດ ເວລາສິ້ນສຸດງານ.

ສາມ : ຕາຕຣາງ ແຈກສັນການໃຊ້ຈ່າຍ

	ຄ່າໃຊ້ຈ່າຍ	ແຫລ່ງການເງິນ
ເຂື່ອນກັ້ນຈາກລຳເຊ-ສຖານີຈູບນ້ຳ	៤៣.១០០.០០០ ກີບ	ເງິນຢືມຈາກປະເທດຝຣັ່ງ
	៧០.៦០០.០០០ ຟຣັ່ງ	ເງິນຢືມມາຈາກອົງການປະສານງານເສດຖະກິດ
- ສຖານີຕອງແລະຈູບນ້ຳ	៣៥.០០០.០០០ ກີບ	
	១៩០.៧០០.០០០ ຟຣັ່ງ	
- ສຖານີຈຳໜ່າຍນ້ຳ	១១១.០០០.០០០ ກີບ	
	៧៤៧.០០០.០០០ ຟຣັ່ງ	
ໂຮມທັງໝົດ	៦៤៣.៧១០.០០០	

ໂຄງການໃຫຍ່ເລກທີ ໑໔	!	ກອງປະຊຸມ : ພື້ນຖານເສດຖະກິດ
	!	
	!	ພະແນກການ : ອົງການລາວພັທນາແມ່ນ້ຳຂອງ

ຂົວຂ້າມນ້ຳຂອງ : ວຽງຈັນ - ໜອງຄາຍ

ນຶ່ງ : <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງໝາຍ ຂອງໂຄງການ</u> : ເພື່ອຫລີກຈາກການຂົນສົ່ງສິນຄ້າຂຶ້ນລົງເວລາຈະຂ້າມນ້ຳ ຂອງ.

- ເພື່ອຕໍ່ທາງຣົດໄຟແລະທາງຣົຖຍົນ ແຕ່ຂອດແດນໄທມາວຽງຈັນ.
- ເພື່ອເຊື່ອມສັມທາງດ້ານເສດຖະກິດຣະຫວ່າງລາວ-ໄທ

ຂ. <u>ບົດຊີ້ແຈງ</u> : ຂົວນີ້ຈະແມ່ນ ຂົວປະເພດທາງຣົດໄຟແລະຣົດຍົນ ຕິດຕໍ່ຣະຫວ່າງໜອງ-ຄາຍ ທ່ານາແລ້ງຣະດັບທີ່ນຶ່ງ ໑໙໗໐-໗໑ ຂອງໂຄງການ ແມ່ນແນ່ໃສ່ການ ແຕ້ມ ແຜນຕ່າງໆຂອງຊູ້ວອົງຕາມການສຶກສາຂັ້ນຕົ້ນ ເຫັນວ່າດ້ານເຕັກນິກເປັນທີ່ ເໝາະສົມແລະດ້ານເສດຖະກິດກໍຈະມີຜົນດີ.

ຄ. <u>ຂໍ້ມູນອື່ນໆ</u> : ກຳນົດການດຳເນີນງານ ຂອງໂຄງການມີດັ່ງນີ້ :

- ການສຶກສາພິສູດໄດ້ຕັ້ງຕົ້ນແຕ່ປີ ໑໙໖໗ ແລະສົມສູດລົງໃນປີ ໑໙໖໙.
- ການແຕ້ມແຜນຕ່າງໆ ໄດ້ຕັ້ງຕົ້ນແຕ່ເດືອນເມສາປີ ໑໙໗໐ ແລະ ກະຈະ ແລ້ວທ້າຍເດືອນ ມີນາ ໑໙໗໑.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັມທົນ.</u>

- ຄ່າສຶກສາ ໑໕໐.໐໐໐.໐໐໐ ກີບ ການຊ່ວຍເຫຼືອຂອງຣັຖບານຍີ່ປຸ່ນ
- ຄ່າແຕ້ມແຜນຕ່າງໆ ໔໐໐.໐໐໐.໐໐໐ ກີບ ຈາກການຊ່ວຍເຫຼືອຂອງຍີ່ປຸ່ນ.
- ຄ່າກໍ່ສ້າງມີຢູ່ ໑໑ ໂກດກີບ (໑໑.໐໐໐.໐໐໐.໐໐໐ ກີບ) ໂດຍແມ່ນການ ຊ່ວຍເຫຼືອມາຈາກພາຍນອກໃນການຊ່ວຍເຫຼືອຫຼືກູ້ຢືມແລະຈະແມ່ນໜ້າທີ່ຂອງ ອົງການພັທນາແມ່ນ້ຳຂອງ ເປັນຜູ້ຊອກຫາອີກດ້ວຍ ການຮ່ວມມືຂອງທະນາ ຄານພັທນາອາຊີ.

ໂຄງການເລກທີ ໓໖- ໔໑	ກອງປະຊຸມ	: ພົນຖານເສດຖະກິດ
	ພແນກ	: ກົມໂຍທາທິການ

໑. <u>ຂໍ້ມູນທົ່ວໄປ</u>

ກ. <u>ຈູດມຸ່ງໝາຍຂອງໂຄງການ</u>.

ຖນົນຫົນທາງທົ່ວປະເທດ ໃນເວລານີ້ຍັງບໍ່ພໍກັບຄວາມຕ້ອງການ, ຈຳເປັນຕ້ອງໄດ້ທຳການຂົນສົ່ງທາງອາກາດເປັນສ່ວນຫລາຍ. ເພື່ອຄວາມປອດໄພຈຶ່ງເຫັນສົມຄວນທີ່ສຸດ ທີ່ຈະຕ້ອງເປີດ ແລະຍົກຣະດັບສ້ອມແປງຖນົນຫົນທາງ ທີ່ຕິດຕໍ່ຣະຫວ່າງເມືອງສຳຄັນຕ່າງໆ ແລະຈຳເປັນອີກທີ່ຈະໃຫ້ມີຖນົນຫົນທາງເດີນຢ່າງສດວກໃນເຂດທີ່ມີການພັທນາດ້ານເສດຖະກິດ ຄື ຕົວຢ່າງທົ່ງວຽງຈັນ.

໒. <u>ບົດຊີ້ແຈງ</u> :

ໂຄງການຖນົນຫົນທາງນີ້ ເຮົາອາດແບ່ງອອກໃຫ້ເປັນສາມໝວດ :

<u>ໝວດທີ ໑</u>. ຖນົນທີ່ໃຫ້ຜົນປະໂຍດທົ່ວໄປຫຼືຮຽກແນວໜຶ່ງວ່າ ຖນົນອາຊີ ໃຊ້ສຳລັບການຄົມນາຄົມ ຣະຫວ່າງປະເທດ ແລະຣະຫວ່າງເຂດເສດຖະກິດພ້ອມທັງເຂດທີ່ມີການອຸດສາຫະກັມຢ່າງຫລວງຫລາຍ. ຖນົນດັ່ງກ່າວນີ້ຈະໄດ້ຮັບການບູຣະນະຕາມຫລັກການອາຊີ ປັດຈຸບັນນີ້ຖນົນອາຊີໃນປະເທດລາວມີຢູ່ ໓໔໘໑..ກິໂລແມດ. ນອກຈາກການຮັກສາແລະສ້ອມແປງບ່ອນອື່ນໆຕາມຖນົນອາຊີແລ້ວ ກໍຍັງມີການປູ່ຢາງທາງວຽງຈັນໂພນໂຮງແຕ່ຫລັກ ໑໕ ຫາ ໔໕ ນື່ອກ.

<u>ໝວດ ໒</u>. ຖນົນພາຍໃນປະເທດ ມີຄວາມສຳຄັນໃນການຂົນສົ່ງພາຍໃນປະເທດ. ໃຊ້ສຳຣັບເປັນເສັ້ນທາງຂົນສົ່ງໃນບໍຣິເວນເມືອງໃຫຍ່ໆ ແລະຕິດຕໍ່ກັບທີ່ວ່າການແຂວງອື່ນໆອີກ. ມີທາງຍາວຢູ່ ໔໔໖໐ ກິໂລແມດ- ທຸກໆປີໃດກໍ່ມີການສ້ອມແປງຮັກສາຢູ່ສເມີ.

<u>ໝວດ ໓</u>. ຖນົນນ້ອຍທີ່ຕໍ່ຈາກຖນົນໃຫຍ່. ຕິດຕໍ່ຣະຫວ່າງໝູ່ບ້ານ, ຣະວ່າງເຂດພັທນາການ, ໂຮງງານອຸດສາຫະກັມແລະອື່ນໆໃສ່ກັບຖນົນໃຫຍ່. ມີທາງຍາວ ໙໕໐ ກິໂລແມດ. ນອກຈາກການສ້ອມແປງແລ້ວກໍ່ມີການສ້າງໃໝ່ຣະຫວ່າງທາລາດປາກກະຍຸງ.

໓. <u>ຂໍ້ມູນອື່ນໆ</u> : ມີລາງໂຄງການທີ່ກະໃສ່ ໑໙໗໐-໗໑ ນີ້ກໍໄດ້ບັນຈຸແລ້ວໃນແຜນການດຳເນີນງານ ໑໙໖໘-໗໐ ແຕ່ບໍ່ໄດ້ດຳເນີນງານຢ່າງໃດ ເພາະ ຄວາມບໍ່ປອດໄພໃນລາວທັງຖຸນ.

ໂຄງການສ້າງຖນົນຫົນທາງໝົດນີ້ ແມ່ນໄດ້ທຶນຈາກການຊ່ວຍເຫລືອອະເມຣິກັນ ໖໖% ແລະຈາກຣັຖບານລາວ ໓໓%, ຢູເສດຍັງໃຫ້ການຊ່ວຍເຫລືອດ້ານອື່ນໆອີກຄືພນັກງານ, ອຸປກອນເຄື່ອງອະໄຫລ່, ອຸປກອນກໍ່ສ້າງ, ນ້ຳມັນເຊື້ອໄຟ.

໗. ຄ່າໃຊ້ຈ່າຍແລະການຈັດສັນທຶນ

ຄ່າໃຊ້ຈ່າຍ (ຄ່າສ້ອມແປງຄ່າກໍ່ສ້າງຖນົນໃຫມ່ແລະອື່ນໆ) ມີຢູ່ ໑.໐໖໑.໓໕໗.໐໐໐ ກີບ ແລະແບ່ງອອກເປັນດັ່ງນີ້ :

໓໒໙.໐໒໙.໐໐໐ ກີບ ແມ່ນທຶນປະສົມຣະຫວ່າງຢູເສດແລະຣັຖບານລາວ

໗໓໒.໓໒໘.໐໐໐ ກີບ ແມ່ນການຊ່ວຍເຫຼືອໂດຍກົງຂອງຢູເສດ.

ໃນຈຳນວນ ໓໒໙.໐໒໙.໐໐໐ ກີບນີ້ ແມ່ນມາຈາກງົບປະມານແຫ່ງຊາດ (໑໑໐.໐໐໐.໐໐໐ ກີບ) . ແລະຢູເສດ ໒/໓ (໒໑໙.໐໒໙.໐໐໐ ກີບ) ຕາຕຣາງຕໍ່ໄປນີ້ຈະຊີ້ບອກເຖິງລັກສນະວິທີການດຳເນີນງານຕ່າງໆ ທັ້ງໆທີ່ງົບປະມານແຫ່ງຊາດ ໄດ້ກະໃຫ້ໂຄງການນີ້ເຖິງ ໑໑໐.໐໐໐.໐໐໐ ກີບຢູ່ກໍ່ຕາມ ແຕ່ວ່າຈະເອົາເຂົ້າໃນຕາຕຣາງຣົບໂຣມນັ້ນຈະໄດ້ໃສ່ແຕ່ສິ່ງທີ່ກ່ຽວກັບການລົງທຶນ ຕາມຊ່ອງ (ຄໍລັມ) ໑.໒.໔.໗ ແລະ ໘ ມີຢູ່ ໕໓໔.໖໓໘ ກີບ ໂດຍບໍ່ໄດ້ໄລ່ ເນື່ອງຈາກການສ້ອມແປງຖນົນທີ່ມີແລ້ວຈຳນວນ ໕໒໖.໗໑.໐໐໐ ກີບ.

ຕ າ ຕ ຣ າ ງ

ແຫລ່ງຂອງທຶນ	ການລົງທຶນ	ທຶນດຳເນີນງານ	ຫນ່ວຍລະລ້ານກີບໂຣມ
- ທຶນປະສົມຢູເສດແລະງົບປະມານ ແຫ່ງຊາດ	໑໖໕,໗໕໔	໑໖໓,໒໗໕	໓໒໙,໐໒໙
- ງົບປະມານແຫ່ງຊາດ	໕໕,໒໘໕	໕໔,໗໑໕	໑໑໐,໐໐໐
- ຢູເສດ	໑໑໐,໔໖໙	໑໐໘,໕໖໐	໒໑໙,໐໒໙
- ການຊ່ວຍເຫລືອໂດຍກົງ	໓໖໘,໘໘໔	໓໖໓,໔໔໔	໗໓໒,໓໒໘
ໂ ຣ ມ	໕໓໔,໖໓໘	໕໒໖,໗໑໙	໑.໐໖໑,໓໕໗

໒. ປະຕິທິນການດຳເນີນງານ

ເປັນການຍາກທີ່ສຸດ ທີ່ຈະກຳໜົດເວລາດຳເນີນງານໄດ້ ເພາະສະຖານະການແລະຄວາມບໍ່ປອດໄພນີ້ ເປັນຕົ້ນເຫດຕາມສາຍທາງຕ່າງໆ ວຽກການນີ້ຈະດຳເນີນໄປຕາມແຕ່ກາລະເທສະທີ່ເຫັນວ່າເໝາະສົມ.

<u>ຕາຕຣາງແຈກສັມການໃຊ້ຈ່າຍ ໃນການດຳເນີນງານ</u>

(ໜ່ວຍລະລ້ານກີບ)

ແ ຂ ວ ງ	໑	໒	໓	໔	໕	໖	໗	໘	ໂ ຮ ມ
ຫົວຂອງ									
ທຶນປສົມຢູ່ເສດຣັຖບານລາວ		໐,໘໐໕	໖,໐໑໒	໕,໑໙໐	໑,໔໕໖		໑,໕໙໓	໒,໐໗໓	໑໗,໑໒໙
ການຊວຍເຫຼືອໂດຍກົງ		໑,໗໙໒	໑໓,໓໘໒	໑໑,໕໕໒	໓,໒໔໐		໓,໕໔໖	໔,໖໑໓	໓໘,໑໒໕
ໂ ຮ ມ		໒,໕໙໗	໑໙,໓໙໔	໑໖,໗໔໒	໔,໖໙໖		໕,໑໓໙	໖,໖໘໖	໕໕,໒໕໔
%		໔,໗	໓໕,໑	໓໐,໓	໘,໕		໙,໓	໑໒,໑	໑໐໐
ຫລວງພຣະບາງ									
ທຶນປສົມຢູ່ເສດຣັຖບານລາວ		໕,໐໓໘	໑໘,໔໗໑	໔,໖໒໗			໒,໔໒໕	໖,໗໔໔	໓໗,໓໑໕
ການຊວຍເຫຼືອໂດຍກົງ		໑໑,໒໑໓	໔໑,໑໑໔	໑໐,໒໙໙			໕,໓໙໙	໑໕,໐໓໔	໘໓,໐໕໙
ໂ ຮ ມ		໑໖,໒໕໑	໕໙,໕໘໕	໑໔,໙໒໖			໗,໘໒໔	໒໑,໗໘໘	໑໒໐,໓໗໔
%		໑໓,໕	໔໙,໕	໑໒,໔			໖,໕	໑໘,໑	໑໐໐
ໄຊຍະບູຣີ :									
ທຶນປະສົມຢູ່ເສດຣັຖບານລາວ	໑,໘໘໕	໔,໐໓໘	໑໑,໑໓໖	໔,໙໒໖		໐,໑໘໘		໔,໘໔໕	໒໖,໙໑໘
ການຊວຍເຫຼືອໂດຍກົງ	໔,໑໙໖	໘,໙໙໑	໒໔,໕໗໗	໑໐,໙໖໙		໐,໔໒໐		໑໐,໗໙໐	໕໙,໙໔໓
ໂ ຮ ມ	໖,໐໘໑	໑໓,໐໒໙	໓໕,໖໑໓	໑໕,໘໙໕		໐,໖໐໘		໑໕,໖໓໕	໘໖,໘໖໑
%	໗	໑໕	໔໑	໑໘,໓		໐,໗		໑໘	໑໐໐
ວຽງຈັນ,									
ທຶນປະສົມຢູ່ເສດຣັຖບານລາວ	໙,໘໒໑	໑໐,໕໓໕	໓໒,໙໑໕				໔,໔໐໕	໑,໘໔໕	໕໙,໕໒໑
ການຊວຍເຫຼືອໂດຍກົງ	໒໑,໘໖໐	໒໓,໔໔໙	໗໓,໒໖໓				໙,໘໐໔	໔,໑໐໗	໑໓໒,໔໘໓
ໂ ຮ ມ	໓໑,໖໘໑	໓໓,໙໘໔	໑໐໖,໑໗໘				໑໔,໒໐໙	໕,໙໕໒	໑໙໒,໐໐໔
%	໑໖,໕	໑໗,໗	໕໕,໓				໗,໔	໓,໑	໑໐໐

ຕາຕະລາງແຈກສັນການໃຊ້ຈ່າຍພວຍລະລ້ານກີບ

ແຂວງ	໑	໒	໓	໔	໕	໖	໗	໘	ໂຮມ
ບໍຣິຄຸ້ມ:									
ທຶນປະສົມຢູເສດ/ຣັດບານລາວ	໓,໙໐໗		໑໒,໙໘໐	໔,໒໘໕				໔,໐໓໓	໒໕,໒໐໔
ການຊ່ວຍເຫຼືອໂດຍກົງ	໘,໖໙໔		໒໘,໘໘໕	໙,໕໓໕				໘,໙໗໔	໕໖,໐໘໙
ໂຮມ	໑໒,໖໐໑		໔໑,໘໖໕	໑໓,໘໒໐				໑໓,໐໐໗	໘໑,໒໙໓
%	໑໕,໕		໕໑,໕	໑໗				໑໘	໑໐໐
ຄຳມ່ວນ									
ທຶນປະສົມຢູເສດ/ຣັດບານລາວ	໒,໔໕໐		໑໘,໓໖໓					໖,໗໑໗	໒໗,໕໓໐
ການຊ່ວຍເຫຼືອໂດຍກົງ	໕,໔໕໕		໔໐,໘໗໘					໑໔,໙໕໔	໖໑,໒໘໗
ໂຮມ	໗,໙໐໕		໕໙,໒໔໑					໒໑,໖໗໑	໘໘,໘໑໗
%	໘,໙		໖໖,໗					໒໔,໔	໑໐໐
ສວັນນະເຂດ:									
ທຶນປະສົມຢູເສດ/ຣັດບານລາວ	໒,໘໐໑	໕,໑໔໙	໑໙,໐໗໐	໕,໗໖໖			໐,໔໕໓	໗,໙໔໙	໔໑,໑໘໘
ການຊ່ວຍເຫຼືອໂດຍກົງ	໖,໒໓໓	໑໑,໔໕໘	໔໒,໔໓໙	໑໒,໘໓໒			໑,໐໐໘	໑໗,໖໙໑	໙໑,໖໖໑
ໂຮມ	໙,໐໓໔	໑໖,໖໐໗	໖໑,໕໐໙	໑໘,໕໙໘			໑,໔໖໑	໒໕,໖໔໐	໑໓໒,໘໔໙
%	໖,໘	໑໒,໕	໔໖,໓	໑໔			໑,໑	໑໙,໓	໑໐໐
ອາປີຄຳທອງ:									
ທຶນປະສົມຢູເສດ/ຣັດບານລາວ	໒,໔໔໔		໘,໕໖໔	໓,໖໗໖		໐,໖໑໖	໐,໗໒໔	໒,໐໘໒	໑໘,໑໐໖
ການຊ່ວຍເຫຼືອໂດຍກົງ	໕,໔໔໓		໑໙,໐໗໑	໘,໑໘໕		໑,໓໗໑	໑,໖໑໓	໔,໖໓໗	໔໐,໓໒໐
ໂຮມ	໗,໘[illegible]໗		໒໗,໘໖໑	໑໑,໘໖໑		໑,໙໘໗	໒,໓໓໗	໖,໗໑໙	໕໘,໔໒໖
%	໑[illegible],໕		໔໗,໓	໒໐,໓		໓,໔	໔	໑໑,໕	໑໐໐

ແຂວງ	໑	໒	໓	໔	໕	໖	໗	໘	ໂຮມ
ເຊໂດນ :									
ທຶນປະສົມຢູ່ເສດ/ຣັຖ-	໐,໖໑໒	໗,໖໔໖	໑໑,໙໒໘			໐,໖໑໒	໓,໐໕໙	໖,໗໒໙	໓໐,໕໘໖
ບານລາວ ການຊ່ວຍ-	໑,໓໖໒	໑໗,໐໒໔	໒໖,໕໕໗		---	໑,໓໖໒	໖,໘໑໐	໑໔,໙໘໑	໖໘,໐໙໖
ເຫຼືອ ໂດຍກົງ ໂຮມ	໑,໙໗໔	໒໔,໖໗໐	໓໘,໔໘໕			໑,໙໗໔	໙,໘໖໙	໒໑,໗໑໐	໙໘,໖໘໒
%	໒	໒໕	໓໙			໒	໑໐	໒໒	໑໐໐
ສາຣະວັນ :									
ທຶນປະສົມຢູ່ເສດ /ຣັຖ-			໓,໐໕໙		໑,໒໒໓			໑,໘໓໕	໖,໑໑໗
ບານລາວ ການຊ່ວຍ-			໖,໘໐໙		໒,໗໒໔			໔,໐໘໖	໑໓,໖໑໙
ເຫຼືອໂດຍກົງ ໂຮມ			໙,໘໖໘		໓,໙໔໗			໕,໙໒໑	໑໙,໗໓໖
%			໕໐		໒໐			໓໐	໑໐໐
ຈຳປາສັກ :									
ທຶນປະສົມຢູ່ເສດ/ຣັຖ-	໓,໖໓໓	໓,໑໘໙	໓,໐໙໕	໐,໙໘໓		໐,໖໐໖		໑,໙໕໑	໑໓,໔໕໗
ບານລາວ ການຊ່ວຍ	໘,໐໘໐	໗,໐໙໓	໖,໘໘໓	໒,໑໘໕		໑,໓໔໗		໔,໓໓໙	໒໙,໙໒໗
ເຫຼືອໂດຍກົງ	໑໑,໗໑໓	໑໐,໒໘໒	໙,໙໗໘	໓,໑໖໘		໑,໙໕໓		໖,໒໙໐	໔໓,໓໘໔
ໂຮມ %	໒໗	໒໓,໗	໒໓	໗,໓		໔,໕		໑໔,໕	໑໐໐
ສີທັນດອນ :									
ທຶນປະສົມຢູ່ເສດ/ຣັຖ-	໑,໙໖໒	໐,໖໐໙	໖,໖໑໕	໑,໔໗໒	໑,໒໑໙	໐,໒໙໗	໐,໖໐໙	໒,໐໘໒	໑໔,໘໖໕
ບານລາວ ການຊ່ວຍ	໔,໓໖໔	໑,໓໕໖	໑໔,໗໒໘	໓,໒໗໓	໒,໗໑໑	໐,໖໖໑	໑,໓໕໖	໔,໖໒໙	໓໓,໐໖໓
ເຫຼືອ ໂດຍກົງ									
ໂຮມ	໖,໓໒໖	໑,໙໖໕	໒໑,໕໒໘	໔,໗໔໕	໓,໙໓໐	໐,໙໕໘	໑,໙໖໕	໖,໗໑໑	໔໗,໙໒໘
%	໑໓,໒	໔,໑	໔໔,໕	໙,໙	໘,໒	໒	໔,໑	໑໔	໑໐໐

ແຂວງ	໑	໒	໓	໔	໕	໖	໗	໘	ໂຣມ
ອັດຕະປີ້									
ທຶນປະສົມຢູເສດ/ຣັຖບານ	໑,໒໒໑	໐,໖໑໑	໒,໔໔໙	໐,໔໙໓		໐,໔໕໑		໑,໗໑໔	໖,໙໓໙
ລາວການຊ່ວຍເຫຼືອໂດຍກົງ	໒,໗໑໒	໑,໓໕໖	໕,໔໔໐	໑,໐໙໔		໑,໐໐໒		໓,໘໐໗	໑໕,໔໑໑
ໂຣມ	໓,໙໓໓	໑,໙໖໗	໗,໘໘໙	໑,໕໘໗		໑,໔໕໓		໕,໕໒໑	໒໒,໓໕໐
%	໑໗,໖	໘,໘	໓໕,໓	໗,໑		໖,໕		໒໔,໗	໑໐໐
ໂຣມທັງໝົດ :									
ທຶນປະສົມຢູເສດ/ຣັຖບານ	໙໙,໑໓໕	໑໒໑,໓໕໒	໔໙໘,໕໖໘	໑໐໑,໓໔໒	໑໒,໕໗໓	໘,໙໓໓	໔໒,໘໐໔	໑໖໓,໔໕໑	໑.໐໔໗,໙໕໘
ລາວ	໓໐,໗໓໖	໓໗,໖໒໐	໑໕໔,໕໕໗	໓໑,໔໑໘	໓,໘໙໘	໒,໗໗໐	໑໓,໒໖໘	໕໐,໖໐໙	໓໒໔,໘໗໖
ການຊ່ວຍເຫຼືອໂດຍກົງ	໖໘,໓໙໙	໘໓,໗໓໒	໓໔໔,໐໑໑	໖໙,໙໒໔	໘,໖໗໕	໖,໑໖໓	໒໙,໕໓໖	໑໑໒,໖໔໔	໗໒໓,໐໘໒

ຄຳອະທິບາຍ : ຕົວເລກທີ່ຢູ່ຕາມຊ່ອງຕ່າງໆ,

໑: ການກໍ່ສ້າງຖະໜົນໃໝ່
໒. ຍົກລະດັບຖະໜົນ ໃຫ້ມີສະພາບດີຂຶ້ນ
໓. ສ້ອມແປງຖະໜົນແລະຂົວ
໔. ສ້າງຂົວ
໕, ສ້ອມແປງທາງຍົນແລ່ນ
໖. ເຮັດເຮືອບັກ (ແພ) ຂ້າມນ້ຳແລະການຕິດຕັ້ງໃຫ້ມີສະພາບດີ
໗. ຍົກລະດັບອູ່ແປງແລະການຕິດຕັ້ງໃຫ້ມີສະພາບດີຂຶ້ນ
໘. ຄ່າໃຊ້ຈ່າຍສຳລັບອູ່ສ້ອມແປງ.

ໝາຍເຫດ : ນອກນີ້ຍັງມີອີກ ໑໓,໓໘໙.໐໐໐ ກີບ ສຳລັບການຮັກສາ ແລະກູ້ການ ຈະລາຈອນຕ່າງໆ ທົ່ວປະເທດ. ຕົວເລກນີ້ ບໍ່ໄດ້ເອົາເຂົ້າໃນຕາຕະລາງ ແລະແບ່ງອອກເປັນດັ່ງນີ້ : ໔,໑໕໓ ລ້ານກີບ ແມ່ນທຶນປະສົມຢູເສດ / ຣັຖບານລາວ.
໙,໒໔໕ ລ້ານກີບ ແມ່ນການຊ່ວຍເຫຼືອໂດຍກົງ.

ໂຄງການເລກທີ ໔໒	ກອງປະຊຸມ : ພື້ນຖານເສດຖະກິດ
	ພະແນກການ : ໄປຣສະນີແລະໂທຣະຄົມມາຄົມ

ໄປຣສະນີຊຸມບົດ

ນຶ່ງ : ຂໍ້ມູນທົ່ວໄປ.

ກ. ຈຸດມຸ່ງໝາຍຂອງໂຄງການ : ຢູ່ໃນແຜນພັທນາສ່ວນໂຮມແຫ່ງຊາດໄດ້ກະໄວ້ວ່າຈະສ້າງໂຮງການໄປຣສະນີຊຸມບົດຂັ້ນສີ່ແຫ່ງ ໂຮງການດັ່ງກ່າວ ແມ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ການຝາກສິ່ງແລະການຕິດຕໍ່ຣະຫວ່າງສູນກາງຕ່າງໆໃນເຂດພັທນາການ ທີ່ເຫັນວ່າຈຳເປັນ. ການເລືອກສູນກາງນີ້ໄດ້ກະທຳໄປຕາມຫລັກນະໂຍບາຍຂອງຣັຖບານ ທີ່ເລືອກເອົາບ້ານເກີນ ເປັນສູນກາງການພັທນາທ້ອງຖິ່ນ.

ຂ. ບົດຊີ້ແຈງ : ທຳການກໍ່ສ້າງເຄຫາຫລັງນຶ່ງສຳລັບເປັນໂຮງການ ໄປຣສະນີແລະໂທຣະຄົມມາຄົມໂດຍມີບ່ອນພັກເຊົາ ຂອງຫົວໜ້າໄປຣສະນີອີກດ້ວຍ. ໂຮງການດັ່ງກ່າວນີ້ໄດ້ສ້າງແລ້ວຫລັງນຶ່ງ ໃນປີ ໑໙໗໐-໗໑ ທີ່ທ່າເດື່ອ.

ຄ. ຂໍ້ມູນອື່ນໆ : ການປະຕິບັດງານ ຂອງໂຄງການນີ້ຈະໃຫ້ສຳເຣັດໝົດໃນປີ ໑໙໗໐-໗໑ ໂຄງການດັ່ງກ່າວຈະຕ້ອງແມ່ນຜູ້ຮັບເໝົາ ທີ່ຖືກເລືອກຕາມການປະມູນ ເປັນຜູ້ກໍ່ສ້າງພາຍໃນສາມປີຂ້າງໜ້າຈະໄດ້ສ້າງໂຮງສາຍຊຸມບົດຕື່ມອີກສອງແຫ່ງ.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ : ຄ່າໃຊ້ຈ່າຍສຳຣັບ ໑໙໗໐-໗໑ ມີຢູ່ ໑໕.໐໐໐.໐໐໐ ກີບ ໂດຍແມ່ນພາຣະຂອງງົບປະມານແຫ່ງຊາດທັງໝົດ.

ສອງ : ປະຕິທິນການດຳເນີນງານ.

ການດຳເນີນງານ	ກ່ອນວັນທີ ໑.໗.໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫລັງວັນທີ ໓໐.໖.໗໑
໑ ຊອກສະຖານທີ່	======					
໒. ແຕ້ມແຜນກໍ່ສ້າງ	======					
໓. ປະກາດປະມູນແລະໄຂຊອງ		======				
໔. ລົງມືດຳເນີນງານກໍ່ສ້າງ		======	======	======		
໕. ຈັດການພາຍໃນໃສ່ໂຕະຕັ່ງ-ແລະບ່ອນເຮັດການ				======		
໖. ຕິດຕາມດຳເນີນງານ					======	

สาม : แยกส่วนประกอบค่าใช้จ่ายและภาษจัดสัมทึม

ส่วนประกอบของค่าใช้จ่าย (เงินซื้อใหม่)	ค่าใช้จ่าย	ภาษจัดสัมทึม
ກ. ເງິນລົງທຶນ		
໑- ຊຸດິນບ່ອນກໍ່ສ້າງ	໐ +	
໒- ຈັດແຈງທີ່ດິນໃຫ້ເໝາະສົມ	໐ +	
໓- ການກໍ່ສ້າງ		
- ແຕ້ມແຜນກໍ່ສ້າງ	໐ + +	
- ເຄື່ອງອຸປະກອນ ເຄື່ອງປະກອບ ພນັກງານ	໑໑.໐໐໐.໐໐໐	ຈາກງົບ
- ຂຸດນ້ຳສ້າງບາດານແລະອ່າງອ້ວມນ້ຳ	໓໐໐.໐໐໐	ພັທນາ
໔- ເຄື່ອງອຸປະກອນອື່ນໆ		
- ເຮືອນພັກຂອງຫົວໜ້າໂຮງສາຍ	໑.໐໐໐.໐໐໐	
- ເຄື່ອງຕ່າງໆສຳຣັບໂຮງການ	໒.໐໐໐.໐໐໐	
- ເຄື່ອງຈັກຜລິດໄຟຟ້າ	໓.໐໐໐.໐໐໐	
- ເຄື່ອງອະໄຫລ່	໕໐.໐໐໐	
ຂ. ຄ່າດຳເນີນງານ		
- ຄ່າໃຊ້ຈ່າຍຕ່າງໆໃນການດຳເນີນງານ		
ໂ ຣ ມ	໑໔.໓໕໐.໐໐໐	

\+ ສ່ວນຂອງທ້ອງຖິ່ນ

\+ + ສ່ວນຂອງກົມເຄຫະສະຖານ.

ໂຄງການເລກທີ ໔໕	! ! !	ກອງປະຊຸມ : ພື້ນຖານເສດຖະກິດ ພະແນກ : ອຸຕຸນິຍົມວິທຍາແລະອຸທກະອຸຕຸວິທຍາ

ສະຖານນີອຸຕຸນິຍົມວິທຍາການກະເສດ

໑. <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງຫມາຍຂອງໂຄງການ</u> : ສະຖານີເຫລົ່ານີ້ ຕັ້ງຢູ່ໃນເຂດພັທນາການທ້ອງຖິ່ນສຳຄັນ ເພື່ອອຳນວຍຄວາມສະດວກໃນການສຶກສາເບິ່ງດິນຟ້າອາກາດ ໃຫ້ເຫມາະສົມກັບການປູກຝັງໃນທ້ອງຖິ່ນເຫລົ່ານັ້ນ. <u>ຈຸດປະສົງຂອງສະຖານີ</u> : ແມ່ນສັງເກດເບິ່ງອາກາດສຳຣັບການປູກຝັງບົ່ງບອກເຖິງຄວາມແຫ້ງແລ້ງແລະຊຸ່ມເຢັນຂອງດິນຟ້າອາກາດບ່ອນປູກຝັງ.

ຂ. <u>ບົດຊີ້ແຈງ</u> : ທຸກໆປີໃດສ້າງຂື້ນສາມສະຖານີ ປະກອບດ້ວຍອາຄານ ສະຖານທີ່ດິນແລະບ່ອນເກັບມ້ຽນເຄື່ອງອຸປກອນແລະຍານພາຫະນະ. ປີ ໑໙໖໙-໗໐ ຢູ່ທ່າງ່ອນບ້ານເກີນໂພນໂຮງ ໑໙໗໐-໗໑ ຢູ່ວັງວຽງ ຊະນະຄາມແລະເມືອງແກ່ນທາວ.

ຄ. <u>ຂໍ້ມູນອື່ນໆ</u> : ການປະຕິບັດໂຄງການ ນີ້ຈະຕ້ອງດຳເນີນໄປຫລາຍໆປີ.

ຄ່າໃຊ້ຈ່າຍໃນປີ ໑໙໗໐-໗໑ (ຊອກຫາ)	໑.໐໕ ລ້ານກີບ
ງົບພັທນາ	໗.໕໕ ລ້ານກີບ
ຊ່ວຍເຫລືອຈາກສຫະປະຊາຊາດ	໑໓.໗໕ ລ້ານກີບ
	໒໒.໓໕໐ ລ້ານກີບ

ຍົກຍອດງົບພັທນາມາ ໗.໑໐໓.໔໑໘

(ເພື່ອການໃຊ້ຈ່າຍຕ່າງຫາກ - ເບິ່ງຕາມໂຄງການປະຈຳປີ ໑໙໖໙-໗໐)

ຈ. <u>ກຳຫນົດເວລາແລະລຳດັບການສ້າງ</u>

ພ້ອມໆກັນກັບໂຄງການ ໑໙໗໐-໗໑

- ເຣັດບ່ອນມ້ຽນອຸປກອນຕ່າງໆຢູ່ສະຖານີທ່າງ່ອນ ບ້ານເກີນແລະໂພນໂຮງໃຫ້ແລ້ວ.
- ສ້າງສະຖານີໃຫມ່ສາມແຫ່ງ ຄື ຢູ່ວັງວຽງ ຊະນາຄາມແລະເມືອງແກ່ນທາວ.

ສອງ: <u>ປະຕິທິນການດຳເນີນງານ ເມືອງວັງວຽງ</u>

ການດຳເນີນງານ	ກ່ອນວັນທີ ໑/໘/໘໑	໑໙໘໐ - ໑໙໘໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກ ໓໐/໖/໘໑
໑. ແຜນຜັງກໍ່ສ້າງ						
໒. ສຳຣວດສະຖານທີ່ກໍ່ສ້າງ	----	----				
໓. ຕົກລົງການປະມູນ		----				
໔. ລົງມືກໍ່ສ້າງ			----	----		
໕. ຈັດແລະສ້າງສະຖານທີ່ນຳຣົມຊຸປກອນ					------	
໖. ດຳເນີນງານທັມມະດາ					----	

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ສ່ວນປະກອບຂອງຄ່າໃຊ້ຈ່າຍ :	ເງິນລົງທຶນໃໝ່	ການຈັດສັນທຶນ
ກ. <u>ເງິນລົງທຶນ</u>,		
- ຊື້ດິນ (໒໐-໒)	ໄດ້ລັບ	
- ແປງດິນເພື່ອກໍ່ສ້າງ (໒໐-໒)	໑໕.໐໐໐	ງົບປະມານພັທນາ
- <u>ຄ້ານກໍ່ສ້າງ</u> :		
- ເຄື່ອງອຸປກອນກໍ່ສ້າງ (໒໐-໒)	໔.໒໐໐.໐໐໐	- " -
- ຄ່າແຮງງານກໍ່ສ້າງ (໒໐-໒)	໗໐໐.໐໐໐	
- ນ້ຳສ້າງ-ອ່າງເກັບນ້ຳ-ຈັກສູບ	໕໐໐.໐໐໐	ຊອກຫາ
- ເຄື່ອງອຸປກອນອື່ນໆ(໒໐-໓)	(໑.໔໐໐.໐໐໐	ງົບປະມານພັທນາ
- ເຄື່ອງໂຮງການ	(໕໐໐.໐໐໐	ຊອກຫາ
	(໑.໘໕໐.໐໐໐	ສຫະປະຊາຊາດ
ຂ. <u>ຄ່າດຳເນີນງານ</u> :		
ພະນັກງານ (໒໐-໑)		
- ພນັກງານຂັ້ນຜູ້ນຳ	໒໗໐.໐໐໐	ງົບປະມານພັທນາ
- ພນັກງານວິຊາຊີບ	໘໒໐.໐໐໐	- " -
- ຜູ້ຊ່ຽວຊານ	໑.໒໐໐.໐໐໐	ສຫະປະຊາຊາດ
ອື່ນໆ (ນ້ຳມັນເຊື້ອໄຟ-ເຄື່ອງກຳເໜີດໄຟ ເຄື່ອງອາໄຫລ່)	໑໕໐.໐໐໐	ຊອກຫາ
ໂ ຮ ມ	໒໒.໓໕໐.໐໐໐	

24 / VII

ໂຄງການເລກທີ ໔໗	ກອງປະຊຸມ : ພື້ນຖານເສດຖະກິດ ພະແນກການ : ກໍາແພງນະຄອນວຽງຈັນ
ການປັບປຸງຄວາມສະອາດໃນນະຄອນວຽງຈັນ.	

ນຶ່ງ : <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ້ງໝາຍຂອງໂຄງການ</u> : ເມື່ອພິຈາລະນາເບິ່ງທາງດ້ານສຸຂາພິບານແລະເພື່ອບໍ່ຢາກໃຫ້ຖນົນໃນວຽງຈັນກາຍເປັນບວກຄວາຍ ແລະຫວຍຮອງໃນຣະດູຝົນ ແລ້ວມັນເປັນສິ່ງຈໍາເປັນທີ່ສຸດທີ່ຈະຕ້ອງເຣັດຮອງນ້ຳອັນເໝາະສົມ ແລະວາງທໍ່ຣະບາຍນ້ຳໂສໂຄກອີກດ້ວຍ.

ຂ. <u>ບົດຊີ້ແຈງ</u> : ເມື່ອເບິ່ງຕາມແຜນຂອງກົມເຄຫະສະຖານແລະເທສບານແລ້ວ ເຮົາຈະເຫັນໄດ້ວ່າ ກ່ອນອື່ນໝົດຕ້ອງສ້າງ ອ່າງນ້ຳ (ແອຣ ມິ) ແລະທໍ່ຣະບາຍນ້ຳ ສໍາລັບວັກທີ່ນຶ່ງຂອງກິຈການນັ້ນ ໄດ້ກະໄວ້ວ່າຈະໄດ້ລົງມືສ້າງທໍ່ຣະບາຍນ້ຳ ທ່ອນທໍາອິດ.

ຄ. <u>ຂໍ້ມູນອື່ນໆ</u> : ການຕັ້ງຕົ້ນປະຕິບັດງານນີ້ ຈະຊ້າຫຼືໄວ ກໍ່ສຸດແລ້ວແຕ່ວ່າຈະຫາເງິນໄດ້ ໂຄງການນີ້ ເປັນໂຄງການທີ່ບໍ່ມີຄວາມໝູນທຽວພຽງພໍ ເງິນທີ່ຈະເອົາມາດໍາເນີນງານນີ້ຕ້ອງແມ່ນເງິນທີ່ຢູ່ໃນລັກສນະການຊ່ວຍເຫຼືອໂດຍບໍ່ແມ່ນເງິນມາລົງທຶນ. ກໍາແພງນະຄອນວຽງຈັນຈະຕ້ອງເປັນຜູ້ຊອກຫາເງິນກ້ອນນີ້ ໂດຍການຮ່ວມມືກັບກົມແຜນພັງ ແລະທະນາຄານລາວພັທນາ.

ງ. <u>ຄ່າໃຊ້ ຈ່າຍການຈັດສັນທຶນ</u> : ຈະຕ້ອງສົ່ງຜູ້ຊ່ຽວຊານດ້ານນີ້ ໑ ທ່ານ - ຄ່າໃຊ້ຈ່າຍ ໑໕.໔໐໐.໐໐໐ ກີບສໍາລັບປີ ໑໙໗໐-໗໑ ນີ້ ໄດ້ກະຄ່າໃຊ້ຈ່າຍໄວ້ ໗໔ .໙໓໔.໕໔໐ ກີບ. ດ້ານການຈັດສັນທຶນ ຈະຕ້ອງໄດ້ຊອກຫາ.

ສອງ : <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ	ກ່ອນວັນທີ ໑/ກ/ ກ໑	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກວັນທີ ໓໐/໖/ ກ໑
໑. ຊອກຫາເງິນ	ຣະຍະເວລາບໍ່ແນ່ນອນ ຊຶ່ງກິຈການອື່ນໆ ກໍຕ້ອງແລ້ວແຕ່ນຳອີກ					
໒. ຍົກຍ້າຍພວກທີ່ຢູ່ບ່ອນທີ່ຈະວາງທໍຣະບາຍນ້ຳ	------	------	------			
໓. ຈັດຕຽມສະຖານທີ່		------	------			
໔. ຂົນເຄື່ອງຂອງທີ່ຈະທຳງານໄປຍັງສະຖານທີ່			------	------	------	------
໕. ຕັ້ງຕົ້ນທຳງານ			======	======	======	

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ເງິນລົງທຶນ</u>		
໑. ຂຸດດິນໂພນໂນນສູງໃຫ້ຮາບພຽງ ໗໐.໖໙໑ ແມັດກວຸບ × ໕໐໒ ກີບ	໓໕.໔໘໐.໕໐໐	
໒. ຖົມບ່ອນເປັນຂຸມຫຼຸບໃຫ້ຮາບພຽງ ໒໒໖ ແມັດກວຸບ × ໔໐໐ ກີບ	໙໐.໔໐໐	
໓. ເບຕົງສຳລັບຮ່ອງທໍ່ ໑.໐໐໕ ແມັດກວຸບ × ໑໘.໓໓໐ກີບ	໑໘.໔໒໑.໖໕໒	ຊອກຫາ
໔. ຄ່າຍົກທັບ (໔໐% ຂອງຄ່າໃຊ້ຈ່າຍທັງໝົດ	໒໑.໐໐໐.໐໐໐	
ຂ. <u>ການສຶກສາ</u>		
໑. ການສຶກສາຄົ້ນຄ້ວາໂດຍຜູ້ຊ່ຽວຊານ O.M.S.	໑໕.໒໐໐.໐໐໐	O.M.S. O.S.N.
ໂ ຣ ມ	໙໐.໑໘໒.໕໕໐	

ໂຄງການເລກທີ ໔໗	ກອງປະຊຸມ : ພື້ນຖານເສຖກິດ ພະແນກການ : ກຳແພງນະຄອນວຽງຈັນ
ພະແນກດັບເພີງ	

ນຶ່ງ : <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> : ສຳຣັບເມືອງໃຫຍ່ແລະສຳຄັນ ຄືນະຄອນວຽງຈັນນີ້ ເປັນສິ່ງຈຳເປັນທີ່ສຸດທີ່ຕ້ອງໃຫ້ມີພະແນກດັບເພີງ ກ່ອນປີ ໑໙໖໙ ພະແນກດັ່ງກ່າວນີ້ ບໍ່ມີເລີຍ ຢູ່ໃນເມືອງລາວ.

ຂ. <u>ບົດຊີ້ແຈງ</u> : ເພື່ອໃຫ້ພຽງພໍກັບຄວາມຕ້ອງການ ໃນນະຄອນວຽງຈັນ ເປັນສິ່ງຈຳເປັນທີ່ຕ້ອງໃຫ້ມີຣົຖມອດໄຟຮອດ ໑໐ ໜ່ວຍ ແລະຕ້ອງຊອກໃຫ້ໄດ້ປີລະ ໔໐ ໜ່ວຍ ພາຍໃນຫ້າປີ ແຕ່ລະໜ່ວຍປະກອບດ້ວຍ ຣົຖນ້ຳຄັນນຶ່ງ ຣົດມອດໄຟຄັນນຶ່ງ ນອກຈາກນັ້ນ ຍັງຕ້ອງໄດ້ກະຄ່າໃຊ້ຈ່າຍໃນການດຳເນີນງານອີກ (ເຄື່ອງເຄມີຕ່າງໆນ້ຳມັນເຊື້ອເພີງ ເຄື່ອງອະໄຫລ່ ການສ້ອມແປງຣົຖແລະອື່ນໆ)

ຄ. <u>ຂໍ້ມູນອື່ນໆ</u> : ໃນປີ ໑໙໖໙-໗໐ ໄດ້ຊື້ແລ້ວ ສອງໜ່ວຍ ສຳຣັບ ໑໙໗໐-໗໑ ນີ້ ຕ້ອງຊື້ຕື່ມອີກສອງໜ່ວຍ ແລະບົວຣະບັດສ້ອມແປງສິ່ງທີ່ມີແລ້ວ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ສຳຣັບປີ ໑໙໗໐-໗໑ ໄດ້ກະຄ່າໃຊ້ຈ່າຍໄວ້ ໔໕.໗໐໐.໐໐໐ ກີບ.

ຈາກງົບປະມານແຫ່ງຊາດ ໔.໗໐໐.໐໐໐ ກີບ ຄ່າດຳເນີນງານແລະລຳລຽງຕ່າງໆ

ຈະຕ້ອງຊອກຫາອີກ ໔໑.໐໐໐.໐໐໐ ກີບ ສຳຣັບຊື້ຣົດມອດໄຟ ຣົດນ້ຳແລະເຄື່ອງມອດໄຟແນວລະ ໔ ຍີກ້າຍ ໘໗໘.໘໙໖ ກີບ.

ສອງ : ປະຕິທິນການດຳເນີນງານ

	ກ່ອນວັນທີ ໑/໗/໗໑	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກວັນທີ ໓໐/໖/໗໑
໑. ຊອກຫາແຫຼ່ງຂອງທຶນ	------	------	------	------	------	
໒. ສັ່ງເຄື່ອງ		----				
໓. ເຄື່ອງມາເຖິງ				----		
໔. ຊື້ນ້ຳມັນເຊື້ອເພີງ		----	----	----	----	
໕. ຊື້ເຄື່ອງອະໄຫຼ່		----	----	----	----	
໖. ຊື້ເຄື່ອງອື່ນໆ		------	------	------	------	
໗. ພະນັກງານ		------	------	------	------	

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ເງິນລົງທຶນ :	໒໑.໐໐໐.໐໐໐	
- ເຄື່ອງອຸປະກອນ :		
- ລົດມອດໄຟ ໒ ຄັນ	໑໐.໔໐໐.໐໐໐	
- ລົດນ້ຳ ໒ ຄັນ	໗.໐໐໐.໐໐໐	ຈະຕ້ອງຊອກຫາ
- ເຄື່ອງມອດໄຟ ໒ ຄັນ	໓.໖໐໐.໐໐໐	
ຂ. ເງິນດຳເນີນງານ	໔.໗໐໐,໐໐໐	
- ນ້ຳມັນເຊື້ອເພີງ	໑.໒໐໐.໐໐໐	
- ຄ່າບົວລະບັດອຸປະກອນ	໕໐໐.໐໐໐	
- ຄ່າສ້ອມແປງອຸປະກອນ	໗໐໐.໐໐໐	
- ເຄື່ອງນຸ່ງພະນັກງານ	໗໐໐.໐໐໐	ງົບປະມານແຫ່ງຊາດ
- ເຄື່ອງປະກອບ	໑.໐໐໐.໐໐໐	
- ເຄື່ອງອະໄຫຼ່	໖໐໐.໐໐໐	
ໂ ຣ ມ	໒໕.໗໐໐.໐໐໐	

ໂຄງການເລກທີ ໔໙	ກອງປະຊຸມ	: ພື້ນຖານເສດຖະກິດ
	ພະແນກການ	: ກົມການບິນພົລເຮືອນ
ການຕິດຕໍ່ກັບສູນກາງສາກົນໃກ້ຄຽງ		

໑. <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> : ປັດຈຸບັນ ການສົ່ງຂ່າວສານມ໊ອກສ໌ ຕ້ອງສົ່ງຜ່ານໄຊງ່ອນ ເພາະວ່າແມ່ນບ່ອນດຽວທີ່ລາວເຮົາສົ່ງຜ່ານໄດ້. ວິທີການດັ່ງກ່າວນີ້ ເຫັນວ່າຍຸ້ງຍາກແລະຊັກຊ້າຫລາຍ. ຄຽງຄູ່ກັບການຂະຍາຍເຕີ່ມຍົນວັດໄຕ, ເປັນສິ່ງຈຳເປັນທີ່ສຸດທີ່ຈະຕ້ອງຂະຍາຍການໂທຣະຄົມນາຄົມກັບສູນກາງອື່ນໆ.

ຂ. <u>ບົດຊີ້ແຈງ</u> : ຈະໄດ້ຕິດຕັ້ງໂທຣະພິມຣະຫວ່າງວຽງຈັນ ບາງກອກ ແລະ ໄຊງ່ອນ. ສຳຫລັບຊຸດທີ່ນຶ່ງ ໑໙໗໐-໗໑ ໄດ້ກະໄວ້ວ່າຈະຕິດຕັ້ງຣະຫວ່າງ ວຽງຈັນ-ບາງກອກ ກ່ອນ ສ່ວນວຽງຈັນ-ໄຊງ່ອນນັ້ນແມ່ນໃນໂອກາດຕໍ່ໄປ.

ຄ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ຄ່າໃຊ້ຈ່າຍທັງໝົດ	໔໙.໖໐໐.໐໐໐	ກີບ
ຄ່າໃຊ້ຈ່າຍສຳຫລັບ ໑໙໗໐-໗໑	໒໗.໐໐໐.໐໐໐	ກີບ

ຄ່າໃຊ້ຈ່າຍທີ່ຈຳເປັນສຳຫລັບການດຳເນີນງານໃນປີຕໍ່ໄປ.

<u>ປີທີ່ນຶ່ງ</u> : (໑໙໗໑-໗໒) ໔.໑໐໐.໐໐໐ ກີບ (ໃຊ້ຈ່າຍ. ໃນການຕິດຕັ້ງ ຊື້ເຄື່ອງມືວັດແທກທີ່ຈຳເປັນ ແກ່ການດຳເນີນງານ ເຄື່ອງອຸປກອນຕ່າງໆ)

<u>ປີທີສອງ</u> : (໑໙໗໒-໗໓) ໑.໕໐໐.໐໐໐ ກີບ

ສຳຫລັບຊື້ເຄື່ອງອະໄຫລ່.

<u>ແຫລ່ງຂອງທຶນ</u> : ແມ່ນງົບປະມານແຫ່ງຊາດ.

ສອງ : <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ	ກ່ອນວັນທີ ໑.໗/໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກວັນທີ ໓໐/໖/໗໑
໑. ການສຶກສາເພີ່ມຕື່ມ	+--------+					
໒. ຊອກຫາເຄື່ອງອຸປກອນຕິດຕໍ່ຕ່າງໆ	--+	---				
໓. ຕິດຕໍ່ກັບເຈົ້າໜ້າທີ່ຝ່າຍໄທເພື່ອເບິ່ງເຣື່ອງການບັນຈຸອຸປກອນແລະວິທຍາການກ່ຽວກັບຄື້ນສຽງ	-----	-----				
໔. ສັ່ງຊື້ເຄື່ອງອຸປກອນຕ່າງໆ		----	+----------+	----		
໕. ກຽມສະຖານທີ່ຕິດຕັ້ງແລະຕິດຕັ້ງສາຍອາກາດ(ສາຍອັງແຕນ)			+-----			
໖. ກວດເບິ່ງສະພາບຂອງອຸປກອນທີ່ສົ່ງມາເຖິງແລ້ວ				-----+		
໗. ຕິດຕັ້ງເຄື່ອງອຸປກອນ				-----+	-----	
໘. ທົດລອງກັບບາງກອກ					-----+	
໙. ນຳເງິນອອກໃຊ້ຈ່າຍ		-----+	-----			
໑໐. ດຳເນີນງານການຕິດຕໍ່						+-------

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສົມທຶນ</u>

ສ່ວນປະກອບຂອງຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສົມທຶນ
ກ. <u>ເງິນລົງທຶນ</u> : ເຄື່ອງອຸປກອນທັງໝົດຄືເຄື່ອງສົ່ງເຄື່ອງຮັບແລະເຄື່ອງປະກອບ, ສາຍອາກາດແລະເສົາສາຍອາກາດ	໒໔.໐໐໐.໐໐໐	ງົບປະມານແຫ່ງຊາດ
ຂ. <u>ຄ່າດຳເນີນງານ</u> : ເຄື່ອງອາໄຫລ່	໓.໐໐໐.໐໐໐	
ໂ ຣ ມ	໒໗.໐໐໐.໐໐໐	

ໂຄງການເລກທີ ໕໐	ກອງປະຊຸມ : ພົນຖານເສຖກິດ ພະແນກ : ກົມແຜນທີ່ແຫ່ງຊາດ
ຫ້ອງອັດຮູບຖ່າຍທາງອາກາດ	

ນຶ່ງ : <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> : ການໃຊ້ວິທີການຖ່າຍຮູບທາງອາກາດ ອຳນວຍຄວາມສະດວກຢ່າງໃຫຍ່ຫລວງ ໃຫ້ແກ່ການແຕ້ມແຜນທີ່ແລະອື່ນໆ. ການຈັດຕັ້ງຫ້ອງອັດຮູບຖ່າຍອາກາດ ຊ່ວຍໃຫ້ໄດ້ໃຊ້ຮູບທີ່ຖ່າຍທາງອາກາດ ຊຶ່ງມີມາກ່ອນແລ້ວ.

ຂ. <u>ບົດຊີ້ແຈງ</u> : ກົມແຜນທີ່ແຫ່ງຊາດມີອຸປກອນແດ່ແລ້ວບາງຢ່າງ ເພື່ອຕັ້ງຕົ້ນວຽກການ ສ່ວນພນັກງານເຕັກນິກນັ້ນ ກຳລັງອົບຮົມຢູ່. ສຳຣັບປີ ໑໙໗໐-໗໑ ນີ້ຕ້ອງພຍາຍາມຫາວິທີທາງເພື່ອເຮັດຫ້ອງອັດຮູບໃຫ້ແລ້ວ. ນອກນັ້ນ, ກົມແຜນທີ່ຍັງມີຄວາມຈຳເປັນທີ່ສຸດ ກ່ຽວກັບຜູ້ຊ່ຽວຊານຜູ້ນຶ່ງ ສຳລັບເຣື່ອງຖ່າຍຮູບ ທາງອາກາດ.

ຄ. <u>ຄ່າໃຊ້ຈ່າຍແລະການຈັດສົມທົບ</u>

- ຄ່າໃຊ້ຈ່າຍທັງໝົດ	໓໐.໓໐໐.໐໐໐ ກີບ
- ເງິນລົງທຶນ	໗.໐໐໐.໐໐໐ ກີບ
- ຄ່າດຳເນີນງານ	໒໓.໓໐໐.໐໐໐ ກີບ
- ເງິນເຫຼືອຈາກ ໑໙໖໙-໗໐	໕.໗໒໖.໒໘໘ ກີບ
ສຳລັບ ໑໙໗໐-໗໑	໗.໓໐໐.໐໐໐ ກີບ
ໂ ຣ ມ :	໑໓.໐໒໖.໒໘໘ ກີບ

ຄ່າໃຊ້ຈ່າຍທັງໝົດໄດ້ມາຈາກງົບປະມານແຫ່ງຊາດ. ສ່ວນຜູ້ຊ່ຽວຊານ ນຶ່ງຄົນນັ້ນແມ່ນອົງການສະຫະປະຊາຊາດເປັນຜູ້ຮັບພາຣະ.

ສອງ : ປະຕິທິນການດຳເນີນງານ :

ການດຳເນີນງານ	ກ່ອນວັນທີ ໑/໗/໗໑	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງຈາກວັນທີ ໓໐/໖/໗໑
໑ ສັ່ງແລະຕິດຕໍ່ເຄື່ອງອຸປະກອນ ປັບອາກາດ		----	----	----		
໒ ເຄື່ອງໂຮງການໂຕະຕັ່ງ				----	----	
໓. ເຄື່ອງອຸປະກອນການເຕັກນິກ		----	----	----		
໔ ວຽກການຈັດແຈງທີ່ດິນ		----	----	----		
໕ ແຕ້ມແຜນແລະກາຍຄືນເຂົ້າ ສູ່ສະພາບຖາວອນ	----	----	----	----	----	----
໖ ເບັ້ຽລ້ຽງພາຍໃນປະເທດ	----	----	----	----	----	----
໗ ເບັ້ຽລ້ຽງນອກປະເທດ				----	----	----

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ເງິນລົງທຶນ :	໘.໙໒໓.໒໘໘	
- ຈັດສຖານທີ່	໕.໗໒໓.໒໘໘	ຈາກງົບປະມານ ໑໙໖໙-໗໐
	໑.໗໐໐.໐໐໐	ຈາກງົບປະມານ ໑໙໗໐-໗໑
- ເຄື່ອງອຸປະກອນໂດຍສະເພາະ (ຈາກຕ່າງປະເທດ)	໑.໕໐໐.໐໐໐	ຈາກງົບປະມານ ໑໙໗໐-໗໑
ຂ. ຄ່າດຳເນີນງານ :	໕.໔໗໐.໐໐໐	
- ຈັດແຈງສະຖານທີ່ ແລະພະນັກງານ	໑.໓໐໐.໐໐໐	ຈາກງົບປະມານແຫ່ງຊາດ
- ພະນັກງານປະຈຳ	໑.໗໐໐.໐໐໐	ງົບປະມານດຳເນີນງານທຳມະດາ
- ເຄື່ອງອຸປະກອນຕ່າງໆ	໗໐໐.໐໐໐	ງົບປະມານແຫ່ງຊາດ
- ຄ່າຕ່າງໆ ຄື : ໄຟຟ້າ	໑.໓໐໐.໐໐໐	ງົບປະມານດຳເນີນງານທຳມະດາ
ນ້ຳ	໑໗໐.໐໐໐	
- ເຄື່ອງອາໄຫລ່ແລະຄ່າສ້ອມແປງ	໑.໐໐໐.໐໐໐	ງົບປະມານແຫ່ງຊາດ
ຄ. ເງິນເບັ້ຍລ້ຽງ :	໓.໖໐໐.໐໐໐	
- ພາຍໃນປະເທດ	໑.໑໐໐.໐໐໐	ງົບປະມານແຫ່ງຊາດ
- ຢູ່ຕ່າງປະເທດ	໒.໕໐໐.໐໐໐	ອົງການສະຫະປະຊາຊາດ
ໂຮມ ໑	໕.໗໒໓.໒໘໘	ຈາກງົບປະມານແຫ່ງຊາດ
ໂຮມ ໒	໗.໓໐໐.໐໐໐	ງົບປະມານແຫ່ງຊາດ ໗໐-໗໑
ໂຮມ ໓	໒.໕໐໐.໐໐໐	ສຫະປະຊາຊາດ
ໂຮມ ໔	໓.໑໗໐.໐໐໐	ງົບປະມານດຳເນີນງານທຳມະດາ

ໝາຍເຫດ : ສ່ວນທີ່ກ່ຽວກັບ ລາຍງານ ປີ ໑໙໖໙-໗໐ ນັ້ນ ຕົວເລກ ໃນຕາຕະລາງອາດຈະບໍ່ສອດຄ່ອງກັນກັບໃນລາຍງານງົບປະມານແຫ່ງຊາດ. ການຍົກຍ້າຍແທນງົບປະມານຕ່າງໆ ອາດຈະຕ້ອງເຮັດເປັນໃບສັນຍາກູ້ຢືມເປັນສ່ວນໆໄປ.

24/VII
ຫ້າມຈຳໜ່າຍ

ໂຄງການເລກທີ ໕໑	ກອງປະຊຸມ : ພື້ນຖານເສຖກິດ ພແນກການ : ກົມແຜນທີ່ດິນແຫ່ງຊາດ
ແ ຜ ນ ທີ່ ດິ ນ	

ນຶ່ງ. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> : ຍ້ອນວ່າມີການຂຍາຍເມືອງຕ່າງໆ ໃນທົ່ວປະເທດ ແລະໃນທີ່ວຽງຈັນ, ຈຳເປັນທີ່ສຸດ ທີ່ຕ້ອງໃຫ້ມີແຜນທີ່ດິນ ເພື່ອຈະໄດ້ຈຳກັດຂອບເຂດຕາດິນ ຂອງແຕ່ລະບຸກຄົນ.

ຂ. <u>ບົດຊີ້ແຈງ</u> ຕ້ອງຊອກຫາອຸປກອນຕ່າງໆ ທີ່ຈຳເປັນສຳລັບ ພແນກແຜນທີ່ດິນແຫ່ງຊາດ.

໒. ວາງຫລັກແຜນຕາດິນ ໂດຍກົມແຜນທີ່ແຫ່ງຊາດ.

໓. ລົງມືປະຕິບັດງານກັບສະຖານທີ່.

໔. ວຽກການທີ່ກ່ຽວກັບການແບ່ງຕາດິນການຈົດບັນທຶກແລະຈັດເຂົ້າໃນຣະບົບບັນຊີຕາດິນ. ປະກອບພນັກງານທີ່ມີຄວາມຊຳນານ (ຕ້ອງມີພນັກງານສອງກອງ ໔ ຄົນ, ພນັກງານສຳລັບແຕ້ມແຜນ ໕ ຄົນ, ແລະວິສະວະກອນແຜນຕາດິນ ໑ ຄົນ) ໃນກິຈການດັ່ງກ່າວນີ້ ເປັນສິ່ງຈຳເປັນຕ້ອງມີຣົດຄັນນຶ່ງ ສຳລັບແລ່ນວຽກ.

ຄ. <u>ຂໍ້ມູນອື່ນໆ</u> ການດຳເນີນງານ ເພື່ອໃຫ້ວຽກການນີ້ ລຸລ່ວງໄປໄດ້ກະໄວ້ສຳລັບ ໔ ປີ ທຳອິດຂອງແຜນພັທນາສ່ວນໂຮມແຫ່ງຊາດ.

ງ. <u>ຄ່າໃຊ້ຈ່າຍແລະ ການຈັດສັນທຶນ</u> :

<u>ສຳລັບສົກປີ ໑໙໗໐ - ໗໑</u>

ງົບປະມານແຫ່ງຊາດ ກຳໜົດໄວ້ໃຫ້ ໒.໐໐໐.໐໐໐ ກີບ

(ໂຮມທັງສ່ວນທີ່ຍົກຍ້າຍມາ)

ອົງການຢູເສດ ໃຫ້ອຸປກອນໃຊ້ໃນການ

ແບ່ງທີ່ດິນຕາມຈຳນວນພນັກງານທີ່ທະວີຂຶ້ນແລະ

ທຶນອົບຣົມ-ການຊ່ວຍເຫລືອສ່ວນນີ້ ສຳລັບປີ ໑໙໗໐-໗໑ ຈະມີ

ຮອດ ໕.໙໐໐.໐໐໐ ກີບ.

ສຫະປະຊາຊາດຜູ້ຊ່ຽວຊານ ໑ ທ່ານ ໃນງົບປະມານ

໑໑.໕໐໐.໐໐໐ ກີບ.

ສອງ : ປະຕິທິນການດຳເນີນງານ

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງຈາກວັນທີ ໓໐/໖/໗໑
		໑໙໗໐ - ໑໙໗໑				
໑ ! ຝຶກຫັດອົບຮົມພນັກງານ	←=====	=======				
໒ ! ລົງມືປະຕິບັດງານໂດຍການເຫັນຊອບຂອງກົມແຜນທີ່ແຫ່ງຊາດ.		===				
໓ ! ກຳນົດເວລາຊອກຫາເຄື່ອງອູປກອນທີ່ຈຳເປັນ		=======				
໔ ! ເຄື່ອງຕ່າງໆສຳຫຼັບການຖ່າຍພາບທາງອາກາດ			=======	=======	=======	=======
໕ ! ການຖ່າຍພາບທາງອາກາດ			=======	=======	=======	=======
໖ ! ສຶກສາສິ່ງຕ່າງໆໃນດິນ				=======	=======	=======
໗ ! ສຶກສາອູມທະພູມແລະສະພາບທົ່ວໄປເພີ້ມເຕີມ				===	=======	=======
໘ ! ເບິ່ງເອກສານໃນຫ້ອງສຶກສາໃຫ້ລຶບຖ້ວນ					=======	=======
໙ ! ກວດເບິ່ງເອກສານ					=====	=======
໑໐! ເອກສານຖາວອນ					=====	=======

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ເ ງິ ນ ລົ ງ ທຶ ນ	໕.໙໐໐.໐໐໐	
- ເຄື່ອງອູປກອນທັງໝົດສຳຫຼັບການຖ່າຍພາບທາງອາກາດ.	໔໐໐.໐໐໐	
- ຫ້ອງສຳຫລັບເຮັດຮູບ	໒໐໐.໐໐໐	

(ຕໍ່)

	- ເຄື່ອງອຸປກອນສຳຫລັບເບິ່ງຮູບເພື່ອໃຫ້ແຈ່ມແຈ້ງ	໓໐໐.໐໐໐	
	- ເຄື່ອງອຸປກອນທັມດາ	໒໐.໐໐໐	
	- ເຄື່ອງໂຕະຕັ່ງຕ່າງໆ	໔໐.[illegible]໐໐	ງົບປະມານແຫ່ງຊາດ
	- ແລະບາງທີ່ຈະຊື້ຖືອີກນັ້ງລັບໃນຣະຫວ່າງ		
	- ອຸປກອນໃຊ້ໃນການຖ່າຍພາບພິມດິນ	໑.໔໐໐.໐໐໐	
	- ທຶນວີບຣີນ	໓.໔໐໐.໐໐໐	
໒.	<u>ຄ່າດຳເນີນງານ</u>	໑໘.໔໐໐.໐໐໐	
	- ຄ່າແຮງພາຍໃນ ໑໘ ເດືອນ	໓໔໐.໐໐໐	ງົບປະມານແຫ່ງຊາດ
	- ຜູ້ຊ່ຽວຊານຊ່ວຍເຫລືອໂດຍສຫະປະຊາຊາດ	໑໑.໔໐໐.໐໐໐	ສຫະປະຊາຊາດ
	- ເຄື່ອງອຸປກອນທີ່ຕ້ອງໃຊ້ໃນເວລາປະຕິບັດງານ	໑໔໐.໐໐໐	
	- ເຄື່ອງອຸປກອນສຳຫລັບໂຮງການ	໔໐.໐໐໐	ງົບປະມານແຫ່ງຊາດ
	- ສຳຫລັບສອມແປງຍານຍົນ	໑໔໐.໐໐໐	
	- ສຳຫລັບເຮັດຮູບ	໓໐໐.໐໐໐	
	ໂ ຮ ມ	໑໗.໔໐໐.໐໐໐	

໑໕໐ **ກອງປະຊຸມດ້ານການສຶກສາ**

໑໕໑– **ບົດແນະນຳເບື້ອງຕົ້ນ**

໑. **ຄຳແນະນຳແນວທາງທົ່ວໄປ.**

ກອງປະຊຸມ ດ້ານການສຶກສານີ້ ມີພາຣະໜ້າທີ່ຄົ້ນຄິດແລະສຶກສາຫາສາເຫດ ຂອງອຸປສັກຕ່າງໆ ແລະສຶກສາຫາຮູ້ໃນຄວາມຕ້ອງການຂອງການສຶກສາ, ແລະມີໜ້າທີ່ ວາງໂຄງການດຳເນີນງານ, ໝາຍຄວາມວ່າ ຕ້ອງກະຕວງຄວາມຕ້ອງການຂອງແຜນນີ້ໄວ້ລ່ວງໜ້າ, ວາງໂຄງການດຳເນີນງານແຕ່ລະໂຄງການໃຫ້ຖືກຕ້ອງແລະເໝາະສົມ ແລະພະຍາຍາມສນອງຄວາມຕ້ອງການນັ້ນ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ໃນຂອບເຂດ ແລະຕາມລຳດັບ ຂອງຄວາມຈຳເປັນ ໂດຍມີຈຸດປະສົງເພື່ອ :

ກ– ສົ່ງເສີມການຂ ຍາຍໂຕ, ລຳດັບຄວາມຮູ້ ແລະການພັທນາທີ່ເໝາະສົມ ຂອງພແນກ :

- ປະຖົມສຶກສາ ແລະການສຶກສາຜູ້ໃຫຍ່
- ມັທຍົມສຶກສາ : ອາຊີວະສຶກສາແລະການສຶກສາທົ່ວໄປ
- ອຸດົມ ສຶກສາ
- ການອົບຮົມຄຣູ
- ສາສນະສຶກສາ, ພຸທສາສນາ

ຂ– ສົ່ງເສີມປະຖົມສຶກສາພາກຕົ້ນ ໃຫ້ພໍກັບຄວາມຕ້ອງການຂອງປະເທດຊາດ ເພາະທຸກວັນນີ້ ສາມາດຈະຮັບເອົາເດັກໃນໂຮຮຽນໃຫ້ໝົດທຸກຄົນ ແລະອີກປະການໜຶ່ງກໍ່ເພື່ອຝຶກສອນຄວາມຮູ້ພື້ນຖານໃຫ້ນັກຮຽນເພື່ອຕໍ່ມັທຍົມສຶກສາ.

ຄ– ພະຍາຍາມຮຽກຮ້ອງໃຫ້ ສມາຄົມຕ່າງໆ, ຊາວບ້ານ ພ້ອມທັງທາງຮ້ານ ແລະບໍຣິສັດເອກຊົນ ຈົ່ງໃຫ້ຄວາມຮ່ວມໄມ້ຮ່ວມມື ແລະຄວາມຊ່ວຍເຫຼືອ ເພື່ອສົ່ງເສີມພັທນາ ດ້ານສັງຄົມແລະການສຶກສາ.

ງ– ພະຍາຍາມສນອງຄວາມຕ້ອງການ ທີ່ເພີ່ມຂຶ້ນເລື້ອຍໆ ທັງດ້ານປະຣິມານ ແລະດ້ານຄຸນພາບຂອງໂຮງຮຽນ.

ຈ– ສ້າງເງື່ອນໄຂ ທີ່ສຳຄັນແລະເໝາະສົມ ເພື່ອໃຫ້ໜຸ່ມນ້ອຍໃນໂຮງຮຽນທັງຫລາຍ ໄດ້ມີການຝຶກຝົນແລະການສຶກສາທີ່ຖືກກັບຄວາມຕ້ອງການ ຂອງປະເທດຊາດ.

ສ– ດັດແປງໃຫ້ດີຂຶ້ນກວ່າເກົ່າທາງດ້ານການອົບຮົມຄຣູ ດ້ານການຝຶກຝົນພນັກງານທ້ອງການີ, ຄົນງານແລະຊາວນາ ໃຫ້ມີຄວາມຮູ້ຄວາມສລາດຫລັກແຫລມ.

ຊ– ສົ່ງເສີມ ແລະພັທນາການສຶກສາ ເພື່ອໃຫ້ມີຄວາມຈເຣີນແລະກ້າວໜ້າຂຶ້ນໄປເປັນລຳດັບ.

໔. ຄຳແນະນຳແນວທາງໂດຍສະເພາະແຕ່ລະພແນກ :

ກ. ປະຖົມສຶກສາແລະການສຶກສາຜູ້ໃຫຍ່.

ທາງກົມປະຖົມສຶກສາແລະການສຶກສາຜູ້ໃຫຍ່ ໄດ້ຫຸ້ມເຮື່ອແຮງເພື່ອ :

- ສົ່ງເສີມແລະຂຍາຍກິຈການຂອງປະຖົມສຶກສາ ໂດຍການສາງສາໂຮງຮຽນຫລັງໃໝ່ ເພື່ອໃຫ້ທັນກັບປະຣິມານຂອງນັກຮຽນທີ່ເພີ່ມຂຶ້ນເລື້ອຍໆ.
- ໃຫ້ຄວາມສຳຄັນເປັນພິເສດ ໃນການຝຶກຝົນດ້ານປະຕິບັດງານ ໂດຍການກໍ່ຕັ້ງໂຮງງານ ຫ້ອງສົ່ງເກດການ ດ້ານວິທະຍາແລະດ້ານວັທນະທັມ.
- ສົ່ງເສີມການຕໍ່ຕ້ານ ການບໍ່ຮູ້ໜັງສື.

ສຳຫລັບແຜນດຳເນີນງານປະຈຳປີ ໑໙໗໐- ໗໑ ມີເງິນສຳຫລັບສ້າງສາພັທນາການສຶກສາດ້ານນີ້ ມີປະມານ ໑໔.໐໐໐.໐໐໐ ກີບ ທີ່ໄດ້ມາຈາກງົບປະມານແຫ່ງຊາດ ນອກນັ້ນກໍຍັງມີເງິນຊ່ວຍເຫຼືອຂອງມິດປະເທດມາສົມທົບ.

໒. ມັທະຍົມສຶກສາ.

໑. ທົ່ວໄປ

ມັທຍົມສຶກສາໂດຍທົ່ວໄປແລ້ວ ມຸ່ງໝາຍຈະເພີ່ມປະຣິມານຂອງໂຮງຮຽນມັທຍົມຂຶ້ນ ໃຫ້ຫລາຍກວ່າເກົ່າ ດ້ວຍການສ້າງສາ ໂຮງຮຽນດັ່ງກ່າວນີ້ຂຶ້ນ ຕາມເມືອງສຳຄັນຕ່າງໆ ແລະອ້ອມແອ້ມໂຮງຮຽນເກົ່າທີ່ມີຢູ່ແລ້ວ ທັງນີ້ກໍເພື່ອເວັ້ນຈາກການຫລັ່ງໄຫລເຂົ້າເມືອງຫລວງ ຂອງເລົ່ານັກຮຽນ ທີ່ຕ້ອງການຮຽນຕໍ່ຢູ່ໂຮງຮຽນມັທຍົມ. ແຕ່ເຖິງຢ່າງໃດເຮົາກໍຕ້ອງເບິ່ງ ຕາມສພາບການຂອງງົບປະມານແຫ່ງຊາດ ແລະຄວາມຊ່ວຍເຫຼືອ.

໔. ອາຊີວະສຶກສາ.

ອາຊີວະສຶກສານີ້ ກໍໄດ້ຈັດເຂົ້າໃນລຳດັບຄວາມສຳຄັນ ຂອງແຜນພັທນາດ້ານເສຖກິດແລະສັງຄົມແຫ່ງຊາດ, ໂດຍສະເພາະກໍແມ່ນການສຶກສາ ດ້ານປະຕິບັດງານ ແລະດ້ານວິຊາຊ່າງ.

ແຕ່ເຖິງຢ່າງໃດກໍດີ ໂດຍສະເພາະແລ້ວກໍແມ່ນໃນເມືອງລາວເຮົານີ້ ມີຜູ້ຄົນສ່ວນໃຫຍ່ທີ່ບໍ່ເຂົ້າໃຈດີ ໃນຄວາມສຳຄັນຂອງການສຶກສາດ້ານນີ້ ຈຶ່ງເຫັນມີຄວາມຈຳເປັນທີ່ຜູ້ຮັບຜິດຊອບ ຕ້ອງພະຍາຍາມເຂົ້າໃຈໃຫ້ເລິກຊຶ້ງ ໃນຄວາມສຳຄັນອັນມະຫາສານ ຂອງອາຊີວະສຶກສານີ້ ເພາະວ່າເປັນບ່ອນທີ່ໜຸ່ມນ້ອຍ ສາມາດຮ່ຳຮຽນເອົາຄວາມຮູ້ດ້ານວິຊາຊ່າງໂດຍສະເພາະ ຫຼື ຄວາມຮູ້ທົ່ວໄປທີ່ຈຳເປັນ ເພື່ອຈະໃຫ້ໄປປະຕິບັດໜ້າທີ່ດ້ານຕ່າງໆ ດ້ານການຊ່າງ, ດ້ານເສຖກິດ, ດ້ານການປົກຄອງ ແລະດ້ານອື່ນໆ ໃນແຜນດຳເນີນງານປະຈຳປີ ໑໙໗໐-໗໑ ນີ້, ເພິ່ນກໍໄດ້ເນັ້ນເຖິງ :

- ການເພີ່ມຕື່ມໂນງຮຽນ ທັງພາກວິຊາຊ່າງແລະພາກປະຕິບັດ
- ການຈັດຕັ້ງສະຫະກອນ ພາຍໃນໂຮງຮຽນມັທຍົມການຊ່າງ ເພື່ອການຜລິດຜົນແລະເປັນແຫຼ່ງຫາເງິນຄ່າໃຊ້ຈ່າຍໄປໃນຕົວ.
- ວາງໂຄງການເພື່ອໃຫ້ຮູ້ ໃນຄວາມຕ້ອງການຂອງປະເທດຊາດດ້ານກຳລັງຄົນ.

ຄ. ອຸດົມສຶກສາ

ອຸດົມສຶກສານີ້ ມີຄວາມສຳຄັນຕໍ່ປະເທດຊາດບ້ານເມືອງຫລາຍທີ່ສຸດ ເພາະວ່າເປັນບ່ອນທີ່ໃຫ້ໜຸ່ມນ້ອຍ ທີ່ຈົບຈາກມັທຍົມສຶກສາ ໄດ້ສຶກສາຕໍ່ແລະຝຶກຝົນເອົາຄວາມຮູ້ຊັ້ນສູງໃນດ້ານຕ່າງໆ ເພື່ອຈະເປັນນັກຊ່ຽວຊານທີ່ມີຄວາມຊຳນານດີ.

ດ້ວຍເຫດວ່າເມືອງລາວເຮົານີ້ ຍັງມີສະຖາບັນການສຶກສາຊັ້ນສູງ ບໍ່ພຽງພໍ ຕົວຢ່າງ:

- ສຖາບັນການສຶກສາດ້ານກົດໝາຍແລະການປົກຄອງ
- ສຖາບັນອົບຮົມຄຣູ.

ຈຶ່ງເຫັນວ່າມີຄວາມຈຳເປັນທີ່ເຮົາຄວນທຸ້ມເທຫື່ອແຮງ ເພື່ອພັທນາການສຶກສາດ້ານນີ້ ໂດຍມີຈຸດປະສົງຢາກສົ່ງເສີມອຸດົມສຶກສານີ້ຢູ່ແລ້ວ, ພາຍໃນຂອບເຂດຂອງຄວາມສາມາດດ້ານການເງິນ ທາງຣັຖບານຈຶ່ງໄດ້ໃຫ້ລຳດັບຄວາມສຳຄັນຕໍ່ :

- ການສົ່ງເສີມ ນັກສຶກສາທີ່ຈົບຈາກສຖາບັນເມືອງລາວ ໄປອົບຮົມຕໍ່ທີ່ຕ່າງປະເທດ ເພື່ອຝຶກຝົນຄວາມຮູ້ໃຫ້ເລິກເຊິ່ງຕື່ມອີກ.
- ການດັດແປງ ສຖາບັນທີ່ມີຢູ່ພາຍໃນປະເທດໃຫ້ດີມີຄຸນພາບ
- ການສຶກສາຄົ້ນຄ້ວາເບິ່ງຄ່າທີ່ສົ່ງນັກສຶກສາ ໄປຮຽນຕໍ່ທີ່ຕ່າງປະເທດ ແລະຄ່າທີ່ຈະສ້າງສະຖາບັນ ຫຼືມະຫາວິທຍາລັຍອື່ນ ພາຍໃນປະເທດ ຖ້າວ່າຄ່າໃຊ້ຈ່າຍເທົ່າໆກັນ ທາງການກໍຈະໄດ້ລົງມືສ້າງມະຫາວິທຍາລັຍອື່ນໃນປະເທດ.

ງ. ການສຶກສາ ດ້ານການອົບຮົມຄຣູ.

ອີງໃສ່ສະພາບການປັດຈຸບັນ ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງ ເລັ່ງລັດພັທນາໂດຍໄວທີ່ສຸດ ເຣື່ອງການອົບຮົມຄຣູ ເພາະວ່າປະເທດຊາດຂອງເຮົາ ໄດ້ພະເຊີນໜ້າກັບຄວາມຂາດແຄນອາຈານສອນ ມາແຕ່ດົນແລ້ວ, ໂດຍສະເພາະກໍແມ່ນອາຈານສອນ ຊັ້ນ-ມັທຍົມແລະຊັ້ນອຸດົມສຶກສາສຳຫຣັບນາຍຄຣູຊັ້ນປະຖົມນັ້ນ, ທາງການກໍມີນະໂຍບາຍທີ່ຈະຍົກຖານະຄວາມຮູ້ ໃຫ້ຂຶ້ນຈາກທີ່ເປັນຢູ່ປັດຈຸບັນ, ໂດຍມີການຈັດຕັ້ງການຝຶກອົບຮົມ ຫຼືຕໍ່ເວລາຮຽນໃຫ້ເໝາະສົມ ກັບແຜນພັທນາສ່ວນໂຮມແຫ່ງຊາດ.

ສຳຫຼັບແຜນດຳເນີນງານປະຈຳປີ, ກໍໄດ້ເນັ້ນເຖິງການຂະຫຍາຍກິຈການຂອງການສຶກສາດ້ານນີ້ ໂດຍມີການສ້າງສາໂຮງຮຽນອົບຮົມຄຣູຫຼັງໃຫມ່ ແລະດັດແປງຄູນພາບຂອງສະຖາບັນຕ່າງໆ ທີ່ມີຢູ່ທົ່ວໂລກ (ການສ້າງສາຫ້ອງທົດລອງ). ນອກນີ້, ທາງຣັຖບານກໍຍັງໄດ້ ອະນຸມັດທຶນສຶກສາທີ່ຕ່າງປະເທດ ເພື່ອໃຫ້ພໍກັບຄວາມຕ້ອງການດ້ານອາຈານສອນແຜນງຕ່າງໆ ຢູ່ໂຮງຮຽນມັທຍົມການຊ່າງ ແລະຢູ່ໂຮງຮຽນມັທຍົມຕ່າງໆ. ສັງເກດເຫັນວ່າຈຳນວນອາຈານຕ່າງຊາດ ທີ່ສອນຢູ່ເມືອງລາວນີ້ ກໍມີຫລາຍເຕັມທີ ແຕ່ປານນັ້ນກໍຍັງບໍ່ພໍກັບຄວາມຕ້ອງການ.

ຄ. ສາສນະສຶກສາ ແລະ ພຸທສາສນາ

ພວກເຮົາບໍ່ຄວນລືມຄວາມສຳຄັນ ຂອງການສຶກສາດ້ານນີ້ ເພາະໃຜໆກໍຄົງຈະເຂົ້າໃຈດີວ່າເມືອງລາວສມັຍກ່ອນ ໄດ້ຝຶກສອນອົບຮົມນັກຂຽນ ນັກແຕ່ງກາບກອນ, ນັກອອກແບບ ການສ້າງສາເຮືອນຊານ ຢູ່ໃນວັດວາອາຮາມເທົ່ານັ້ນ. ຈົນເຖິງທຸກວັນນີ້ ການສຶກສາດ້ານນີ້ ກໍຍັງມີຄວາມສຳຄັນຫລາຍ ໃນການພັທນາສົ່ງເສີມ ດ້ານວັທນະທັມ ເສຖກິດແລະດ້ານສັງຄົມ.

ໂດຍມີຈຸດປະສົງດັ່ງນີ້, ເຮົາຈຶ່ງພຍາຍາມດັດແປງ ສາສນະສຶກສາ ໃຫ້ຖືກແລະເຫມາະສົມກັບສະພາບການປັດຈຸບັນ ທັງນີ້ກໍເພື່ອໃຫ້ມີສ່ວນຊ່ວຍໃນການ ສຶກສາຂອງຊາວຊົນນະບົດ ແລະການຕໍ່ຕ້ານການບໍ່ຮູ້ຫນັງສື.

໒໓໘ : ໂຄງການຂອງກອງປະຊຸມ ດ້ານການສຶກສາ

ໂຄງການເລກທີ ໕໘-໕໔-໕໕	ກອງປະຊຸມ : ດ້ານການສຶກສາ ພະແນກການ : ກົມປະຖົມສຶກສາ

ນຶ່ງ : <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> : ຈຸດປະສົງຂອງໂຄງການເລກທີ ໕໘-໕໔-໕໕ ກໍໄດ້ມີຈຸດໝາຍສ່ວນໃຫຍ່ ທີ່ຈະເພີ່ມຈຳນວນໂຮງຮຽນ ແຕ່ລະເມືອງຊຶ່ງແຕກຕ່າງກັນ ບໍ່ວ່າໃຫຍ່ຫຼືນ້ອຍໃນພຣະຣາຊອານາຈັກ ກອງປະຊຸມຈະໄດ້ໄຂຂຶ້ນ ວັນທີ ໓໐/໑໒/໑໙໖໙ ທີ່ກະຊວງແຜນຜັງແລະການຮ່ວມມື ກອງປະຊຸມບໍ່ຕ້ອງການໃຫ້ສາມໂຄງການຕ່າງໆນີ້ຕ້ອງແຕກກະຈາຍ ຈຶ່ງຢາກຈະທ້ອນໂຮມສາມໂຄງການ ໕໘-໕໔-໕໕ ໃຫ້ເປັນໂຄງການດຽວ ແລະມີຈຸດໝາຍດຽວກັນ ເພື່ອເພີ່ມຕື່ມແລະດັດແປງຄຸນພາບຂອງການສຶກສາ ທີ່ຂາດໄປໃຫ້ດີຂຶ້ນໃນເມືອງຕ່າງໆ.

ຂ. <u>ບົດຊີ້ແຈງ</u> : ສຳລັບແຜນດຳເນີນງານ ປະຈຳປີ ໑໙໗໐/໗໑ ນີ້ ເຮົາມີໂຄງການຈະສ້າງໂຮງຮຽນປະຖົມສຶກສາອີກສາມຫຼັງ, ໂຮງຮຽນເຫຼົ່ານັ້ນຈະຕ້ອງມີ ໘ ຫຼື ໑໐ ຫ້ອງ ແລະຈະສ້າງຢູ່ຈຳປາສັກ, ວັງວຽງ ແລະວຽງຈັນ (ດົງນາໂຊກ) ແບບຊ່ວຍເຫຼືອຕົນເອງ.

ຄ. <u>ຂໍ້ມູນອື່ນໆ</u> : ແລະໂຮງຮຽນອີກສາມຫຼັງ ຈະຕ້ອງເຮັດໃນເວລາຕໍ່ໄປ ອີກຢ່າງນຶ່ງເຮົາຕ້ອງເຂົ້າໃຈວ່າ ງົບປະມານ ໑໙໖໙-໗໐ ນັ້ນຕ້ອງໃຫ້ເອົາອອກກ່ອນວັນທີ ໓໐/໓/໗໐

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

ຄ່າໃຊ້ຈ່າຍປະຈຳປີ ໑໙໗໐-໗໑	໓໕.໔໐໐.໐໐໐ ກີບ
ກົມງົບປະມານແຫ່ງຊາດ	໑໐.໔໐໐.໐໐໐ ກີບ
ຢູ່ເສດ	໘໕.໐໐໐.໐໐໐ ກີບ

<u>ໝາຍເຫດ</u> : ເພື່ອໃຫ້ກິຈການດຳເນີນຕໍ່ໄປ ໃນສ່ວນຂອງງົບປະມານປະຈຳປີນັ້ນ ຈຶ່ງໃຫ້ໂຄງການທັງສາມ ແຍກກັນໄວ້. ໂຮມຍົກຍ້າຍ : ໑໗.໕ ລ້ານກີບ ໃນປີຕໍ່ໄປນີ້ ງົບປະມານແຫ່ງຊາດ ຈະໂຮມໂຄງການທັງສາມນີ້ ໃສ່ໂຄງການເລກທີ ໕໘ ອັນດຽວ, ໂຄງການ ໕໔ ແລະ ໕໕ ຈະຖືກງົດໄປ.

ສອງ <u>ປະຕິທິນການດຳເນີນງານ</u> :

ການດຳເນີນງານ	ກ່ອນວັນທີ ໑.໗.໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫລັງວັນທີ ໓໐.໖.໗໑
໑. ການຊອກຫາດິນ	----	----				
໒. ການແຕ້ມແຜນສ້າງສາກັບ ຢູເສດ		----				
໓. ການຕຽມພື້ນທີ່ດິນ			----			
໔. ການຕິດຕໍ່ເພື່ອດຳເນີນງານແຜນສ້າງສາ			----			
໕. ການປະມູນ			----			
໖. ເງິນທຶນທີ່ແນ່ນອນ			----			
໗. ພາກປະຕິບັດກໍ່ສ້າງ			-----			
໘. ການໝົດເສດສິ້ນຂອງວຽກການ			----	----	----	----

ໂຄງການເລກທີ ໕໓	ກອງປະຊຸມ : ດ້ານການສຶກສາ ພແນກການ : ກົມປະຖົມສຶກສາ
ຂຍາຍໂຮງຮຽນຕ່າງໆແຕ່ລະບ້ານໃນເຂດນອກ ເພື່ອໃຫ້ມີພື້ນຖານການຮຽນ	

ນຶ່ງ : <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> :

ໂຄງການນີ້ມີຈຸດປະສົງ ຈະແກ້ໄຂບັນຫາກ່ຽວກັບການຮຽນເບື້ອງຕົ້ນ ໃຫ້ໄວທີ່ສຸດ ໃນປະເທດຂອງເຮົາ ເພີ່ມຕື່ມອຸປະກອນຕ່າງໆອີກ ເພື່ອໃຊ້ໃນການພັທນາ ການຮຽນແລະ ຂໍຄວາມຮ່ວມໄມ້ຮ່ວມມືຈາກຊາວບ້ານ ດ້ານອຸປະກອນແລະຊັບສິນ.

ຂ. <u>ບົດຊີ້ແຈງ</u> :

ແຜນການຈະໄດ້ຕັ້ງຕົ້ນ ໃນຕົ້ນປີ ຂ້າງໜ້ານີ້ ທີ່ແບ່ງຢູ່ໃນ ແຜນປະຈຳປີ ໃນໂຄງການ ປີ ໑໙໗໐-໗໑ ວຽກການຈະຕ້ອງປະກອບດ້ວຍພນັກງານ, ການໃຊ້ຈ່າຍເພື່ອບຳຣຸງພຣະສົງ ແລະ ກົມກອງອື່ນໆ ເລືອກມາຈາກປະຊາຊົນ ໃນທ້ອງຖິ່ນຕ່າງໆ ບ່ອນຮຽນຈະຕ້ອງສ້າງຂຶ້ນດ້ວຍຄວາມຮ່ວມໄມ້ຮ່ວມມື ຈາກຣາສດອນ.

ຄ. <u>ຂໍ້ມູນອື່ນໆ</u> :

ວຽກການຈະໄດ້ຕັ້ງຕົ້ນໃນ ໑໙໗໐-໗໑ ໃຫ້ຖືກຕ້ອງຕາມແຜນທີ່ໄດ້ວາງໄວ້ແລະ ກໍ່ຕ້ອງປະຕິບັດໄປຕາມແນວທາງນີ້ສເນີ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

ຄ່າໃຊ້ ຈ່າຍປະຈຳປີ ໑໙໗໐-໗໑ — ໓.໕໐໐.໐໐໐ ກີບ

ງົບປະມານແຫ່ງຊາດ — ໓.໕໐໐.໐໐໐ ກີບ

ສອງ : <u>ປະຕິທິນການດຳເນີນງານ</u>.

ການດຳເນີນງານ.	ກ່ອນວັນທີ ໑/ກ/໗໑	໑໙໗໐ - ໑໙໗໑ ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ໄຕຣມາດທີ ໓	ຫຼັງວັນທີ ໓໐/໖/໗໐
໑. ການບັນຈຸຄຣູສອນ		-------				
໒. ຈ່າຍຄ່າເງິນເດືອນ			-------	-------	-------	-------

ສາມ : <u>ຕາຕະລາງແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
<u>ການດຳເນີນງານ</u> : ຣາຍຈ່າຍຄ່າຄຣູສອນແລະຂ້າຣາຊການ.	໔.໐໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
ໂຣມ	໔.໐໐໐.໐໐໐ ກີບ	

24/VII
ห้ามจำหน่าย

ໂຄງການເລກທີ ໕໖	ກອງປະຊຸມແຜນ ດ້ານການສຶກສາ ພແນກການ : ກົມມັທຍົມສຶກສາ
ໂຮງຮຽນ ມັທຍົມ ໂພນໂຮງ	

ນຶ່ງ : ຂໍ້ມູນທົ່ວໄປ .

ກ. ຈຸດມຸ່ງຫມາຍຂອງໂຄງການ : ວັດຖຸປະສົງຂອງໂຄງການນີ້ ແມ່ນເພື່ອເວັ້ນຈາກການຫຼັ່ງໄຫຼຂອງເຫຼົ່ານັກຮຽນ ທີ່ຈົບປະຖົມສຶກສາແລ້ວນັ້ນ ເຂົ້າໄປໃນເມືອງໃຫຍ່ຫມົດ ເພື່ອໄປສຶກສາຕໍ່ໃນເມືອງຕ່າງໆ ແລະພ້ອມດຽວກັນກໍເພື່ອຊ່ວຍເຫຼືອຫມູ່ນ້ອຍ ທີ່ບໍ່ມີທີ່ເພິ່ງພາອາໃສ ຢູ່ໃນເມືອງ ແຕ່ຢາກສຶກສາຕໍ່ ດັ່ງນັ້ນຈຶ່ງເຫັນວ່າເປັນທາງຄວນທີ່ຕ້ອງຂຍາຍ ໂຮງຮຽນມັທຍົມໄປທົ່ວພຣະຣາຊອານາຈັກ.

ຂ. ບັນຍາຍແຈງ : ໂຄງການປີນີ້ ແມ່ນການສ້າງສາ ຕໍ່ຈາກປີກ່ອນ ມີການສ້າງ

- ໂຮງຮຽນຫຼັງນຶ່ງ ສອງຊັ້ນແລະມີ ໑໘ ຫ້ອງຮຽນ
- ຫໍ້ຄົນຄວ້າສອງຫຼັງ
- ສ້າງໂຮງງານເພື່ອຝຶກຊ້ອມນັກຮຽນ ສອງຫຼັງ
- ຕິດຕັ້ງເຄື່ອງຫ້ອງນ້ຳຕ່າງໆ
- ຫ້ອງປາຖະກະຖາ
- ທີ່ພັກຂອງອາຈານສອນ ແລະຮົ້ວອ້ອມໂຮງຮຽນ

ຄ. ຂໍ້ມູນອື່ນໆ : ການປະຕິບັດໂຄງການນີ້ ຈະຕ້ອງສຳເຣັດລົງພາຍໃນ ສົກປີ ໑໙໗໐-໗໑ ແລະວຽກການນີ້ ໄດ້ລົງມືປະຕິບັດມາແຕ່ປີກ່ອນພູ້ນ ແລະກໍໄດ້ດຳເນີນຕໍ່ໄປ ໂດຍຊ່າງຮັບເຫມົາທີ່ປະມູນໄດ້.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍສຳຫຼັບປີນີ້	:	໖໗໙.໐໐໐ ກີບ
	+	໘໕.໖໐໐.໐໐໐ ກີບ
ໄດ້ຈາກຢູເສດ	:	໖໗໙.໐໐໐ ກີບ
	+	໘໘.໐໐໐.໐໐໐ ກີບ
ໄດ້ຈາກງົບປະມານແຫ່ງຊາດ	:	໖.໖໐໐.໐໐໐ ກີບ
ຍົກຍ້າຍ	:	໕.໗໙໙.໕໐໐ ກີບ

ສອງ : <u>ປະຕິທິນການດຳເນີນງານ</u> :

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫຼັງວັນທີ ໓໐/໖/໗໑
໑. ການລົງມືສາງສາ	‡------	‡------	‡------	‡------	‡---	
໒. ກຽມບຶກແຕ່ງແລະເຄື່ອງ ເອຕ່າງໆ					---‡	
໓. ເວລາທີ່ວຽກການຕ້ອງສຳເຣັດລົງ						!-----x

ສາມ : <u>ຕາຕຣາງແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ກ. <u>ການລົງທຶນ</u> : ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. ໃຊ້ໃນການສາງສາ	໘໕.໐໐໐.໐໐໐	ຢູເສດ
	໒.໓໐໐.໐໐໐	ງົບປະມານແຫ່ງຊາດ
໒. ພັສດຸ	໕໗.໕໐໐.໐໐໐	ຢູເສດ
- ອຸປະກອນໃຊ້ສອຍ ໃນຫ້ອງການຕ່າງໆ	໒.໐໐໐.໐໐໐	ງົບປະມານແຫ່ງຊາດ
໓. ການອົບຮົມ (ເບື້ອງານແລະຝຶກງານ)	໓໕.໐໐໐.໐໐໐	ຢູເສດ
ຂ. <u>ການດຳເນີນງານ</u>	໓໗.໐໐໐.໐໐໐	ຢູເສດ
ຄ. <u>ການຄົ້ນຄ້ວາ</u>	໘໑.໕໐໐.໐໐໐	ຢູເສດ
ໂຮມຂອງຢູເສດ	໒໙໖.໐໐໐.໐໐໐	
ໂຮມຂອງງົບປະມານແຫ່ງຊາດ	໓.໓໐໐.໐໐໐	

<u>ໝາຍເຫດ</u> : ເງິນຈຳນວນ ໒໙໖.໐໐໐.໐໐໐ ຂອງຢູເສດ ໄດ້ແຈກຢາຍ ໃຫ້ໂຄງການທັງສອງ ປີ ຄື ໑໙໖໙-໑໙໗໐ ແລະ ໑໙໗໐-໑໙໗໑ - ມີແຕ່ ໒໑໑.໐໐໐.໐໐໐ ເທົ່ານັ້ນ ທີ່ບັນຈຸລົງໃນຕາຕຣາງນ້ອນທ້າຍ ຂອງປີ ໑໙໗໐-໑໙໗໑.

ໂຄງການເລກທີ ໕໗	ກອງປະຊຸມ :	ດ້ານການສຶກສາ
	ພແນກການ :	ກົມມັທຍົມສຶກສາ
ວິທຍາລັຍຫວຍຊາຍ ແລະຄົງເຊໂດນ		

ນຶ່ງ : <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>:

ການສ້າງວິທຍາລັຍ ໃນເຂດທີ່ມີການຕິດຕໍ່ຍາກ ຈະຊ່ວຍໃຫ້ການສືບຕໍ່ໂຮງຮຽນປະຖົມສຶກສາ ຕາມໝູ່ບ້ານໄປສູ່ວິທຍາລັຍໃນເມືອງນ້ອຍ ຊຶ່ງຢູ່ຫ່າງໄກເມືອງໃຫຍ່ໆ ທັງຈະເປັນການຈອງຄົງນັກຮຽນໄວ້ເມືອງນ້ອຍໆ ແທນທີ່ຈະຫລັ່ງໄຫລເຂົ້າເມືອງໃຫຍ່ບ່ອນມີນັກຮຽນອຶ່ງອໍກັນ.

ຂ. <u>ບັດຊີແຈງ</u> : ຫ້ອງນີ້ໄດ້ສືບຕໍ່ການສ້າງອາຄານຫຼັງນຶ່ງຂຶ້ນແບ່ງເປັນທີ່ສມຸດ ຫ້ອງຄົ້ນຄວ້າ ເຮືອນຂອງທ່ານຜູ້ອຳນວຍການ. ແຕ່ລະປີກໍມີອາຈານ ສອງທ່ານມາເຕີມເຂົ້າປະຕິບັດງານສະເພາະວິທຍາລັຍຫວຍຊາຍ.

- ວິທຍາລັຍຄົງເຊໂດນກໍຈະຕ້ອງສ້າງຂຶ້ນໃນແບບດຽວກັນນີ້.

ຄ. <u>ຂໍ້ມູນອື່ນໆ</u> :

ໂຄງການໃຫຍ່ ໄດ້ຈັດໄວ້ສຳຫຣັບສາມປີ ແຕ່ໃນໂຄງການປະຈຳປີ ໑໙໗໐-໗໑ ຈະລົງມືປະຕິບັດໄປຕາມຂັ້ນ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

ກ. ວິທຍາລັຍຫວຍຊາຍ	- ຣາຍຈ່າຍປະຈຳປີ ໑໙໗໐-໗໑	໖.໐໐໐.໐໐໐ ກີບ
	- ການຈັດສັນທຶນ - ກົມງົບປະມານແຫ່ງຊາດ	
ຂ. ວິທຍາລັຍຄົງເຊໂດນ	- ຣາຍຈ່າຍປະຈຳປີ	໑໗.໐໐໐.໐໐໐ ກີບ
- ການຈັດສັນທຶນ	- ງົບປະມານແຫ່ງຊາດ	໕.໐໐໐.໐໐໐ ກີບ
	- ຢູເສດ	໘.໐໐໐.໐໐໐ ກີບ
	- ທ້ອງຖິ່ນ	໔.໐໐໐.໐໐໐ ກີບ

ຍົກຍ້າຍສຳຣັບ ວິທຍາລັຍ ຫວຍຊາຍ : ໕.໔໘໐.໐໐໐

<u>ໝາຍເຫດ</u> : ງົບປະມານແຫ່ງຊາດ ໄດ້ຮັກສາງົບປະມານໃໝ່ໄວ້ແຕ່ ໙.໐໐໐.໐໐໐ ກີບ ແທນທີ່ຈະເປັນ ໑໑.໐໐໐.໐໐໐. ສ່ວນຈຳນວນທີ່ໝາຍໄວ້ ໒.໐໐໐.໐໐໐ ກີບ ອາດຈະໃຊ້ຈ່າຍໂດຍຖືເປັນສ່ວນເກີນຂອງງົບປະມານ ພາຍຫລັງທີ່ ງົບປະມານໄປແລ້ວ.

ສອງ : ປະຕິທິນການດຳເນີນງານ : ໂຮງຮຽນມັທຍົມ ຫ້ວຍຊາຍ

ການດຳເນີນງານ	ກ່ອນວັນທີ ໑/໗/໗໑.	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫລັງວັນທີ ໓໐/໖/໗໐.
໑. ການຊອກຫາທີ່ດິນ	×					
໒. ການແຕ້ມແຜນສ້າງສາ	×					
໓. ການຮຽກປະມູນ	×					
໔. ການລົງມືປະຕິບັດງານ	-----	--------	--------	----		
໕. ການຕົກແຕ່ງແລະ ໃສ່ເຄື່ອງເອຕາງໆ				-----		
໖. ເວລາທີ່ຕ້ອງໃຫ້ວຽກ ເສັດສົມໃຊ້ໄດ້.					-------	

ສາມ : ຕາຕະລາງແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສົມທົບ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສົມທົບ
໑. ຄ່າໃຊ້ຈ່າຍໃນການສ້າງສາ	໕.໐໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
໒. ຊຸດເຄື່ອງໃຊ້ສອຍຕ່າງໆ ໃນຫ້ອງການ	໑.໐໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
ໂ ຮ ມ	໖.໐໐໐.໐໐໐ ກີບ	

ສາມ : <u>ປະຕິທິນການດຳເນີນງານ</u> : ໂຮງຮຽນມັທຍົມ "ຄົງຊຸໂດມ"

ການດຳເນີນງານ	ກ່ອນ ວັນທີ ໑-໗.໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ.໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງວັນທີ ໓໐.໖.໗໑
໑. ການຊອກຫາທີ່ດິນ	----					
໒. ການແຕ້ມແຜນສ້າງສາ	----					
໓. ການຮຽກປະຊຸມ		----				
໔. ການລົງມືປະຕິບັດງານ		--------	--------	--------	------	
໕. ການຕົກແຕ່ງແລະໃສ່ເຄື່ອງເຮືອນ					--	----
໖. ກຳນົດທີ່ວຽກການຕ້ອງ ສຳເຣັດແລະໃຊ້ການໄດ້						------

ສາມ : <u>ຕາຕຣາງແຍກ ສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. ຄ່າດິນ <u>ການລົງທຶນ</u>	ໄດ້ລ້າ	
໒. ຄ່າແປງດິນ	໔.໐໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
໓. ຄ່າກໍ່ສ້າງ	໘.໐໐໐.໐໐໐ "	ຢູເສດ
- ແຜນຜັງ-ເຄື່ອງມື-ເຄື່ອງເຮືອນ- ຄ່າສີມື - ນ້ຳສ້າງແລະອ່າງເກັບນ້ຳ	໔.໐໐໐.໐໐໐ "	ບໍຣິຈາກຊາວບ້ານ
໔. ເຄື່ອງໃຊ້ສອຍຕ່າງໆໃນຫ້ອງການ - ຈັກໄຟຟ້າ	໑.໐໐໐.໐໐໐ "	ງົບປະມານແຫ່ງຊາດ
ໂ ຮ ມ	໑໗.໐໐໐.໐໐໐ ກີບ	

ໂຄງການເລກທີ ໕໘	ກອງປະຊຸມ : ດ້ານການສຶກສາ ພແຜກການ : ມັທຍົມສຶກສາ
ວິທຍາລັຍ ປາກເຊ	

ນຶ່ງ : ຂໍ້ມູນທົ່ວໄປ :

ກ. ຈຸດມຸ່ງໝາຍຂອງໂຄງການ :

ນອກຈາກວິທຍາລັຍວຽງຈັນແລະຫລວງພຣະບາງແລ້ວສົມຄວນທີ່ຈະມີໂຮງຮຽນແບບນີ້ອີກໃນເມືອງອື່ນໆ ທີ່ສຳຄັນໃນພຣະຣາຊອານາຈັກລາວ ເພື່ອໃຫ້ພຽງພໍໃນການສຶກສາຊັ້ນມັທຍົມນີ້ ເມືອງປາກເຊ ເປັນເມືອງທີ່ສຳຄັນທີ່ສຸດ ທາງພາກໃຕ້ຂອງລາວ ຈຶ່ງໄດ້ມີວິທຍາລັຍແຫ່ງນຶ່ງອີກ.

ຂ. ບົດຊີ້ແຈງ :

ສ່ວນໃຫຍ່ຂອງໂຄງການ ແມ່ນຂື້ນກັບແຜນພັທນາສ່ວນໂຮມແຫ່ງຊາດ ເມື່ອເດືອນ ເມສາ ໑໙໗໐ ຄນະກັມມະການຮ່ວມມືຝຣັ່ງເສດແລະລາວ ໄດ້ຕັດສິນໃຈທີ່ຈະໃຫ້ເງິນຊ່ວຍເຫລືອຂອງຝຣັ່ງ ເພື່ອໃຊ້ໃນການສຶກສາລ່ວງໜ້າ ໃນວິທຍາລັຍແຫ່ງນີ້, ເພື່ອໃຫ້ຮູ້ເຖິງຄວາມຕ້ອງການທີ່ແທ້ຈິງ ກ່ຽວກັບໂຄງການຂອງແຜນ.

ຄ. ຂໍ້ມູນອື່ນໆ :

ການສຶກສາເບື້ງແນວທາງຈະດຳເນີນໄປກ່ອນໃນປີ ໑໙໗໐-໗໑ ໂຄງການສ່ວນນີ້ໄດ້ວາງໄວ້ໃນແຜນປະຈຳປີ ໑໙໖໙-໗໐ ແຕ່ວ່າການຊ່ວຍເຫລືອຂອງຝຣັ່ງໄດ້ຂາດເຂີນໄປຊົ່ວຣະຍະນຶ່ງ ດັ່ງນັ້ນແຜນປະຈຳປີ ຈຶ່ງໄດ້ຍ້າຍໄປອີກ.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍທັງໝົດທີ່ໂຄງການຂອງແຜນ ໄດ້ຄາດຄະເນໄວ້ຢ່າງຖືກຕ້ອງມີ ໔໕໐ ລ້ານກີບ ທີ່ໄດ້ມາຈາກການຊ່ວຍເຫລືອຂອງຝຣັ່ງ. ຄ່າໃຊ້ຈ່າຍໃນການສຳຣວດຕາມແຜນທີ່ໄດ້ສຶກສາເບື້ງແລ້ວມີ ໕.໖໐໐.໐໐໐ ກີບ ກໍ່ແມ່ນການຊ່ວຍເຫລືອຈາກຝຣັ່ງເຊັ່ນດຽວກັນ ໂຄງການນີ້ຈຶ່ງໄດ້ວາງໄວ້ ການປະມານນີ້ ອາດຈະມີການປ່ຽນແປງໄດ້.

ສອງ : ປະຕິທິນການດຳເນີນງານ

ການດຳເນີນງານ.	ກ່ອນວັນທີ ໑/໑/໗໐	໑໙໗໐ - ໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫລັງຈາກ ວັນທີ ໓໐/໖/໗໑
ກ. ການສຳຣວດສຶກສາ		----------	----------	-----		

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. ຄ່າໃຊ້ຈ່າຍໃນການສຶກສາຄົ້ນຄ້ວ	໕.໖໐໐.໐໐໐ ກີບ	ອົງການຊ່ວຍເຫຼືອ ຝຣັ່ງເສດ.
ໂ ຣ ມ	໕.໖໐໐.໐໐໐ ກີບ	

ໂຄງການເລກທີ ໔໙	ກອງປະຊຸມ : ດ້ານການສຶກສາ ພະແນກການ : ກົມມັທຍົມສຶກສາ
ການສ້າງສາແລະການຂຍາຍ ວິທຍາລັຍແລະໂຮງຮຽນມັທຍົມ	

ນຶ່ງ : ຂໍ້ມູນທົ່ວໄປ.

ກ. ຈຸດມູ່ງໝາຍຂອງໂຄງການ: ດວຍເຫດຜົນທີ່ວ່າ ມັທຍົມສຶກສານີ້ມີຄວາມສຳຄັນ ຕໍ່ປະເທດເອົາຫລາຍ ເພື່ອການຝຶກສອນຄວາມຮູ້ພໍປານກາງແກ່ທຸກໆຄົນ ແລະເພື່ອຝຶກສອນ ພວກໜຸ່ມນ້ອຍມີຈຸດປະສົງຢາກສຶກສາຕໍ່ໃນຂັ້ນສູງ ດັ່ງນັ້ນຈຶ່ງເປັນໜ້າທີ່ຂອງຜູ້ຮັບຜິດຊອບ ທີ່ຄວນມີຄວາມຄິດແລະສາຍຕາໄກ ເພື່ອຈະຂຍາຍການສຶກສານີ້ ໃຫ້ທັນກັບຄວາມຕອງການຂອງປະເທດຊາດ.

ຂ. ບົດຊີ້ແຈງ : ໂຄງການສຳຣັບປີນີ້ :

- ການສ້າງສາໂຮງຮຽນຟ້າງູ່ມທີ່ສວັນນະເຂດ ຕໍ່ຈາກປີທີ່ແລ້ວ
- ສ້າງຕຶພັກໃຫ້ທ່ານຄຣູຢູ່ບ້ານເກີນ
- ສ້າງເຮືອນຍາມທີ່ໂຮງຮຽນກິນນອນຢູ່ຫລວງພຣະບາງ
- ສ້າງໂຮງຮຽນຫລັງນຶ່ງທີ່ຈຳປາສັກ
- ສ້ອມແປງເຮືອນ ວິນລາ ຂອງຜູ້ເບິ່ງແຍງທົ່ວໄປຢູ່ມັທຍົມສວັນນະເຂດ
- ຊື້ເຄື່ອງໃຊ້ສອຍຕ່າງໆ ສຳຣັບແຕ່ລະໂຮງຮຽນ.

ຄ. ຂໍ້ມູນອື່ນໆ : ໂຄງການນີ້ເປັນໂຄງການ ທີ່ປະກອບດ້ວຍ ວຽກຕ່າງໆຂອງການສ້າງສາ ແລະການຂຍາຍວິທຍາລັຍ ແລະໂຮງຮຽນມັທຍົມໃນທຸກໆແຂວງ ຢູ່ແຂວງສວັນນະເຂດ ໂຮງຮຽນມັທຍົມຟ້າງູ່ມຈະຕ້ອງໄຂຮັບເອົານັກຮຽນໄດໃນສົກປີໜ້ານີ້.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

- ຄ່າໃຊ້ຈ່າຍທັງໝົດມີ : ໔໓໒,໐໐໐ ໂດລາ ໄດ້ຈາກຢູເສດ,
  ໑໒.໐໐໐.໐໐໐ ກີບ ຈາກງົບປະມານແຫ່ງຊາດ

ຍົກຍ້າຍ ໓.໐໒໕.໗໘໐ ກີບ

ສອງ : ປະຕິທິນການດຳເນີນງານ

ການດຳເນີນງານ.	ກ່ອນວັນທີ ໑/໗/໗໐	໑ ໙ ໗ ໐ - ໑ ໙ ໗ ໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫລັງຈາກວັນທີ ໓໐/໖/໗໐
໑. ການຈັດຫາທີ່ດິນ	×					
໒. ການຈັດຮູບແລະແຜນສ້າງສາ	×					
໓. ການປະມູນ		-----				
໔. ການລົງມືສ້າງສາ		---------	---------	---------	----	
໕. ການຕົກແຕ່ງແລະເຄື່ອງເອຕ່າງໆ					-----	
໖. ເວລາທີ່ວຽກການຕ້ອງສຳເລັດສິ້ນ						------

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
໑. ໃຊ້ໃນການສ້າງສາ ກ. ການລົງທຶນ	໙.໗໐໐.໐໐໐ ກີບ ໔໓໒.໐໐໐ໂດລາ	ງົບປະມານແຫ່ງຊາດ ຢູເສດ
໒. ອຸປະກອນເຄື່ອງໃຊ້ສອຍຕ່າງໆ	໒.໔໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
ໂ ຮ ມ	໑໒.໑໐໐.໐໐໐ ກີບ ໔໓໒.໐໐໐ໂດລາ	

ໂຄງການເລກທີ ໖໑	ກອງປະຊຸມ : ດ້ານການສຶກສາ ພະແນກການ : ວິທຍາລັຍການຊ່າງ
ການຂຍາຍວິທຍາລັຍການຊ່າງວຽງຈັນ	

ນຶ່ງ. ຂໍ້ມູນທົ່ວໄປ

ກ. ຈຸດມຸ່ງໝາຍຂອງໂຄງການ

ວິທຍາລັຍການຊ່າງວຽງຈັນ ແມ່ນບ່ອນສຳຄັນທີ່ສຸດ ຕ້ອງໃຫ້ສາມາດອົບຮົມນັກຮຽນຊ່າງ ໃຫ້ຊຳນິຊຳນານທຸກໆຂແນງ ເພາະບ້ານເມືອງເຮົາຍັງຂາດເຂີນນາຍຊ່າງຢູ່ຫລາຍບ່ອນເຄີຍສອນແຕ່ພາກທິສດີ ບໍ່ມີພາກປະຕິບັດພຽງພໍ ການຂຍາຍພື້ນທີ່ໂຮງຮຽນ ຈຶ່ງສຳຄັນຫລາຍທີ່ສຸດ ເພື່ອຈະໃຫ້ພຽງພໍກັບຄວາມຕ້ອງການ.

ຂ. ບົດຊີ້ແຈງ

ຈຳເປັນຕ້ອງດຳເນີນວຽກການ ທີ່ໄດ້ຕັ້ງຕົ້ນມາແຕ່ປີ ໑໙໖໙ - ໗໐ ໂດຍສະເພາະແລ້ວ ຕ້ອງຂຍາຍໂຮງງານຊ່າງ ຫລັງໃຫຍ່ ແລະປຸກໂຮງງານຫລັງນ້ອຍຕື່ມ ພ້ອມທັງໂຮງງານສະເພາະຊ່າງໄມ້ ແລະຊ່າງຕີເຫລັກ ເຮັດກະແຈເຮືອນອີກ.

ຄ. ຂໍ້ມູນອື່ນໆ :

ໂຄງການສ່ວນໂຮມ ຈະດຳເນີນໄປຕລອດຣະຍະ ໓ ປີ ຄື ປີ ໑໙໖໙-໗໐ ແລະ ໑໙໗໐-໗໑ ໝາຍຄວາມວ່າ ວຽກການຈະຕ້ອງແລ້ວໃນວັນທີ ໓໐/໖/໗໒ ບໍ່ມີການຍົກຍ້າຍງົບປະມານຂອງປີ ໑໙໖໙-໗໐ ແຕ່ຢ່າງໃດເລີຍ.

ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍປະຈຳປີ ໑໙໗໐-໗໑ - ໑໖.໒໐໐.໐໐໐ ກີບ.

(໑໘໐.໐໐໐ ຟຣັງໃໝ່)

ເງິນຊ່ວຍເຫລືອຝຣັ່ງເສດ

\- ໑໐.໐໐໐.໐໐໐ ກີບ ທີ່ງົບປະມານແຫ່ງຊາດໄດ້ກຳໜົດໃຫ້ແລ້ວ.

ໂຮມ ໒໖.໒໐໐.໐໐໐ ກີບ.

\- ຣາຍຈ່າຍທີ່ໄດ້ກະໄວ້ລ່ວງໜ້າປີ ໑໙໗໑-໗໒ ໒.໐໐໐.໐໐໐ ກີບ ມາຈາກງົບປະມານແຫ່ງຊາດ ເພື່ອໃຫ້ໝົດສິ້ນ ໃນວຽກການເຫລົ່ານີ້.

ຍົກຍ້າຍ : ໒,໑໕໔ ກີບ.

ສອງ : <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ	ກ່ອນວັນທີ ໑/໗/໗໐.	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງຈາກວັນທີ ໓໐/໖/໗໑.
໑. ການຂະຫຍາຍໂຮງງານ ຊ່າງຫຼັງໃຫຍ່		----------	----------	----------	-------	
໒. ການສ້າງໂຮງງານຊ່າງ [illegible]ນ້ອຍຕື່ມ (ໂຮງເກັບຂອງ)			-------			
໓. ເຮັດຫ້ອງສຳລັບຝຶກວິຊາ ຊ່າງ ອາ-໒ ກວ້າງ ໙໙໕ ແມັດມົນທົນ						
໔. ດັດແປງໜ້າດິນ			-------			
໕. ການກໍ່ພື້ນເພື່ອຈະສ້າງສາ			----	-----		
໖. ການເຮັດຮ່າງເຮືອນ ດ້ວຍເຫຼັກ					----	-----
໗. ຈັດຮ່າງເຮືອນໃຫ້ເປັນລະ ລະບຽບແລ້ວມຸງ				໑໙໗໑ - ໑໙໗໒		
໘. ວຽກການຕ່າງໆກ່ຽວ ກັບການກໍ່						
໙. ການຕິດຕັ້ງໄຟຟ້າ						

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
<u>ການລົງທຶນ</u>		
໑) <u>ການກໍ່ສ້າງ</u>		
- ສິ່ງກໍ່ສ້າງ ຈຳພວກໂຄງຮ່າງເຫລັກຄືບ ຊຸດແຜ່ນມຸງສັງກະສີຫລືພາສຕິກ, ເຄື່ອງໄຟຟ້າແລະສີທາ	໑໖.໒00,000	ການຊ່ວຍເຫລືອຂອງຝຼັ່ງ
- ການປູກສ້າງ		
- ວຽກການກໍ່ສ້າງ (ການຕັດແປງໜ້າດິນ, ປູເດີ່ນ, ຖອກພື້ນ, ຝາ, ຝາກັ້ນ)	໖.000.000	
- ວຽກຊ່າງໄມ້ (ຝາປະຕູ, ປ່ອງຢ້ຽມ-ກັນແດດ)	໑.໕00.000	ງົບປະມານແຫ່ງຊາດ
- ທາສີ (ທາງໃນແລະທາງນອກ)	໑.000.000	
- ໄຟຟ້າ (ການຕິດຕັ້ງແລະຕົກແຕ່ງໄຟ)	໑.000.000	
- ວຽກອື່ນໆ (ກະແຈ - ເຄື່ອງສຸຂາ ຯ ລ ຯ)	໕00.000	
ໂ ຣ ມ :	໒໖.໒00.000	

ໂຄງການເລກທີ ໖໔	ກອງປະຊຸມ : ດ້ານການສຶກສາ ແຜນການ : ກົມອາຊີວະສຶກສາ
ການຂຍາຍວິທຍາລັຍ ລາວ - ເຢີຣະມັນ	

ບົ່ງ : ຂໍ້ມູນທົ່ວໄປ

ກ. ຈຸດມຸ່ງໝາຍ ຂອງໂຄງການ : ໃນຂນະທີ່ການຊ່າງສມັຍໃໝ່ຈເຣີນຂຶ້ນນີ້ ປະເທດລາວເຮົາກໍຕອງປຽນໄປຕາມສມັຍຂອງການປ່ຽນແປງ ໃນວຽກການດ້ານນີ້ ດັ່ງນັ້ນຣັຖບານລາວເຮົາຈຶ່ງໄດ້ຮ່ວມມືຢ່າງໃກ້ຊິດກັບ ສຫະພັນທະຣັຖ ເຢີຣະມັນ ໃນອະນາຄົດນີ້ຈະຕ້ອງຂຍາຍກິຈການຕ່າງໆ ໃນວິທຍາລັຍແຫ່ງນີ້ ໂດຍສ້າງຫ້ອງຮຽນຂຶ້ນຕື່ມ ແລະໂຮງງານຊ່າງທີ່ທັນສມັຍ ເພື່ອຮັບເອົາລູກສິດຫລາຍຂຶ້ນ.

ຂ. ບົດຊີ້ແຈງ : ຈະຕ້ອງມີການສ້າງສູນກາງອາຄານທີ່ໃຊ້ເປັນບ່ອນຝຶກຫັດວິຊາຊ່າງທີ່ທັນສມັຍ ແລະຫ້ອງຮຽນ ແລະເຮືອນນອນເພື່ອລູກສິດກິນນອນ ດ້ວຍຄວາມຊ່ວຍເຫລືອຂອງນັກຮຽນ ໃນສອງປີ.

ຄ. ຂໍ້ມູນອື່ນໆ : ໂຄງການໄດ້ຕັ້ງຕົ້ນປະຕິບັດແລ້ວ ແລະຈະຕ້ອງແລ້ວພາຍໃນທ້າຍແຜນປະຈຳປີ ໑໙໗໐-໗໑ ນີ້ເປັນຢ່າງຊ້າ ວຽກການເຫລົ່ານີ້ຜູ້ຮັບເໝົາ ແລະລົງມືເຮັດແຕ່ເດືອນຕຸລາ ໑໙໖໙ ເປັນຕົ້ນມາ.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ : ເຮົາບໍ່ສາມາດແບ່ງແຍກຄ່າໃຊ້ຈ່າຍແລະທຶນຂອງໂຄງການ ເພາະວ່າທາງການເຢີຣະມັນ ບໍ່ທັນບອກໃຫ້ຮູ້ ແຕ່ກໍມີງົບປະມານແຫ່ງຊາດ ໔໕ ລ້ານເພື່ອ ສົມທົບໃນໂຄງການແລະຈະໄດ້ໃຊ້ເປັນຄ່າກໍ່ສ້າງ - ການຊ່ວຍເຫລືອຂອງເຢີຣະມັນ ຄົງຈະເປັນເງິນປະມານ ໑໔໔.໐໐໐.໐໐໐ ກີບ - ສຳຣັບສົກປີ ໑໙໗໐-໗໑.

ໝາຍເຫດ : ງົບປະມານແຫ່ງຊາດ ໄດ້ບອກຜິດທີ່ວ່າມີເງິນຍົກຍາຍ ໔໕.໐໐໐.໐໐໐ ກີບທີ່ຈິງແລ້ວ ເງິນຈຳນວນນີ້ແມ່ນງົບປະມານໃໝ່.

ສອງ : <u>ປະຕິທິນການດຳເນີນງານ</u>. ການດຳເນີນງານ	ກ່ອນວັນທີ ໑/-໗/໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	໑໙໗໐ - ໑໙໗໑ ໄຕຣມາດ ທີ ໔	໑໙໗໐ - ໑໙໗໑ ໄຕຣມາດ ທີ ໑	໑໙໗໐ - ໑໙໗໑ ໄຕຣມາດ ທີ ໒	ຫລັງຈາກວັນທີ ໓໐/໖/໗໑
໑. ຈັດຫາທີ່ດິນ	×					
໒. ອອກແບບແຜນຜັງ	×					
໓. ປະກາດປະມູນ	×					
໔. ລົງມືກໍ່ສ້າງ - ປູກຕຶກຮຽນ		=======	=======	=======	==	
໕. ຈັດເຄື່ອງ ໃຊ້ ຕ່າງໆ - ຕົກແຕ່ງ					======	
໖. ສະຖານທີ່ໃຊ້ການໄດ້ - ລົງມືດຳເນີນງານ.						=== ×

ໂຄງການເລກທີ ໖໕	ກອງປະຊຸມ : ດ້ານການສຶກສາ ພແນກການ : ກະຊວງທັມມະການ

ໂຮງຮຽນ " ປາລີ " ຢູ່ຕ່າງແຂວງ

ນຶ່ງ : <u>ຂໍ້ມູນທົ່ວໄປ</u>.

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> :

ເໝືອນກັບກັບພແນກອື່ນໆ ການສຶກສາດ້ານສາສນານີ້ ກໍ່ຕ້ອງມີການຂຍາຍຕົວໄປຕາມແຂວງຕ່າງໆ ເພື່ອໃຫ້ທັນກັບຄວາມຈເຣີນຂອງປະເທດຊາດ ແລະໂລກພາຍນອກ. ຄວາມຄິດຂຍາຍໂຮງຮຽນ ປາລີນີ້ເປັນແນວທາງທີ່ດີ ເພື່ອສນອງຄວາມຕ້ອງການຂອງສາສນາແລະເພື່ອຄວາມກ້າວໜ້າດ້ານສັງຄົມ. ດ້ານການສຶກສາແລະດ້ານສາສນາ.

ຂ. <u>ບົດຊີ້ແຈງ</u> :

ໂຄງການນີ້ໄດ້ແບ່ງເປັນຫລາຍສ່ວນ.

- ການຈັດພິມປຶ້ມທັມມະບົດຈຳນວນ ໕.໐໐໐ ຫົວ ເປັນເງິນ		໑.໙໐໐.໐໐໐ ກີບ
- ການຈັດພິມຕ່າງໆ	"	໕໐໐.໐໐໐ ກີບ
- ການຮັກສາແລະສ້ອມແປງໂຮງຮຽນປາລີ	"	໑.໔໐໐.໐໐໐ ກີບ
- ຈ່າຍອາຈານສອນ ຫາ ຄົນ	"	໑.໘໐໐.໐໐໐ ກີບ

ຄ. <u>ຂໍ້ມູນອື່ນໆ</u> :

ໂຄງການນີ້ ຈະຕ້ອງປະຕິບັດ ໃຫ້ສຳເຣັດພາຍໃນປີ ໑໙໗໐-໗໑ ນອກຈາກນີ້ເພີ່ມຍັງໄດ້ສເນີໃຫ້ມີການໄປສັງເກດການຂອງພະສົງທີ່ສອນຢູ່ຕາມໂຮງຮຽນຕ່າງໆ ໃນຍາມພັກປະຈຳປີນີ້.

ງ. <u>ຄ່າໃຊ້ຈ່າຍແລະການຈັດສົມທົບ</u>.

- ຈຳນວນເງິນທີ່ໄດ້ກະໄວ້	໕.໖໐໐.໐໐໐ ກີບ	ແມ່ນມາຈາກງົບປະມານແຫ່ງຊາດ
- ຈຳນວນເງິນທີ່ກະໄວ້ສຳຣັບການໄປສັງເກດການ	໑.໕໐໐.໐໐໐ກີບ	ທາງອົງການຢູເສດອາດສາມາດຊ່ວຍເຫລືອ
ຍົກຍ້າຍ	໑.໘໙໒.໑໙໐ ກີບ .	

ສອງ : <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ.	ກ່ອນວັນທີ ໑/໗/໗໑	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫລັງຈາກ ວັນທີ ໓໐/໒/໗໑.
໑. ການພິມປື້ມທັມມະບົດ ໕.໐໐໐ ຫົວ		=======				
໒. ການພິມຕ່າງໆ		====	====			
໓. ການບົວຣະບັດແລະຮັກສາໂຮງຮຽນ		=======	=======	=======	=======	
໔. ຄ່າອາຈານສອນ ຫາ ລົບ		====	====			
໕. ການໄປສັງເກດການ						=======

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u>		
໑. <u>ເຄື່ອງຂອງ</u>		
- ການພິມປື້ມທັມມະບົດ ໕.໐໐໐ ຫົວ	໑.໙໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
- ການພິມຕ່າງໆ	໕໐໐.໐໐໐ "	- " -
໒. <u>ທຶນການສຶກສາ</u>		
- ການໄປສັງເກດການ ໃນເວລາພັກໂຮງຮຽນ	໑.໕໐໐.໐໐໐ ກີບ	ຢູເສດຈະຊ່ວຍເຫຼືອ
- ການຮັກສາແລະສ້ອມແປງໂຮງຮຽນ	໑.໔໐໐.໐໐໐ ກີບ	ງົບປະມານແຫ່ງຊາດ
- ຈ່າຍຄ່າອາຈານສອນ	໑.໘໐໐.໐໐໐ ກີບ	- " -
ໂ ຣ ມ	໗.໑໐໐.໐໐໐ ກີບ	

ໂຄງການເລກທີ ໘໘	ກອງປະຊຸມ : ດ້ານການສຶກສາ ພະແນກການ : ອຸດົມສຶກສາ
ສະຖາບັນ ສາສນະສຶກສາ	

ນຶ່ງ : ຂໍ້ມູນທົ່ວໄປ :

ກ. ຈຸດມຸ່ງໝາຍຂອງໂຄງການ :

ຣັຖບານໄດ້ຫລິງເຫັນຄວາມສຳຄັນຂອງການສຶກສາດ້ານສາສນາ ທີ່ມີຕໍ່ຄວາມຈເຣີນ ແລະການພັທນາຂອງປະເທດ ທັງດ້ານສຶກສາແລະສັງຄົມຂອງປະເທດຊາດ, ຈຶ່ງໄດ້ເອົາໃຈໃສ່ ໃນການຂຍາຍການສຶກສາດ້ານນີ້ ທັງໄດ້ເອົາໃຈໃສ່ຊ່ວຍເຫລືອທັງດ້ານວັດຖຸອຸປກອນ ແລະເງິນຄຳຕາມຄວາມສາມາດ.

ຂ. ບົດຊີ້ແຈງ :

ໂຄງການສຳຣັບປີນີ້ ແມ່ນການສ້າງຫ້ອງນ້ຳແລະວິດຖ່າຍ ສາມຫ້ອງສຳຣັບໂຮງຮຽນ ສາສນາທີ່ວັດອົງຕື້ຫລັງນີ້ ນອກນັ້ນຍັງມີການຕິດຕັ້ງກາໂຣ ທີ່ຝາຊື່ປະຕູເຂົ້າທາງຫລັງຂອງສະຖາບັນ ທີ່ມີໜ້າພຽງ ໑໔໕ ແມັດມົນທົນ.

ຄ. ຂໍ້ມູນອື່ນໆ :

ການດຳເນີນງານຂອງໂຄງການນີ້ ຈະຕ້ອງໃຫ້ສຳເຣັດລົງພາຍໃນຣະຍະດຳເນີນໂຄງການ ໑໙໗໐-໗໑ ວຽກການນີ້ ຈະໄດ້ມອບໃຫ້ບໍຣິສັດເອກະຊົນ ຫລັງຈາກທີ່ປະມູນໄດ້ແລ້ວບໍ່ມີການຍົກຍ້າຍເງິນປີກ່ອນມາປີນີ້.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

- ຄ່າໃຊ້ຈ່າຍ ໑.໐໐໐.໐໐໐ ກີບ

  ມາຈາກທຶນຂອງ ງົບປະມານແຫ່ງຊາດ.

ຍົກຍ້າຍ : ໑.໐໐໐.໐໐໐ ກີບ.

ສອງ : <u>ປະຕິທິນການດຳເນີນງານ</u> :

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫລັງຈາກ ວັນທີ ໓໐/໖/໗໑
໑. ການເອົາເງິນອອກ		======				
໒. ປະກາດປະມູນ		====				
໓. ລົງມືປະຕິບັດງານ			======			
໔. ເວລາທີ່ຕ້ອງໃຫ້ວຽກການ ເສັດສິ້ນແລະໃຊ້ການໄດ້.				======		

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u>	໑.໐໐໐.໐໐໐ ກີບ	
໑. ການຕິດດິນກາໂຣ	໓໐໐.໐໐໐ "	ງົບປະມານແຫ່ງ
໒. ການສ້າງຫ້ອງນ້ຳສາມຫ້ອງ	໗໐໐.໐໐໐ "	
ໂ ຣ ມ	໑.໐໐໐.໐໐໐ ກີບ	

<u>໑໗໐</u> <u>ກອງປະຊຸມດ້ານປະຊາກອນ - ສາທາຣະນະສຸກ</u>

<u>໑໗໑</u> <u>ບົດແນະນຳເບື້ອງຕົ້ນ.</u>

<u>ຄຳແນະນຳທົ່ວໄປ</u> : ກອງປະຊຸມດ້ານປະຊາກອນ - ສາທາຣະນະສຸກ ເປັນຜູ້ຮັບຜິດຊອບໃນບັນຫາຕ່າງໆ ຂອງປະຊາກອນ, ເຊັ່ນກ່ຽວກັບບັນຫາດ້ານປະຊາກອນ, ການແບ່ງສ່ວນຄວາມໜາແໜ້ນຂອງປະຊາກອນ, ການເຄື່ອນໄຫວຂອງປະຊາກອນ, ສາທາຣະນະສຸກແລະການໃຊ້ກຳລັງຄົນ ໃຫ້ເປັນປໂຍດໃນວົງການທາງເສດຖກິດ.

ຈຸດມຸ່ງໝາຍຂອງກອງປະຊຸມມີຢູ່ສອງຫລັກການສຳຄັນ :

- ຝຶກຝົນໃນຣະຍະຍາວ ໃຫ້ປະຊາກອນໃນປະເທດ ໄດ້ມີອະນາມັຍດີ ແລະມີຄວາມແຂງແຮງດີ ແລະສາມາດປະຕິບັດວຽກການໄດ້ສະເໝີ.
- ປະກອບຈັດຕັ້ງ ການແພດໃຫ້ເໝາະສົມກັບສະພາບການ.

ກໍເປັນຄວາມຈິງຢູ່ ທີ່ວ່າການກໍ່ຕັ້ງວາງຮາກຖານ ໂຄງການດ້ານການແພດ ຕ້ອງເປັນພາຣະ ທີ່ໜັກໜ່ວງ ໃນກໍຣະນີທີ່ວ່າຈະສາມາດເຮັດໃຫ້ພົນລະເມືອງທົ່ວໄປ ໃນພຣະຣາຊອານາຈັກ ໄດ້ຮັບການພະຍາບານພະຍາດຢ່າງໃດຢ່າງນຶ່ງ ຊຶ່ງຕົນປະສົບຢູ່ໄດ້. ໃນຂນະດຽວກັນ, ວິທີການປະຖົມພະຍາບານ (ທີ່ເປັນວິທີປຍັດ) ອາດຈະໄດ້ຮັບຜົນດີ ນອກນັ້ນກໍເຫັນສົມຄວນວ່າຢ່າງນ້ອຍ ຄວນໃຫ້ມີການຈັດຕັ້ງສູນກາງພະຍາບານ ຢູ່ຕາມບ້ານຕ່າງໆ ເພື່ອຕອບແທນກັບຄວາມຕ້ອງການທີ່ຮີບດ່ວນ.

ແຜນດຳເນີນງານຂອງກອງປະຊຸມປະຊາກອນ ສາທາຣະນະສຸກ, ຊຶ່ງໄດ້ບັນລະຍາຍຢູ່ໃນແຜນພັທນາຂອງ ໖໙-໗໘ ນັ້ນ ມີໂຄງການສຳມະໂນປະຊາກອນ. ແລະສະຖິຕິອະນາມັຍ, ແລະໂຄງການເຄື່ອງອຸປກອນການແພດ.

- ເຣື່ອງທີ່ກ່ຽວກັບລັກສນະສຳມະໂນປະຊາກອນ, ກໍເຫັນວ່າມີຄວາມຈຳເປັນ ທີ່ຈະຣິບໂຮມສ່ວນຕ່າງໆ ໃນດ້ານຄຸນນະພາບແລະປະຣິມານ, ຊຶ່ງຈະຊ່ວຍໃຫ້ຮູ້ຄວາມຕ້ອງການໃນເຣື່ອງກ່ຽວກັບສຸຂພາບ.

<u>ຄຳແນະນຳ ແຕ່ລະພແນກການ</u>

<u>ພແນກສະຖິຕິແຫ່ງຊາດ</u> ຢູ່ໃນຣະວ່າງປະເຊີນໜ້າກັບແຜນການທີ່ກວ້າງຂວາງທີ່ສຸດ ຊຶ່ງເກີນກວ່າຄວາມສາມາດ ທີ່ຈະທຳການສຳຣວດໄດ້, ໃນສະພາບຄວາມເປັນຢູ່ປັດຈຸບັນ.

ໃນປີ ໑໙໖໙-໗໐, ເຮົາໄດ້ຕັ້ງໃຈວ່າຈະທຳການສຳຣວດ ໃນບໍຣິເວນທົ່ງຣາບວຽງຈັນໃຫ້ສຳເຣັດ. ສ່ວນໃນປີ ໑໙໗໐-໗໑ ນັ້ນ, ກໍເຫັນວ່າເປັນການຮີບດ່ວນຢູ່ ທີ່ຈະທຳການລົງມືເຣັດສຳມະໂນປະຊາກອນການກະເສດ. ພາຣະອັນຮີບດ່ວນນີ້ ກໍຄືການຝຶກອົບຮົມພະນັກງານ ເພື່ອຈະໄດ້ບັນຈຸເຂົ້າຮັບໃຊ້ໃນພແນກນີ້ຕໍ່ໄປ ແຕ່ວ່າພາຣະອັນນີ້ບໍ່ແມ່ນຈຸດປະສົງຂອງໂຄງການ. ພແນກສະຖິຕິແຫ່ງຊາດ ກໍຍັງຕ້ອງການຄວາມຊ່ວຍເຫຼືອ ຈາກຜູ້ຊ່ຽວຊານຄືກັນ ກ່ອນທີ່ຈະຕັ້ງຕົ້ນການອອກສຳຣວດໄດ້.

ສ່ວນສູນກາງສະຖິຕິທີ່ປາກເຊນັ້ນ ຍັງບໍ່ເໝາະສົມແກ່ເວລາເທື່ອ ທີ່ຈະຕັ້ງຂຶ້ນໃນເວລານີ້, ດ້ວຍເຫດວ່າສຖານະການທາງດ້ານທະຫານຍັງເຄັ່ງຕຶງຢູ່.

<u>ສະຖິຕິສາທາຣະນະສຸກ</u> : ທີ່ຢູ່ໃນຂອບເຂດຂອງກົມສາທາຣະນະສຸກ. ເອກສານສຳຄັນຂອງ ໂຮງພຍາບານມະໂຫສົດທີ່ວຽງຈັນ. ພແນກນີ້ໄດ້ຈັດຕັ້ງຂຶ້ນ ໃນປີ ໑໙໖໙-໗໐ ສ່ວນພແນກເອກສານສຳຄັນ ຂອງໂຮງພຍາບານຕາມແຂວງຕ່າງໆນັ້ນ ຈະຕ້ອງໃຫ້ແລ້ວໃນປີ ໑໙໗໐-໗໑.

- ໃນຂັ້ນຕໍ່ໄປ, ເຮົາຈະຕ້ອງຕິດຕາມສະຖິຕິເຄື່ອນໄຫວ ຕາມສູນກາງຕ່າງໆ ແລະໃຫ້ຢູ່ໃນຂອບເຂດຄວາມສາມາດທີ່ເຮົາຈະປະຕິບັດໄດ້.

<u>ການຈັດຕັ້ງໜ່ວຍອານາມັຍຕາມຊົນນະບົດ</u> : ໃນເຂດທົ່ງຣາບວຽງຈັນ, ໄດ້ໄຂຂຶ້ນກ່ອນໝູ່ທີ່ສູນກາງບ້ານສີໄຄ. ສູນກາງອື່ນໆ ກໍຕ້ອງໄດ້ຈັດຕັ້ງຂຶ້ນຄືກັນ, ໃນປີ ໑໙໗໐-໗໑ ແລະໄດ້ຕັ້ງສູນກາງບໍຣິເວນທາງໂຄ້ງຂອງແມ່ນ້ຳຂອງ.

- ເຮົາຈະພຍາຍາມຊອກຊ່ອງທາງ ຈັດຕັ້ງສູນກາງເຫຼົ່ານີ້ ໃນບໍຣິເວນເຂດພັທນາການອື່ນ ເທົ່າທີ່ຄວາມສາມາດຈະເຮັດໄດ້.

<u>ການປ້ອງກັນພຍາດໄຂ້ປ່າແລະພຍາດປອດແຫ້ງ</u>.

ວິທີປະຖົມພະຍາບານ ຕ້ອງຮັບພາຣະເປັນສ່ວນໃຫຍ່ ໃນການປ້ອງກັນພຍາດນັ້ນ, ເພາະວ່າການຮັກສາ ລ່ວງໜ້ານີ້ດີກວ່າ ການປິ່ນປົວຕາມພາຍຫຼັງ. ການປ້ອງກັນຈະຕ້ອງຖືກຂຍາຍອອກ ຕາມບໍຣິເວນ ເຂດພັທນາການກ່ອນໝູ່.

ດ້ວຍເຫດນີ້ ກອງການປ້ອງກັນພຍາດໄຂ້ປ່າ, ຈຶ່ງໄດ້ຈັດຕັ້ງຂຶ້ນໃນປີ ໑໙໖໙-໗໐ ນັ້ນ ຕ້ອງທຳການສຳຣວດສັດທີ່ຈະນຳເອົາເຊື້ອໂຣກມາ ການຮຽນຮູ້ພູມີປະເທດແລະສຶກສາໂຣກຕິດຕໍ່. ແລະອົບຮົມພະນັກງານກ່ຽວກັບການຕໍ່ຕ້ານ ພຍາດໄຂ້ປ່າ.

ຣາຍການປະຕິບັດງານ ໃນຂອບເຂດ ອ່າງແມ່ນ້ຳຂອງຕອນໃຕ້ນັ້ນ ໄດ້ລົງມືປະຕິບັດແລ້ວ ດ້ວຍການຊ່ວຍເຫຼືອຂອງອົງການອະນາມັຍໂລກ ຈຸດປະສົງນີ້ແມ່ນເຮົາໄດ້ຍ້ຳເຖິງເຣື່ອງການປັບປຸງພແນກປ້ອງກັນພະຍາດໄຂ້ປ່າ ໃນເຂດທົ່ງຮາບພຽງວຽງຈັນ ແລະໂດຍສະເພາະໃນເຂດເຂື່ອນນ້ຳງື່ມ ສະຖານີທົດລອງຫາດດອກແກ້ວ ແລະອອມແອມເຂດວັງວຽງ.ອີກ

- ການຕິດຕໍ່ຂອງພຍາດປອດແຫ້ງ ກໍເປັນບັນຫາສຳຄັນອັນນຶ່ງ ຂອງກະຊວງສາທາຣະນະສຸກ, ຄົນເປັນພຍາດປອດແຫ້ງໃນປະເທດລາວ ມີ ໔໐໐.໐໐໐ ຄົນ ຫາ ໔໕໐.໐໐໐ ຄົນ ເຮົາຄວນປະຕິບັດດັ່ງນີ້ :

- ປ້ອງກັນຮັກສາ ເດັກ ໜຸ່ມນ້ອຍ.
- ຮັກສາຄົນເຈັບ ທີ່ໄອເອົາເຊື້ອພຍາດອອກມາ ຊຶ່ງມີຈຳນວນຫລາຍໃນປະເທດລາວ.

<u>ໂຮງພຍາບານ</u> : ສູນກາງສົງເຄາະແມ່ແລະເດັກ ຂອງໂຮງພຍາບານມະໂຫສົດກໍໄດ້ສຳເຣັດລົງແລ້ວ ເຖິງວ່າສູນກາງດັ່ງກ່າວ ຈະໃຊ້ຊ້າກວ່າທີ່ກະໄວ້ກໍຕາມ, ເຮົາຈະດຳເນີນຕໍ່ໄປອີກ ໃນປີ ໑໙໗໐-໗໑ ສູນກາງສົງເຄາະແມ່ແລະເດັກນີ້ ຈະຕ້ອງຕັ້ງຂຶ້ນແຕ່ລະແຂວງໄປ (ແຜນທີ່ແລະຮູບປະກອບສຳເຣັດແລ້ວໃນປີ ໑໙໗໐-໗໑)

ໃນປີ ໑໙໗໐-໗໑ ໄດ້ລົງມືສ້າງໂຮງພຍາບານທັນສມັຍອັນນຶ່ງທີ່ຫລວງພຣະບາງອີກ.ໃນທຳນອງນີ້ ອີກບໍ່ເທົ່າໃດປີ ເຮົາຕ້ອງສາມາດມີໂຮງພຍາບານອັນທັນສມັຍ ຢູ່ໃນເມືອງໃຫຍ່ຂອງລາວເຮົາ.

<u>ຢາປົວພຍາດ</u> : ເຖິງວ່າລາວເຮົາຈະໄດ້ສັ່ງຢາເຂົ້າມາແລະດ້ວຍການຊ່ວຍເຫຼືອຂອງຕ່າງປະເທດກໍຕາມ, ໂດຍສະເພາະໂຮງພຍາບານແລ້ວຍັງຂາດເຂີນ ເຄື່ອງແຕ່ງຢາແລະຢາປົວພຍາດຢູ່.

ດ້ວຍເຫດນີ້, ເຮົາຈຶ່ງຄິດວ່າຈະໄດ້ພົນໃນການປຸກສ້າງ ຫ້ອງວິທຍາສາດທີ່ສາມາດຜລິດເຄື່ອງແຕ່ງຢາທັນຕາໄດ້ກັບບ່ອນ, ເພື່ອການໃຊ້ປະຈຳວັນ ຄືຢາເຊັຣອມຊນິດຫວານແລະເຄັມ ນ້ຳກັ່ນອື່ນໆ.

- ຫ້ອງວິທຍາສາດນີ້, ຈະຕ້ອງຫລຸດຜ່ອນ, ການສັ່ງຊື້ຢາແຕ່ນອກປະເທດ ຈະໄດ້ສ້າງຂຶ້ນໂດຍການຊ່ວຍເຫຼືອຂອງຣັຖບານສຫະຣັຖອະເມຣິກາ.

໑໗໔. <u>ໂຄງການຂອງກອງປະຊຸມດ້ານປະຊາກອນສາທາຣະນະສຸກ.</u>

ໂຄງການໃຫຍ່ເລກທີ ໘	ກອງປະຊຸມ : ດ້ານປະຊາກອນ ສາທາຣະນະສຸກ ພແນກການ : ດ້ານສາທາຣະນະສຸກ
ສູນກາງ ສົງເຄາະແມ່ແລະເດັກ.	

ຂໍ້ມູນທົ່ວໄປ :

ກ. ຈຸດມຸ້ງໝາຍຂອງໂຄງການ : ສູນກາງສົງເຄາະແມ່ແລະເດັກ ຊຶ່ງຕ້ອງສ້າງຂຶ້ນທີ່ວຽງຈັນ ແລະຕາມເມືອງໃຫຍ່ຕ່າງໆ ຂອງແຕ່ລະແຂວງ ໂດຍປະກອບດ້ວຍ ສາມພແນກການ: ສູນກາງສົງເຄາະແມ່ແລະເດັກ, ບ່ອນປົວພຍາດເດັກນ້ອຍ, ບ່ອນອອກລູກ ແລະບ່ອນປົວພຍາດຜູ້ຍິງ ສູນກາງຕ່າງໆກໍ່ຕ້ອງໃຫ້ພຽງພໍກັບຄົນເຈັບ ໃນແຂວງນັ້ງໄດ ແລະໃຫ້ສດວກສະບາຍກັບການສອນວິຊາປົວພຍາດ ໃຫ້ແກ່ນັກຮຽນແພດ, ນັກຮຽນປະຖົມພຍາບານ ແລະສຳຣັບນາງພດຸງຄັນອີກດ້ວຍ.

ຂ. ບົດຊີ້ແຈງ :

ດຽວນີ້ມີແຕ່ສູນກາງສົງເຄາະແມ່ແລະເດັກ ທີ່ໂຮງພຍາບານມະໂຫສົດວຽງຈັນ ບ່ອນດຽວ ຊຶ່ງໄດ້ ມີແບບແຜນຮຽບຮ້ອຍແລ້ວ, ໂຮງພຍາບານດັ່ງກ່າວສາມາດບັນຈຸຕຽງໄດ້ ໘໔໐ ຕຽງ ແລະເປັນຕຶກປະກອບດ້ວຍຫ້ອງການ ຫ້ອງກວດຄົນເຈັບ, ຫ້ອງນອນຄົນເຈັບ, ຫ້ອງປົວພຍາດແລະຫ້ອງປະຊຸມ.

ຄ. ຂໍ້ມູນອື່ນໆ:

ແບບແຜນຂອງສູນກາງສົງເຄາະແມ່ແລະເດັກ ທີ່ວຽງຈັນໄດ້ຮັດແລ້ວ ແຕ່ເດືອນພຶສພາ-ມິຖຸນາ ປີ ໑໙໗໐ ການສ້າງສາສູນກາງແຫ່ງນີ້ ຈະລົງມືປະຕິບັດໃນປີ ໑໙໗໐-໗໑ ຄ່າໃຊ້ຈ່າຍດຳເນີນງານ ຂອງສູນກາງນີ້ ໄດ້ຈັດເຂົ້າໃນແຜນປະຈຳປີ ໑໙໖໙-໗໐ ແລ້ວ, ບໍ່ຈຳເປັນທີ່ຈະມາບັນລະຍາຍ ໃນຕາຕະລາງຮິບໂຮມຂອງແຜນປະຈຳປີ ທີ່ສອງອີກ. ຄ່າໃຊ້ຈ່າຍໃນການດຳເນີນ ຂອງສູນກາງສົງເຄາະແມ່ແລະເດັກຕາມແຂວງຕ່າງໆ (ປາກເຊ, ສວັນນະເຂດ ປາກຊັນ) ໄດ້ຈັດເຂົ້າໃນຕາຕະລາງນີ້, ເພາະວ່າແບບແຜນຈະສຳເຣັດໃນປີ ໑໙໗໐-໗໑ ແລະຈະ ລົງມືກໍ່ສ້າງໃນທ້າຍງົບປະມານປະຈຳປີນີ້.

ງ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍຂອງສູນກາງສົງເຄາະແມ່ແລະເດັກ ທີ່ວຽງຈັນ ມີ : ໕໐໐.໐໐໐.໐໐໐. ກີບ (ໃນແຜນປະຈຳປີ ໑໙໖໙-໗໐)

ຄ່າໃຊ້ຈ່າຍຂອງສູນກາງສົງເຄາະແມ່ແລະເດັກຕາມແຂວງຕ່າງໆ ມີ :
໔໙໖.໐໐໐.໐໐໐ ກີບ ເງິນໄດ້ມາຈາກການຊ່ວຍເຫຼືອຂອງປູ່ເສດ.

ສອງ : <u>ປະຕິທິນດຳເນີນງານ</u> :

ການດຳເນີນງານ.	ກ່ອນວັນທີ່ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	ຫລັງຈາກວັນທີ ໓໐/໖/໗໑
໑. ສຶກສາກ່ຽວກັບສູນກາງແຂວງຕ່າງໆ	-------					
໒. ປຸກສ້າງອາຄານສູນກາງວຽງຈັນ	-------	-------	-------	-------	-------	-------
໓ ໃສ່ເຄື່ອງເຮືອນ ເຄື່ອງມືຕ່າງໆ ທີ່ວຽງຈັນ						
໔. ການຈັດຕັ້ງໂຮງການແລະດຳເນີນງານ ອາຄານສູນກາງ ທີ່ວຽງຈັນ						

ໂຄງການເລກທີ ໗໐ (ຍົກມາຈາກແຜນປະຈຳປີທີ ໑)	ກອງປະຊຸມ : ດ້ານປະຊາກອນ ສາທາຣະນະສຸກ ພແນກການ : ພແນກສະຖິຕິສາທາຣະນະສຸກ
ສະຖິຕິສາທາຣະນະສຸກ	

໑. ຂໍ້ມູນທົ່ວໄປ :

ກ. ຈຸດມຸ່ງໝາຍຂອງໂຄງການ :

ພແນກນີ້ຕັ້ງຂຶ້ນ ໃນກະຊວງສາທາຣະນະສຸກ ເປັນພແນກທີ່ສາມາດຣົບໂຮມພື້ນຖານສິ່ງປະກອບສະຖິຕິ ທີ່ກ່ຽວກັບສຸຂພາບຂອງປະຊາກອນ ໃນເຂດເທສບານ ແລະເຂດຊົນນົບົດ.

ຂ. ບົດຊີ້ແຈງ :

ໂຄງການນີ້ໄດ້ວາງຫລັກການທີ່ຈະຣົບໂຮມສະຖິຕິຕ່າງໆ, ເບິ່ງແຍງສະເລັ່ຍການເງິນ, ຄວາມຮຽບຮ້ອຍ ແລະຮັກສາໄວ້ໃນເອກສານການພຍາບານ.

ຄ. ຂໍ້ມູນອື່ນໆ :

ໂຄງການນີ້ໄດ້ລົງມືປະຕິບັດຕັ້ງແຕ່ປີ ໑໙໖໙-໗໐ ໂດຍໄດ້ຣົບໂຮມເອກສານພະຍາບານຕ່າງໆ ຂອງໂຮງພະຍາບານມະໂຫສົດ, ການປະຕິບັດງານໄດ້ສົມສູດລົງ ໃນທ້າຍເດືອນ ພຶສຈິກາ ໑໙໖໙ ກ່ອນການປະຕິບັດງານ ເຮົາໄດ້ຈັດໃຫ້ມີການອະທິບາຍກ່ຽວກັບການເຮັດເອກສານພະຍາບານ ແລະສາທາຣະນະສຸກ ຊຶ່ງຈັດໃຫ້ມີສອງອາທິດ ຢູ່ໃນໂຮງພະຍາບານມະໂຫສົດເອງ ແລະມີຈຸດປະສົງຈະຝຶກຜູ້ທີ່ຮັບຜິດຊອບເອກສານພະຍາບານ ຢູ່ຕາມໂຮງພະຍາບານຕ່າງໆ ໃນຣາຊອານາຈັກລາວ.

ໃນປັດຈຸບັນນີ້, ພວກເຮົາຍັງຢູ່ໃນຂັ້ນກວດກາ ແລະເບິ່ງແຍງການປະຕິບັດງານ ຂອງຜູ້ຮັບຜິດຊອບ ຕາມໂຮງພະຍາບານ ແຂວງຕ່າງໆ, ເພື່ອຈະໃຫ້ເສັດສົມໃນກາງປີ ໑໙໗໐-໗໑.

໒. ຄ່າໃຊ້ຈ່າຍແລະການຈັດສັນທຶນ:

- ເງິນທີ່ໄດ້ຮັບຈາກງົບປະມານແຫ່ງຊາດ : ໑.໖໕໐.໙໔໔ ກີບ
- ອົງການສຫະປະຊາຊາດໄດ້ຊ່ວຍຜູ້ຊ່ຽວຊານຜູ້ນຶ່ງໃນພແນກນີ້ : ໑໘.໕໙໓.໐໐໐ ກີບ
- ເງິນຊ່ວຍເຫລືອຈາກຢູເສດ ໖໕.໘໕໐.໐໐໐ ກີບ

ສອງ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ສຶກສາຄົ້ນຄວ້າ	໑໒.໕໐໐.໐໐໐	ຢູເສດ
ຂ. ການລົງທຶນ		
໑. ພນັກງານ (ບັນຈຸເອົາສມຽນທີ່ມີຄູນະວູດທິ	໓໘໙.໐໐໐	
໒. ເຄື່ອງພັສດຸ		ເງິນງົບປະມານເອົາ
- ເຄື່ອງແຕ່ງເຮືອນ		ຈາກເງິນປະຈຳປີ
- ເຄື່ອງໃຊ້ໃນຫ້ອງການ		໑໙໖໙-໑໙໗໐.
- ຄ່າພິມໜັງສື	໙໗໑.໙໔໔	
ຄ. ການດຳເນີນງານ		
- ພນັກງານ	໑໑.໒໕໐.໐໐໐	ຢູເສດ
- ອື່ນໆ	໑໒.໕໐໐.໐໐໐	"
- ຜູ້ຊ່ຽວຊານສຫະປະຊາຊາດ	໑໒.໕໙໗.໐໐໐	ອົງການອະນາມັຍໂລກ
ໂ ຮ ມ	໕໐.໒໐໗.໙໔໔	

ໂຄງການເລກທີ ກ໑	ກອງປະຊຸມ : ດ້ານປະຊາກອນສາທາຣະນະສຸກ ແຜນກການ : ກົມສາທາຣະນະສຸກ
ໜ່ວຍອະນາມັຍ - ສູນກາງອະນາມັຍ ບ້ານຫ້ອມ	

໑. ຂໍ້ມູນທົ່ວໄປ.

ກ. ຈຸດມຸ່ງໝາຍຂອງໂຄງການ

ເພື່ອພັທນາແຜນກອະນາມັຍໃນເຂດຊຸ້ມບົດ, ພ້ອມກັນກັບການພັທນາ ເສຖ-ກິດແລະສັງຄົມໃນເຂດທົ່ງຮາບພຽງວຽງຈັນ. ບ່ອນຈະຕັ້ງສູນກາງອະນາມັຍນີ້ ຈະໄດ້ເລືອກເອົາບໍຣິເວນທາງໂຄ້ງແມ່ນ້ຳຂອງ ຊຶ່ງເປັນໂຄງການທີ່ຈະພັທນາໃນອານາຄົດອັນໃກ້ນີ້.

ຂ. ບົດຊີ້ແຈງ :

ສ້ອມແປງໂຮງໝໍທີ່ມີຢູ່ແລ້ວ ເພື່ອໃຊ້ເປັນສູນກາງອະນາມັຍ ທີ່ຈະໃຫ້ກວດແລະຮັກສາຄົນເຈັບແລະປ້ອງກັນພຍາດນຳ.

ສ້າງເຮືອນພັກດ້ວຍໄມ້ ສຳຮັບໃຫ້ພນັກງານຂອງສູນກາງໄດ້ພັກເຊົາ (ສູນກາງສົງເຄາະແມ່ແລະເດັກ, ພນັກງານອະນາມັຍ, ຜູ້ຊ່ວຍພະຍາບານ).

ຄ. ຄ່າໃຊ້ຈ່າຍແລະການຈັດສັນທຶນ :

ຄ່າໃຊ້ຈ່າຍຂອງໂຄງການນີ້ ໄດ້ຄະເນໄວ້ປະມານ ໔ ລ້ານກີບ. ເງິນສ່ວນນີ້ ໄດ້ມາຈາກເງິນງົບປະມານພັທນາແຫ່ງຊາດ ເພື່ອສ້ອມແປງແລະການກໍ່ສ້າງ (ເອົາມາຈາກງົບປະມານປີ ໑໙໖໙-໗໐ ຊຶ່ງມີ ໕.໘໐໘.໔໙໕ ກີບ).

໒. <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u>.		
- ສ້ອມແປງໂຮງໝໍບ້ານຫ້ອມ ກໍ່ສ້າງເຮືອນພັກເຊົາຂອງພນັກງານ	໓.໐໐໐.໐໐໐	(ງົບປະມານພັທນາ ເງິນເອົາມາຈາກປີທີ່ແລ້ວ)
ຂ. <u>ການປະຕິບັດງານ</u>		
- ພນັກງານ	໗໔໘.໔໙໕	
- ເຄື່ອງອຸປກອນການໃຊ້	໑.໖໐໐.໐໐໐	
- ອື່ນໆ	໔໖໐.໐໐໐	
ໂ ຮ ມ	໕.໘໐໘.໔໙໕	

໒. <u>ປະຕິທິນການດຳເນີນງານ</u> :

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑				ຫຼັງຈາກວັນທີ ໓໐/໖/໗໑
		ໄຕຣມາດທີ ໓	ໄຕຣມາດທີ ໔	ໄຕຣມາດທີ ໑	ໄຕຣມາດທີ ໒	
໑ ສຶກສາຄົ້ນຄວ້າ		----+----				
ການສ້ອມແປງແລະກໍ່ສ້າງ			------+	------+	------	

ໂຄງການເລກທີ ກ໔	ກອງປະຊຸມ :	ດ້ານປະຊາກອນ ສາທາຣະນະສຸກ
	ພແນກການ :	ກອງປ້ອງກັນພຍາດໄຂ້ປ່າ ກະຊວງສາທາຣະນະສຸກ
ໜ່ວຍປ້ອງກັນພຍາດໄຂ້ປ່າ		

໑. <u>ຂໍ້ມູນທົ່ວໄປ</u>:

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ພຍາດໄຂ້ປ່າເປັນພຍາດຕິດຕໍ່ທີ່ສຳຄັນ ຊຶ່ງເຮັດໃຫ້ຄົນລາວເຮົາ ປະຕິບັດງານບໍ່ໄດ້ເຕັມສ່ວນ, ເຮົາຄວນປ້ອງກັນພຍາດນີ້. ເຮົາຄວນປ້ອງກັນພຍາດໄຂ້ປ່າ ໃນເຂດທີ່ມີກຳລັງຄົນສ່ວນໃຫຍ່ຢູ່ ແລະໃນບ່ອນຫຼືເຂດ ທີ່ເຮົາໃຫ້ຄວາມສຳຄັນໃນດ້ານພັທນາ.

ຂ. <u>ບົດຊີ້ແຈງ</u> :

- ກົມອະນາມັຍ ແລະກົມການແພດ – ພແນກປາບປາມພຍາດໄຂ້ປ່າ ຄວນທຳການສຶກສາຄົ້ນຄວ້າດ້ານກີຕະວິທຍາ ສຳຣວດພື້ນທີ່ ແລະແຕ່ງຕັ້ງໜ່ວຍພະນັກງານ ເພື່ອທຳການປ້ອງກັນພຍາດໄຂ້ປ່າ. ໂຄງການປາບປາມພຍາດໄຂ້ປ່າ ທີ່ມີຢູ່ໃນແຜນພັທນາແມ່ນ້ຳຂອງໄດ້ລົງມືເມື່ອບໍ່ໆມານີ້. ຈາກການຊ່ວຍເຫຼືອຂອງອົງການ ອະນາມັຍໂລກ. ຈຸດໝາຍຂອງໂຄງການນີ້ ໃຫ້ຄວາມສຳຄັນຕໍ່ການພັທນາ ພແນກປາບປາມພຍາດໄຂ້ປ່າ ທີ່ທົ່ງຣາບວຽງຈັນ, ຕໍ່ມາໂຄງການ ຈະຂຍາຍອອກໄປຫາສ່ວນອື່ນຂອງປະເທດ ໂຄງການນີ້ໃຫ້ຄວາມສົນໃຈເປັນພິເສດນຳເຂດກໍ່ສ້າງເຂື່ອນນ້ຳງື່ມ ແລະສະຖານີທົດລອງກະສິກັມ ຢູ່ທ່າດອກແກ້ວ.

ເຂດອ້ອມແອ້ມວັງວຽງກໍ່ເປັນຈຸດປະສົງໃນໂຄງການ ການສຳຣວດພູມີປະເທດ, ການຈົດສຳມະໂນຄົວ, ການເຮັດແຜນທີ່ສຳຣວດໝູ່ບ້ານໃນແຂວງວຽງຈັນ, ການຕິດຕໍ່ກັບພວກນາຍບ້ານຕາແສງ ເພື່ອທຳການສີດຢາ ດີ.ດີ.ທີ (D D T)

ກີຕະວິທຍາ : - ການກຳຈັດແມງໄມ້ໃນໝູ່ບ້ານແລະໃນເຮືອນຊານ

- ການສຶກສາຊນິດຂອງແມງໄມ້ແລະພຶດໃນນ້ຳລາຍແລະກະເພາະອາຫານຂອງຈຳພວກທີ່ ໃຫ້ອັນຕຣາຍ.

ການສຶກສາໂຣກຣະບາດ :

- ວິທີແກ້ໄຂ ກວດເລືອດ ແລະມ້າມຂອງຄົນເຈັບ ຕ້ອງໃຫ້ນັກຮຽນໝົດທຸກຄົນ ໃນວຽງຈັນແລະເດັກນ້ອຍ ທີ່ມີອາຍຸຕ່ຳ, ໄດ້ຮັບການກວດໃຫ້ໄດ້ເຖິງ ໑໐໐%(໕໐%ສຳຮັບຜູ້ອາຍຸສູງ)

ຄ. <u>ຂໍ້ມູນອື່ນໆ</u>

- ການກວດຄົນເຈັບຢູ່ໜ່ວຍພຍາດ ໄດ້ຕັ້ງຕົ້ນແຕ່ເດືອນ ກໍຣະກະດາ ໑໙໗໐
- ການອອກກວດຄົນເຈັບ : ເບິ່ງ) ຣາຍການເຣັດວຽກ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ຄ່າໃຊ້ຈ່າຍທັງໝົດ ໑໙໗໐-໑໙໗໑ : ໔໘.໗໖໙.໐໐໐ ກີບ

ແບ່ງອອກເປັນ : ງົບປະມານພັທນາ : ໗.໒໑໐.໐໐໐ ກີບ

ອົງການອະນາມັຍໂລກ: ໒໘.໘໖໙.໐໐໐ ກີບ

ຢູເສດ : ໑໒.໖໙໐.໐໐໐ ກີບ

(ຣາຍງານງົບປະມານພັທນາ: ໒໒໙.໔໑໕ ກີບ)

ສອງ : <u>ປະຕິທິນການດຳເນີນງານ</u>

ການດຳເນີນງານ	ກ່ອນວັນທີ ໑/໗/໗໐	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ຫຼັງວັນທີ ໓໐/໖/໗໑
໑ ການສຳຣວດພູມີປະເທດ		----------	----------	----------	---	
໒ ການສຶກຢາ ດີ.ດີ ທີ			---		---	
໓ ການຈັບຍຸງ		----------	----------	----------	----------	
໔ ການຈັບຫນອນນ້ຳ ຈຳແນກແນວໄມ້ແລະກວດພິດ		----------	----------	----------	----------	
໕ ການກວດເລືອດ		----------	----------	----------	----------	
໖ ການສັກຢາ ປ້ອງກັນໃຫ້ຜູ້ປ່ວຍ		----------	----------	----------	----------	
໗ ການກວດມ້ານຂອງຜູ້ປ່ວຍ		----------	----------	----------	----------	

24/VII
ຫ້າມຈຳໜ່າຍ

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ; **ການລົງທຶນ.**		
໑. ອຸປກອນ		
-ຣົດລັງໂຣເວີຊວງຍາວ ໑ ຄັນ		ອົງການອະນາມັຍໂລກ
ແລະອຸປກອນອື່ນໆ	໕.໐໐໐.໐໐໐	ຢູເສດ
-ຣົດຊິບຊ່ວງສັ້ນ ໑ ຄັນ		
ຣົດຊິບຊວງຍາວ ໑ ຄັນ	໔.໖໐໐.໐໐໐	
-ອຸປກອນ ເທັກນິກ	໖໙໐.໐໐໐	ງົບປະມານ
- ພະນັກງານ	໓໙.໐໐໐	ພັທນາ
໒. **ການດຳເນີນງານ**		
- ພະນັກງານ ເຄື່ອນທີ່ (ສຳຣັບສຶດຍາ		
(ດີ.ດີ.ທີ.)	໖.໔໔໕.໐໐໐	ງົບປະມານພັທນາ
- ຜູ້ຊ່ຽວຊານ	໑໙.໖໖໘.໐໐໐	ອົງການອະນາມັຍໂລກ
- ເຄື່ອງໃຊ້ໃນຫ້ອງການ	໖໖໐.໐໐໐	ງົບປະມານພັທນາ
- ເຄື່ອງມື ໃນການສຳຣວດພູມີປະເທດ	໗໘໐.໐໐໐	ຢູເສດ
- ນ້ຳມັນຣົດ ແລະນຳມັນເຄື່ອງ	໑.໐໐໐.໐໐໐	ງົບປະມານພັທນາ
- ເຄື່ອງອື່ນໆ (ການທັກເພ,ອະໄຫລ່ຣົດ)	໑.໘໘໘.໐໐໐	"
ເຄື່ອງນຸ່ງ,ແລະຣາຍຈ່າຍຍ່ອຍ)	໔໐໐.໐໐໐	ຢູເສດ
- ຢາ ປົວພຍາດ ແລະຢາຂ້າແມງໄມ້	໓.໓໐໐.໐໐໐	ຢູເສດ
- ອື່ນໆ(ອົງການອະນາມັຍໂລກ)	໓.໔໐໐.໐໐໐	ອົງການອະນາມັຍໂລກ
ໂ ຣ ມ	໔໗.໓໖໘.໐໐໐	

ໂຄງການເລກທີ ກຸມ	ກອງປະຊຸມ : ດານປະຊາກອນ ສາທາຣະນະສຸກ ພແນກການ : ກົມສາທາຣະນະສຸກ
ການປ້ອງກັນພຍາດປອດແຫ້ງ (ວັນນະໂຣກ)	

໑. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງຫມາຍຂອງໂຄງການ</u>

ປັດຈຸບັນນີ້ລາວເຮົາມີພົລເມືອງ ໔໐໐.໐໐໐ ຫາ ໔໕໑.໐໐໐ ຄົນ ທີ່ເປັນພຍາດປອດແຫ້ງ.ພຍາດປອດແຫ້ງ ຢູ່ທີ່ນີ້ ເປັນບັນຫາຫນັກແກ່ກົມສາທາຣະນະສຸກ. ເຮົາຈຳເປັນຕ້ອງ :

໑. ປ້ອງກັນເດັກນ້ອຍ ເພາະເປັນພວກທີ່ຈະຖືກພຍາດນີ້ຄຸກຄາມໄດ້ງ່າຍ.

໒. ປາບປາມບ່ອນຊອງທີ່ມີພຍາດຕິດຕໍ່ ເທົ່າທີ່ຈະເຮັດໄດ້, ຫມາຍຄວາມວ່າຕ້ອງຮັກສາພວກຄົນເຈັບເປັນວັນນະໂຣກສ່ວນໃຫຍ່.

໒. <u>ບົດຊີ້ແຈງ</u> :

ພະນັກງານຂອງກົມສົງເຄາະແມ່ແລະເດັກ (P M I) ແລະຄນະເຄື່ອນທີ່ຕາມຈຸ້ມມະບົດຂອງກົມສາທາຣະນະສຸກ ແລະກົມແພດສາດ ຈະໄດ້ທຳການສັກຢາ ປ້ອງກັນ ແກ່ເດັກເກີດໃຫມ່ ແລະນັກຮຽນອະນຸບານ ຢູ່ແຫ່ງອື່ນ, ເຊັ່ນ ໂຮງພຍາບານ ແລະຫນ່ວຍພຍາບານ ຈະໄດ້ມີການກວດລ້າງ ແລະຮັກສາພວກເປັນວັນນະໂຣກ.

໓. <u>ຂໍ້ມູນອື່ນໆ</u> :

ໂຄງການ ຈະຂຍາຍອອກໃນ ຣະຍະຫລາຍປີ :

໑໙໖໙-໑໙໗໐ : ການຈັດຕັ້ງແລະວາງໂຄງການ

໑໙໗໐-໑໙໗໑ : ການຝຶກຫັດ ພະນັກງານສຶດຢາ ໖໐ ຄົນ ເພື່ອທຳການສັກວັກແຊງ B.C.G. ຈຳນວນ ໔໕໐.໐໐໐ ເຂັມກ່ວມ ໂດຍຈະຕັ້ງຕົ້ນ ຢູ່ໂຮງພຍາບານມະໂຫສົດ ແລະສູນກາງສີໄຄ ຕໍ່ໄປ ໂຄງການຈະຂຍາຍໄປເຖິງໂຮງພຍາບານ ຫລວງພຣະບາງ, ທ່າແຂກ) ຫນ່ວຍຮັກສາພຍາບານທ່າເດື່ອ, ບໍ່ໂອ ແລະໂຮງພຍາບານ ເຂດຍ່ອຍວັງວຽງ, ປາກຊັນ ແລະແກ້ງກອກ. ການສັກຢາຈະດຳເນີນຕໍ່ໄປທຸກໆປີ.

໔. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> .

ເງິນຈຳນວນ ໔.໔໕໓.໘໔໔ ກີບ ໃນຣາຍງານ (ບໍ່ນັບ ວັນທີ ໓໐.໖.໗໐) ຂອງງົບປະມານພັທນາ ໑໙໖໙-໑໙໗໐ ຈະໃຊ້ໃນການຊື້ຢາ;

ໂຄງການ ໑໙໗໐-໑໙໗໑ ຈະໝົດໄປ ໑໐.໗໐໐.໑໕໒ ກີບ ໃນຈຳນວນງົບປະມານພັທນາ (ເງິນກູ້ຢືມໃໝ່).

ອົງການອະນາມັຍໂລກ ຈະຊ່ວຍຜູ້ຊ່ຽວຊານຜູ້ນຶ່ງແລະ ສົ່ງນາງພຍາບານອີກສອງຄົນ ມາຝຶກຫັດ ພະນັກງານສັກຢາ (ປະມານ ໔.໘໕໐.໐໐໐ ກີບ) ຣາຍການທີ່ຍັງເຫຼືອ : ໗.໓໑໖.໐໐໐ ກີບ (ໂຄງການ ໑໙໖໙-໗໐.)

ສອງ : <u>ປະຕິທິນການດຳເນີນງານ</u>

	ການດຳເນີນງານ	ກ່ອນ ວັນທີ ໑.໗.໗໑	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ພາຍຫຼັງ ວັນທີ ໓໐/໖/໗໑.
໑	ການຕົກລົງຂອງໂຄງການ ໂດຍທຶນຊ່ວຍເຫຼືອຂອງອົງການ ອະນາມັຍໂລກ	-------					
໒	ການຝຶກຫັດ ພວກສັກຢາ ໓໐ ຄົນ ໂດຍນາງພຍາບານ ໒ ຄົນ ຂອງອົງການອະນາມັຍໂລກ		-----	-----			
໓	ການສັກຢາ ໒໕໐.໐໐໐ ເຂັມ ຢູ່ຕາມໂຮງຮຽນແລະຕາມຈຸ້ມມະນຸດ		---------	---------			
໔	ການສັກຢາ ຕື່ມອີກ ໑໒໕.໐໐໐ ຢູ່ຕາມໂຮງຮຽນແລະຕາມຈຸ້ມມະນຸດ				---------	--	
໕	ການກວດລ້າງ, ການຮັກສາ ແລະເບິ່ງແຍງ (ມະໂຫສົດສິໄຂ)	-----	---------	---------	---------	---------	-----
໖	ການຂຍາຍ ໂຄງການ(໕)ຢູ່ ຕາມໜ່ວຍພຍາບານຕາມໝູ່ບ້ານ		=========	=========	=========	=========	
໗	ການຂຍາຍໂຄງການ(໕)ຢູ່ຕາມ ໜ່ວຍພຍາບານຕາມໝູ່ບ້ານ				=========	=========	

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ (ເງິນກູ້ຢືມ)	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ການລົງທຶນ	໕.໔໘໑.໙໕໙	
໑. ອຸປກອນ ການຊ່າງ(ຫີບ,ຖ້ວຍຊາມ,ຕູ້ເຢັນ,ກ້ອງ		
ຈຸລທັດ, ຟີມ ແລະອື່ນໆ)	໒.໓໕໙.໙໕໙	
໒. ເຄື່ອງໃຊ້ຫ້ອງການ :		
- ການຂຽນໃບແບບ	໗໕.໐໐໐	
- ຈັກຄິດເລກ	໓໙໐.໐໐໐	
- ໃບແບບເຕັກນິກ	໒໕໗.໐໐໐	
໓. ພາຫະນະ ຂົນສົ່ງ		
-ຣົດຕ່າງໆ	໑.໖໕໐.໐໐໐	ງົບປະມານພັທນາ
-ຄ່າໃຊ້ຈ່າຍອື່ນໆ ຈາກການໃຊ້ຣົດຊົບ	໗໖.໐໐໐	ແຫ່ງຊາດ
໔. ພະນັກງານ (ກຳລັງຝຶກຫັດ)	໕໐໔.໐໐໐	
ຂ. ການດຳເນີນງານ.	໔.໖໕໐.໕໐໐	
໑.ຢາປົວພຍາດ		
- ວັນນະໂຣກ : ໔໐໐ ລອດ	໙໒.໐໐໐	
- ວັກຊິນ : ໒໕໐.໐໐໐ ເຂັມ	໑.໒໙໒.໐໐໐	
- ຢາປົວພຍາດ ສຳຣັບ ໒.໐໐໐ ຄົນ	໒.໙໘໐.໐໐໐	
໒. ການຊື້ສິ່ງ (ນ້ຳມັນແລະອື່ນໆ)	໓໖໙.໐໐໐	
ການສ້ອມແປງຍານພາຫະນະ	໕໐໐.໐໐໐	
ເຄື່ອງໃຊ້ໃນໂຮງການ	໕໐.໐໐໐	
+ ໑,໙% ເພື່ອໄວ້ສຳຣັບໂຄງການ	໑໙໘.໐໐໐	
໓. ພະນັກງານອະນາມັຍໂລກ	໔.໘໕໐.໐໐໐	ອົງການອະນາມັຍໂລກ
ໂ ຣ ມ	໑໕.໕໕໐.໑໕໙	

<u>ໝາຍເຫດ</u> : ໃນຫົວເລື່ອງ ໒໐.໓ ການກູ້ຢືມ ເງິນຈາກງົບປະມານພັທນາ ມີຈຳນວນຢູ່ ໓.໐໗໗.໙໕໙.ກີບແທນ ທີ່ ໕.໐໗໗.໙໕໙ ກີບ ເງິນຈຳນວນ ໒.໐໐໐.໐໐໐ ກີບ ທີ່ຂາດຢູ່ນັ້ນ ຈະໄດ້ໃຊ້ຈ່າຍກາຍຈຳນວນ ເງິນກູ້ຢືມ ພາຍຫລັງ ເງິນທີ່ໄດ້ກູ້ຢືມນັ້ນໝົດໄປ.

<u>ໝາຍເຫດ</u> ໒– ໃນເວລາທີ່ພວມຈັດພິມ ແຜນປະຈຳປີນີ້ ຍັງບໍ່ເປັນທີ່ຕົກລົງກັນເທື່ອ ວ່າຣົດອື່ນ ສິ່ງທີ່ຈະສັ່ງຊື້ນັ້ນ ເປັນຣົດຊະນິດໃດແດ່. ເປັນອັນວ່າຣົດຊະນິດໃດ ເປັນທີ່ຕ້ອງການ ຮີບດ່ວນກ່ອນ ກໍຈະໄດ້ສັ່ງຊື້ມາກ່ອນຕາມລຳດັບ.

ໂຄງການເລກທີ ກ໔	ກອງປະຊຸມ : ດ້ານປະຊາກອນ- ສາທາຣະນະສຸກ ພແນກການ : ກົມສາທາຣະນະສຸກ
ການປັບປຸງ ໂຮງພຍາບານ ຫລວງພຣະບາງ	

໑. <u>ຂໍ້ມູນທົ່ວໄປ</u>

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ຈຸດມຸ່ງໝາຍໃນການປັບປຸງນີ້ ກໍເພື່ອປັບປຸງແປງ ໂຮງພຍາບານ ຫລວງພຣະບາງ ໃຫ້ເປັນ ໂຮງພຍາບານເຂດທາງພາກເໜືອ.

ການອົບຣົມສຸຂາພິບານນີ້ ຈະສາມາດຮັບຄົນເຈັບທີ່ມາຈາກແຂວງ -ຫົວຂອງ ໄຊຍະບູຣີ, ຜົ້ງສາລີ ໄດ້ຫລາຍຂຶ້ນ.

ຂ. <u>ບົດຊີ້ແຈງ</u> :

ການກໍ່ສ້າງ ອາຄານສອງຊັ້ນ ມີຫ້ອງການ, ຫ້ອງສ່ອງໄຟຟ້າ ຫ້ອງນອນຄົນເຈັບ ຫ້ອງຮັກສາ ແລະຫ້ອງປະຊຸມ ອາຄານນັ້ນຈະສາມາດ ບັນຈຸຕຽງຄົນເຈັບໄດ້ ໑໐໐ ໜ່ວຍ.

ຄ. <u>ຂໍ້ມູນອື່ນໆ</u>

ຢູເສດເປັນຜູ້ສຶກສາ ວາງແຜນການກໍ່ສ້າງ, ແລະອອກແບບ ການກໍ່ສ້າງຈະໄດ້ ລົງມືໃນໄຕຣມາດທຳອິດຂອງປີ ໑໙໗໑.

໒. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ.</u>

ຄ່າໃຊ້ຈ່າຍທັງໝົດໃນໂຄງການ ກະຢູ່ ໔໑໐.໐໐໐ ໂດລາອະເມຣິກັນ.

ເງິນທັງໝົດຈະມາຈາກ ຢູເສດ.

สอง: ปติทินภานดำเนินงาน .

ภานดำเนินงาน	ก่อนวัน ที่ ๑/ฦ/ฦ๑	๑ ฌ ฦ ០ - ๑ ฌ ฦ ๑: ไตรมาด ที่ ฆ	ไตรมาด ที่ ๔	ไตรมาด ที่ ๑	ไตรมาด ที่ ๔	พายหลัง วันที่ ฆ០/ผิ/ฦ០.
๑ ภานสึกสา		-----	-----			
๔ ภานก่สาง				--------	--------	----
ฆ ภานติกแต่งเครื่องเรือน และเครื่องใจุต่างๆ				จ		--->
๔ ภานติดตั้ง และ ดำเนินงาน						--->

สาม : แยกส่วนปะกอบค่าใจุจ่ายและภานจัดสันทิน

ส่วนปะกอบค่าใจุจ่าย	ค่าใจุจ่าย	ภานจัดสันทิน
ภานลึงทิน		
ภานก่สาง :		
- รูบและแผนที่	១០៥.០០០.០០០	ภานจุ่วยเหือ
- พัสดุ + อุปะกอน +ค่าแรงงาน	(៤១០.០០០ โดลา)	ยูเสด
ภานดำเนินงาน	P.M.	
โ ร ม	១០៥.០០០.០០០	

หมายเหด : ภานสึกสายังบํสันสุดลง, จึ่งเป็นภานยาก ที่จะให้รายละอรด ภ่รอกับ ภานใจุจ่าย.

ໂຄງການເລກທີ ກ໕	ກອງປະຊຸມ : ຄານປະຊາກອນ -ສາທາຣະນະສຸກ ພແນກການ : ກົມເພສັຊກັມ ກະຊວງສາທາຣະນະສຸກ
ຫ້ອງທົດລອງປຸງແຕ່ງຢາ	

໑. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u>

ໃນປັດຈຸບັນ, ຜລິດພັນສຳຣັບປຸງແຕ່ງຢາທັງໝົດ ເພື່ອຄວາມຕ້ອງການຂອງກົມສາທາຣະນະສຸກນັ້ນ ແມ່ນໄດ້ເອົາມາຈາກຕ່າງປະເທດ ສະນັ້ນ ຈຶ່ງໄດ້ມີການຕົກລົງກັນກັບ ຢູເສດ ເພື່ອກໍ່ສ້າງຫ້ອງທົດລອງແລະປຸງແຕ່ງຢານ້ອຍວ່າເຊຣົມ (Sérums) ຊນິດຫວານ ແລະຊນິດເຄັມເປັນທີ່ຕ້ອງການຫລາຍ, ການີ້ຂົນສົ່ງກໍແພງ, ເພີ່ນຈຶ່ງມີໂຄງການຈະຜລິດຢາ ສອງຂນານນີ້ກ່ອນ ໃນເບື້ອງຕົ້ນ.

ຂ. <u>ບົດຊີ້ແຈງ</u> :

ການກໍ່ສ້າງອາຄານຫລັງນີ້ຈະມີຂຶ້ນ ທີ່ສຖານທີ່ຂອງກົມເພສັຊກັມແຫ່ງຊາດຊຸມລຸ່ມຈະໃຊ້ເຮັດບ່ອນປຸງແຕ່ງຢາ ແລະຊັ້ນເທິງ ບ່ອນຄວບຄຸມການທົດລອງ.

ຄ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ : ໑໙໗໐ - ໑໙໗໑.</u>

- ການກໍ່ສ້າງແລະເຄື່ອງອຸປກອນ ໄດ້ລັບການຊ່ວຍເຫຼືອຈາກ ຢູເສດ (ປະມານ ໔໐.໐໐໐.໐໐໐ ກີບ)
- ແຮງງານໄດ້ຮັບຈາກງົບປະມານແຫ່ງຊາດ ເປັນເງິນຢູ່ ໕.໐໐໐.໐໐໐ ກີບ (ເງິນກູ້ຢືມມາກ່ອນ)

ງ. <u>ຂໍ້ມູນອື່ນໆ</u> :

ນ້ຳຕົວຢ່າງ ຈາກບໍຣິສັດ ນ້ຳປະປາວຽງຈັນ ໄດ້ຖືກສົ່ງໄປວິຊີງຕັນ ເພື່ອການສຶກສາ ການກໍ່ສ້າງຈະລົງມືໄດ້ພາຍຫລັງທີ່ໄດ້ຮັບຜົນຂອງການສຳຣວດ ທີ່ຈະແຈ້ງໃຫ້ຊາບວ່າ ເຄື່ອງຈັກແບບໃດທີ່ຈະເໝາະສົມໃນການດຳເນີນງານ.

ສອງ : <u>ປະຕິທິນການດຳເນີນງານ</u>

ວຽກການທຸກຢ່າງຈະລົງມືໄດ້ກໍພາຍຫລັງ ທີ່ໄດ້ຮັບຜົນຂອງການສຳຣວດຈາກ ວໍຊິງຕັນແລ້ວ.

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ</u> .

ສ່ວນປະກອບຄ່າໃຊ້ຈ່າຍ (ເງິນທີ່ໄດ້ຢືມແລ້ວ)	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u> :		
໑. ການຂຸດດິນ (໕໔໐)		
໒. ການຕົດແປງໜ້າດິນ		
໓. ການກໍ່ສ້າງ		
- ແຜນທີ່ແລະຮູບ		
- ວັດຖຸທີ່ໃຊ້	ບໍ່ຮູ້	ຢູເສດ
- ອຸປກອນເຄື່ອງໃຊ້	໕.000.000	ງົບປະມານແຫ່ງຊາດ
- ແຮງງານ		
໔. ເຄື່ອງກໍ່ສ້າງ	ບໍ່ຮູ້	ການຊ່ວຍເຫຼືອຈາກຢູເສດ
ຂ. <u>ການດຳເນີນງານ</u>		
ຣາຍຈ່າຍສ່ວນໂຮມໃນຂັ້ນແຮກດຳເນີນງານ		
ໂ ຮ ມ	໔໕.000.000 (ປະມານ)	

໑໗໐. <u>ກອງປະຊຸມກ່ຽວກັບດ້ານສັງຄົມ.</u>

໑໗໑. <u>ບົດແນະນຳ</u>

ໂຄງການສີ່ຢ່າງ ຂອງພແນກສັງຄົມດັ່ງທີ່ໄດ້ກ່າວໄວ້ ໃນແຜນດຳເນີນງານ ມີ :

- ການຊ່ວຍເຫຼືອແລະອຸ້ມຊູພວກອົພຍົບ, ພວກເສັຽອົງຄະ ພວກນັກຮົບເກົ່າ ແລະພວກປະສົບພັຍສົງຄາມ
- ການໂຄສະນາ
- ການວາງແຜນແຮງງານຄົນ
- ການດັດແປງ ຮ່າງກົດໝາຍ.

ເຖິງແມ່ນວ່າ ອຸປກອນແຫ່ງສັງຄົມ ຈະບໍ່ໄດ້ປະກອບໃນການລົງທຶນ ແລະນຳຜົນມາກໍດີ ແລະບໍ່ມີສ່ວນສຳຄັນ ໃນແຜນດຳເນີນງານກໍດີແຕ່ສະຖານະການທາງສົງຄາມ ໄດ້ບັງຄັບໃຫ້ປະເທດເຮົາອອກກຳລັງຕື່ມໃນການຊ່ວຍເຫຼືອພວກອົພຍົບ ພວກເສັຽອົງຄະ ແລະພວກນັກຮົບເກົ່າ ການທ້ອນໂຮມພວກອົພຍົບ, ການສ້າງທີ່ພັກພວກນັກຮົບເກົ່າ, ສູນກາງສ້າງອົງຄະທຽມ ມີແຜນການໃນດ້ານນີ້ຢູ່.

ສູນກາງທ້ອນໂຮມສາມແຫ່ງ ຈະໄດ້ຖືກສ້າງຂຶ້ນທີ່ທົ່ງຮາບວຽງຈັນ. ການກໍ່ສ້າງຈະໄດ້ຕັ້ງຕົ້ນຂຶ້ນໃນເຂດອື່ນໆ ຖ້າມີພວກອົພຍົບຫລາຍຂຶ້ນ. ກ່ອນອື່ນ, ຣັຖບານຈະກຳກັບໃນການທ້ອນໂຮມການໃຫ້ສະຖານທີ່, ການແບ່ງປັນແລະການດັດແປງໜ້າດິນ ຫຼື ການຂຸດຖົມດິນ.

ການລົງທຶນຢ່າງໜັກສຳຣັບປະເທດນີ້, ຢູເສດຈະໃຫ້ການຊ່ວຍເຫຼືອເປັນສ່ວນໃຫຍ່.

ກ່ຽວກັບການທ້ອນໂຮມ ພວກເສັຽອົງຄະແລະພວກນັກຮົບເກົ່າ, ໄດ້ມີແຜນຈະສ້າງບ້ານພັກ ຢູ່ໃກ້ສູນກາງລຽງສັດ ຢູ່ບ້ານນາແຄມໃກ້ວັງວຽງ. ຈຸດໝາຍປາຍທາງທັງໝົດ ຂອງການກໍ່ສ້າງນີ້ ກໍເພື່ອຊ່ວຍພວກປະສົບພັຍສົງຄາມ ໃຫ້ສາມາດທຳມາຫາກິນດ້ວຍຕົນເອງ ຖ້າບໍ່ດັ່ງນັ້ນ ຣັຖບານຈະບໍ່ມີທຶນອຸ້ມຊູຕໍ່ໄປໄດ້.

ໃນທີ່ສຸດ, ສູນກາງສ້າງອົງຄະທຽມ ທີ່ຕັ້ງໄວ້ສຳຣັບພວກເສັຽອົງຄະ ຈະໄດ້ທຸ່ມເທກຳລັງເພື່ອຜລິດອົງຄະທຽມໃຫ້ຫລາຍຂຶ້ນ.

ກ່ຽວກັບການໂຄສະນາ ຍັງບໍ່ມີໂຄງການສ່ວນໃຫຍ່ທີ່ໄດ້ກະໄວ້ສຳຣັບປີ ໑໙໖໐-໖໑ ແຕ່ວ່າການສຶກສາສະຖານີ ໂທຣະທັດແຫ່ງຊາດຍັງດຳເນີນຢູ່.

ໂຄງການດຽວທີ່ມີຕົ້ນຕໍ ໃນການຈັດຕັ້ງແຮງງານຄືນ ແມ່ນພແນກສຳຣວດວຽກການ ໃນຣະຍະ ໑໙໗໐–໑໙໗໑ ພແນກນີ້ຈະໄດ້ມີອຸປກອນ ຈະໄດ້ຈັດຕັ້ງຂຶ້ນແລະກ່ອນອື່ນ ມີໜ້າທີ່ຮັບຜິດຊອບໃນບັນຫາແຮງງານຢູ່ເຂດນ້ຳງື່ມຕໍ່ໄປ. ພແນກນີ້ຈະໄດ້ຂຍາຍວຽກການອອກໄປ. ຕໍ່ໄປອີກ, ການສຳຣວດເຂດພັທນາກໍຈະໄດ້ຖືກສ້າງຂຶ້ນ.

ການສຶກສາເປັນຂັ້ນໆ ໃນການວາງແຜນແຮງງານຄືນແຫ່ງນັ້ນ ຈະໄດ້ຕັ້ງຕົ້ນຂຶ້ນ ໃນຫົວຂໍ້ການດັດແປງໂຄງການ ໃນທີ່ສຸດ, ກ່ຽວກັບການດັດແປງຮ່າງກົດໝາຍ, ມີໂຄງການດຽວ ຄື ໂຄງການສ້າງໂຮງການສານໃໝ່ ເພາະຣາຍຈ່າຍແພງຫລາຍ, ເພີ່ນຈຶ່ງມີໂຄງການປັບປຸງອາຄານນີ້ ໂດຍທຶນຊ່ວຍເຫຼືອຈາກຝຣັ່ງເສດ ແຕ່ມື້ລົງມືທຳງານນັ້ນ ຍັງບໍ່ທັນໄດ້ກຳໜົດເທື່ອ.

໑໘໔. <u>ໂຄງການ ອຸປກອນແຫ່ງສັງຄົມ.</u>

24 / VII
ห้ามจำหน่าย

ໂຄງການໃຫຍ່ ເລກທີ ໔	ກອງປະຊຸມ : ອຸປະກອນແຫ່ງສັງຄົມ ວຽກການ : ກົມທ້ອນໂຮມພວກເສັຽອົງຄະ ແລະນັກຮົບເກົ່າ
ການທ້ອນໂຮມ ພວກອົພຍົບແລະທະຫານເສັຽອົງຄະ	

໑. ຂໍ້ມູນທົ່ວໄປ:

ກ. ຈຸດມຸ່ງໝາຍຂອງໂຄງການ :

ໃນຣະຍະປີ ໑໙໖໙-໑໙໗໐, ຍ້ອນວ່າມີການຍິງກັນຢູ່ອ້ອມແອ້ມທົ່ງໄຫຫີນ ແລະທາງພາກໃຕ້ຂອງປະເທດ ພວກອົພຍົບທີ່ຈະຕ້ອງຊ່ວຍເຫຼືອ ຈຶ່ງໄດ້ເພີ່ມຈຳນວນຂຶ້ນໄວທີ່ສຸດ ເພື່ອຈະໃຫ້ການຊ່ວຍເຫຼືອນັ້ນເບົາບາງລົງ ເຮົາຕ້ອງຈັດເຂົາເຈົ້າເຂົ້າບ້ານໃໝ່ ໃຫ້ວຽກເຮັດແກ່ເຂົາເຈົ້າ ເພື່ອເຂົາເຈົ້າຈະໄດ້ມີວິຊາຫາກິນກຸ້ມຕົວເອງ.

ພວກເສັຽອົງຄະ ແລະນັກຮົບເກົ່າກໍໄດ້ເພີ່ມຈຳນວນຂຶ້ນຄືກັນ. ພວກເຂົາເຈົ້າຕ້ອງມີວຽກເຮັດຢູ່ໃນສູນກາງອົບຮົມແຫ່ງຊາດ.

ຂ. ບົດຊີ້ແຈງ :

ໂຄງການໃຫຍ່ ແບ່ງອອກເປັນສອງພແນກນ້ອຍກັບພແນກໃດ ໄດ້ແກ່ :

- ການທ້ອນໂຮມພວກອົພຍົບ
- ການທ້ອນໂຮມພວກເສັຽອົງຄະແລະພວກນັກຮົບເກົ່າ.

໑. ການທ້ອນໂຮມພວກອົພຍົບ

ວຽກສ່ວນໃຫຍ່ມາຈາກຢູເສດ ທີ່ຈະສ້າງບ້ານໃໝ່ຢູ່ທົ່ງຮາບວຽງຈັນ ແລະໃນເຂດທ້ອນໂຮມພວກອົພຍົບ.

ສ່ວນຣັກສາເຄື່ອງຈັກຟຣັ່ງເສດ ຈະໄດ້ໃຊ້ໃນການດັດແປງໜ້າດິນໃນ ການສ້າງຖນົນ, ໃນການພັທນາປູກຝັງແລະອື່ນໆຕໍ່ໄປ.... ເງິນ ໕.໐໐໐.໐໐໐ ກີບ ທີ່ໄດ້ກະໄວ້ສຳຣັບໂຄງການໃນຣະຍະປີ ໑໙໖໙-໗໐ ນັ້ນ ບໍ່ໄດ້ຖືກນຳໄປໃຊ້ຈະເອົາມາໃຊ້ພາຍລູນ ໃນການລ້ອມຮົ້ວ, ການປູກຝັງແລະກະໄວ້ເຮັດທຶນໃນການທ້ອນໂຮມ ພວກອົພຍົບ ຢູ່ສູນເຂດທີ່ ມີ ມີໜ້າກສ້າງ ເຖິງ ມີ.໓໐໐ ເຮັກຕາ (ຢູ່ຣະຫວ່າງບ້ານອີໄລຫາທາງອົມແຂວງວຽງຈັນ) ການທ້ອນໂຮມອີກ ໔ ແຫ່ງ ກໍຈະໄດ້ກະໄວ້ຕາມພາຍຫລັງ. ວຽກທີ່ຄວນປະຕິບັດ ຄືການໝາຍເຂດອ້ອມຮອບຂອງທີ່ດິນ, ການຕົກແຕ່ງໜ້າດິນໂດຍອາສັຍຣົດຖູດ ອ້ອມຮອບທີ່ດິນຈະໄດ້ປັກຫລັກຊີ້ບັງ ຣະຍະ ໕ ຫລັກຕໍ່ ໑ ກິໂລແມດ. ຫລັກຈະມີນຳເບີໝາຍໄວ້ດ້ານອ້ອມຮອບທີ່ຕິດກັບຮົ້ວທັມມະຊາດ (ປ່າ) ຈະມີປ້າຍຕິດປະກາດໄວ້.

໔. <u>ການທ້ອນໂຮມພວກອົພຍົບແລະພວກນັກຮົບເກົ່າ</u> , ກ່ອນອື່ນວຽກສ່ວນໃຫຍ່ມາຈາກຣັຖບານ ເພິ່ນໄດ້ກະຈະສ້າງບ້ານພວກເສັຽອົງຄະຢູ່ບ້ານາແຄມ (ເມືອງວັງວຽງ), ກະເພື່ອໃຫ້ຢູ່ໄດ້ ໑໐໐ ຄອບຄົວ ເພິ່ນໄດ້ກະຈະສ້າງສູນກາງລ້ຽງສັດຢູ່ຜາໄລ (ເມືອງວັງວຽງ) ສູນກາງນີ້ຈະຊ່ວຍລຳລຽງອາຫານ ແກ່ສູນກາງດຳເນີນງານອື່ນໆ.

ລາຍລະອຽດໃນການດຳເນີນງານ :

- ການຕົກແຕ່ງທີ່ດິນເພື່ອການປູກຝັງ
- ການສ້າງອົວທີ່ມີທາງຍາວ ໔໐ ແມດ, ແລະທາງກ້ວາງ ໓.໖໐ ແມດ ສ້າງສາງເກັບຂອງ, ສ້າງບ່ອນຮັກສາຄົນເຈັບ,ແລະສ້າງໂຮງຮຽນ.

໗. <u>ລາຍຈ່າຍແລະການຈັດສັນທຶນ</u> :

໑. <u>ການທ້ອນໂຮມພວກອົພຍົບ</u>.

ສ່ວນຊ່ວຍເຫຼືອຈາກຢູເສດນັ້ນ ເປັນເງິນຢູ່ ໑.໓໓໗.໓໕໐.໐໐໐ ກີບ ສ່ວນຊ່ວຍເຫຼືອຈາກງົບປະມານໃນການພັທນາແຫ່ງຊາດນັ້ນ ມີລາຍລະອຽດຢູ່ດີ :

໕.໐໐໐.໐໐໐ ກີບ ສຳຣັບ ໑໙໖໙-໗໐

໑໐.໐໐໐.໐໐໐ ກີບ ເປັນ ງົບປະມານໃຫມ່.

ເງິນສ່ວນຫລັງນີ້ຈະໃຊ້ເປັນທຶນສຳຣັບ ສ່ວນຮັກສາເຄື່ອງຈັກຝຣັ່ງເສດ ເຮົາຕ້ອງຄິດວ່າງົບປະມານເປັນປີນັ້ນມີ ເປັນເງິນຢູ່ ໓໐.໐໐໐.໐໐໐ ກີບ ທີ່ຍັງຄ້າງຢູ່ນັ້ນເຮົາຈະຕ້ອງໄດ້ຊອກຫາອີກ.ການໃຊ້ຈ່າຍເງິນ ໖.໓໙໐.໐໐໐ ກີບ ຈາກງົບປະມານພັທນາແຫ່ງຊາດນັ້ນ ຍັງມີບັນຫາຢູ່ ແລະຈະໃຊ້ສຳຣັບໂຄງການໃດໂຄງການນຶ່ງ ຂອງກອງປະຊຸມກຽມວາງແຜນອຸປກອນແຫ່ງສັງຄົມ, ຕາມຄວາມຕ້ອງການອື່ນໆອີກ ທີ່ຈະມີຂຶ້ນຕາມພາຍຫລັງ.

໔. <u>ການທ້ອນໂຮມພວກເສັຽອົງຄະແລະພວກນັກຮົບເກົ່າ</u> :

ລາຍຈ່າຍປີ ໑໙໖໙-໗໐ ຂອງໂຄງການເປັນເງິນຢູ່ ໔໓.໙໔໐.໐໐໐ ກີບ,ມາຈາກງົບປະມານແຫ່ງຊາດ. (ຍົກມາຈາກ ປີ ໑໙໖໙-໗໐ ມີຢູ່ ໑໖.໔໑໖.໐໐໖ ກີບ)

ສອງ : ປະຕິທິນການດຳເນີນງານ

໑. ການທ້ອນໂຮມພວກອົພຍົບ.

ການດຳເນີນງານ	໑໙໗໐		໑໙໗໐ - ໑໙໗໑			
	ໄຕຣມາດ ທີ ໒	ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	ໄຕຣມາດ ທີ ໓
໑ ການໄດ້ມາຊຶ່ງທີ່ດິນ						
໒ ແຜນທີ່ແລະຮູບ						
໓ ປະກາດ ປະມູນ	--------	--------				
໔ ການລົງມືສ້າງຕຶກ			--------	--------		
໕. ການຈັດຫາຕູ້ຕັ່ງແລະເຄື່ອງໃຊ້						
໖ ການລົງມືດຳເນີນງານ						

໒. ການທ້ອນໂຮມ ພວກເສັຽອົງຄະແລະພວກນັກຮົບເກົ່າ.

ການດຳເນີນງານ	ກອນວັນທີ ໑.ກ. ກ໐	໑໙໗໐ - ໑໙໗໑				ພາຍຫຼັງວັນທີ ໓໐.໖. ໗໑
		ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	
໑ ການຮັບສມັກພນັກງານ		------				
໒ ການສຶກສາສຖານທີ່		----	------			
໓ ການປະມູນ		----	------			
໔ ການດຳເນີນງານໄປຮອດຈຸດສຳເຣັດງານ		--------	--------	--------	--------	

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ການທ້ອນໂຮມພວກອົບພະຍົບ		
ການລົງທຶນ		
໒໐-໑- ການກໍ່ສ້າງ	໙໓.໐໐໐.໐໐໐	ຢູເສດ
໒໐-໒- ການໝາຍເຂດ, ການປູກຝັງ, ການດັດດູຫຍ້າໜ້າດິນ	໕.໐໐໐.໐໐໐	(ຣາຍງານ)
ການດຳເນີນງານ		
໒໐-໖. ການດຳເນີນງານຂອງສາງເກັບເຄື່ອງຈັກ	໑໐.໐໐໐.໐໐໐	ງົບປະມານແຫ່ງຊາດ
໒໐-໑. ພະນັກງານ	໒໒໔.໘໕໐.໐໐໐	ຢູເສດ
໒໐-໖. ອາຫານການກິນ	໑.໔໗໓.໕໐໐.໐໐໐	"
໒໐-໖. ອື່ນໆ	໙໖.໕໐໐.໐໐໐	"
ໂ ຮ ມ	໑.໙໐໒.໘໕໐.໐໐໐	
ຢູເສດ ຈ່າຍເປັນເງິນກີບ	໑໗໖.໓໕໐.໐໐໐ ກີບ	
ເປັນໂດລາອະເມຣິກັນ	໑.໗໑໑.໕໐໐.໐໐໐ ໂດລາ	

ການທ້ອນໂຮມ ພວກເສັຽອົງຄະແລະນັກຮົບເກົ່າ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ໂຮມ	ການຈັດສັນທຶນ
ກ. ການລົງທຶນ			
໑.ການກໍ່ສ້າງ		໑໑.໕໔໐.໐໐໐	ງົບປະມານແຫ່ງຊາດ
-ຄ່າກໍ່ສ້າງ	໓໐໐.໐໐໐		
-ກະເບື້ອງມຸງ	໓.໐໐໐.໐໐໐		
-ຄ່າເຊົ່າ			
ລົດດູດທາງແລະຄ່າກວດທາງໃຫ້			
ຣາບ	໘.໒໔໐.໐໐໐		
໒.-ອຸປກອນ		໕.໓໑໐.໐໐໐	"
-ຈັກສູບນ້ຳ ໕ ເຄື່ອງ	໖໐໐.໐໐໐		
-ຈັກສີເຂົ້າ ໑ ເຄື່ອງ	໘໖໐.໐໐໐		
-ລົດຈິບ ໒ ຄັນ	໓.໘໕໐.໐໐໐		
ຂ. ການດຳເນີນງານ			
໑. ການຮັບສມັກ		໙໖໐.໐໐໐	ງົບປະມານແຫ່ງຊາດ
- ນາຍຊ່າງ ໒ ຄົນ	໓໖໐.໐໐໐		
- ຄົນຂັບລົດຊ່າງແປງ ໒ ຄົນ	໓໖໐.໐໐໐		
- ຄົນຂັບລົດຈິບ ໒ ຄົນ	໒໔໐.໐໐໐		
໒.ອື່ນໆ		໖.໑໐໐.໐໐໐	"
- ຄ່າລ້ຽງດູ ໑໐໐ ຄອບຄົວ			
ໃນກຳນົດ ໒ ເດືອນ	໒.໐໐໐.໐໐໐		
- ຄ່ານ້ຳມັນ	໔.໑໐໐.໐໐໐		
ໂ ຮ ມ		໒໓.໙໒໐.໐໐໐	

ໂຄງການເລກທີ ໗໖	ກອງປະຊຸມ : ອຸປກອນ ແຫ່ງສັງຄົມ ພແນກການ : ກົມນັກຮົບເກົ່າ

ສູນກາງຜູ້ເສັຽອົງຄະ

໑. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດໝາຍຂອງໂຄງການ</u> : ໂຄງການນີ້ມີຈຸດໝາຍ ຈະຊ່ວຍບົວຣະບັດພວກເສັຽອົງຄະ ແລະປະສົບພັຍສົງຄາມ, ຈະຊ່ວຍອົງຄະທຽມແກ່ເຂົາເຈົ້າ ເພື່ອໃຫ້ສາມາດເຮັດວຽກໄດ້. ໂຄງການນີ້ມີສ່ວນພົວພັນກັບສົງຄາມ.

ຂ. <u>ບົດຊີ້ແຈງ</u> :

ສູນກາງຄວນຈະເຮັດອົງຄະທຽມເພື່ອ :

- ຈະສັບປ່ຽນອົງຄະທຽມທີ່ໃຊ້ແລ້ວ.
- ຈະຫລີກເວັ້ນການຊື້ອົງຄະທຽມຈາກຕ່າງປະເທດ ຄວນຈັດຫາພະນັກງານເພື່ອຈະສ້າງອົງຄະທຽມໃຫ້ຫລາຍຂຶ້ນ.

ຄ. <u>ຂໍ້ມູນອື່ນໆ</u>. :

ໂຄງການນີ້ຈະຍືນຍົງຕລອດໄປຕາມແຜນພັທນາ.

ງ. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> :

ຄ່າໃຊ້ຈ່າຍປີ ໑໙໗໐-໗໑ ຂອງໂຄງການເປັນເງິນດັ່ງນີ້ :

ງົບປະມານພັທນາ - ຣາຍຈ່າຍໃໝ່ :	໙.໐໑໐.໐໐໐ ກີບ
ຢູເສດ	໑໔.໐໐໐.໐໐໐ ກີບ
ອົງການອະນາມັຍໂລກ	໒໔.໐໐໐.໐໐໐ ກີບ
ໂ ຮ ມ	໔໗.໐໑໐.໐໐໐ ກີບ

ຍົກມາຈາກງົບປະມານພັທນາເປັນເງິນຢູ່ : ໔໒໗.໙໒໗ ກີບ

ສອງ : ປະຕິທິນການດຳເນີນງານ

ການດຳເນີນງານ	໑໙໗໐ ໄຕຣມາດ ທີ ໒	໑໙໗໐ - ໑໙໗໑ ໄຕຣມາດ ທີ ໓	ໄຕຣມາດ ທີ ໔	ໄຕຣມາດ ທີ ໑	ໄຕຣມາດ ທີ ໒	໑໙໗໑ ໄຕຣມາດ ທີ ໓
໑. ປະກາດປະມູນ	----					
໒. ການດຳເນີນງານ		----	----	----	----	

ສາມ : ແຍກສ່ວນປະກອບຄ່າໃຊ້ຈ່າຍແລະການຈັດສັນທຶນ

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. ການລົງທຶນ		
- ອຸປະກອນ	໑໔.໐໐໐.໐໐໐	ຢູເສດ
ຂ. ການດຳເນີນງານ		
- ພະນັກງານ	໑.໔໖໐.໐໐໐	
- ເຄື່ອງໃຊ້ໃນຫ້ອງການ		
(ເຈັ້ຽພິມ, ໜັງສືຕິດຕໍ່ກັນ)	໑໐໐.໐໐໐	
- ການຊື້ພັສດຸສຳຣັບໃຊ້	໔.໗໐໐.໐໐໐	ງົບປະມານແຫ່ງຊາດ
- ການຮັກສາຄົນປ່ວຍໃນຣະຍະຈະໃສ່ ອົງຄະທຽມ	໒.໒໔໐.໐໐໐	ພັທນາ
- ການດຳເນີນງານ : ການອົບຮົມກ່ຽວກັບວຽກ-		
ສະເພາະ	໓໐໐.໐໐໐	
- ນັກຊ່ຽວຊານ ສອງຄົນ	໒໔.໐໐໐.໐໐໐	ອົງການອະນາມັຍໂລກ
ໂຣມ	໔໗.໑໑໐.໐໐໐	

ໂຄງການເລກທີ ກກ	ກອງປະຊຸມ :	ອຸປກອນແຫ່ງສັງຄົມ
	ຜແນກການ :	ກົມປະຊາສົງເຄາະ
ການຈັດຕັ້ງ ຜູ້ກວດກາວຽກການ		

໑. <u>ຂໍ້ມູນທົ່ວໄປ</u> :

ກ. <u>ຈຸດມຸ່ງໝາຍຂອງໂຄງການ</u> :

ຜແນກນີ້ ແມ່ນຜແນກໃໝ່ ແລະການເຄື່ອນ ໄຫວ ຕ່າງໆກໍໄດ້ແນ່ໃສ່ ແຕ່ການຄວບຄຸມ ພວກຄົນງານີ ຢູ່ເຂື່ອນນ້ຳງື່ມ ຈຸດມຸ່ງໝາຍທີ່ນຶ່ງ ກໍຄືສນັບສນູນໃນການຮັບສມັກພວກພະນັກງານພົລເຮືອນ ແລະຕິດຕັ້ງ ອຸປກອນສຳຮັບຜແນກນີ້. ຜແນກນີ້ຈະໄດ້ຕັ້ງຕົ້ນສຶກສາເພື່ອການໃຊ້ກຳລັງຄົນໃຫ້ເປັນປໂຍດຫລາຍຂຶ້ນ.

໒. <u>ບົດຊີ້ແຈງ</u> :

- ການຄວບຄຸມຖານະຄົນງານຢູ່ໃນໂຮງງານ.
- ການຕັດແບ່ງແກ້ໄຂຄວາມສເນີ ແລະສນອງຂອງຕລາດແຮງງານ.
- ການຄາດຄະເນ ເວລາໃຫ້ພໍດີ ໃນການຮັບສມັກພວກຄົນງານຈຳເປັນ ໃນການສ້າງໂຄງການໃຫຍ່ ແລະການອົບຮົມວຽກການທີ່ຄວນເຮັດ.
- ທີ່ນີ້ ເພີ່ມໝາຍຄວາມວ່າ ຜແນກນີ້ຕ້ອງມີພາຫະນະຈຳເປັນໃນການດຳເນີນງານ ໃຫ້ລູລ່ວງໄປ (ພາຫະນະ, ຄົນງານ, ອຸປກອນໃນຫ້ອງການ)

໓. <u>ຂໍ້ມູນອື່ນໆ</u> :

ການເຮັດໃຫ້ສຳເຣັດຂອງໂຄງການ ຈະສິ້ນສຸດລົງໃນຣະຍະ ໑໙໗໐-໑໙໗໑.

໔. <u>ຄ່າໃຊ້ຈ່າຍແລະການຈັດສັນທຶນ</u> .

ຄ່າໃຊ້ຈ່າຍຂອງໂຄງການມີຢູ່ :

- ງົບປະມານ ພັທນາ : ໔.໕໐໐.໐໐໐ ກີບ
- ສຫະປະຊາຊາດ : ໑໖.໐໐໐.໐໐໐ ກີບ

ສາມ : <u>ແຍກສ່ວນປະກອບຄ່າໃຊ້ຈ່າຍ ແລະການຈັດສັນທຶນ</u>

ສ່ວນປະກອບຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ	ການຈັດສັນທຶນ
ກ. <u>ການລົງທຶນ</u>.		
໔໐.໓ ພັສດຸ		
- ຣົດ ຊີບ ໑ ຣົດຈັກ ໓	໑.໗໕໓.໐໐໐	
- ເຄື່ອງໃຊ້ໃນໂຮງການ	໔໖໕.໐໐໐	
- ເຄື່ອງໃຊ້ໃນຫ້ອງການ	໔໕໖.໐໐໐	
ຂ. <u>ການດຳເນີນງານ</u>		
໔໐.໑ ການຮັບສມັກພະນັກງານໃໝ່		
- ຊັ້ນເອກ (ຜູ້ກວດຣາຊການ ນຶ່ງຄົນ ຜູ້ຄວບຄຸມສອງຄົນ	໑.໑໕໐.໐໐໐	ງົບປະມານ
- ຊັ້ນໂທ (ສມຽນ ໔ ຄົນ ແລະ ນັກພິມດີດ ໑ ຄົນ	໓໗໔.໐໐໐	ພັທນາ
- ຊັ້ນຕຣີ (ຄົນສົ່ງໜັງສື)	໑໙໐.໐໐໐	
- ຄົນຂັບຣົດ	໑໙໐.໐໐໐	
- ຜູ້ຊ່ຽວຊານ	໑໓.໐໐໐.໐໐໐	ສຫະປະຊາຊາດ
໔໐.໖ <u>ອື່ນໆ</u>		
- ໂຕະຕັ່ງໃນໂຮງການ	໖໕.໐໐໐	ງົບປະມານ
- ນ້ຳມັນ	໕໐໐.໐໐໐	ພັທນາ
ໂ ຣ ມ	໑໗.໖໐໐.໐໐໐	

<u>ໝາຍເຫດ</u> : ງົບປະມານ ທີ່ໝາຍບອກໃນງົບປະມານພັທນາປະຈຳປີ ໑໙໗໐- ໑໙໗໑ ມີຢູ່ ໕.໕໙໐.໐໐໐ ກີບ. ເງິນຈຳນວນ ໑໐.໐໐໐ ກີບ ທີ່ຂາດຢູ່ ຈະຫາມາເຕີ່ມໃສ່ ເມື່ອເຖິງເວລາຈະຕ້ອງໃຊ້ຈ່າຍ.

໔໐໐. <u>ການປະຕິຮູບພື້ນຖານ</u>

໔໑໐. <u>ບົດແນະນຳເບື້ອງຕົ້ນ</u>

ແຜນພັທນາສ່ວນໂຮມແຫ່ງຊາດ ແລະແຜນດຳເນີນງານປີຫນຶ່ງ ໄດ້ເນັ້ນເຖິງຄວາມສຳຄັນຂອງການຈັດຕັ້ງ ເພື່ອດັດແປງສົ່ງເສີມ ກິຈການຂອງຣັຖບານ ແລະເພື່ອໃຫ້ການລົງທຶນ ໄດ້ຮັບຜົນຕາມຄວາມຄາດຫມາຍ. ໃນແຜນພັທນາເຮົາກໍໄດ້ໃຫ້ຄວາມສຳຄັນແກ່ບັນຫາຫົກຂໍ້ ທີ່ເຮົາຖືວ່າເປັນບັນຫາທີ່ຄວນແກ້ໄຂ ຢ່າງຮີບດ່ວນ ເພາະວ່າບັນຫາດັ່ງກ່າວນີ້ ມີຄວາມຜູກພັນ ກັບຄວາມສຳເຣັດຂອງການປະຕິບັດແຜນປະຈຳປີ. ຄນະກັມມະການຕ່າງໆກໍໄດ້ຮັບພາຣະ ໃຫ້ໄປສຶກສາເບິ່ງບັນຫາດັ່ງກ່າວນີ້ ກໍຍັງບໍ່ຮູ້ວ່າຮອດຂັ້ນໃດແລ້ວຈົນເຖິງທ້າຍປີຂອງແຜນປີຫນຶ່ງ ?

ມີພຽງສາມໃນຫົກກັມມະ ການເທົ່ານັ້ນ ທີ່ໄດ້ດຳເນີນວຽກການໄປດ້ວຍດີ ແລະກໍເຖິງຈຸດທີ່ຫມາຍ ສາມກັມມະການນັ້ນມີ :

- ການປັບປຸງທີ່ດິນໃຫ້ມີຄຸນຄ່າ
- ການວາງແຜນດ້ານກຳລັງຄົນ
- ກົມປັບປຸງຂ້າຣາຊການ

ສ່ວນກັມມະການອື່ນນັ້ນ ມີ : ກັມມະການ ດ້ານການເງິນແລະແຜນຜັງ
- ກັມມະການຈັດຕັ້ງບ້ານໃຫມ່ແຫ່ງຊາດ
- ກັມມະການສຶກສາເບິ່ງສິນຄ້າຂາເຂົ້າແລະສົ່ງເສີມສິນຄ້າຂາອອກ ແຫ່ງຊາດ.

ຈະຕ້ອງຮີບເຮັ່ງລົງມືປະຕິບັດງານ ເພື່ອໃຫ້ເຖິງຈຸດມຸ່ງຫມາຍທີ່ຄວນ ພາຍໃນ **ຣະຍະແຜນປະຈຳປີນີ້.**

໔໔໐. <u>ການປັບປຸງທີ່ດິນໃຫ້ມີຄຸນຄ່າ</u> : ອົງການພັທນາທົ່ງຣາບວຽງຈັນ

ໃນຣະຍະການດຳເນີນແຜນປະຈຳປີ ໑໙໗໙-໘໐, ໄດ້ມີການກໍ່ຕັ້ງຄວາມຄິດແລະແນວທາງໃຫມ່ຂຶ້ນ ໂດຍແມ່ນກະຊວງການຄັງແລະກົມແຜນຜັງ. ຄວາມຄິດດັ່ງກ່າວນີ້ ໄດ້ເຣັດໃຫ້ເຮົາ ຮູ້ເຖິງບັນຫາພັທນາທີ່ດີ ແລະໄດ້ຈັດຕັ້ງກັມມະການໃຫມ່ຂຶ້ນ ຄື : ການປັບປຸງທີ່ດິນໃຫ້ມີຄຸນຄ່າ (ເບິ່ງການປະຕິຮູບພື້ນຖານ) ແນວຄິດນີ້ໄດ້ຖືກກໍ່ຕັ້ງຂຶ້ນ ຫລັງຈາກການພິມຈຳຫນ່າຍຣາຍງານກ່ຽວກັບທົ່ງຣາບວຽງຈັນ ຂອງເນດໂກ " ທີ່ໄດ້ຈັດເຣັດຂຶ້ນ ພາຍໃຕ້ການເບິ່ງແຍງຂອງທະນາຄານພັທນາເອເຊັຽ. ຣາຍງານເຫລັ້ມນີ້ກ່າວເຖິງໂດຍສະເພາະ ການສົ່ງເສີມດ້ານກະເສດ ໃນເຂດຊົລປະທານ ໒ ເຂດ ທີ່ມີຫນ້າພຽງທັງຫມົດ ມມ.໔໐໐ ເຮັກຕາ.

ຫ້າມຈຳໜ່າຍ

ຄວາມຈຳເປັນທີ່ຈະຕ້ອງໃຫ້ມີການປະສານງານກັນຢ່າງດີ ໃນລະດັບພແນກການຕ່າງໆ ທີ່ກ່ຽວຂ້ອງ ແລະໃນລະດັບ ການດຳເນີນງານນັ້ນ, ໄດ້ນຳຜົນມາສູ່ເຮົາເປັນຢ່າງດີ ແລະເປັນເຫດໃຫ້ເຮົາສາມາດຈັດຕັ້ງ ອົງການພັທນາທົ່ງຣາບວຽງຈັນຂຶ້ນ, ເປັນອົງການທີ່ມີຫລາຍແນວທາງ ຫລືນະໂຍບາຍ. ດ້ວຍເຫດນີ້, ຖ້າວ່າເຮົາຈະຖືເອົາການພັທນາເສຖກິດແລະສັງຄົມ ເປັນ ເໝືອນສິ່ງດຽວໂລດ ທີ່ປະກອບດ້ວຍກິຈການດ້ານຜລິດຜົນໂດຍຕົງ ຕົວຢ່າງ ການກະເສດ, ການລ້ຽງສັດ, ປ່າໄມ້ ຫຼື ພື້ນຖານເສຖກິດ, ຖນົນຫົນທາງ, ໄຟຟ້າ, ນ້ຳ, ແລະການສັງຄົມ, ໂຮງຮຽນ, ໜ່ວຍພະຍາບານຕາມໝູ່ບ້ານ, ນັ້ນເຮົາຈະຕ້ອງມີການປະສານງານກັນເປັນຢ່າງດີ ຣະຫວ່າງກິຈການຕ່າງໆ.

ອົງການພັທນາທົ່ງຣາບວຽງຈັນ ໄດ້ຖືກຈັດຕັ້ງຂຶ້ນ ໂດຍກົດໝາຍເລກທີ ກ໐/໑ ລົງວັນທີ ໔໔/ພີ/໑໙ກ໐ (ຖືກປະກາດອອກເປັນພຣະຣາຊອົງການເລກທີ ໔໗໙ ລົງວັນທີ ໙/໘/ກ໐) ແລະຖືກຕ້ອງຕາມກົດໝາຍເລກທີ ພ໔/໘ ລົງວັນທີ ໕/ມີ/ພ໔ ເປັນອົງການ <u>ສາທາຣະນະ</u> ໃນແບບອຸດສາຫະກັມແລະການຄ້າ ໂດຍມີພນັກງານເປັນພົລເຮືອນ ແລະມີສິດຄວບຄຸມການເງິນດ້ວຍຕົນເອງ. ຄນະກັມມະການຝ່າຍປົກຄອງຂອງອົງການນີ້ ມີໜ້າທີ່ປະຕິບັດຕາມຄຳແນະນຳຂອງຣັຖບານ ແລະຄນະກັມມະການວາງແຜນແຫ່ງຊາດ ມີໜ້າທີ່ພັທນາສົ່ງເສີມພແນກນີ້. ມີທ່ານ [illegible] ເປັນຜູ້ປະສານງານອຳນວຍການທົ່ວໄປຂອງອົງການ ແລະຂອງສາຂາຜລິດຜົນຕ່າງໆ ທີ່ຂຶ້ນກັບອົງການນີ້. ໜ່ວຍຜລິດຜົນຕ່າງໆນັ້ນ ໄດ້ຖືກຈັດຕັ້ງຂຶ້ນ ຕາມໂຄງການຕ່າງໆທີ່ມີຢູ່ ໃນແຜນພັທນາສ່ວນໂຮມແຫ່ງຊາດ ໂດຍທີ່ແມ່ນອົງການເປັນນາຍໜ້າວຽກ, ຫລັງຈາກທີ່ມີການສຶກສາຄົ້ນຄວ້າແລ້ວ.

ຕາມຄວາມເຫັນດີ ຂອງຄນະກັມມະການວາງແຜນແຫ່ງຊາດ ໄດ້ອະນຸຍາດໃຫ້ ແຕ່ລະໜ່ວຍຜລິດຜົນ ຄວບຄຸມສມຸດບັນຊີການເງິນດ້ວຍຕົນເອງ. ນອກຈາກໜ່ວຍຜລິດຜົນຕ່າງໆແລ້ວ ຕົວຢ່າງ : ສູນກາງທົດລອງແລະເຂດຊົລປະທານທ່າງອນ ໂຮງງານເຮັດອາຫານທີ່ມີຄຸນະພາບ ການຈັດຕັ້ງຂອງອົງການກໍຍັງມີ ຫ້ອງການປະສານງານເພື່ອຄົ້ນຄວ້າອີກ.

ດັ່ງນັ້ນ ເຮົາຈຶ່ງເຫັນວ່າ ອົງການນີ້ປະກອບດ້ວຍຫລາຍສາຂາ ທັງດ້ານວິຊາການ ດ້ານໜ່ວຍພົກຄອງ ແລະດ້ານສມຸດບັນຊີຫລາຍພໍສົມຄວນ. ການຈັດຕັ້ງໃນຮູບຮ່າງນີ້ ໄດ້ເຮັດໃຫ້ໄດ້ຜົນດີຕາມຄາດໝາຍ ເພື່ອການລົງມືປະຕິບັດໂຄງການຕ່າງໆ ແລະກໍເຮັດໃຫ້ມີການພອນສັ້ນພອນຍາວ ໃນການຕິດຕໍ່ຣະຫວ່າງກະຊວງກົມກອງ ແລະອົງການຊ່ວຍເຫລືອຕ່າງປະເທດທີ່ກ່ຽວຂ້ອງ.

ນັບແຕ່ບັດນີ້ເປັນຕົ້ນໄປ ອົງການນີ້ຈະຕ້ອງປະຕິບັດໜ້າທີ່ຂອງຕົນ ກ່າວຄືລົງມືດຳເນີນໂຄງການທັງເຈັດ ທີ່ມີຢູ່ໃນແຜນດຳເນີນງານປະຈຳປີນີ້. ໃນເຈັດໂຄງການນັ້ນມີ :

- ສອງໂຄງການທີ່ກ່ຽວກັບ ການສ້າງສາເຂດຊົລປະທານ ໃນທົ່ງຣາບວຽງຈັນ.
- ສາມໂຄງການທີ່ກ່ຽວກັບ ການສຶກສາເພື່ອຈະສ້າງ ເຂດຊົລປະທານອີກສາມເຂດ ແລະ
- ສາມໂຄງການທີ່ກ່ຽວກັບການຈັດຕັ້ງໜ່ວຍຜລິດຜົນຂຶ້ນໃໝ່.

ຮູບຮ່າງການຈັດຕັ້ງຂອງອົງການພັທນາ ທົ່ງຮາບວຽງຈັນ

(ກົດພາຍ ເລກທີ ໗໐/໑ ທີ ໔໔-ຜ- ໑໙໗໐)



ຮູບຮ່າງ ການຈັດຕັ້ງຂອງໂຄງການພັທນາການກະເສດ ທີ່ ທາງອນ

ອະທິບໍດີ ປະຈຳໂຄງການ

ຜູ້ນຳພາໂຄງການ - ຈາກຍີ່ປຸ່ນ
- ຜູ້ຊ່ວຍວຊານ ຈາກຍີ່ປຸ່ນ
- ອາສາສມັກ ໂອເຕເຊອາ

ພແນກການ ປົກຄອງ ແລະການບັນຊີ
- ຫ້ອງການ ພະນັກງານ
- ຫ້ອງການ ສມຸດບັນຊີ
- ຫ້ອງການ ຮັບແລະສົ່ງເອກສານ ແລະເລຂານຸການ

ພແນກ ວິຊາການ
- ສູນກາງ ທົດລອງ
  - ປູກຝັງ ແລະລ້ຽງ...
  - ການອົບຮົມການປູກຝັງ
  - ການລ້ຽງສັດ
- ວິສວະກັມ ຊຸມຊົນ
  - ຊົລະປະທານ ແລະຮ່ອງນ້ຳ
  - ກົລໄກ ການປູກຝັງ
  - ການສ້າງສາ ຊຸມຊົນ

ພແນກ ເສດຖກິດ ຊຸມຊົນ
- ການເຜີຍແຜ່ແກ່ຊຸມຊົນ ແລະການອົບຮົມຊາວກະສິກັມ
- ສມາຄົມ ກະສິກັມ
- ຕລາດ ແລະ ການຄ້າຂາຍ

ຕາຕະຣາງບອກຈຳນວນພນັກງານ

໑. ກົມກອງທົ່ວໄປແລະພແນກຕ່າງໆ	ຊັ້ນເອກ	ຊັ້ນໂທ	ຊັ້ນຕຣີ	ໂຣມ
- ກົມກອງທົ່ວໄປ	໑			໑
- ພແນກປະສານງານເພື່ອການຄົ້ນຄວ້າ	໔			໔
- ພແນກການປົກຄອງ	໑	໓	໑໐	໑໔
- ຕົວແທນດ້ານສມຸດບັນຊີ	໑	໒		໓
- ພູແນກການດຳເນີນງານ	໒	໒		໔
- ຫ້ອງການຕິດຕໍ່ແລະສູນກາງ.... ເອກະສານ.	໑		໑	໒
໒. ໂຄງການ ຫລື ໜ່ວຍພລິດຜົນ				
- ໂຄງການທ່າງ່ອນ				
- ກົມກອງຕ່າງໆ				
- ຜູ້ຮັບຜິດຊອບໂຄງການ	໑			໑
- ພແນກການປົກຄອງ		໒	໓	໕
- ພແນກວິຊາການ	໑	໔	໙	໑໔
- ພແນກເສຖກິດຊຸມຊົນ	໑	໒	໖	໙
ໂຣມ	໑໓	໑໕	໒໙	໕໗

໔໓໐. ການວາງແຜນຊັບພະຍາກອນກຳລັງຄົນ

- ຈຸດປະສົງ.

ເພື່ອໃຫ້ແຜນພັດທະນາເສດຖະກິດແລະສັງຄົມ ປີ ໑໙໒໙-໑໙໓໔ ດຳເນີນໄປດ້ວຍດີ ມີຜົນຕາມຄາດໝາຍປະຫຍັດເຣົາຕ້ອງມີກຳລັງຄົນດ້ານຕ່າງໆ ພຽງພໍຕາມຄວາມຕ້ອງການ. **ຈຸດປະສົງສ່ວນ**ໃຫຍ່ຂອງການວາງແຜນຊັບພະຍາກອນກຳລັງຄົນ ແມ່ນເພື່ອພັທນາຊັບພະຍາກອນກຳ**ລັງ**ຄົນ ໃຫ້ພຽງພໍ**ຕາມ**ຄວາມຕ້ອງການ. ສົ່ງເສີມການມີວຽກທຳໃຫ້ທົ່ວເຖິງກັນ, ໃຊ້ກຳລັງຄົນໃຫ້ໄດ້ຜົນເຕັມ**ເມັດ**ເຕັມໜ່ວຍ ແລະປັບປຸງສົ່ງເສີມກ**ຽດ**ສັກສີແລະສະວັດດີພາບຂອງມະນຸດ.

(ເບິ່ງຂໍ້ ໔໒໔ ໜ້າ ໗໗ ຂອງແຜນປະຈຳປີທີ່ ໑ ປີ ໑໙໒໙-**໓໐**)

- ການຈັດຕັ້ງ.

ເພື່ອໃຫ້ການວາງແຜນຊັບພະຍາກອນກຳລັງຄົນ ດຳເນີນໄປດ້ວຍດີ ຈຶ່ງໄດ້ຈັດຕັ້ງກອງວາງແຜນກຳລັງຄົນຂຶ້ນ ທີ່ກົມແຜນພັງ ແລະອະນຸກັມມະການປຶກສາວິຊາການກຳລັງຄົນຂຶ້ນຄນະໜຶ່ງ ພາຍໃນຂອງຄນະກັມມະການວາງແຜນແຫ່ງຊາດ ຕາມດຳຣັດຣັຖມົນ-ຕຣີການະຊວງແຜນພັງແລະການຮ່ວມມື ລົງວັນທີ ໑ ກໍຣະກະດາ ໑໙໒໙ ແລະສະບັບແກ້ໄຂໃໝ່ ເລກທີ ໒໓ ລົງວັນທີ ໒໑ ເມສາ ໑໙໓໐ ຊຶ່ງປະກອບດ້ວຍ :

- ອະທິບໍດີ ກົມແຜນພັງ — **ປະທານ**
- ອະທິບໍດີ ກົມປັບປຸງຂາຣາຊການແລະປະຕິຮູບຣາຊການ — **ກັມມະການ**
- ອະທິບໍດີ ກົມສະຖິຕິແຫ່ງຊາດ — "
- ອະທິບໍດີ ກົມແຮງງານ — "
- ອະທິບໍດີ ກົມສຶກສາເສດຖະກິດແລະວິຊາການ — "
- ອະທິບໍດີ ກົມພິສູດແລະວາງແຜນການສຶກສາ — "
- ອະທິບໍດີ ກົມອາຊີວະສຶກສາ — "
- ຜູ້ອຳນວຍການກອງຈັດຫາອາຊີບແລະການຕິດຕໍ່ — "
- ຫົວໜ້າກອງວາງແຜນຊັບພະຍາກອນກຳລັງຄົນ — **ເລຂານຸການ**

ຄນະກັມມະການດັ່ງກ່າວທຳໜ້າທີ່ ສເນີຄວາມຄິດເຫັນຕ່າງໆ ຕໍ່ຄນະກັມມະ-ການວາງແຜນແຫ່ງຊາດ ແລະແນະນຳກອງວາງແຜນຊັບພະຍາກອນກຳລັງຄົນ ກ່ຽວກັບກິຈ-ການຕໍ່ລົງໄປນີ້ :

໑. ການຈັດຕັ້ງແລະການພັທນາແຜນງານດ້ານກຳລັງຄົນ ທີ່ເໝາະສົມ.

໒. ການຈັດຣະດັບແລະແນະນຳໂຄງການ ທີ່ຄວນຈະນຳອອກໄປໃຊ້ຕາມລຳດັບຄວາມສຳຄັນ.

ໝ. ການຈັດການດ້ານບໍລິຫານ, ດ້ານວິຊາການແລະສະຖາບັນທີ່ຈຳເປັນ ສຳລັບ ນຳແຜນງານອອກໄປໃຊ້.

໔. ວິທີການໃຊ້ຜົນຂອງການສຶກສາດັ່ງກ່າວ ແລະການສຳຫລວດ ໃນການວາງ ໂຄງການພັທນາກຳລັງຄົນຂອງລາວ.

- ໂຄງການປີ ໑໙໖໙-໑໙໗໐ :

ໃນແຜນພັທນາປີທີ່ນຶ່ງ ໑໙໖໙-໗໐ ອະນຸກັມມະການປຶກສາວິຊາການກຳລັງຄົນ ໄດ້ແນະນຳໃຫ້ດຳເນີນໂຄງການກຳລັງຄົນ ໄດ້ແນະນຳໃຫ້ດຳເນີນໂຄງການກຳລັງຄົນ ໓ ໂຄງການຊຶ່ງໄດ້ປະຕິບັດຮຽບຮ້ອຍໄປແລ້ວ ຄື :

໑. ການຄຳນວນກຳລັງຄົນ ທີ່ຕ້ອງການໃນແຜນພັທນາເສຖກິດແລະສັງຄົມ ປີ ໑໙໖໙-໗໔

໒. ການສຳຫລວດການສຶກສາແລະການອົບຮົມໃນລາວ

໓. ເອກສານຂໍ້ມູນກຳລັງຄົນໃນລາວ.

ການດຳເນີນໂຄງການທັງ ໓ ໄດ້ສຳເຣັດແລ້ວ ກອງວາງແຜນກຳລັງຄົນຂອງ ກົມແຜນພັງ ໄດ້ຣັດຣາຍງານໂຄງການທີ ໑ ແລະທີ ໒ ໃນເດືອນ ກໍຣະກະດາ ໑໙໗໐. ໂຄງການທີ ໓ ຈະໄດ້ພິມອອກທີຫລັງ.

- ໂຄງການ ປີ ໑໙໗໐-໗໑ :

ກອງປະຊຸມອະນຸກັມມະການປຶກສາວິຊາການກຳລັງຄົນ ຄັ້ງວັນທີ ໑໘ ກຸມພາ ໑໙໗໐ ໄດ້ຮັບເອົາໂຄງການກຳລັງຄົນ ໕ ໂຄງການ ສຳລັບການປະຕິບັດໃນແຜນປະຈຳປີ ປີທີສອງ :

໑. <u>ກຳລັງຄົນທີ່ໃຊ້ວິຊາຊີບ ວິຊາການແລະຄົນງານຜູ້ຊຳນານທີ່ຂາດເຂີນ ແລະ ເຫລືອໃຊ້ໃນລາວທັງປັດຈຸບັນ ແລະອະນາຄົດ ປີ ໑໙໖໙-໗໔.</u>

ໂຄງການສູ້ອງຢ່າງທີ່ໄດ້ສຳຫລວດໃນປີ ໑໙໖໙-໗໐ ຊີບອກຈຳນວນ ແລະລັກສນະຄວາມຕ້ອງການແລະການສນອງຄວາມຕ້ອງການກຳລັງຄົນໃນ ລາວ ໃນໄລຍະເວລາຂອງແຜນພັທນາ. ຈຸດປະສົງຂອງໂຄງການນີ້ ແມ່ນ ເພື່ອວິເຄາະແລະສຶກສາ ຢ່າງລັກແນ່ ຈຳນວນແລະລັກສນະ ການຂາດເຂີນ ແລະການລົ້ນເຫລືອກຳລັງຄົນທັງໃນປັດຈຸບັນແລະອະນາຄົດ ຕາມອາຊີບຕ່າງໆ ວ່າເປັນແນວໃດແທ້ ແລ້ວຫາຫລັກການແລະນະໂຍບາຍແກ້ໄຂ ທີ່ເໝາະສົມ ດີ ເພື່ອບໍ່ໃຫ້ມີການບໍ່ສົມຳ່ສເມີດ້ານຄວາມຕ້ອງການ ແລະການສນອງຄວາມ ຕ້ອງການ.

(໒) <u>ການວາງຫລັກການຈັດທຳໂຄງການຝຶກອົບຮົມວິຊາຊີບໄລຍະຍາວໃນລາວ</u> :
ຜົນການສຳຣວດຄວາມຕ້ອງການກຳລັງຄົນຂອງແຜນພັທນາ ທີ່ຈັດທຳໄປແລ້ວ ຊີ້ໃຫ້ເຫັນເຖິງການຂາດເຂີນກຳລັງຄົນດ້ານຕ່າງໆ ເຊັ່ນນັກວິສວະກອນ, ນັກວິຊາການ, ນັກສຳຣວດຊ່າງໄຟຟ້າ, ຊ່າງຊ່ອມແປງເຄື່ອງຈັກ ແລະຕໍ່ໆໄປ. ໃນໂຄງການນີ້ຂໍໃຫ້ຈັດທຳໂຄງການຝຶກອົບຮົມວິຊາຊີບຮ່ວມມືກັນຢ່າງເປັນຫລັກຖານ ເປັນຂັ້ນໆໄປຕາມລຳດັບຄວາມສຳຄັນ ແລະໄດ້ຕົກລົງໃຫ້ຜູ້ຊ່ຽວຊານຂອງກົມອາຊີວະສຶກສາ ທຳການສຶກສາໃຫ້ລະອຽດແລ້ວວາງໂຄງການຝຶກອົບຮົມຄຣູສອນວິຊາຊີບ ຜູ້ຄວບຄຸມງານ ແລະນາຍຊ່າງ.

(໓) <u>ບັນຊີກຳລັງຄົນ ດ້ານວິທຍາສາດ. ວິຊາຊີບ ແລະວິຊາການໃນລາວ</u> :
